# ສາລະບານ


1. ພາກສະເໜີ ........................................................................................................ 1

1.1 ເປັນຫຍັງຈິ່ງດຳເນີນການສຳຫລວດສະຖິຕິກະສິກຳ 2010/11 ...................................... 1

1.2. ໃຜເປັນຜູ້ຈັດຕັ້ງ ແລະ ດຳເນີນການສຳຫຼວດ ........................................................ 1

2. ໜ້າທີ່ຂອງນັກເດີນສຳຫຼວດ ........................................................................................ 1

2.1. ການສຳຫຼວດຈະດຳເນີນແນວໃດ?. ......................................................................... 1

2.2 ໜ້າວຽກຂອງນັກເດີນສຳຫຼວດ ............................................................................. 2

2.3 ການຝຶກອົບຮົມໃຫ້ນັກເດີນສຳຫຼວດ : ..................................................................... 3

2.4 ການ ຕິດຕາມກວດກາ ນັກເດີນສຳຫຼວດ ..................................................................... 3

2.5 ຕາຕະລາງເວລາ ເຄື່ອນໄຫວ ຂອງການສຳຫຼວດ: ............................................................ 3

2.6 ບັນດາ ຕາຕະລາງ ສອບຖາມ ແລະ ອຸປະກອນຮັບໃຊ້ການສຳຫຼວດຢູ່ພາກສະໜາມ ........................... 4

2.7 ການສ້າງແຜນການເກັບກຳຂໍ້ມູນ: ........................................................................... 4

2.8 ການສົ່ງຄືນ ອຸປະກອນ ແລະ ເອກະສານການສຳຫຼວດ: ................................................... 4

3. ຄຳສັບ ແລະ ນິຍາມ ທີ່ສຳຄັນ ................................................................................... 4

3.1 ຄົວເຮືອນ. ......................................................................................................... 4

3.2 ຄົວເຮືອນກະສິກຳ ............................................................................................... 5

2.3 ຄົວເຮືອນທີ່ບໍ່ແມ່ນຄົວເຮືອນກະສິກຳ ......................................................................... 6

3.4 ດິນກະສິກຳ: ....................................................................................................... 7

3.5 ພືດລົ້ມລຸກ: ........................................................................................................ 7

3.6 ພືດຢືນຕົ້ນ: ........................................................................................................ 8

3.7 ສັດລ້ຽງ: ........................................................................................................... 8

4. ຈະສ້າງບັນຊີລາຍຊື່ຄົວເຮືອນຄືແນວໃດ ..................................................................... 8

4.1 ຄວາມໝາຍຫຍໍ້ຂອງບັນຊີລາຍຊື່ຄົວເຮືອນ ................................................................... 8

4.2 ບົດບາດຂອງນາຍບ້ານ ......................................................................................... 9

4.3 ການກວດສອບບ້ານໃຫ້ຖືກຕ້ອງ ............................................................................... 9

4.4 ຄົວເຮືອນໃດຄວນຈົດເຂົ້າບັນຊີ ............................................................................. 10

4. 5 ການຮັບຕາຕະລາງຂຶ້ນບັນຊີຄົວເຮືອນຈາກນັກກວດກາຂັ້ນເມືອງ(F1). ................................ 10

4.6. ວິທີຈົດກ່າຍ ລາຍຊື່ ຄົວເຮືອນພາຍໃນບ້ານ. ................................................................ 11

4.7 ຈະເຮັດແນວໃດ ຖ້າ ມີ ຄົວເຮືອນ ຫຼາຍກ່ວາ ຕາຕະລາງ F1 ທີ່ກຳນົດໄວ້ ................................ 11

4.8 ຈະເຮັດຫຍັງ ພາຍຫຼັງສ້າງບັນຊີ ຄົວເຮືອນແລ້ວ ........ 11
4.9 ໜ້າວຽກເກັບກຳຂໍ້ມູນ ຂອງ ທ່ານ ພາຍໃນບ້ານ ........ 12
4.10 ຖ້າ ພົບເຫັນຄວາມຜິດຂອງບັນຊີຄົວເຮືອນ ໃນຂະນະສຳພາດຄົວເຮືອນຢູ່ ........ 12
4.11 ກ່າຍ ເອົາລາຍການຂໍ້ມູນໃສ່ຕາຕະລາງບັນຊີຄົວເຮືອນ F1 ........ 12
4.12 ຈະເຮັດຫຍັງຫຼັງຈາກສຳເລັດການເກັບກຳຂໍ້ມູນຢູ່ໃນບ້ານ ........ 12
5. ຫຼັກການທົ່ວໄປຂອງການສຳພາດຄົວເຮືອນ ........ 13
5.1. ນັດໝາຍ ກັບ ຄົວເຮືອນ ຈະເຮັດແນວໃດ ........ 13
5.2. ຈະສຳພາດໃຜ : ........ 13
5.3. ພາສາ ໃຊ້ ສຳພາດ : ........ 13
5.4. ສິ່ງທີ່ຄວນປະຕິບັດ ເວລາການສຳພາດ : ........ 13
5.5 ການຖາມໃຫ້ໃຊ້ຄຳເວົ້າ ຕາມຄວາມໝາຍ ໃນໃບສອບຖາມ ........ 14
5.6 ການຈັດວາງລະບຽບຂອງແບບສອບຖາມ ........ 15
5.7 ຈະຈົດກ່າຍ ຄຳຕອບ ຄືແນວໃດ ........ 15
5.8. ຈະຈົດກ່າຍຂໍ້ມູນ ເນື້ອທີ່ ຄືແນວໃດ ........ 16
5.9. ໃຫ້ຂໍ້ມູນດ້ານເນື້ອທີ່ ຖືກຕ້ອງ ແນວໃດ ........ 16
5.10 ຖ້າ ຂຽນ ຜິດ ຈະແກ້ແນວໃດ ........ 17
5.11 ໃບສອບຖາມສຳລັບທຸກໆຄົວເຮືອນ ........ 17
5.12. ການຮັກສາເປັນຄວາມລັບ : ........ 17
6. ວິທີຈົດກ່າຍໃບສອບຖາມຂັ້ນບ້ານ ........ 19
6.1 ກ່ອນການເລີ້ມສຳພາດບ້ານ ........ 19
6.2 ການຕັ້ງຄຳຖາມ ........ 19
7. ການຈົດກ່າຍໃບສອບຖາມຄົວເຮືອນ ........ 30
7.1 ກ່ອນການເລີ້ມສຳພາດຄົວເຮືອນ ........ 30
7.2 ໂຄງປະກອບຂອງແບບສອບຖາມ ........ 30
7.3 ການຕັ້ງຄຳຖາມ ........ 31
7.4 ຖ້າ ທ່ານບໍ່ມີບ່ອນຈົດກ່າຍຂໍ້ມູນພຽງພໍໃນຄຳຖາມ 11, 15, ຫຼື 19 ........ 42
7.5 ພາຍຫຼັງສຳເລັດການສຳພາດຄົວເຮືອນ ........ 42
8. ວິທີການເລືອກຕົວແທນຈະເຮັດແນວໃດ? ........ 43
9. ການຈົດກ່າຍໃບສອບຖາມຄົວເຮືອນຕົວແທນ ........ 48
9.1 ກ່ອນ ການເລີ້ມຕົ້ນ ສຳພາດຄົວ ........ 48
9.2 ໂຄງປະກອບ ຂອງ ແບບສອບຖາມ F5 ........ 48

9.3 ຕອນດິນ.......... 49
9.4 ການປູກເຂົ້າ.......... 55
9.5 ນຳໃຊ້ຝຸ່ນ ແລະ ປຸຍເຄມີ.......... 57
9.6 ພືດຢືນຕົ້ນ.......... 58
9.7 ສັດລ້ຽງ.......... 59
9.8 ກົນຈັກກະສິກຳ (ຄຳຖາມ 67-68).......... 63
9.9. ການບໍລິການ ແລະ ການປະຕິບັດດ້ານການກະສິກຳ.......... 64
9.10 ຄຸນລັກສະນະຂອງສະມາຊິກໃນຄົວເຮືອນ (Q81-Q91).......... 68

# 1. ພາກສະເໜີ

## 1.1 ເປັນຫຍັງຈື່ງດຳເນີນການສຳຫລວດສະຖິຕິກະສິກຳ 2010/11

ຢູ່ ສ.ປ.ປ.ລາວ ປະຊາຊົນ ສ່ວນໃຫຍ່ ອາໄສຢູ່ຕາມຊົນນະບົດ ແລະ ການທຳມາຫາກິນອາໄສ ການກະສິກຳ ເປັນຫລັກ. ປັດຈຸບັນນີ້ລັດຖະບານ ຕ້ອງການຂໍ້ມູນສະຖິຕິລະອຽດ ແລະ ທັນສະພາບການ ຫລາຍກວ່າທີ່ຜ່ານມາ ເພື່ອຊ່ວຍວາງແຜນພັດທະນາຂະແໜງກະສິກຳ ແລະ ປັບປຸງສະຫວັດດີການຂອງປະຊາຊົນໃຫ້ດີຂື້ນ.

ສະຖິຕິກະສິກຳ ທີ່ ລັດຖະບານ ມີຢູ່ປະຈຸບັນແມ່ນຂໍ້ມູນດ້ານເນື້ອທີ່, ຜົນຜະລິດເຂົ້າ ແລະ ບາງພືດຕົ້ນຕໍ, ລວມທັງຈຳນວນສັດລ້ຽງ. ເຖິງແນວໃດກໍຕາມ, ຂໍ້ມູນຂ່າວສານ ດັ່ງກ່າວຍັງມີໜ້ອຍຫລາຍເຊັ່ນ: ຈຳນວນຜູ້ປູກເຂົ້າແຕ່ລະຊະນິດ, ຈຳນວນຜູ້ປູກເຂົ້າ, ເນື້ອທີ່ປູກພືດອື່ນໆ, ການນຳໃຊ້ປັດໄຈການຜະລິດຕ່າງໆ, ການນຳໃຊ້ກົນຈັກກະສິກຳ, ຂະໜາດຂອງຟາມ, ແຮງງານເຮັດຟາມ ແລະ ໂຄງປະກອບອາຍຸ ຂອງສັດລ້ຽງ. ການສຳຫຼວດ ສະຖິຕິກະສິກຳໃນສົກປີ 2010/2011 ຈະຊ່ວຍໃຫ້ ຂໍ້ມູນຂ່າວສານເຫຼົ່ານີ້ຕື່ມອີກ.

ການສຳຫຼວດນີ້ແມ່ນພາກສ່ວນໜຶ່ງຂອງໂຄງການສຳຫຼວດສະຖິຕິກະສິກຳຂອງໂລກ, ເຊິ່ງເລີ້ມມາແຕ່ປີ 1930. ໃນປະຈຸບັນມີຫຼາຍກວ່າ 120 ປະເທດເປັນສະມາຊິກຂອງໂຄງການນີ້; ມີຫຼາຍປະເທດສະມາຊິກທຸກໆ 10 ປີໃດຈະຕ້ອງໄດ້ ດຳເນີນການສຳຫຼວດສະຖິຕິກະສິກຳໜຶ່ງຄັ້ງ. ການສຳຫຼວດ ສະຖິຕິກະສິກຳແມ່ນຄັ້ງທີສອງ ໃນ ສປປ ລາວ. ການສຳຫຼວດ ສະຖິຕິກະສິກຳຄັ້ງທີໜຶ່ງ ແມ່ນຈັດຕັ້ງປະຕິບັດ ໃນປີ 1998/99. ການສຳຫຼວດສະຖິຕິກະສິກຳ 2010/11 ເປັນວຽກງານໜຶ່ງທີ່ ກວ້າງຂວາງ ແລະ ສຳຄັນທີ່ສຸດ ຂອງການເກັບກຳຂໍ້ມູນສະຖິຕິໃນຄັ້ງນີ້.

## 1.2. ໃຜເປັນຜູ້ຈັດຕັ້ງ ແລະ ດຳເນີນການສຳຫຼວດ

ການສຳຫຼວດ ສະຖິຕິກະສິກຳ ເປັນໂຄງການຮ່ວມ ລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງແຜນການ ແລະ ການລົງທຶນ ໂດຍໄດ້ຮັບການສະໜັບສະໜູນຈາກຫຼາຍອົງການຈັດຕັ້ງສາກົນ ທາງດ້ານທຶນຮອນ ແລະ ເຕັກນິກ. ຫ້ອງການສຳຫຼວດສະຖິຕິກະສິກຳປະກອບດ້ວຍພະນັກງານວິຊາການຂອງກົມແຜນການ, ກະຊວງກະສິກຳ ແລະ ປ່າໄມ້, ກົມສະຖິຕິ, ກະຊວງແຜນການ ແລະການລົງທຶນ, ຄະນະຊີ້ນຳພັດທະນາຊົນນະບົດ ແລະລົບລ້າງຄວາມທຸກຍາກແຫ່ງຊາດເພື່ອຮັບຜິດຊອບການຈັດຕັ້ງປະຕິບັດການສຳຫຼວດດັ່ງກ່າວ.

# 2. ໜ້າທີ່ຂອງນັກເດີນສຳຫຼວດ

## 2.1. ການສຳຫຼວດຈະດຳເນີນແນວໃດ?.

ການສຳຫຼວດສະຖິຕິກະສິກຳ 2010/11 ແມ່ນຈະໄດ້ຈັດຕັ້ງຢູ່ໃນ 143 ເມືອງໃນຂອບເຂດທົ່ວປະເທດ.
ມັນມີ ສອງ ປະເພດ ບ້ານ ສຳລັບ ການເດີນສຳຫຼວດເກັບກຳຂໍ້ມູນ:

- ຢູ່ທຸກບ້ານ (ຊື່ງເອີ້ນວ່າ<u>ບ້ານທີ່ບໍ່ຖືກເລືອກເປັນຕົວແທນ),</u> ນັກເດີນສຳຫຼວດຈະໄດ້ເກັບກຳຂໍ້ມູນກ່ຽວກັບໂຄງລ່າງພື້ນຖານຈາກນາຍບ້ານ ແລະ ບາງຂໍ້ມູນ ພື້ນຖານ ພືດ ແລະ ສັດລ້ຽງ ຈາກ ທຸກຄົວເຮືອນ.
- ຢູ່ບ້ານອື່ນ (ຊື່ງເອີ້ນວ່າ <u>ບ້ານຕົວແທນ),</u> ນັກເດີນສຳຫຼວດຈະໄດ້ເກັບກຳຂໍ້ມູນຄ້າຍຄືກັນກັບບ້ານທີ່ບໍ່ຖືກເປັນຕົວແທນເຊັ່ນດຽວກັນນັ້ນ ແລະ ຈະເກັບກຳຂໍ້ມູນລະອຽດກ່ຽວກັບການປູກພືດ ແລະ ລ້ຽງສັດ ຈາກ <u>ບາງ ຄົວເຮືອນຕົວແທນ</u>

ນັກເດີນສຳຫຼວດໃນທຸກໆບ້ານຈະມີໜ້າທີ່ດັ່ງນີ້: ຂື້ນບັນຊີຄົວເຮືອນ, ແລະ ສັງລວມຂໍ້ມູນ (ເຊິ່ງເອີ້ນວ່າ ການສັງລວມຂໍ້ມູນດ້ວຍມື)

ໜ້າທີ່ລາຍລະອຽດທັງໝົດ ຈະໄດ້ລະບຸໃນປື້ມຄູ່ມືນັກເດີນສຳຫຼວດ ສະບັບນີ້.

**ມັນມີ ສອງປະເພດ ນັກເດີນສຳຫຼວດ:**

- ນັກເດີນສຳຫຼວດບ້ານທີ່ບໍ່ຖືກເລືອກເປັນຕົວແທນ, ຈະໄດ້ເກັບກຳຂໍ້ມູນຈາກບ້ານທີ່ບໍ່ແມ່ນຕົວແທນ.
- ນັກເດີນສຳຫຼວດບ້ານທີ່ຖືກເລືອກເປັນຕົວແທນ, ຈະໄດ້ເກັບກຳຂໍ້ມູນຈາກບ້ານທີ່ແມ່ນຕົວແທນ.

ທ່ານຈະໄດ້ນຳໃຊ້ສາມປະເພດໃບສອບຖາມຫຼັກ (F1, F3, F4) ສຳລັບບ້ານທີ່ບໍ່ເປັນຕົວແທນ ແລະ ຈະເພີ້ມອີກໜຶ່ງໃບສອບຖາມ (F5) ສຳລັບບ້ານທີ່ເປັນຕົວແທນຂອງການສຳຫຼວດ ຄື:

- ຕາຕະລາງບັນຊີຄົວເຮືອນ (F1) ຂຶ້ນບັນຊີທຸກໆຄົວເຮືອນພາຍໃນບ້ານ;
- ໃບສອບຖາມບ້ານ (F3) ເພື່ອເກັບກຳຂໍ້ມູນຈາກບ້ານ;
- ໃບສອບຖາມທຸກໆຄົວເຮືອນ (F4) ເພື່ອເກັບກຳຂໍ້ມູນຈາກໝົດທຸກຄົວເຮືອນ.
- ຖ້າເປັນບ້ານຕົວແທນ ຈະເພີ້ມ ໃບສອບຖາມຄົວເຮືອນຕົວແທນ (F5) ເພື່ອ ເກັບກຳຄົວເຮືອນຕົວແທນ.

## 2.2 ໜ້າວຽກຂອງນັກເດີນສຳຫຼວດ

ໃນຖານະທ່ານເປັນນັກເດີນສຳຫຼວດ, ທ່ານອາດຈະໄດ້ລົງໄປເກັບກຳຂໍ້ມູນຫຼາຍບ້ານ ແລະ ຈະເປັນຜູ້ຮັບຜິດຊອບທັງໝົດວຽກການເກັບກຳຂໍ້ມູນໃນບ້ານເລົ່ານັ້ນ. ໜ້າວຽກແຕ່ລະບ້ານຈະມີດັ່ງນີ້:

**ນັກເດີນສຳຫຼວດບໍ່ແມ່ນຕົວແທນ ສຳລັບບ້ານທີ່ບໍ່ເປັນຕົວແທນ:**

- ສຳພາດນາຍບ້ານ ເກັບກຳຂໍ້ມູນຂອງບ້ານໂດຍໃຊ້ໃບສອບຖາມບ້ານ F3
- ຂຶ້ນບັນຊີທຸກໆຄົວເຮືອນພາຍໃນບ້ານ ໂດຍໃຊ້ຕາຕະລາງຂຶ້ນບັນຊີຄົວເຮືອນ F1
- ສຳພາດທຸກໆຄົວເຮືອນເພື່ອເກັບຂໍ້ມູນ ຂອງຄົວເຮືອນໂດຍນຳໃຊ້ໃບສອບຖາມ F4
- ພາຍຫຼັງໄດ້ສຳພາດຄົວເຮືອນແລ້ວ, ໃຫ້ກ່າຍຂໍ້ມູນ ທັງສອງ ເພື່ອຈຳແນກວ່າ ຄົວເຮືອນໃດ ເປັນຄົວເຮືອນ ກະສິກຳ ແລະ ກ່າຍຂໍ້ມູນກະສິກຳ ໃສ່ ໃບຟອມ F1.
- ພາຍຫຼັງ ທຸກການສຳພາດສິ້ນສຸດ ໃຫ້ ຄິດໄລ່ ຜົນລວມ ຢູ່ໃນ F1

ນັກເດີນສຳຫຼວດຕົວແທນ ສຳລັບ ບ້ານທີ ຖືກເລືອກເປັນຕົວແທນ:

- ສຳພາດນາຍບ້ານ ເກັບກຳຂໍ້ມູນຂອງບ້ານໂດຍໃຊ້ ໃບສອບຖາມບ້ານ F3
- ຂຶ້ນບັນຊີທຸກໆຄົວເຮືອນພາຍໃນບ້ານ ໂດຍໃຊ້ຕາຕະລາງ ບັນຊີລາຍຊື່ ຄົວເຮືອນ (ແບບຟອມ F1)
- ສຳພາດທຸກໆຄົວເຮືອນເພື່ອເກັບຂໍ້ມູນ ຂອງຄົວເຮືອນໂດຍນຳໃຊ້ ໃບສອບຖາມ F4
- ພາຍຫຼັງໄດ້ສຳພາດຄົວເຮືອນແລ້ວ, ໃຫ້ກ່າຍຂໍ້ມູນທັງສອງ ເພື່ອຈຳແນກ ວ່າຄົວເຮືອນໃດເປັນຄົວເຮືອນກະສິກຳ ແລະ ກ່າຍ ຂໍ້ມູນກະສິກຳ ໃສ່ ແບບຟອມ F1.
- ໃຫ້ຄັດເລືອກເອົາຄົວເຮືອນກະສິກຳຕົວແທນໃນບ້ານທີ່ຖືກເປັນຕົວແທນ
- ໃຫ້ສຳພາດຄົວເຮືອນກະສິກຳຕົວແທນດ້ວຍໃບສອບຖາມ F5
- ພາຍຫຼັງ ທຸກການສຳພາດສິ້ນສຸດ ໃຫ້ ຄິດໄລ່ ຍອດລວມ ຢູ່ໃນ ແບບຟອມ F1

ບາງບ້ານທີ່ມີຫຼາຍຄົວເຮືອນອາດຈະເຮັດຮ່ວມກັນ 2 ຄົນ ເພື່ອເດີນສຳຫຼວດເກັບກຳຂໍ້ມູນ.

## 2.3 ການຝຶກອົບຮົມໃຫ້ນັກເດີນສຳຫຼວດ :

ທ່ານ ເອງຈະໄດ້ເຂົ້າຮ່ວມການຝຶກອົບຮົມໜຶ່ງອາທິດ, ກ່ອນດຳເນີນການສຳຫຼວດເກັບກຳຂໍ້ມູນ. ການຝຶກອົບຮົມຈະໄດ້ ຈັດຂື້ນ ຢູ່ ແຂວງ ຫລື ເມືອງທີ່ໃກ້ກັບທ່ານ. ການຝຶກອົບຮົມຊຸດນີ້ ຈະແນະນຳໃຫ້ ທ່ານຮູ້ຈັກ ວິທີຂອງການເກັບກຳຂໍ້ມູນ. ມັນປະກອບດ້ວຍການຝຶກອົບຮົມໃນຫ້ອງຮຽນ, ຝຶກຫັດການສຳພາດໃນຫ້ອງຮຽນ ແລະ ລົງຝຶກຫັດຢູ່ພາກສະໜາມ. ການຝຶກອົບຮົມຈະອີງໃສ່ປື້ມຄູ່ມືແນະນຳເປັນພື້ນຖານຝຶກສອນຕະຫຼອດໄລຍະການຝຶກອົບຮົມ.

## 2.4 ການ ຕິດຕາມກວດກາ ນັກເດີນສຳຫຼວດ

ໃນຖານະເປັນ ນັກເດີນສຳຫຼວດ, ທ່ານ ຕ້ອງໄດ້ລາຍງານໃຫ້ນັກກວດກາຂັ້ນເມືອງ, ເຊີ່ງແມ່ນພະນັກງານຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ຫຼື ຫ້ອງການແຜນການ ເມືອງ. ນັກກວດກາ ຂອງ ທ່ານ ມີຄວາມຮັບຜິດຊອບ ຕິດຕາມ ກວດກາ ທຸກໆມື້ ກ່ຽວກັບການເກັບກຳຂໍ້ມູນ, ເຊີ່ງຈະໄດ້ປະຕິບັດດັ່ງລຸ່ມນີ້ :

- ມອບໝາຍລາຍຊື່ບ້ານໃຫ້ ທ່ານ ເພື່ອລົງໄປເກັບກຳຂໍ້ມູນ
- ວາງແຜນ ແລະ ຈັດຕັ້ງການສຳຫລວດເກັບກຳຂໍ້ມູນ
- ສະໜອງ ອຸປະກອນພາກສະໜາມ..ອັນຈຳເປັນໃຫ້ແກ່ການສຳຫຼວດ, ເຊັ່ນ: ແບບສອບຖາມ, ອຸປະກອນພາກສະໜາມ..
- ລົງຕິດຕາມຄວາມຄືບໜ້າຂອງທ່ານໃນພາກສະໜາມ;
- ຊ່ວຍເຫຼືອທ່ານໃນເວລາການສຳຫຼວດມີບັນຫາ;
- ຮັບທຸກໃບສອບຖາມທີ່ສຳພາດສຳເລັດຈາກ ທ່ານ
- ກວດຄວາມຖືກຕ້ອງຂອງການຈົດກ່າຍໃບສອບຖາມ.

ນັກເດີນສຳຫຼວດ ຈະຕ້ອງພົບນັກກວດກາຂັ້ນເມືອງໃນ 2-3 ວັນຂອງອາທິດທຳອິດຂອງການເດີນສຳຫຼວດຢ່າງໜ້ອຍ 1 ຄັ້ງເພື່ອສະເໜີ ຫຼື ຂໍຄຳແນະນຳ ກ່ຽວກັບບັນຫາທີ່ພົບພໍ້. ຫຼັງຈາກນັ້ນ, ນັກເດີນສຳຫຼວດຈະຕ້ອງພົບກັບນັກກວດກາ ຢ່າງເປັນ ປົກກະຕິ ເພື່ອລາຍງານຜົນການຄືບໜ້າ., ຖ້າຫາກມີບັນຫາໃນເວລາສຳຫຼວດ ນັກເດີນສຳຫຼວດຈະຕ້ອງຕິດຕໍ່ຫານັກກວດກາຂອງທ່ານທັນທີເພື່ອຂໍຄຳແນະນຳ ແລະ ຊ່ວຍເຫຼືອທ່ານໄດ້ທັນການ.

ນອກຈາກມີນັກກວດກາຂັ້ນເມືອງແລ້ວ ຍັງມີຜູ້ປະສານງານຂັ້ນແຂວງ ແລະ ສູນກາງ. ພະນັກງານດັ່ງກ່າວ ແມ່ນມາຈາກ ພະແນກກະສິກຳ ແລະ ປ່າໄມ້ ແລະ ພະແນກແຜນການ ແລະ ການລົງທຶນ ແຂວງ ຫຼື ຈາກຫ້ອງການສຳຫຼວດ ສະຖິຕິກະສິກຳ ທີ່ ນະຄອນຫຼວງວຽງຈັນ, ເຊີ່ງຜູ້ປະສານງານຂັ້ນແຂວງ ແລະ ສູນກາງ ຈະໄດ້ຮັບຜິດຊອບການສຳຫຼວດລວມທັງໝົດ. ໜຶ່ງ ຂອງຜູ້ປະສານງານຈະໄດ້ຝຶກອົບຮົມໃຫ້ ທ່ານ ເພື່ອສຳຫຼວດເກັບກຳຂໍ້ມູນ.

## 2.5 ຕາຕະລາງເວລາ ເຄື່ອນໄຫວ ຂອງການສຳຫຼວດ:

| | | |
|---|---|---|
| ວັນທີ 14-19/02/2011 ຫຼື 21-26/02/2011 | : | ຝຶກອົບຮົມນັກເດີນສຳຫຼວດ |
| ວັນທີ 28/2-1/04/2011 | : | ເກັບກຳຂໍ້ມູນ ຢູ່ພາກສະໜາມ. |
| ວັນທີ 4/04/2011 | : | ສົ່ງຄືນ ແບບສອບຖາມ ໃຫ້ນັກກວດກາຂັ້ນເມືອງ |

**ທ່ານເອງຄວນຍຶດໝັ້ນຕາຕະລາງ ເວລາ ຂ້າງເທິງນີ້.** ຖ້າຫາກມີການຊັກຊ້າເວລາທີ່ກຳນົດໄວ້ຂ້າງເທິງນັ້ນ ອາດຈະເຮັດໃຫ້ ມີ ຜົນ ກະທົບ ທາງລົບ ຕໍ່ ການສຳຫຼວດ.

### 2.6 ບັນດາ ຕາຕະລາງ ສອບຖາມ ແລະ ອຸປະກອນຮັບໃຊ້ການສຳຫຼວດຢູ່ພາກສະໜາມ

ທ່ານຈະໄດ້ຮັບ ໃບສອບຖາມ ແລະ ອຸປະກອນຮັບໃຊ້ ທີ່ຈຳເປັນສຳລັບການສຳຫຼວດດັ່ງຕໍ່ໄປນີ້ :

- ແຜນວາດຂອງແຕ່ລະບ້ານ ( ຖ້າຫາກມີ );
- ຕາຕະລາງຈົດກ່າຍບັນຊີລາຍຊື່ຄົວເຮືອນ (ແບບ ຟອມ F1 )
- ໃບສອບຖາມ ບ້ານ (F3) ສຳລັບ ທຸກໆ ບ້ານ ດ້ວຍບາງຂໍ້ມູນທີ່ ໄດ້ຈົດໃຫ້ ຢູ່ ໜ້າປົກ ຂອງ ໃບສອບຖາມ
- ສະໜອງ ໃບບສອບຖາມ ສັ້ນ (F4);
- ສະໜອງໃບສອບຖາມຍາວ (F5) (ສຳລັບ ນັກເດີນສຳຫຼວດ ຕົວແທນເທົ່ານັ້ນ)
- ສະໜອງ ຕາຕະລາງບັນຊີລາຍຊື່ ຄົວເຮືອນ F1 ເປົ່າຫວ່າງ;
- ບາງ ໃບສອບຖາມເພີ້ມ;
- ປົກຊຽນສີຟ້າ, ຈັກຄິດໄລ່ ແລະ ກະເປົາໃສ່ເອກະສານ. .

### 2.7 ການສ້າງແຜນການເກັບກຳຂໍ້ມູນ:

ໃນໄລຍະການຝຶກອົບຮົມໃຫ້ນັກເດີນສຳຫຼວດ, ນັກກວດກາ ຂອງ ທ່ານຈະກຳນົດແຜນວຽກໃຫ້ແກ່ທ່ານເດີນສຳຫຼວດ. ແຜນວຽກນີ້ ປະກອບດ້ວຍລາຍຊື່ບ້ານຕ່າງໆ. ກ່ອນຈະລົງພາກສະໜາມ, ນັກເດີນສຳຫຼວດຈະຕ້ອງໄດ້ສ້າງແຜນການ ດຳເນີນງານຂອງຕົນ ເພື່ອໃຫ້ແນ່ໃຈວ່າຕົນເອງ ຈະເຮັດໄດ້ທັນ ກັບ ເວລາ ທີ່ໄດ້ກຳນົດໄວ້. ຊອກ ທີ່ຕັ້ງ ຂອງບ້ານ, ທ່ານ ຈະເດີນທາງໄປດ້ວຍວິທີໃດ, ຈຳນວນຄົວເຮືອນມີຫຼາຍປານໃດໃນແຕ່ລະບ້ານ, ແລະ ໃຊ້ເວລາສຳຫຼັບການເດີນທາງເທົ່າໃດສຳລັບໄປຫາແຕ່ລະບ້ານ. ສິ່ງສຳຄັນ ຄວນເຂົ້າໃຈວ່າ, ການໄປພົບຄົວເຮືອນ ແຕ່ລະບ້ານ ເປັນ ສິ່ງທີ່ບໍ່ງ່າຍ ໂດຍສະເພາະ ບ້ານຫ່າງໄກສອກຫຼີກ.

### 2.8 ການສົ່ງຄືນ ອຸປະກອນ ແລະ ເອກະສານການສຳຫຼວດ:

ທຸກແບບໃບສອບຖາມ ທີ່ ໄດ້ສຳພາດຄົບຖ້ວນແລ້ວຕ້ອງສົ່ງໃຫ້ ນັກກວດກາ ຂອງ ທ່ານ ໄວເທົ່າທີ່ຈະໄວໄດ້.ເຖິງແນວໃດກໍ່ຕາມ, ແບບສອບຖາມ <u>ທີ່ ສຳພາດໃນແຕ່ລະບ້ານແລ້ວ ຕ້ອງຈັດໃຫ້ເປັນຊຸດດຽວກັນ.</u> ບໍ່ ຄວນ ສົ່ງເອກະສານ ທີ່ ສຳພາດແລ້ວ ສ່ວນໃດ ສ່ວນນຶ່ງຂອງບ້ານໃຫ້ນັກກວດກາ.

ອີກບັນຫາໜຶ່ງ, ຫຼັງຈາກນັກເດີນສຳຫຼວດສຳເລັດການສຳຫຼວດແລ້ວ, ທ່ານຈະຕ້ອງສົ່ງຄືນທຸກໆອຸປະກອນ ແລະແບບໃບສອບຖາມ ເອກະສານຕ່າງ ໆ ທີ່ຈົດກ່າຍຄົບຖ້ວນ (ລວມທັງ ໃບສອບຖາມເປົ່າ) ທີ່ນັກກວດກາເອົາໃຫ້ນັ້ນຄືນໃຫ້ແກ່ນັກກວດກາ ຄົບ ຕາມ ຈຳນວນເດີມ. ຖ້າຕົກເຮ່ຍເສຍຫາຍຈະຕ້ອງໄດ້ຮັບຜິດຊອບທຸກປະການ.

## 3. ຄຳສັບ ແລະ ນິຍາມ ທີ່ສຳຄັນ

### 3.1 ຄົວເຮືອນ.

ຫົວໜ່ວຍຄົວເຮືອນ ມີຄວາມສຳຄັນ ສຳລັບການສຳຫຼວດ ຍ້ອນສອງເຫດຜົນ: ເຫດຜົນທີໜຶ່ງ, ລາຍຊື່ ຄົວເຮືອນ ທີ່ກຽມໄວ້ ແລ້ວ ໃນແຕ່ລະບ້ານ ແມ່ນໃຊ້ສຳລັບຈຳແນກໃຫ້ຮູ້ ຜູ້ຄອບຄອງເຮັດກະສິກຳ ເພື່ອມາສຳພາດ. ເຫດຜົນສອງ, ຂໍ້ມູນທີ່ ສຳຄັນ ກ່ຽວກັບ ລັກສະນະຂອງຄົວເຮືອນ ຈະໄດ້ເກັບກຳໃນການສຳຫຼວດ.

<u>**ຄົວເຮືອນ**</u> ແມ່ນຄົນໜຶ່ງ ຫລື ຫຼາຍຄົນອາໄສ ແລະ ຢູ່ຮ່ວມກັນເປັນຫຼັກ, ຈັດແຈງຊອກຫາອາຫານຮ່ວມກັນ, ໃຊ້ສອຍສິ່ງຂອງທີ່ຈຳ ເປັນຮ່ວມກັນ ແລະກິດຈະກຳເຄື່ອນໄຫວຮ່ວມກັນໃນຊີວິດປະຈຳວັນ. ໂດຍປົກກະຕິແລ້ວ, ຄົວເຮືອນປະກອບດ້ວຍບຸກຄົນທີ່ມີ ລາຍຊື່ໃນປື້ມສຳມະໂນຄົວ. ຄົວເຮືອນມີຄວາມໝາຍຕ່າງຈາກ ຄອບຄົວ; ສົມມຸດວ່າ ລູກສາວ/ລູກຊາຍອາໄສຢູ່ຢ່າງເອກະລາດ

ຈາກ ພໍ່ແມ່ ໃຫ້ຖືວ່າໄດ້ແຍກເປັນຄົວເຮືອນໜຶ່ງແລ້ວ.

ໂດຍປົກກະຕິແລ້ວ ສາມະຊິກຄົວເຮືອນທຸກຄົນ ຈະອາໄສຢູ່ ເຮືອນຫຼັງດຽວກັນ, ແຕ່ບາງຄັ້ງອາດອາໄສຢູ່ຫຼາຍ ຫຼັງຄາ ເຮືອນກໍ່ໄດ້. ໂດຍທົ່ວໄປແລ້ວຄົວເຮືອນ ປະກອບດ້ວຍຍາດຕິພີ່ນ້ອງ (ຜົວ, ເມຍ, ລູກ, ຜູ້ອື່ນໆ) ແຕ່ບາງຄັ້ງ ລວມມີ ບຸກຄົນອື່ນ ທີ່ບໍ່ແມ່ນຍາດຕິພີ່ນ້ອງ (ເຊັ່ນ ຂໍອາໄສຢູ່ເຮືອນ ຫລື ແຮງງານມາຮັບຈ້າງ...) ສາມາດເອີ້ນເປັນຄົວເຮືອນດຽວ. ກໍລະນີທີ່ບໍ່ນັບເຂົ້າ ເປັນ ສະມາຊິກໃນຄອບເຮືອນປະກອບມີ: ພີ່ນ້ອງ ຫຼື ແຂກຄົນມາຢາມຜູ້ມາເຊົ່າເຮືອນຈະຕ້ອງ ເອົາອອກຕ່າງຫາກ.

ຄົວເຮືອນລວມໝູ່ຈະບໍ່ໄດ້ຈົດນັບເຂົ້າໃນການສຳຫຼວດ. ຄົວເຮືອນລວມໝູ່ ແມ່ນ ຄົວເຮືອນ ທີ່ອາໄສຢູ່ຫໍພັກ ລວມ ຂອງ ບໍລິສັດ, ໂຮງງານ, ໂຮງຮຽນ, ວັດ, ໂຮງໝໍ ແລະ ອື່ນໆ.

ຂໍ້ມູນລະອຽດຕ່າງໆ ກ່ຽວກັບ ກຳນົດຄົວເຮືອນ ເພື່ອຈົດກ່າຍເຂົ້າໃນບັນຊີຄົວເຮືອນ ໄດ້ ຂຽນໄວ້ ໃນ ຂໍ້ 4.4. ຂ່າວສານ ກ່ຽວກັບການເກັບກຳ ຂໍ້ມູນ ຂະໜາດຂອງ ຄົວເຮືອນ ໄດ້ລະບຸໄວ້ ໃນຂໍ້ 6.4.

## 3.2 <u>ຄົວເຮືອນກະສິກຳ ແມ່ນ ຄົວເຮືອນທີ່ມີເງື່ອນໄຂໃດໜຶ່ງດັ່ງລຸ່ມນີ້:</u>

1. ຄົວເຮືອນກະສິກຳແມ່ນຄົວເຮືອນທີ່ໄດ້ທຳການຜະລິດດິນຢ່າງໜ້ອຍ 0.02 ເຮັກຕາ ຫຼື ຫຼາຍກວ່າ 200 $m^2$ ຂຶ້ນໄປ ໃນລະດູຝົນ ປີ 2010 ແລະ ລະດູແລ້ງ ປີ 2010/11
2. ຄົວເຮືອນທີ່ໄດ້ລ້ຽງສັດເຊັ່ນ: ງົວ ຫລື ຄວາຍ 2 ໂຕ, ໝູ, ແກະ ແລະ ແບ້ 5 ໂຕຂຶ້ນໄປ, ສັດປີກ 20 ໂຕຂຶ້ນໄປ ແລະ ສັດລ້ຽງ ອື່ນໆ ໃນໄລຍະເວລາເດີນສຳຫຼວດ
3. ມີການລ້ຽງສັດນ້ຳໃນປີ 2010/11
4. ມີການເຮັດກະສິກຳອື່ນໆ ໃນປີ 2010/11, ເຊັ່ນ: ລ້ຽງແຂ້, ລ້ຽງແມງໄມ້ ... *(ຈົດກ່າຍລາຍລະອຽດ )*

ການກຳນົດຄົວເຮືອນກະສິກຳແມ່ນມີຄວາມສຳຄັນ ແລະ ຈະໄດ້ເປັນບ່ອນອີງ ໃນການຄັດເລືອກ ຄົວເຮືອນເພື່ອສຳພາດ ຄຳຖາມ Q2-Q7 ຂອງໃບສອບຖາມສັ້ນ ຟອມ4). ແລະ ເພື່ອຄັດເລືອກຄົວເຮືອນຕົວແທນ ສຳລັບສືບຕໍ່ສຳພາດ ຄົວເຮືອນກະສິກຳ. ໃບສອບຖາມຍາວ (ຟອມ 5) ໃຊ້ສຳລັບຄົວເຮືອນກະສິກຳເທົ່ານັ້ນ.

ຄົວເຮືອນທີ່ຖືວ່າຄົວເຮືອນກະສິກຳ ແມ່ນຄົວເຮືອນທີ່ໄດ້ດຳເນີນການຜະລິດກະສິກຳເຊັ່ນ: ປູກຝັງ, ລ້ຽງສັດ ແລະ ລ້ຽງສັດນ້ຳ ໃນຊ່ວງໄລຍະເວລາຂອງການສຳຫຼວດ ຕາມ 4 ເງື່ອນໄຂທີ່ໄດ້ກ່າວມາຂ້າງເທິງ. ຄົວເຮືອນທີ່ດຳເນີນກະສິກຳນີ້ ໝາຍຄວາມວ່າແມ່ນຄົວເຮືອນທີ່ເປັນເຈົ້າການໃນການຄຸ້ມຄອງບໍລິຫານຈັດການ ແລະ ມີຄວາມຮັບຜິດຊອບຕໍ່ຜົນໄດ້ຜົນເສຍ ຂອງການຜະລິດກະສິກຳ ແລະ ການຜະລິດກະສິກຳ ແມ່ນລວມທັງການຜະລິດຢູ່ໃນ ເນື້ອທີ່ດິນທີ່ເປັນຂອງຕົນເອງ ເນື້ອທີ່ດິນທີ່ເຊົ່າຂອງດິນຂອງຄົນອື່ນ ແລະ ດິນຂອງຄົນອື່ນໃຫ້ນຳໃຊ້ລ້າໆ

ຕົວຢ່າງ

1. ຄົວເຮືອນໜຶ່ງ ເຮັດການຜະລິດດ້ວຍຕົນເອງ ເຊິ່ງມີສະມາຊິກຄົວເຮືອນເຮັດເອງ ແລະ ບາງຄັ້ງມີການຈ້າງງານ ແລະ ພີ່ນ້ອງ, ໝູ່ເພືອນມາຊ່ວຍ ຖືວ່າຄົວເຮືອນນີ້ແມ່ນ ***<u>ຄົວເຮືອນກະສິກຳ</u>***
2. ຄົວເຮືອນໜຶ່ງ ເຮັດການຜະລິດກະສິກຳ ແຕ່ໄປເຊົ່າດິນຂອງຄົນອື່ນເຮັດ ຄົວເຮືອນດັ່ງກ່າວອາດນຳໃຊ້ແຮງງານ ໃນຄົວເຮືອນ ແລະ ແຮງງານນອກແຕ່ຄວາມເຮືອນນີ້ ຕ້ອງໃຫ້ຄ່ານາດ້ວຍ ການເອົາເຂົ້າ ຫຼື ເງິນໃຫ້ ຫຼື ວັດຖຸອື່ນສຳລັບຄ່າເຊົ່ານາ ໃຫ້ເຈົ້າຂອງນາ ຖືວ່າຄົວເຮືອນນີ້ແມ່ນ ***<u>ຄົວເຮືອນກະສິກຳ</u>***

3. ຄົວເຮືອນໜຶ່ງມີດິນ, ມີຟາມ, ມີສະຖານທີ່ລ້ຽງສັດ, ສັດນ້ຳ, ແຕ່ບໍ່ເຮັດວຽກດ້ວຍຕົນເອງ, ລາວວ່າຈ້າງແຮງງານທັງໝົດມາເຮັດວຽກໃຫ້ຄົວເຮືອນລາວ ຄົວເຮືອນດັ່ງກ່າວຖືວ່າແມ່ນ ***ຄົວເຮືອນກະສິກຳ***
4. ຖ້າມີ 3 ຄົວເຮືອນເຮັດນາຮ່ວມກັນ ຫຼື ມີການຈ້າງແຮງງານນອກ, ມີການຕັດສິນບັນຫາຮ່ວມກັນໃນການບໍລິຫານກະສິກຳ ຢູ່ກັບການຜະລິດກະສິກຳ ແລະ ແບ່ງປັນຜົນຜະລິດຮ່ວມກັນ ປູກຢູ່ດິນຄົນອື່ນໃຫ້ນຳໃຊ້ລ້າ, ດິນມູນ ຫຼື ດິນເຊົ່າ ແລະ ມີການແບ່ງປັດຜົນຜະລິດຮ່ວມກັນ. ໃນກໍລະນີ້ໃຫ້ເອົາຜົນຜະລິດ ແລະ ເນື້ອທີ່ ທຳການຜະລິດ ຫານ 3 ເທົ່າກັນ. ແລະ ທັງ 3 ຄົວເຮືອນແມ່ນ ຖືວ່າຄົວເຮືອນນີ້ແມ່ນ ***ຄົວເຮືອນກະສິກຳ***
5. ຖ້າມີ 3 ຄົວເຮືອນ ເຮັດນາຢູ່ດິນຕອນດຽວ ເຊິ່ງເປັນດິນຂອງຄົວເຮືອນ ທີ່ 1 (ຊື່ທ້າວແສງ), ອີກ 2 ຄົວເຮືອນມາເຮັດນຳກັນ ໂດຍໄດ້ຄ່າຕອບແທນ ເປັນເຂົ້າ ຫຼື ເປັນເງິນສົດ ຫຼື ຄ່າຕອບແທນຢາງອື່ນ. ໃນກໍລະນີນີ້ ຄົວເຮືອນທີ່ 1 (ຊື່ທ້າວແສງ), ຖືວ່າຄົວເຮືອນນີ້ແມ່ນ ***ຄົວເຮືອນກະສິກຳ***. ອີກ 2 ຄົວເຮືອນທີ່ມາເຮັດນຳ ບໍ່ແມ່ນຄົວເຮືອນກະສິກຳ ຖືວ່າຜູ້ມາວ່າຈ້າງແຮງງານ.

**2.3 ຄົວເຮືອນທີ່ບໍ່ແມ່ນຄົວເຮືອນກະສິກຳ ແມ່ນຄົວເຮືອນທີ່ບໍ່ໄດ້ປູກພືດ ຫຼື ລ້ຽງສັດ(ບໍ່ເຮັດຟາມ). ຄົວເຮືອນບໍ່ເຮັດກະສິກຳແມ່ນຄົວເຮືອນໝາຍດ້ວຍຕົນກາ ໃສ່ລະຫັດ 5 ໃນຄຳຖາມ Q7 ຂອງແບບສອບຖາມຟອມ F4.**

ຄົວເຮືອນກະສິກຳ ແມ່ນຫົວໜ່ວຍສຳລັບຂອງຄວາມສົນໃຈໃນການສຳຫຼວດສະຖິຕິກະສິກຳທົ່ວປະເທດຄັ້ງນີ້. ການສຳຫຼວດຄັ້ງນີ້ມີຈຸດປະສົງ ເພື່ອວັດແທກການດຳເນີນກິດຈະກຳການຜະລິດກະສິກຳຂອງຄົວເຮືອນ, ໂດຍສະເພາະການປູກພືດ ແລະການລ້ຽງສັດ

ຄຳສັບບໍລິຫານນຳໃຊ້ດິນ ໝາຍເຖິງຄົວເຮືອນ ດັ່ງກ່າວ ມີດິນກະສິກຳພາຍໃຕ້ການຄວບຄຸມຊ່ວງໄລຍະລະດູຝົນ ປີ 2010 ແລະ ລະດູແລ້ງ 2010/11, ບໍ່ຄຳໜຶ່ງເຖິງວ່າ ດິນດັ່ງກ່າວ ເປັນຂອງຕົນເອງ ຫຼື ບໍ່ກໍ່ຕາມ. ໂດຍປົກກະຕິ, ຄວາມໝາຍນີ້ ຄົວເຮືອນໄດ້ປູກພືດຂອງຕົນເອງໃນຕອນດິນດັ່ງກ່າວ (ຂໍ້ຍົກເວັ້ນທີ່ວ່າ ດິນໄດ້ປະເປັນເຮື້ອ). ຖ້າວ່າຄົວເຮືອນມີດິນກະສິກຳເປັນຂອງຕົນເອງ ແຕ່ວ່າໃຫ້ຄົວເຮືອນອື່ນເຊົ່າ ກໍລະນີນີ້ຈະບໍ່ຖືວ່າເປັນຄົວເຮືອນກະສິກຳ. ການການດຳເນີນດິນກະສິກຳ ຈະບໍ່ລວມເອົາການເຮັດວຽກເປັນແຮງງານໃຫ້ຄົວເຮືອນກະສິກຳອື່ນ. ລູກຈ້າງໝາຍເຖິງ ບຸກຄົນຜູ້ທີ່ເຮັດວຽກໂດຍມີຄ່າແຮງງານ ເປັນເງິນສົດຫຼື ເປັນວັດຖຸ. ມັນຈະມີຄວາມແຕກຕ່າງຈາກຄົວເຮືອນກະສິກຳ.

<u>ຕົວຢ່າງ</u>:

1. ຄົວເຮືອນຂອງ ນາງ ສຸກສີ ບໍ່ມີດິນກະສິກຳ, ແຕ່ສະມາຊິກຄົວເຮືອນຂອງລາວໄດ້ເຮັດວຽກກະສິກຳໃຫ້ຄົວເຮືອນອື່ນ ແບບເປັນແຮງງານ. ສະນັ້ນ, ຄົວເຮືອນຂອງລາວຈະບໍ່ເປັນຄົວເຮືອນກະສິກຳ (ຖ້າຫາກວ່າລາວບໍ່ໄດ້ລ້ຽງສັດ, ສັດນ້ຳ ແລະກະສິກຳອື່ນໆ)
2. ຄົວເຮືອນຂອງທ. ສຸລິວົງ ເປັນເຈົ້າຂອງດິນກະສິກຳ, ແຕ່ລາວໃຫ້ ທ. ເພັດສະໝອນ ເຊົ່າທັງໝົດ. ຄົວເຮືອນຂອງສຸລິວົງຈະບໍ່ແມ່ນຄົວເຮືອນກະສິກຳ (ຖ້າຫາກວ່າລາວບໍ່ໄດ້ລ້ຽງສັດ, ສັດນ້ຳ ແລະ ກະສິກຳອື່ນໆ). ເພັດສະໝອນຈຶ່ງເປັນຄົວເຮືອນກະສິກຳ.
3. ຄົວເຮືອນຂອງສົມຊາຍ ເປັນເຈົ້າຂອງດິນກະສິກຳ, ແຕ່ລາວໃຫ້ ອ່ອນແກ້ວ ເຊົ່າສ່ວນໃດສ່ວນໜຶ່ງ ແລະ ລາວກໍ່ເຮັດສ່ວນໃດສ່ວນໜຶ່ງ, ຖືວ່າທັງ 2 ຄົວເຮືອນແມ່ນຄົວເຮືອນກະສິກຳ.

4. ຄົວເຮືອນຂອງວິໄຊ ເປັນເຈົ້າຂອງ ແລະ ດຳເນີນການຜະລິດໃນຕອນດິນກະສິກຳຂອງລາວ. ແຕ່ຄົວເຮືອນນ້ອງຊາຍລາວ ບຸນມີ ແລະ ບຸນມາ ໄດ້ມາຊ່ວຍລາວເຮັດການຜະລິດກະສິກຳ. ສະນັ້ນ, ຄົວເຮືອນຂອງວິໄຊ ແມ່ນຄົວເຮືອນກະສິກຳ. ສ່ວນ ຄົວເຮືອນ ບຸນມີ ແລະ ບຸນມານັ້ນ ຈະບໍ່ແມ່ນຄົວເຮືອນກະສິກຳ (ຖ້າຫາກວ່າພວກເຂົາບໍ່ໄດ້ລ້ຽງສັດ, ສັດນ້ຳ ແລະ ກະສິກຳອື່ນໆ).

ບາງຄັ້ງ, ດິນກະສິກຳໄດ້ຖືກຄອບຄອງຮ່ວມກັນ. ສາມາດເກີດຂຶ້ນໄດ້, ຕົວຢ່າງ: ມີຄົວເຮືອນຂອງ 2 ອ້າຍນ້ອງໄດ້ຮ່ວມການຜະລິດກະສຳກຳໃນຕອນດິນຂອງພໍ່ແມ່ຂອງເຂົາເຈົ້າ. ຈຸດປະສົງຂອງການສຳຫຼວດສະຖິຕິກະສິກຳນີ້ ດິນທີ່ດຳເນີນຮ່ວມກັນຂອງ 2 ຄົວເຮືອນດັ່ງກ່າວ ຄວນຈະແຍກອອກ ເປັນ 2 ສ່ວນ. ອີງຕາມສະພາບຕົວຈິງ ໃນກໍລະນີບຸກຄົນມາຈາກຄົວເຮືອນຕ່າງກັນ ແຕ່ມາເຮັດວຽກກະສິກຳໃນຕອນດິນຮ່ວມກັນ ໝາຍຄວາມວ່າ ຜູ້ທີ່ໜຶ່ງ ແມ່ນເປັນຄົວເຮືອນກະສິກຳ ແລະ ຜູ້ທີສອງ ໃຫ້ຖືວ່າເປັນລູກຈ້າງ.

## 3.4 ດິນກະສິກຳ:

ດິນກະສິກຳ ແມ່ນດິນທັງໝົດ ທີ່ນຳໃຊ້ໂດຍຄົວເຮືອນຄອບຄອງເຮັດການຜະລິດ ໃນເງື່ອນໄຂໃດໜຶ່ງລຸ່ມນີ້:

- ນຳໃຊ້ປູກພືດໃນລະດູຝົນປີ 2010 ແລະ ລະດູແລ້ງປີ 2010/2011
- ດິນ ປະເປັນເຮື້ອ ຊົ່ວຄາວ(ເປົ່າຫວ່າງຊົ່ວຄ່າວ) ລະຫວ່າງລະດູຝົນປີ 2010 ແລະ ລະດູແລ້ງປີ 2010/2011

ດິນກະສິກຳ ລວມເອົາດິນ ທີ່ນຳໃຊ້ ເພື່ອປະໂຫຍດໃນວຽກງານກະສິກຳ, ເຊັ່ນດິນນຳໃຊ້ປູກພືດຕ່າງໆ, ເນື້ອທີ່ສວນຜັກໃນຂອບເຂດບ້ານ, ລຽບຕາມແມ່ນ້ຳລຳເຊ, ດິນເຂດນ້ຳຖ້ວມ, ອື່ນໆ. ລວມທັງດິນປູກຕົ້ນໄມ້ໃຫ້ໝາກ ແລະ ພືດຢືນຕົ້ນອື່ນໆ.

**<u>ດິນປະເປັນເຮື້ອ ຊົ່ວຄາວ:</u>** ໝາຍຄວາມວ່າ ການຄອບຄອງ ນີ້ໄດ້ ປູກພືດໃນດິນຕອນນັ້ນຢ່າງເປັນປົກກະຕິ, ແຕ່ວ່າ ໃນ ລະຫວ່າງລະດູຝົນປີ 2010 ແລະ ລະດູແລ້ງປີ 2010/2011 ຫລື ດິນນີ້ ບໍ່ໄດ້ທຳການເພາະປູກ ປະເປັນເຮື້ອຍ້ອນວ່າ ຊາວນາ ບໍ່ສາມາດປູກໄດ້ໃນເງື່ອນໄຂນ້ຳຖ້ວມ, ແຫ້ງແລ້ງ, ບໍ່ມີຄວາມສາມາດຊື້ແນວປູກ, ຫລືຂາດແຄນແຮງງານ. ດິນທີ່ປະປ່ອຍບໍ່ນຳໃຊ້ໄດ້ຫລາຍປີຜ່ານມາແລ້ວ ຫລື ຍົກເລີກການຖ່າງປ່າເຮັດໄຮ່ຢ່າງຖາວອນ ບໍ່ໃຫ້ ຖືເອົາດິນໄຮ່ນັ້ນ ເປັນ ດິນປະເປັນເຮື້ອ

## 3.5 ພືດລົ້ມລຸກ:

<u>ພືດລົ້ມລຸກ</u>ແມ່ນພືດທີ່ມີອາຍຸຮອບວຽນຕ່ຳກວ່າ 1 ປີ, ບັນຊີລາຍການພືດລົ້ມລຸກໄດ້ຂຽນໄວ້ໃນ**ເອກະສານຊ້ອນທ້າຍ 1.**

ໃນ ການສຳຫຼວດສະຖິຕິກະສິກຳ ຂອງລາວເຮົາ, ຂໍ້ມູນພືດລົ້ມລຸກ ອີງໃສ່ພືດທີ່ປູກໃນລະດູຝົນປີ 2010 ແລະ ລະດູແລ້ງ 2010/2011. ການປູກພືດໃນລະດູການນັ້ນ ໝາຍເຖິງ ໄລຍະເວລາປູກພືດນັ້ນຕົ້ນຕໍ ໃນລະດູການນັ້ນໆ. ເນື້ອທີ່ຂອງພືດ ໃຫ້ອີງໃສ່ເນື້ອທີ່ປູກ (ປັກດຳ), ບໍ່ແມ່ນອີງໃສ່ເນື້ອທີ່ເກັບກ່ຽວ.

ພືດຕົ້ນຕໍທີ່ປູກຈະເກັບກຳໃນການສຳຫຼວດສະຖິຕິກະສິກຳ ສະແດງໃນຕາຕະລາງ ລຸ່ມນີ້:

ຕາຕະລາງ 3.1: ພືດລົ້ມລຸກຂອງການສຳຫຼວດສະຖິຕິກະສິກຳ

| ປະເພດພືດ | ໄລຍະເວລາປູກ | ໄລຍະເວລາເກັບກ່ຽວ | ລະດູການ |
|---|---|---|---|
| ນາປີ | ເດືອນ: 07-08 /2010 | ເດືອນ: 10 - 12/2010 | ລະດູຝົນ 2010 |
| ເຂົ້າໄຮ່ | ເດືອນ: 05/2010 | ເດືອນ: 08 - 09/2010 | ລະດູຝົນ 2010 |
| ເຂົ້ານາແຊງ | ເດືອນ: 12/2010 - 01/2011 | ເດືອນ: 04 - 05/2011 | ລະດູແລ້ງ2010/2011 |
| ສາລີ | ເດືອນ: 03 - 04/2010<br>ເດືອນ: 11 - 12/2010 | ເດືອນ: 09 - 10/2010<br>ເດືອນ: 01 - 02/2011 | ລະດູຝົນ 2010<br>ລະດູແລ້ງ 2010/2011 |

| | | | |
|---|---|---|---|
| ມັນຕົ້ນ | ເດືອນ: 05 - 06/2010 | ເດືອນ: 10 - 11/2010 | ລະດູຝົນ 2010 |
| ມັນດ້າງ | ເດືອນ: 05 - 06/2010 | ເດືອນ: 10 - 11/2010 | ລະດູຝົນ 2010 |
| ຖົ່ວເຫຼືອງ | ເດືອນ: 05/2010 | ເດືອນ: 08 - 09/2010 | ລະດູຝົນ 2010 |
| ຖົ່ວຂຽວ | ເດືອນ: 10 - 11/2010 | ເດືອນ: 01 - 02/2011 | ລະດູແລ້ງ 2010/2011 |
| ຖົ່ວດິນ | ເດືອນ: 10 - 11/2010 | ເດືອນ: 02 - 03/2011 | ລະດູແລ້ງ 2010/2011 |
| ຝ້າຍ | ເດືອນ: 08 - 09/2010 | ເດືອນ: 01 - 02/2011 | ລະດູແລ້ງ 2010/2011 |
| ອ້ອຍ | ເດືອນ: 04 - 06/2010 | ເດືອນ: 03/2011 | ລະດູຝົນ2010 |
| ຢາສູບ | ເດືອນ: 01 - 02/2011 | ເດືອນ: 04 - 05/2011 | ລະດູແລ້ງ 2010/2011 |
| ຜັກທຸກປະເພດ | ເດືອນ: 10/2010 - 01/2011 | ເດືອນ: 01 - 04/2011 | ລະດູແລ້ງ 2010/2011 |

### 3.6 ພືດຢືນຕົ້ນ:

ພືດຢືນຕົ້ນ (ໄມ້ໃຫ້ໝາກ ຫຼື ຢາງພາລາ) ແມ່ນປະເພດພືດທີ່ມີ ຮອບວຽນການຈະເລີນເຕີບໂຕ ຫຼາຍກວ່າໜຶ່ງປີ ຂຶ້ນໄປ ລວມມີ: ຕົ້ນໄມ້ໃຫ້ໝາກ ເຊັ່ນ: ໝາກກ້ວຍ, ກາເຟ, ຊາ ແລະ ໝາກແໜ່ງ. ບັນຊີລາຍຊື່ ພືດຢືນຕົ້ນເບິ່ງໃນ**ເອກະສານ ຊ້ອນທ້າຍ 2.** ຂໍ້ມູນກ່ຽວກັບພືດຢືນຕົ້ນ ໃຫ້ອີງໃສ່ ພືດທີ່ມີປະຈຸບັນ ເວລາເຮັດການສຳຫຼວດ.

### 3.7 ສັດລ້ຽງ:

ສັດລ້ຽງ ແມ່ນໝາຍເຖິງ ສັດລ້ຽງທຸກປະເພດ ນັບທັງສັດປີກ ທີ່ລ້ຽງ ເພື່ອຈຸດປະສົງສຳລັບກະສິກຳ. ປະເພດສັດລ້ຽງຕົ້ນຕໍລວມມີ: ງົວ, ຄວາຍ, ໝູ, ແກະ, ແບ້, ມ້າ, ຊ້າງ, ໄກ່, ເປັດ, ຫານ, ໄກ່ງວງ ແລະ ນົກກະທາ. ປະເພດງົວລວມມີ: ງົວພູ້, ງົວແມ່ ແລະ ລູກຂອງມັນ. ສັດປະເພດລ້ຽງໃນຄົວເຮືອນເຊັ່ນ: ແມວ, ໝາ ແມ່ນບໍ່ນັບເຂົ້າໃນປະເພດສັດຂ້າງເທິງ.

ຈຳນວນສັດລ້ຽງ ແມ່ນ ໝາຍເຖິງຈຳນວນສັດ ທີ່ໄດ້ຄອບຄອງໃນມື້ສຳຫຼວດ. ການຄອບຄອງຫນຶ່ງ ແມ່ນ ການລ້ຽງເຊິ່ງຖືເອົາບັນຫາ ການເບິ່ງແຍງ, ຮັກສາສັດລ້ຽງໃນໄລຍະຍາວເປັນພື້ນຖານ ແລະ ມີການຕັດສິນໃຈ ເປັນມື້ຕໍ່ມື້ ກ່ຽວກັບສັດດັ່ງກ່າວ. ສ່ວນຫຼາຍການຄອບຄອງ ແມ່ນເຈົ້າຂອງ ເປັນຜູ້ລ້ຽງເອງ, ແຕ່ວ່າບາງເທື່ອ ລ້ຽງສັດ ໃຫ້ຄົນອື່ນ ພາຍໃຕ້ຮູບແບບ ຕົກລົງເຫັນດີເຫັນພ້ອມນຳກັນ. ຕ້ອງໄດ້ຈຳແນກຄວາມແຕກຕ່າງລະຫວ່າງການລ້ຽງສັດ ແລະ ການຈ້າງແຮງງານມາລ້ຽງສັດໃຫ້ຕົນເອງ.

## 4. ຈະສ້າງບັນຊີລາຍຊື່ຄົວເຮືອນຄືແນວໃດ.

**( ລາຍຊື່ ບັນຊີຄົວເຮືອນ F1 )**

### 4.1 ຄວາມໝາຍຫຍໍ້ຂອງບັນຊີລາຍຊື່ຄົວເຮືອນ

ບາດກ້າວທຳອິດຂອງການຈົດນັບພາຍໃນບ້ານ ແມ່ນບັນຊີລາຍຊື່ຄົວເຮືອນ. ຈຸດປະສົງຂອງການສ້າງບັນຊີລາຍຊື່ຄົວເຮືອນ ແມ່ນເພື່ອຈຳແນກຄົວເຮືອນທັງໝົດໃນບ້ານ ແລະ ເວລານັ້ນເລືອກເອົາຄົວເຮືອນຕົວແທນ.ບັນຊີລາຍຊື່ ມີຄວາມຈຳເປັນ ຕ້ອງກະກຽມສຳລັບການເກັບກຳຂໍ້ມູນ.

ລາຍຊື່ຄົວເຮືອນຈະໄດ້ຈົດໃສ່ໃນ ຕາຕະລາງບັນຊີລາຍຊື່ຄົວເຮືອນ F1. ນັກເດີນສຳຫລວດຈະໄດ້ຮັບ ຕາຕະລາງ ການຂຶ້ນບັນຊີ

(F1) ພ້ອມກັບ ການຈົດກ່າຍລະຫັດຂໍ້ມູນບາງສ່ວນ. ສຳລັບແຕ່ລະບ້ານ ຊຶ່ງສະແດງໃຫ້ເຫັນລາຍລະອຽດ ຂອງລະຫັດທີ່ຕັ້ງ ຂອງບ້ານ.

ນັກເດີນສຳຫຼວດຈະໄດ້ຈົດລາຍຊື່ແຕ່ລະຄົວເຮືອນຮ່ວມກັບນາຍບ້ານເຊິ່ງຈະໄດ້ຂຽນຊື່ຫົວໜ້າຄົວເຮືອນທຸກຄົນພາຍໃນບ້ານ.

## 4.2 ບົດບາດຂອງນາຍບ້ານ

ຖ້າເປັນໄປໄດ້, ກ່ອນລົງໄປບ້ານໃຫ້ຕິດຕໍ່ກັບນາຍບ້ານເພື່ອກຳນົດເວລາພົບປະໃຫ້ເໝາະສົມ. ຖ້າ ທ່ານບໍ່ໄດ້ນັດພົບກັບນາຍບ້ານກ່ອນ, ເມື່ອເວລາລົງໄປເຖິງໃຫ້ໄປພົວພັນໄວເທົ່າທີ່ຈະໄວໄດ້ ແລະໃນເວລາພົບນັ້ນ ຄວນແນະນຳວ່າ ທ່ານແມ່ນໃຜ ມາເພື່ອຈຸດປະສົງຫຍັງ?

ນາຍບ້ານຈະຊ່ວຍທ່ານ ໄດ້ 2 ວິທີທາງ:

- ລາວ ຈະເປັນຜູ້ບອກ ຈຳນວນຄົວເຮືອນທັງໝົດໃນການສ້າງບັນຊີລາຍຊື່.
- ຈະຊ່ວຍບອກ ທ່ານ ໃຫ້ຮູ້ ທີ່ຕັ້ງຂອງຄົວເຮືອນ ທີ່ເປັນເປົ້າໝາຍຂອງການສຳຫຼວດ.

ເວລາທີ່ທ່ານຫາກສຳເລັດການສ້າງບັນຊີຄົວເຮືອນພາຍໃນບ້ານແລ້ວ,ໃຫ້ນາຍບ້ານຊ່ວຍກວດເບິ່ງ ຄືນ ຈຳນວນ ຄົວເຮືອນ ແລະ ລົງລາຍເຊັນຈ້ຳກາໃນດ້ານຫຼັງ ຂອງຕາຕະລາງເພື່ອຢັ້ງຢືນວ່າບັນຊີລາຍຊື່ຄົວເຮືອນຄົບຖ້ວນຖືກຕ້ອງ ແລະ ເຮັດໃຫ້ການສຳຫຼວດສາມາດ ດຳເນີນໄປໄດ້ດີ.

ເວລາສຳພາດຄົວເຮືອນ ດີແທ້ ບໍ່ຄວນໃຫ້ນາຍບ້ານຢູ່ນຳ ຫລື ບຸກຄົນອື່ນທີ່ຈະເຮັດໃຫ້ຜູ້ຕອບຢ້ານ ຫລື ລະແວງສົງໃສ ບໍ່ກ້າເວົ້າຄວາມຈິງ. ນີ້ເປັນບັນຫາສຳຄັນທີ່ຄວນເອົາໃຈໃສ່ ເພື່ອເປັນການຮັກສາຄວາມລັບຂອງຂໍ້ມູນການສຳຫຼວດ.

## 4.3 ການກວດສອບບ້ານໃຫ້ຖືກຕ້ອງ

ກ່ອນຈະເລີ້ມສ້າງບັນຊີ, ທ່ານຕ້ອງໝັ້ນໃຈວ່າທ່ານໄດ້ມາຖືກບ້ານແລ້ວ. ໃຫ້ສັງເກດບ້ານແລ້ວກວດກາເບິ່ງແຜນວາດຂອງບ້ານ ວ່າມັນຖືກຕ້ອງສອດຄ່ອງກັນບໍ່. ນາຍບ້ານຈະຮູ້ດີ ວ່າ ຄົວເຮືອນໃດ ຕົກລົ່ນ ພາຍໃນເຂດຄວາມຮັບຜິດຊອບຂອງລາວເອງ.

ບາງຄັ້ງ, ທ່ານອາດພົບສະພາບຂອງບ້ານມີການປ່ຽນແປງ:

- <u>ຫາກບ້ານໄດ້ປ່ຽນຊື່ໃໝ່</u>, ການເດີນສຳຫຼວດຖືວ່າປົກກະຕິ. ບັນທຶກຊື່ບ້ານໃໝ່ໃສ່ ຕາຕະລາງຂື້ນ ບັນຊີ ຄົວເຮືອນ.
- <u>ຖ້າບ້ານແຍກອອກເປັນ 2 ບ້ານໃໝ່</u>, ໃຫ້ເດີນສຳຫລວດ ທັງສອງບ້ານ ໂດຍໃຊ້ບັນຊີລາຍຊື່ຄົວເຮືອນ (ໃບດຽວກັນ).
- <u>ຖ້າບ້ານຫາກລວມເຂົ້າກັບບ້ານອື່ນແລ້ວຕັ້ງເປັນບ້ານໜຶ່ງໃໝ່</u>. ຖ້າຫາກທ່ານເປັນນັກເດີນສຳຫຼວດທັງສອງບ້ານ, ຕ້ອງມີ ຕາຕະລາງຂື້ນບັນຊີຄົວເຮືອນ ສຳລັບແຕ່ລະບ້ານ. ຈາກນັ້ນ ໃຫ້ຂຽນບັນຊີລາຍຊື່ຄົວເຮືອນທັງສອງບ້ານ ໃສ່ ໃບດຽວ (ຕາຕະລາງຂື້ນບັນຊີລາຍຊື່ຄົວເຮືອນ). ສ່ວນຕາຕະລາງຂື້ນບັນຊີໃບທີ່ສອງໃຫ້ປະເປົ່າຫວ່າງແລ້ວຂຽນຄຳອະທິບາຍສາຍເຫດຂອງການລວມເຂົ້າກັບບ້ານອື່ນ. ຖ້າສົມມຸດວ່າ 2 ບ້ານລວມເຂົ້າກັບບ້ານອື່ນ ພັດມີນັກເດີນສຳຫຼວດ 2 ຄົນ ໄດ້ມອບໝາຍຮັບຜິດຊອບແຕ່ລະບ້ານກ່ອນແລ້ວ, ນັກເດີນສຳຫຼວດທີ່ຖືກມອບໝາຍສຳຫຼວດ ບ້ານໃດ(ທີ່ເປັນບ້ານເກົ່າກ່ອນລວມເຂົ້າກັນເປັນບ້ານໃໝ່), ຕ້ອງໄດ້ສຳຫຼວດບ້ານເກົ່າ ຂອງໃຜລາວຕາມທີ່ໄດ້ມອບໝາຍນັ້ນ ແລະຕ້ອງກຳນົດ ເຂດແດນຂອງບ້ານເກົ່ານັ້ນໃຫ້ ຈະແຈ້ງ, ໂດຍເອົາແຜນວາດຂອງບ້ານມາຊ່ວຍຈຳແນກ ເຂດແດນຂອງບ້ານເດີມ.

ຖ້າທ່ານພົບຄວາມຫຍຸ້ງຍາກໃນການກຳນົດເຂດແດນບ້ານ, ພະຍາຍາມຕິດຕໍ່ພົບນັກກວດກາຂອງ ທ່ານໂດຍ ດ່ວນ. ຜົນທີ່ໄດ້ຮັບຈາກການສຳຫຼວດຈະມີຄ່າສູງ ກໍຕໍ່ເມື່ອວ່າ ທຸກຄົວເຮືອນ ໄດ້ຂື້ນບັນຊີລາຍຊື່ໝົດ ແລະ ກໍ່ເປັນການຊ່ວຍແກ້ໄຂບັນຫາໃຫ້ວ່ອງໄວ.

## 4.4 ຄົວເຮືອນໃດຄວນຈົດເຂົ້າບັນຊີ

ທ່ານຕ້ອງຈົດລາຍຊື່ ຄົວເຮືອນທັງໝົດທີ່ມີທີ່ມີໜ້າ ໃນເວລາການສຳຫຼວດ ໝາຍວ່າ ມີທີ່ຕັ້ງຂອງເຮືອນຢູ່ໃນຂອບເຂດຊາຍແດນຂອງ ບ້ານ.

- ບໍ່ຄວນຈົດລາຍຊື່ຄົວເຮືອນທີ່ມາພັກຢູ່ຊົ່ວຄາວ ເຊັ່ນ ມີຕູບ, ຖຽງນາ...ໃນຊ່ວງລະດູການປູກພືດ, ເກັບກ່ຽວ...
- ບໍ່ຈົດເອົາຄົວເຮືອນທີ່ໄດ້ຍົກຍ້າຍໜີອອກຈາກບ້ານ.
- ບໍ່ຈົດເອົາ ເຮືອນພວມ ປຸກສ້າງ ຫຼື ເຮືອນ ບໍ່ມີໃຜ ພັກຢູ່.
- ໃຫ້ຈົດເອົາຄົວເຮືອນ ຊຶ່ງມີທີ່ຢູ່ປົກກະຕິໃນບ້ານ ແຕ່ຜູ້ກ່ຽວໄປຢູ່ບ່ອນອື່ນຊົ່ວຄາວ

**ໃຫ້ຈົດລາຍຊື່ຄົວເຮືອນທັງໝົດໃນບ້ານ ແຕ່ ຍົກເວັ້ນ:**

- ຄົວເຮືອນສະຖານທູດຕ່າງປະເທດທີ່ອາໄສຢູ່ລາວ, ຫຼື ຊາວຕ່າງດາວທີ່ອາໄສຢູ່ລາວ ຊົ່ວຄາວ ຍ້ອນມາເຮັດວຽກກັບອົງການຈັດຕັ້ງສາກົນຕ່າງໆ ຫຼື ບໍລິສັດ....
- ຄົວເຮືອນລວມໝູ່ (ເບິ່ງຂໍ້ 3.1)

ໃຫ້ອີງໃສ່ຂໍ້ 3.1 ກ່ຽວກັບ ນິຍາມ ຄົວເຮືອນ. ໝາຍເຫດ ປົກກະຕິຄົວເຮືອນປະກອບດ້ວຍກຸ່ມບຸກຄົນ ທີ່ ມີລາຍຊື່ປະກົດ ໃນປື້ມສຳມະໂນຄົວ. ເຖິງຢ່າງໃດກໍດີ, ບາງຄັ້ງຄາວ, ປື້ມສຳມະໂນ ຍັງບໍ່ ທັນດັດປັບໃຫ້ເປັນຂໍ້ມູນໃໝ່ຢູ່ຕະຫຼອດ.

## 4. 5 ການຮັບຕາຕະລາງຂຶ້ນບັນຊີຄົວເຮືອນຈາກນັກກວດກາຂັ້ນເມືອງ(F1).

ພາຍຫຼັງການຝຶກອົບຮົມສຳເລັດ: ນັກກວດກາຈະມອບຕາຕະລາງ F1 ທີ່ໄດ້ຈົດກ່າຍລະຫັດຕ່າງໆໃສ່ໃນໜ້າປົກຂອງບັນຊີ:

- ລະຫັດ ແຂວງ, ເມືອງ, ບ້ານ;
- ຊື່ແຂວງ (Q1)
- ຊື່ເມືອງ (Q2)
- ຊື່ບ້ານ (Q3)
- ຄາດຄະເນ ຈຳນວນຄົວເຮືອນໃນບ້ານ (Q4);
- ຈຳນວນຕົວແທນ ທັງໝົດ ໃນ Q5 (ບໍ່ມີຂໍ້ມູນ ([ເປົ່າຫວ່າງ] ຖ້າ ບໍ່ແມ່ນບ້ານຕົວແທນ)

| | ແຂວງ | ເມືອງ | ບ້ານ |
|---|---|---|---|
| **ທີ່ຕັ້ງ ແລະ ພູມສັນຖານ** | | | |

| | | |
|---|---|---|
| **Q1.** | ຊື່ແຂວງ | ________________ |
| **Q2.** | ຊື່ ເມືອງ | ________________ |
| **Q3.** | ຊື່ ບ້ານ | ________________ |
| **Q4.** | ຈຳນວນຄົວເຮືອນທັງໝົດທີ່ຂຶ້ນບັນຊີໃນຄັ້ງກ່ອນ (ຢູ່ໃນຖານຂໍ້ມູນບ້ານ2009) | |
| **Q5.** | ຈຳນວນຕົວແທນທັງໝົດ | |

## 4.6. ວິທີຈົດກ່າຍ ລາຍຊື່ ຄົວເຮືອນພາຍໃນບ້ານ.

ທ່ານ ຈະມີຂໍ້ມູນຫຼາຍຢ່າງ ເພື່ອຊ່ວຍໃນການກະກຽມສ້າງລາຍຊື່ຄົວເຮືອນ. ບາງຄັ້ງອາດແມ່ນລາຍຊື່ຄົວເຮືອນຈາກການຂຶ້ນບັນຊີ ປີ 2009. ນາຍບ້ານອາດອີງໃສ່ປື້ມສຳມະໂນຄົວ ແລະ ຂໍ້ມູນອື່ນທີ່ເກັບກຳມາໄດ້.

ການຈົດນັບທຸກຄົວເຮືອນໃນບ້ານໂດຍຖືເອົາເວລາປະຈຸບັນແມ່ນມີຄວາມສຳຄັນເປັນຢ່າງຍິ່ງຖ້າທ່ານລະເລີຍຄົວເຮືອນໃດນຶ່ງໄປ ຍ່ອມ ຈະມີຜົນສະທ້ອນຕໍ່ຜົນການສຳຫຼວດ.

ໃຫ້ ຈົດລາຍຊື່ຢ່າງເປັນລະບົບ ແລະໃຫ້ໝັ້ນໃຈວ່າບໍ່ມີຄົວເຮືອນໃດໜຶ່ງຂາດຫາຍ. ນາຍບ້ານອາດຊ່ວຍທ່ານ ໂດຍ ເບິ່ງລາຍຊື່ຄົວເຮືອນ ໄປເປັນແຕ່ລະໜ່ວຍ ພາຍໃນບ້ານ. ຈົ່ງລະມັດລະວັງເປັນພິເສດສຳລັບບ້ານ ທີ່ມີຈຳນວນຄົວເຮືອນຫຼາຍ, ສຳລັບແຕ່ລະຄົວເຮືອນໃນເຂດສຳຫຼວດໃຫ້ຈົດກ່າຍຊື່ຄົວເຮືອນໃສ່ຖັນທີ່ (2) ແລະ ໜ່ວຍທີ່ຄົວເຮືອນຂຶ້ນກັບ ຢູ່ພາຍໃນບ້ານ.

- <u>ວິທີຈົດກ່າຍຊື່ຫົວໜ້າຄົວເຮືອນເຂົ້າໃນຕາຕະລາງ</u>

| ລຳດັບ ຄົວເຮືອນ | ຊື່ຫົວໜ້າຄົວເຮືອນ |
|---|---|
| 001 | |
| 002 | |
| 003 | |

## 4.7 ຈະເຮັດແນວໃດ ຖ້າ ມີ ຄົວເຮືອນ ຫຼາຍກ່ວາ ຕາຕະລາງ F1 ທີ່ກຳນົດໄວ້

ຕາຕະລາງ F1 ສາມາດຈົດກ່າຍໄດ້ 264ຄົວເຮືອນ. ຖ້າຈຳນວນຄົວເຮືອນຫາກຫຼາຍກ່ວາຈຳນວນແຖວທີ່ກຳນົດໃຫ້ເອົາຕາຕະລາງໃໝ່ມາຈົດກ່າຍຕື່ມ ໃຫ້ຈົດກ່າຍລະຫັດໃສ່ໜ້າປົກຂອງຕາຕະລາງໃໝ່ ຄືກັນກັບຕາຕະລາງທຳອິດ. ຖ້າສົມມຸດວ່າທ່ານລື່ມຈົດກ່າຍລະຫັດຂ້າງເທິງນັ້ນ ຈະເຮັດໃຫ້ບັນດາຄົວເຮືອນດັ່ງກ່າວ ບໍ່ສາມາດນຳມາໃຊ້ໄດ້. ໃບສືບຕໍ່" ແລະ ລຳດັບຂອງຄົວເຮືອນໃນຕາຕະລາງໃໝ່ຄວນຂຽນຕໍ່ ເຊັ່ນ 265, 266,..., ຍຶດຖືລຳດັບຕົວເລກເປັນສິ່ງສຳຄັນ.

ພາຍຫຼັງຈົດກ່າຍແລ້ວໃຫ້ເອົາຕາຕະລາງ F1 ສອງສະບັບ(ເກົ່າ, ໃໝ່) ຕິດແນບກັນໄວ້

## 4.8 ຈະເຮັດຫຍັງ ພາຍຫຼັງສ້າງບັນຊີ ຄົວເຮືອນແລ້ວ

ພາຍຫຼັງສຳເລັດການສ້າງບັນຊີລາຍຊື່ຄົວເຮືອນແລ້ວ, ຕ້ອງຈົດກ່າຍໃສ່ຄຳຖາມ 6 ແລະ 7 ໃນໜ້າປົກທຳອິດຂອງໃບສອບຖາມ.

| | |
|---|---|
| **Q6.** ລວມຄົວເຮືອນທັງໝົດຢູ່ໃນບ້ານທີ່ຂຶ້ນບັນຊີໃນຄັ້ງນີ້ LAC 2010/2011 | |
| **Q7.** ສາຍເຫດ ແລະ ຄວາມແຕກຕ່າງກັນລະຫວ່າງ Q.4 ແລະ Q.6 | |

<u>Q6 : ຈຳນວນຄົວເຮືອນທີ່ໄດ້ຂຶ້ນບັນຊີ:</u> ແມ່ນຈຳນວນຄົວເຮືອນທີ່ໄດ້ຂຶ້ນບັນຊີຫຼ້າສຸດໃນການສຳຫຼວດຄັ້ງນີ້.

<u>Q7 ເຫດຜົນ ຄວາມແຕກຕ່າງ ລະຫວ່າງ ຄຳຖາມ 4 ແລະ 6</u> : ອະທິບາຍເຫດຜົນ ຄວາມແຕກຕ່າງ ລະຫວ່າງ ຈຳນວນຄົວເຮືອນທີ່

ຂຶ້ນບັນຊີ ຢູ່ໃນຕາຕະລາງນີ້ ແລະ ຈຳນວນພົນລະເມືອງຈາກການລາຍງານ ປີ 2009. ສອງຈຳນວນບໍ່ອາດເທົ່າກັນໄດ້ ຍ້ອນວ່າເວລາໄດ້ຜ່ານພົ້ນໄປເຖິງ 2 ປີແລ້ວ. ເຖິງຢ່າງໃດກໍດີ ການເພີ້ມຂຶ້ນ ຫຼື ລຸດລົງຫຼາຍກວ່າ 10 ຄົວເຮືອນ ຕ້ອງໄດ້ອະທິບາຍ.(ຈົ່ງຄຳຖາມ ນີ້ໄວ້ຫາກ ຄຳຖາມ 4 ບໍ່ມີຄຳຕອບ).
ຈາກນັ້ນ ທ່ານສາມາດເລີ້ມທຳການສຳພາດເກັບກຳຂໍ້ມູນການສຳຫຼວດແຕ່ລະຄົວເຮືອນ.

## 4.9 ໜ້າວຽກເກັບກຳຂໍ້ມູນ ຂອງ ທ່ານ ພາຍໃນບ້ານ

ວຽກງານເກັບກຳຂໍ້ມູນຂອງ ທ່ານ ມີດັ່ງນີ້ :

- ສຳພາດບ້ານເພື່ອເກັບກຳຂໍ້ມູນກ່ຽວກັບພື້ນຖານໂຄງລາງຂອງບ້ານ ໂດຍໃຊ້ໃບສອບຖາມ F3
- ສຳພາດທຸກໆຄົວເຮືອນທີ່ ເພື່ອລວບລວມເອົາຂໍ້ມູນພື້ນຖານໂດຍໃຊ້ໃບສອບຖາມ F4.
- ສຳພາດຄົວເຮືອນຕົວແທນ ໃນບ້ານທີ່ເປັນຕົວແທນ ດ້ວຍ ໃບສອບຖາມ ຍາວ F5.

## 4.10 ຖ້າ ພົບເຫັນຄວາມຜິດຂອງບັນຊີຄົວເຮືອນ ໃນຂະນະສຳພາດຄົວເຮືອນຢູ່

ຖ້າໃນຂະນະທີ່ກຳລັງສຳພາດຄົວເຮືອນ, ທ່ານພົບເຫັນວ່າຄົວເຮືອນທີ່ເຮົາສຳພາດຕົວຈິງແຍກເປັນ 2 ຄົວເຮືອນແທນທີ່ຈະ ເປັນຄົວເຮືອນດຽວ ໃນ F1. ໃຫ້ເອົາ ສອງແບບສອບຖາມ F4 ສຳພາດແຕ່ລະຄົວເຮືອນ ສຳລັບຄົວເຮືອນທີ່ສອງ, ໃຫ້ ບັນທຶກຂໍ້ມູນລະຫັດຕ່າງໆອັນດຽວກັນ (ເຊັ່ນ ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ່) ໃສ່ ແຈ ມຸມຂວາ ຂ້າງເທິງຂອງໃບສອບຖາມ.

ຖ້າ ມີຫຼັງຄາເຮືອນ ແລະ ມີ ຄົວເຮືອນໃດນຶ່ງ ຫາກບໍ່ມີໃນບັນຊີລາຍຊື່ ໃນ ຕາຕະລາງ F1, ໃຫ້ ຂຽນຕື່ມໃສ່ ລຳດັບສຸດທ້າຍ ຂອງ F1. ແລະໃຫ້ດຳເນີນການສຳພາດຄົວເຮືອນ ເໝືອນປົກກະຕິ ໃສ່ F4.

ຖ້າບໍ່ພົບເຫັນຄົວເຮືອນດັ່ງກ່າວໃນບັນຊີລາຍຊື່ຄົວເຮືອນ ຍ້ອນຍົກຍ້າຍໄປບ້ານອື່ນ, ໃຫ້ບັນທຶກຂໍ້ມູນຕ່າງໆ ໃສ່ໜ້າປົກຂອງແບບສອບຖາມ F 4 ແລະ ຂຽນບອກວ່າຍົກຍ້າຍໜີໄປບ້ານອື່ນ, ສ່ວນຄຳຖາມອື່ນ ໆ ໃນ ແບບສອບຖາມF 4 ໃຫ້ ປະຫວ່າງໄວ້ ບໍ່ຕ້ອງຂຽນຫຍັງໃສ່.

ຖ້າໃນກໍລະນີທີ່ຄົວເຮືອນນັ້ນ ຫາກຍົກຍ້າຍໄປຢູ່ ເຮືອນໃໝ່ພາຍໃນຂອບເຂດບ້ານດຽວ, ໃຫ້ຈົດກ່າຍປົກກະຕິ ຖືວ່າບໍ່ມີການປ່ຽນແປງໃດໆ

## 4.11 ກ່າຍ ເອົາລາຍການຂໍ້ມູນໃສ່ຕາຕະລາງບັນຊີຄົວເຮືອນ F1

ພາຍຫຼັງສຳເລັດສຳພາດໝົດທຸກຄົວເຮືອນແລ້ວທ່ານຕ້ອງ ຈົດກ່າຍຂໍ້ມູນຈາກ ແບບສອບຖາມ F4 ໃສ່ ຕາຕະລາງ F1

- ຄົວເຮືອນທີ່ແມ່ນຄົວເຮືອນກະສິກຳ ທີ່ມີໝາຍຕົນກາໃດໜຶ່ງ ຈາກ 1-4 ໃນ ຄຳຖາມ 7 ຈາກແບບສອບຖາມ F4 ແມ່ນໃຫ້ (✓) ໃສ່ຖັນທີ່ 4 ຂອງຕາຕະລາງ F1, ຖ້າບໍ່ແມ່ນຄົວເຮືອນກະສິກຳໃຫ້ປະວ່າງໄວ້.
- ໃຫ້ບັນທຶກເນື້ອທີ່ການປູກເຂົ້າລະດູແລ້ງຈາກຄຳຖາມ 15 ແລະ 16 ຂອງ F4 ໃສ່ຖັນທີ 6 ຂອງຕາຕະລາງ F1
- ຈົດກ່າຍຈຳນວນງົວຈາກຄຳຖາມ 22.1 ຈາກແບບສອບຖາມ F4 ໃສ່ ຖັນທີ 7 ຂອງ ຕາຕະລາງ F1

## 4.12 ຈະເຮັດຫຍັງຫຼັງຈາກສຳເລັດການເກັບກຳຂໍ້ມູນຢູ່ໃນບ້ານ

ຫຼັງຈາກສຳເລັດການສຳພາດໝົດທຸກຄົວເຮືອນຢູ່ພາຍໃນບ້ານ ໃຫ້ນັບຄືນຈຳນວນ ແບບສອບຖາມF4 ທີ່ໄດ້ສຳພາດ ແລະ ໃຫ້ຈົດໃສ່ ໃນຄຳຖາມທີ 8, ແລ້ວກວດຄືນໜ້າວຽກທັງໝົດຂອງການສຳຫຼວດຂອງທ່ານ. ປົກກະຕິແລ້ວ 1 ຄົວເຮືອນ ຈະມີ 1

ໃບສອບຖາມ F4, ສະນັ້ນ ຄຳຖາມທີ 8 ( ຈຳນວນໃບສອບຖາມທີໄດ້ສຳພາດ) ອາດຈະເທົ່າກັບຄຳຖາມທີ່ 6 (ຈຳນວນຄົວເຮືອນທີ່ຂຶ້ນບັນຊີໃນຄັ້ງນີ້)

ສິ່ງສຳຄັນ ຕາຕະລາງສອບຖາມຈະບໍ່ຄົບຕາມຈຳນວນ. ຖ້າຫາກບໍ່ໄດ້ສຳພາດຄົວເຮືອນ. ໃຫ້ອະທິບາຍເຫດຜົນທີ່ບໍ່ໄດ້ໄປສຳພາດຍ້ອນອັນໃດ, ທ່ານຍັງຈະຕ້ອງສົ່ງໃບສອບຖາມພ້ອມທັງຄຳອະທິບາຍພ້ອມ (ເບິ່ງ ຂໍ້ 5.11).

ຈາກນັ້ນໄປ, ໃຫ້ ປະກອບຂໍ້ມູນ ໃສ່ ດ້ານຫຼັງ ຂອງຕາຕະລາງ F1. ຮຽກຮ້ອງຕ້ອງມີ 3 ລາຍເຊັນ:

- ນັກເດີນສຳຫຼວດ ຕ້ອງເຊັນໃສ່ໃບສອບຖາມດ້ານຫຼັງ ເພື່ອສະແດງໃຫ້ເຫັນວ່າໄດ້ການສຳເລັດການເກັບກຳຂໍ້ມູນພາຍໃນບ້ານ
- ນັກກວດກາຕ້ອງກວດກາທຸກໜ້າວຽກຂອງນັກເດີນສຳຫຼວດ ແລ້ວເຊັນໃສ່ໃບສອບຖາມ
- ນາຍບ້ານ ຕ້ອງໄດ້ເຊັນ ແລະຈ້ຳກາ (ຖ້າຫາກມີກາຈ້ຳ) ໃສ່ຕາຕະລາງບັນຊີລາຍຊື່ຄົວເຮືອນ ເພື່ອຢັ້ງຢືນວ່າ ບັນຊີລາຍຊື່ຄົວເຮືອນ ແມ່ນຄົບຖ້ວນ ແລະຖືກຕ້ອງ.

# 5. ຫຼັກການທົ່ວໄປຂອງການສຳພາດຄົວເຮືອນ

## 5.1. ນັດໝາຍ ກັບ ຄົວເຮືອນ ຈະເຮັດແນວໃດ.

ໃຫ້ພະຍາຍາມໄປ ພົບ ນາຍບ້ານ ແລະ ຄະນະ ບ້ານ ກ່ອນຈະລົງໄປ ສຳພາດຄົວເຮືອນ. ຖ້າ ເປັນໄປໄດ້, ໃຫ້ ນັດໝາຍ ກັບຄົວເຮືອນເພື່ອໄປເກັບກຳຂໍ້ມູນ. ບໍ່ຄວນໃຫ້ຄົວເຮືອນລໍຖ້າໂດຍບໍ່ຈຳເປັນ. ໃນເວລາທ່ານໄປເຖິງຄົວເຮືອນ, ແຕ່ຄົວເຮືອນບໍ່ພ້ອມໃຫ້ສຳພາດ ທ່ານອາດຈະນັດເວລາໃໝ່ເພື່ອກັບຄືນມາສຳພາດ. ຂໍຄວນຈົດຈຳ, ໃນການສ້າງແຜນການ, ນັກເດີນສຳຫຼວດ ຄວນຄຳນຶງເຖິງ ໄລຍະ ເວລາ ການເດີນທາງ ແລະ ການໃຊ້ເວລາໃນແຕ່ລະມື້ເພື່ອໃຫ້ທັນກັບກຳນົດເວລາ ການສຳຫຼວດທີ່ໄດ້ວາງໄວ້.

## 5.2. ຈະສຳພາດໃຜ :

ພະຍາຍາມສຳພາດຜູ້ຄອບຄອງເຮັດກະສິກຳ ຫຼື ຫົວໜ້າຄົວເຮືອນ. ກໍລະນີຜູ້ຄອບຄອງບໍ່ສາມາດໃຫ້ສຳພາດ ຫຼື ບໍ່ຢູ່, ນັກເດີນສຳຫຼວດອາດຈະສຳພາດຜູ້ອື່ນທີ່ເປັນຜູ້ໃຫຍ່ ເປັນສະມາຊິກໃນຄົວເຮືອນ ແລະ ໄດ້ເຂົ້າຮ່ວມໃນການປູກພືດ ແລະ ລ້ຽງສັດໃນຄົວເຮືອນ. ບໍ່ຄວນສຳພາດເດັກນ້ອຍ, ເພື່ອນບ້ານ ຫຼື ບຸກຄົນທີ່ບໍ່ແມ່ນສະມາຊິກໃນຄົວເຮືອນ. ນັກເດີນສຳຫຼວດ ອາດຈະຊອກຫາບຸກຄົນທີ່ເໝາະສົມທີ່ສຸດ ທີ່ສາມາດໃຫ້ຄຳຕອບໄດ້ໃນຄົວເຮືອນດັ່ງກ່າວ.

## 5.3. ພາສາ ໃຊ້ ສຳພາດ :

ເມື່ອ ນັກເດີນສຳຫຼວດໄປເຖິງຄົວເຮືອນ, ຄວນໃຊ້ພາສາທີ່ທັງສອງສາມາດເຂົ້າໃຈກັນໄດ້ດີທີ່ສຸດ. ຖ້າມີລາມແປກໍຄວນລະມັດລະວັງ ໃນການໃຊ້ສັບໃຫ້ໃກ້ຄຽງກັບຄຳຖາມທີ່ມີຢູ່ໃບສອບຖາມ.

## 5.4. ສິ່ງທີ່ຄວນປະຕິບັດ ເວລາການສຳພາດ :

ທັດສະນະຂອງຜູ້ຕອບໃນເວລາສຳພາດແມ່ນຂຶ້ນກັບການປະຕິບັດຕົນຂອງນັກເດີນສຳຫຼວດ ທີ່ຈະສຳພາດ. ປົກກະຕິຜູ້

ຕອບແມ່ນຈະໃຫ້ຄວາມຮ່ວມມືຢ່າງເຕັມໃຈຖ້າພວກເຂົາສາມາດເຂົ້າໃຈຄຳຖາມ ແລະນັ້ນແມ່ນຄວາມອາດສາມາດຂອງນັກເດີນສຳຫຼວດ ທີ່ຈະຕ້ອງເຮັດ. ການຮັບຮູ້, ເຂົ້າໃຈໃນໃບສອບຖາມ ແລະ ສາລະບານຂອງປື້ມຄູ່ມືແມ່ນເປັນສິ່ງສຳຄັນ. ໃນການປະຕິບັດການສຳພາດຄວນວາງລັກສະນະທ່າທີສຸພາບອ່ອນນ້ອມ ແລະ ເປັນກັນເອງກັບຄົວເຮືອນ.ເອົາໃຈໃສ່ຟັງຢ່າງລະມັດລະວັງຄຳຕອບຂອງຜູ້ຖືກສຳພາດ ເພື່ອສະແດງໃຫ້ຜູ້ຖືກສຳພາດເຫັນເຖິງຄວາມເອົາໃຈໃສ່, ສົນໃຈ ແລະ ໃຫ້ຄວາມສຳຄັນຕໍ່ຄຳເວົ້າທີ່ຄົວເຮືອນກຳລັງເວົ້າ.

ໂດຍປົກກະຕິ ຈະໃຊ້ເວລາຢູ່ປະມານ 15 ນາທີ ສຳລັບການສຳພາດ. ການສຳພາດຄວນໄປຕາມຄຳຖາມເພື່ອເຮັດໃຫ້ຜູ້ຕອບເຂົ້າໃຈງ່າຍ ແລະ ບໍ່ເສຍເວລາ. ຜູ້ຖືກສຳພາດອາດຈະບໍ່ສົນໃຈ ຖ້າຫາກວ່າໃນການຖາມບໍ່ຕໍ່ເນື່ອງ ແລະ ຢຸດເປັນໄລຍະຍາວລະຫວ່າງຄຳຖາມນີ້ຫາຄຳຖາມຕໍ່ໄປ ເພາະວ່າຄົວເຮືອນອາດບໍ່ເຂົ້າໃຈເຖິງໂຄງສ້າງ ຂອງຄຳຖາມເປັນແນວໃດ ແລະໂຄງສ້າງວຽກແມ່ນຈະໄປໃນຮູບໃດ.

ທ່ານ ແມ່ນ ນັກເດີນສຳຫຼວດ, ດັ່ງນັ້ນ ບໍ່ຈຳເປັນຕ້ອງຈົດເອົາ ຄຳຕອບ ທີ່ຜູ້ຖືກສຳພາດຕອບໃນເວລານັ້ນໂລດ. ຖ້າມີຄຳຕອບ ໃດບໍ່ຄັກແນ່, ບໍ່ຈະແຈ້ງ ທ່ານຈະຕ້ອງໃຊ້ພິກໄຫວ ເພື່ອກວດສອບໃຫ້ໄດ້ຄຳຕອບທີ່ຖືກຕ້ອງ ແລະ ຊັດເຈນກວ່າ ເກົ່າ. ໃນໄລຍະ ການສຳພາດ ໃຫ້ສ້າງ ມະໂນພາບ ເພື່ອໃຫ້ເຫັນກິດຈະກຳດ້ານການກະສິກຳຂອງຄົວເຮືອນຈະຊ່ວຍໃຫ້ທ່ານ ເຂົ້າໃຈຕື່ມກ່ຽວກັບຄຳຕອບທີ່ຖືກຕ້ອງ. ຕ້ອງແນ່ໃຈຕື່ມເວລາ ຂຽນຄຳຕອບເຊັ່ນ: ລາຍການພືດຢ່າງລະອຽດ

ໃນເວລາສຳພາດນັກເດີນສຳຫຼວດຈະຕ້ອງເປັນກາງຢູ່ຕະຫຼອດເວລາ. ຕ້ອງລະມັດລະວັງການໃຊ້ຄຳຖາມທີ່ມີລັກສະນະຊັກຈູງ ເພື່ອໃຫ້ຜູ້ຕອບເຫັນດີນຳ ຄຳເວົ້າໃນເວລາຖາມຄຳຖາມ. ແລະ ຕ້ອງ ຫຼີກລ້ຽງ ການໃຫ້ສັນຍານ ແທນ ຄຳຕອບ ດ້ວຍສາຍຕາ ຫຼື ໃຊ້ ສຳນຽງແຂງ ເຊັ່ນ: " ຖືກຕ້ອງ ຫຼື ຜິດໃດ ". ຖ້າເຫັນວ່າຄຳຕອບຍັງບໍ່ຈະແຈ້ງ (ຍັງເປັນທີ່ສົງໃສ) ແລະ ຕ້ອງການຄຳຕອບທີ່ດີກວ່ານັ້ນ ຈຳເປັນຕ້ອງຊອກຄົ້ນຫາຄຳຕອບ ທ່ານກໍຄວນວາງຕົວເປັນກາງເຊັ່ນ: "ທ່ານຈະອະທິບາຍ ຕື່ມອີກຈັກໜ່ອຍໄດ້ບໍ່?" ບໍ່ຄວນໃຊ້ຄຳຖາມທີ່ມີລັກສະນະຕອບໃຫ້ພ້ອມ ຫຼື ແນະນຳຄຳຕອບເຊັ່ນ : "ທ່ານບໍ່ມີໝູແມ່ນບໍ່ ?".

ອາດຈະແນະນຳໃນລັກສະນະດັ່ງລຸ່ມນີ້ໄດ້ :

- ກ່ອນຈະສຳພາດ ທ່ານຈະຕ້ອງໄດ້ແນະນຳຕົນເອງ ແລະອະທິບາຍຈຸດປະສົງ, ເປົ້າຫມາຍຂອງການສຳຫຼວດຈາກນັ້ນກໍສະເໜີສິ່ງທີ່ຕ້ອງການຈາກຄົວເຮືອນ. ເອົາໃຈໃສ່ສ້າງຄວາມເປັນກັນເອງກັບຄົວເຮືອນຕະຫຼອດເວລາແຕ່ ເລີ້ມຕົ້ນຈົນຈົບການສຳພາດ.
- ຖ້າຜູ້ຖືກສຳພາດຍັງມີຄວາມລະແວງສົງໃສ ກັງວົນກ່ຽວກັບຄຳຕອບໃນຄຳຖາມ ທ່ານຈະຕ້ອງໄດ້ອະທິບາຍຄືນວ່າທຸກໆຄຳຕອບໃນໃບສອບຖາມນີ້ຈະຖືເປັນຄວາມລັບ ແລະ ຕ້ອງແນ່ໃຈວ່າບໍ່ມີສະມາຊິກຂອງຄົວເຮືອນອື່ນຢູ່ທີ່ນັ້ນໃນເວລາສຳພາດ.
- ໃຫ້ໂຄສະນາຊວນເຊື່ອ ແລະ ຊັກຈູງ ຄົວເຮືອນ ເພື່ອໃຫ້ເຂົາເຈົ້າ ໃຫ້ການຮ່ວມໄມ້ຮ່ວມມືນຳ.
- ກະກຽມ ທຸກ ໆ ຄຳຕອບ ລ່ວງໜ້າໄວ້ ເພື່ອ ຄົວເຮືອນອາດຈະມີຄຳຖາມ, ຖ້າທ່ານບໍ່ສາມາດອະທິບາຍ ຫຼື ບໍ່ ສາມາດຕອບ ທ່ານຈະຕ້ອງຊອກຫານັກກວດກາ ຂອງ ທ່ານ ເພື່ອຂໍຄຳເຫັນ.
- ເມື່ອສຳເລັດການສຳພາດນັກເດີນສຳຫຼວດຄວນຂອບໃຈຕໍ່ຜູ້ໃຫ້ສຳພາດທີ່ໄດ້ໃຫ້ການຮ່ວມມື

## 5.5 ການຖາມໃຫ້ໃຊ້ຄຳເວົ້າ ຕາມຄວາມໝາຍ ໃນໃບສອບຖາມ

ຄວນເອົາໃຈໃສ່ທີ່ສຸດ ຄຳເວົ້າໃນໃບສອບຖາມ. ສ່ວນທີ່ສຳຄັນທີ່ສຸດຂອງນັກເດີນສຳຫຼວດແມ່ນ <u>ຖາມຄຳຖາມທີ່ມີຄວາມ</u>

ໝາຍ ອັນດຽວກັນ ກັບ ຄຳເວົ້າ ໃນໃບສອບຖາມ. ນີ້ ແມ່ນທົນທາງດຽວ ທີ່ຮັບປະກັນໄດ້ວ່າການເກັບກຳຂໍ້ມູນ ແມ່ນຖືກຕ້ອງ, ເປັນເອກະພາບກັນໃນທົ່ວປະເທດ ແລະ ຊ່ວຍໃຫ້ການສຳພາດນັ້ນລະອຽດດີ.

ເວົ້າ ແລະ ອະທິບາຍຈະແຈ້ງຈະຊ່ວຍໃຫ້ຜູ້ຕອບເຂົ້າໃຈແຈ້ງ ໃນ ແຕ່ລະຄຳຖາມ. ອ່ານຄຳຖາມຄືນໃຫ້ຄົວເຮືອນຟັງ ອີກເທື່ອນື່ງຖ້າມີຄວາມຈຳເປັນ. ຖ້າຄົວເຮືອນຍັງບໍ່ທັນເຂົ້າໃຈຄຳຖາມ ທ່ານຈະຕ້ອງອະທິບາຍອີກ ແລະໃຊ້ວິທີອະທິບາຍທີ່ໄດ້ໃຫ້ໄວ້ໃນຂໍ້ທີ 6.

ບາງຄຳຖາມ, ເຊັ່ນໃນຄຳຖາມ 2 ມີຄຳເວົ້າກ່ຽວກັບການຜະລິດກະສິກຳ ຕ້ອງໄດ້ອ່ານຕາມຄຳຖາມ.

## 5.6 ການຈັດວາງລະບຽບຂອງແບບສອບຖາມ

ບາງລະບຽບທີ່ໃຊ້ ສັນຍາຫຼັກ ໃນໃບສອບຖາມ :

- ບ່ອນທີ່ນັກເດີນສຳຫຼວດຈະຂຽນຄຳຕອບທີ່ເປັນຄຳຖາມ ເປັນຈຳນວນຕົວເລກນັ້ນ ແມ່ນບ່ອນທີ່ຫ້ອງສີ່ລ່ຽມບໍ່ມີສີ. ຖ້ານັກເດີນສຳຫຼວດຕ້ອງການຢາກ ມີຂໍ້ສັງເກດ ຫຼື ຄິດໄລ່ອັນໃດອັນນື່ງ ຄວນໃຊ້ບ່ອນເປົ່າຫວ່າງ ຂອງຕາຕະລາງ (ຫຼື ເບື້ອງຫຼັງ ຂອງໃບສອບຖາມ).
- ຄຳຖາມທີ່ໄດ້ສະແດງຮູບສີ່ລ່ຽມທີ່ມີເສັ້ນຂີດຕໍ່ເນື່ອງກັນ ແມ່ນໝາຍໄດ້ຄຳຕອບດຽວ (ເບິ່ງຕົວຢ່າງໃນຄຳຖາມທີ 2 ຂອງແບບສອບຖາມ F4)

☐ 1
☐ 2

- ຄຳຖາມທີ່ສະແດງຮູບສີ່ລ່ຽມແຕ່ບໍ່ມີເສັ້ນຂີດຕໍ່ເນື່ອງກັນ ແມ່ນໝາຍໄດ້ຫຼາຍຄຳຕອບ (ເບິ່ງຕົວຢ່າງໃນຄຳຖາມທີ 6 ຂອງແບບສອບຖາມ F4 )

☐ 1
☐ 2
☐ 3

- ຄຳຖາມທີ່ສະແດງຮູບສີ່ຫລ່ຽມດຳເຂັ້ມ ແລະ ມີຕົວອັກສອນ ACO ຢູ່ເທິງ ແມ່ນບໍ່ໃຫ້ບັນທຶກຫຍັງໃສ່ ເພາະຫ້ອງດັ່ງກ່າວແມ່ນສະເພາະພະນັກງານຫ້ອງການສຳຫຼວດສະຖິຕິກະສິກຳທົ່ວປະເທດຂັ້ນສູນກາງ (ເບິ່ງຕົວຢ່າງໃນຄຳຖາມທີ 11 ຂອງແບບສອບຖາມ F4)

**ACO**

- ຄຳຖາມທີ່ບໍ່ກ່ຽວພັນກັບຄົວເຮືອນ ແລະ ບໍ່ຈຳເປັນຖາມຄົວເຮືອນກ່ຽວກັບເນື້ອທີ່ ດິນທຳການຜະລິດກະສິກຳ ຄຳຖາມ 3 ຖ້າວ່າຄົວເຮືອນຕອບວ່າບໍ່ໄດ້ເຮັດ ໃນຄຳຖາມ 2 ໃຫ້ຂ້າມໄປຄຳຖາມ 4

ຕົວຢ່າງ, ຄຳຖາມທີ່ສະແດງຮູບລູກສອນ ແມ່ນໝາຍເຖິງໃຫ້ຂ້າມໄປຂໍ້ທີ່ໄດ້ລະບຸໄວ້ຕໍ່ໜ້າລູກສອນ

➡ *ໄປຫາຄຳຖາມQ4*

## 5.7 ຈະຈົດກ່າຍ ຄຳຕອບ ຄືແນວໃດ

ການຈົດກ່າຍໃສ່ໃນໃບສອບຖາມ, ທ່ານໝັ້ນໃຈແລ້ວບໍ່ວ່າໄດ້ຈົດກ່າຍຖືກຕ້ອງຄົບຖ້ວນ ແລະຂຽນຈະແຈ້ງ ໂດຍໃຊ້ບິກສີຟ້າ. ສຳລັບຕົວເລກແມ່ນໃຊ້ຕົວເລກໂຣມັນ (0,1, 2,3,4,5,6,7,8,9 ) ບໍ່ໃຫ້ໃຊ້ຕົວເລກພາສາລາວ. ຕົວເລກທະສະນິຍົມ (ເລກເສດ) ຫຼັງຈຸດ ໃຫ້ ຂຽນ ແບບລະບົບ ພາສາຝຣັ່ງເສດ" 1,25" ແທນທີ່ຈະຂຽນ "1.25" (ຫ້າມຂຽນ).

ຄຳຕອບທີ່ນັກເດີນສຳຫຼວດຈະຕ້ອງໄດ້ຈົດໃນໃບສອບຖາມມີ 4 ປະເພດ:

ໃຊ້ເຄື່ອງໝາຍ (√ ) ໃສ່ຫ້ອງສີ່ຫຼ່ຽມ (ຄຳຖາມ 25 ຂອງແບບສອບຖາມ F4)

**Q25 ຄົວເຮືອນຂອງທ່ານໄດ້ຂາຍຜົນຜະລິດພືດ-ສັດລ້ຽງໃດນຶ່ງບໍ່?**

**ເລືອກໄດ້ນຶ່ງຄຳຕອບ(ໝາຍ√)**

ໄດ້ຂາຍ ☑ 1

ບໍ່ໄດ້ຂາຍ ☐ 2

ຂຽນ ຈຳນວນຕົວເລກເຂົ້າໃນຮູບສີ່ຫຼ່ຽມ (ຄຳຖາມ 26 ຂອງແບບສອບຖາມ F4)

**Q26 ປະຈຸບັນຄົວເຮືອນຂອງທ່ານຢູ່ຮ່ວມກັນທັງໝົດມີຈັກຄົນ?** **6** ຄົນ

ຂຽນຕາມຄຳເວົ້າທີ່ເປັນຄຳຕອບຂອງຜູ້ຕອບ (ຄຳຖາມ 27 ຂອງແບບສອບຖາມ F4)

**Q27 ຫົວໜ້າຄົວເຮືອນແມ່ນເຜົ່າຫຍັງ?** ໄຕດຳ

## 5.8. ຈະຈົດກ່າຍຂໍ້ມູນ ເນື້ອທີ່ ຄືແນວໃດ

ຄຳຖາມກ່ຽວກັບເນື້ອທີ່, ໃຫ້ນຳໃຊ້ ທັງສອງຫົວໜ່ວຍ ຄື : ຫົວໜ່ວຍທ້ອງຖິ່ນທີ່ເຄີຍໃຊ້ ແລະ ເຮັກຕາ. ຫົວໜ່ວຍທ້ອງຖິ່ນທີ່ ໃຊ້ ແມ່ນ ທຸກໆຫົວໜ່ວຍທີ່ທ້ອງຖິ່ນເຄີຍນຳໃຊ້ ໃນບ້ານຂອງໃຜລາວ ຍົກເວັ້ນ ຫົວໜ່ວຍທີ່ເອີ້ນວ່າ "ເຮັກຕາ".

<u>ກໍລະນີຜູ້ຕອບລາຍງານເປັນເຮັກຕາ:</u> ແມ່ນໃຫ້ຂຽນຄຳຕອບເຂົ້າໂດຍກົງໃນຫ້ອງສີ່ຫຼ່ຽມທີ່ມີເຄື່ອງໝາຍ "ເຮັກຕາ". ນັກເດີນ ສຳຫຼວດບໍ່ຈຳເປັນຈະຂຽນຫຍັງເຂົ້າຕື່ມໃນແຖວຫົວໜ່ວຍທ້ອງຖິ່ນອີກ.

<u>ກໍລະນີຜູ້ຕອບລາຍງານເປັນຫົວໜ່ວຍທ້ອງຖິ່ນ :</u> ໃຫ້ຂຽນຄຳຕອບນັ້ນເຂົ້າໃນຫ້ອງ "ຫົວໜ່ວຍທ້ອງຖິ່ນ" ໂດຍຂຽນຕາມຄຳບອກຂອງຜູ້ຕອບຢ່າງຖືກຕ້ອງ ເຊັ່ນ : "3 ໄລ່", ຫຼື "ປະມານ 20 ແມັດ ຄູນ 30 ແມັດ" ຫຼື "ໃຊ້ແນວເຂົ້າປູກ 50 ກິໂລ". ຈາກນັ້ນ ຈຶ່ງຄ່ອຍຄິດໄລ່ມາເປັນເຮັກຕາ ໂດຍໃຊ້ຕາຕະລາງຊ້ອນທ້າຍ 3 ຊ່ວຍໃນການຄິດໄລ່ ແລ້ວຈົດລົງໃສ່ຫ້ອງ "ເຮັກຕາ"

ການຈົດກ່າຍຈຳນວນເຮັກຕາເຂົ້າຕາຕະລາງໃນຫ້ອງເຮັກຕານັ້ນ ໄດ້ກຳນົດຫຼັງຈຸດແມ່ນ <u>2 ຕົວເລກ</u> ຕົວຢ່າງ : "1,00", "1,25", "0,75" ກໍລະນີ 0 ເຮັກຕາ ກໍໃຫ້ຂຽນ 0 ໂລດ ບໍ່ໃຫ້ປະຫວ່າງເປົ່າ. <u>ຫ້າມບໍ່ໃຫ້ຂຽນເຮັກຕາຕໍ່ຫຼັງຕົວເລກ</u> ຕົວຢ່າງ : "1,25 ເຮັກຕາ".

## 5.9. ໃຫ້ຂໍ້ມູນດ້ານເນື້ອທີ່ ຖືກຕ້ອງ ແນວໃດ

ໜ້າທີ່ອັນສຳຄັນທີ່ສຸດ ຂອງ ນັກເດີນສຳຫຼວດ ຕ້ອງແນ່ໃຈວ່າຂໍ້ມູນຂ່າວສານທີ່ໄດ້ມາຈາກການສຳພາດ ແມ່ນຖືກຕ້ອງເປັນ ຈິງ ແລະ ຕໍ່ບັນຫານີ້ ສາມາດກວດສອບໄດ້ຫຼາຍວິທີທາງ.

<u>**ການລາຍງານ ເນື້ອທີ່ ໄຮ່**</u>: ມີບາງຕອນທີ່ໄກຈາກໝູ່ບ້ານ ເຊິ່ງຍາກທີ່ຈະໄປເບິ່ງຕອນດິນດັ່ງກ່າວ. ເອກະສານດິນຂອງຊາວກະສິກອນທີ່ເສຍພາສີທີ່ດິນອາດຈະບໍ່ຈະແຈ້ງ. ຖ້າຈຳເປັນ ຢາກໄດ້ຂໍ້ມູນບາງຢ່າງ ເພື່ອຊ່ວຍຄາດຄະເນເນື້ອທີ່, ຂໍ້ມູນແນວປູກ ທີ່ໃຊ້, ຜົນຜະລິດທີ່ເກັບກ່ຽວໄດ້ຈຳນວນມື້ປູກ ຫຼື ເກັບກ່ຽວພືດເນື້ອທີ່ເກັບກ່ຽວ, ເວລາປູກ ຫຼືເກັບກ່ຽວພືດ, ຫຼື ເຊິ່ງສາມາດ

ນຳມາສົມທຽບ ແລະ ຄິດໄລ່ ເນື້ອທີ່ ດັ່ງກ່າວ. ຜູ້ຖືກຕອບອາດຢ້ານກົວ ເວລາ ລາຍງານ ດ້ານເນື້ອທີ່ໄຮ່ ແຕ່ນັກເດີນສຳຫຼວດ ຈະຕ້ອງສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ຕອບວ່າຈະບໍ່ມີຜົນກະທົບສິ່ງທີ່ບໍ່ດີຄືນໃຫ້ເຂົາເຈົ້າ, ພວກເຮົາຕ້ອງການຂໍ້ມູນເພື່ອຄິດໄລ່ໃຫ້ເຫັນຮູບພາບ ຕາມຈຸດປະສົງຂອງການສຳຫຼວດເທົ່ານັ້ນ.

**<u>ການຕີລາຄາ ການລາຍງານ ຂໍ້ມູນດ້ານເນື້ອທີ:</u>** ທຸກຂໍ້ມູນໃນການສຳຫຼວດ, ໜ້າທີ່ຂອງນັກເດີນສຳຫຼວດບໍ່ພຽງແຕ່ຈົດກ່າຍ ເຂົ້າໃນໃບສອບຖາມຕາມຄຳຕອບຂອງຜູ້ຖືກສຳພາດ, ແຕ່ ທ່ານ ຈະຕ້ອງສັງເກດວ່າຄຳຕອບນັ້ນສົມເຫດສົມຜົນ ຫຼື ບໍ່. ຖ້າຫາກ ປະກົດເຫັນວ່າ ຂໍ້ມູນຍັງບໍ່ຈະແຈ້ງເທື່ອ. ອາດຈະຖາມຜູ້ຕອບຄືນເພື່ອຢັ້ງຢືນອີກເທື່ອນຶ່ງ.

## 5.10 ຖ້າ ຂຽນ ຜິດ ຈະແກ້ແນວໃດ

ຖ້ານັກເດີນສຳຫຼວດຂຽນຜິດ ຫຼືຜູ້ຕອບອາດຈະປ່ຽນຄຳຕອບ, ໃຫ້ຂີດຂ້າເປັນເສັ້ນຊື່ລວງຂວາງໃສ່ຄຳຕອບທີ່ບໍ່ຖືກຕ້ອງແລ້ວ ຂຽນຄຳຕອບທີ່ຖືກຕ້ອງຢອງໃສ່ແທນ. ຫ້າມບໍ່ໃຫ້ລຶບຄຳຕອບທີ່ຜິດນັ້ນ ຕົວຢ່າງ :

ກ. ການແກ້ຄຳຜິດທີ່ເປັນຕົວເລກ



ຂ. ການແກ້ຄຳຜິດທີ່ໝາຍຕິກໃນຫ້ອງສີ່ລ່ຽມ (box)

**Q9 ໃນລະດູຝົນ 3 ປີຜ່ານມາສົມທຽບປະລິມານນ້ຳຝົນໃສ່10ປີ**

| | | | |
|---|---|---|---|
| [illegible] | <u>ມີນ້ຳຝົນນ້ອຍລົງ</u> | ✓ | 1 |
| | <u>ປົກກະຕິ</u> | ✓ | 2 |
| | <u>ມີນ້ຳຝົນຫຼາຍຂຶ້ນ</u> | | 3 |

ຄ. ການແກ້ຄຳຜິດທີ່ເປັນຕົວໜັງສື

**Q27 ຫົວໜ້າຄົວເຮືອນແມ່ນເຜົ່າຫຍັງ?**:........~~ໄຕດຳ~~ ໄຕແດງ.......................................................................

## 5.11 ໃບສອບຖາມສຳລັບທຸກໆຄົວເຮືອນ

ເວລາ ທ່ານ ສົ່ງໃບສອບຖາມທີ່ຈົດກ່າຍຄົບຖ້ວນແລ້ວນັ້ນໃຫ້ນັກກວດກາ. ນັກກວດກາຈະກວດຄືນ ເບິ່ງວ່າ ແຕ່ລະໃບສອບຖາມໄດ້ສຳພາດ ແຕ່ລະຄົວເຮືອນແລ້ວບໍ່. ເຖິງແມ່ນວ່າບໍ່ສາມາດສຳພາດຄົວເຮືອນນັ້ນໄດ້ກໍຕາມ ຕ້ອງສົ່ງໃບສອບຖາມເປົ່າ ຂອງແຕ່ລະຄົວເຮືອນໃນບ້ານ ນັ້ນ. **<u>ຄົວເຮືອນໃດທີ່ທ່ານຍັງບໍ່ທັນໄດ້ສຳພາດດ້ວຍເຫດຜົນໃດກໍຕາມ, ໃບສອບຖາມຂອງຄົວເຮືອນນັ້ນຈະລວມຢູ່ໃນຊຸດຂອງບ້ານນັ້ນ</u>**ຂຽນລາຍລະອຽດ, ເຫດຜົນ ຕ່າງ ໆ ວ່າ ເປັນຫຍັງຈຶ່ງ ບໍ່ ສາມາດສຳພາດຄົວເຮືອນນັ້ນໄດ້.

ເຖິງແມ່ນວ່າຄົວເຮືອນຫາກບໍ່ມີ ດິນ ຫຼືສັດລ້ຽງ ກໍຕ້ອງໄດ້ປະກອບຂໍ້ມູນໃສ່ໃບສອບຖາມ(Q.1 -Q7) ໃນແບບສອບຖາມ F4.

## 5.12. ການຮັກສາເປັນຄວາມລັບ :

ການສຳຫຼວດຈະໄດ້ຮັບ ຜົນສຳເລັດ, ກໍຕໍ່ເມື່ອຊາວກະສິກອນ ເຊື່ອໝັ້ນວ່າຂໍ້ມູນຂ່າວສານທີ່ເຂົາເຈົ້າໄດ້ໃຫ້ນັກເດີນສຳຫຼວດນັ້ນຈະ

ຖືກຮັກສາເປັນຄວາມລັບ. ໝາຍຄວາມວ່າຄຳຕອບຂອງຜູ້ຖືກສຳພາດບໍ່ສາມາດເປີດເຜີຍໃຫ້ຜູ້ໃດຜູ້ນື່ງ ຫຼືອົງການໃດໜຶ່ງຟັງ. ນອກຈາກນັກກວດກາ ແລະພະນັກງານຈາກຫ້ອງການສຳຫຼວດສະຖິຕິກະສິກຳ.

ຂໍ້ມູນຂ່າວສານທີ່ໄດ້ຈາກການສຳຫຼວດນີ້ ຈະໃຊ້ເປັນແຕ່ຂ່າວສານສະຖິຕິ ລວມ, ຈະບໍ່ໃຊ້ເປັນຕົວເລກຢັ້ງຢືນໃນການເກັບພາສີ ຫຼື ເປົ້າໝາຍອື່ນ, ຈະບໍ່ມີຜົນກະທົບໃດໆ ຕໍ່ບຸກຄົນໃດນຶ່ງ ມັນພຽງເປັນ ຜົນທີ່ໄດ້ຮັບຈາກການສຳຫຼວດສະຖິຕິກະສິກຳເທົ່ານັ້ນ .

ຫຼັກການສຳຄັນທີ່ສຸດ ໃນການຮັກສາຄວາມລັບ ມີ:

- ນັກເດີນສຳຫຼວດຈະບໍ່ເວົ້າເກີນໜ້າທີ່ຂອງຕົນທີ່ໄດ້ຮັບມອບໝາຍໃນເວລາຝຶກອົບຮົບ
- ບໍ່ໃຫ້ຜູ້ໃດຜູ້ນື່ງເຂົ້າຟັງນຳໃນເວລາສຳພາດຄົວເຮືອນ, ນອກຈາກນັກກວດກາ ຫຼື ພະນັກງານຈາກຫ້ອງການສຳຫຼວດ.
- ຢ່າປະໃບສອບຖາມທີ່ໄດ້ສອບຖາມສຳເລັດແລ້ວໃຫ້ຜູ້ອື່ນເບິ່ງ.
- ຖ້າເປັນໄປໄດ້, ໃນເວລາສຳພາດຄວນຢູ່ ສອງຕໍ່ສອງ ກັບຫົວໜ້າຄົວເຮືອນ ຫຼື ກັບສະມາຊິກຂອງ ຄົວເຮືອນນັ້ນເທົ່ານັ້ນ.

## 6. ວິທີຈົດກ່າຍໃບສອບຖາມຂັ້ນບ້ານ

## (ແບບຟອມ F3)

### 6.1 ກ່ອນການເລີ້ມສຳພາດບ້ານ

ກ່ອນການເລີ້ມສຳພາດບ້ານນັກເດີນສຳຫຼວດຕ້ອງຂຽນຂໍ້ມູນເອກະລັກຂອງບ້ານ :

- ຊື່ ແຂວງ, ເມືອງ, ບ້ານ ແລະ ກຸ່ມບ້ານ
- ລະຫັດ ແຂວງ, ເມືອງ, ບ້ານ ແລະ ລະຫັດກຸ່ມບ້ານ ໃຫ້ໃສ່ລະຫັດບ້ານທີ່ເປັນທີ່ຕັ້ງ ຫລື ເປັນທີ່ວ່າການກຸ່ມບ້ານ

**ຄຳຖາມທີ 1 :** ນັກເດີນສຳຫລວດຕ້ອງໄດ້ຂຽນຊື່ ແຂວງ, ເມືອງ, ບ້ານ ພ້ອມທັງໃສ່ລະຫັດ ໃນບ່ອນທີ່ກຳນົດໄວ້ ໃຫ້ຖືກຕ້ອງຕາມບັນຊີລາຍຊື່ບ້ານທີ່ນັກກວດກາຂອງທ່ານໄດ້ຈັດໄວ້ໃຫ້ ໃນເວລາຝຶກອົບຮົມ.

[redacted]

### 6.2 ການຕັ້ງຄຳຖາມ

**ຄຳຖາມ 2:** ທີ່ຕັ້ງພູມສັນຖານຂອງບ້ານ. ຄຳຖາມນີ້ ແມ່ນເພື່ອສຶກສາເບິ່ງຮູບຮ່າງລັກສະນະທີ່ຕັ້ງຂອງບ້ານ, ໂດຍເບິ່ງພື້ນພິວດິນທີ່ປະຊາຊົນໄດ້ຕັ້ງເຮືອນຊານຂອງເຂົາເຈົ້າໃສ່ ຕາມຄ້ອຍຊັນບໍ່? ສັນພູ, ພູພຽງ. ຄຳຖາມນີ້ ນັກເດີນສຳຫລວດທັງຖາມນາຍບ້ານ ແລະ ຕ້ອງໄດ້ສັງເກດດ້ວຍຕາຂອງຕົນເອງຄັກແນ ກ່ອນຫມາຍຄຳຕອບທີ່ຖືກຕ້ອງເຂົ້າໃນຊ່ອງລະຫັດຄຳຕອບ ຫມາຍຕົນກາ ( ✓) ໃສ່ຄຳຕອບທີ່ຖືກຕ້ອງ. 1 ທົ່ງພຽງ, 2 ພູດອຍ, 3 ພູພຽງ, 4 ອື່ນໆ

**ຄຳຖາມ 3:** ເນື້ອທີ່ຂອງບ້ານທັງຫມົດ, ຈຸດປະສົງຄຳຖາມນີ້ແມ່ນເພື່ອຢາກຮູ້ ຈຳນວນເນື້ອທີ່ດິນທັງໝົດທີ່ບ້ານຄູ້ມຄອງມີຈັກເຮັກຕາ? ເນື້ອທີ່ດິນດັ່ງກ່າວ ແມ່ນລວມເອົາທັງດິນປຸກສ້າງ, ດິນບ້ານ, ປ່າໄມ້, ດິນກະສິກຳ ແລະດິນອື່ນໆ ໂດຍໃຫ້ຄິດໄລ່ເປັນເຮັກຕາ. 1 ເຮັກຕາ ເທົ່າກັບ 10.000 $ມ^2$ ຫຼື (100 ມ x 100 ມ); 1 $km^2$=100 ha

[redacted]

**ຄຳຖາມ 4, 5, 6: ມີເນື້ອທີ່ດິນກະສິກຳທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກມີບໍ່?**

ດິນກະສິກຳທີ່ໄດ້ຮັບຜົນກະທົບຈາກລະເບີດ ຈຸດປະສົງຂອງຄຳຖາມນີ້ແມ່ນຢາກສຶກສາເຖິງບັນຫາຄວາມສ່ຽງ ແລະ ຜົນຮ້າຍຂອງ ລະເບີດທີ່ບໍ່ທັນແຕກຈາກປາງສົງຄາມອິນຈີນທີ່ອາດມີທົບຕໍ່ປະຊາຊົນໃນການເຮັດກະສິກຳໃດຫນຶ່ງໃນບ້ານ.ຫມາຍຕົນ

ກາ (✓) ໃສ່ ຄຳຕອບ 1 = ຖ້າມີ, 2 = ບໍ່ມີ. ຂ້າມໄປຫາຄຳຖາມ 7. ໃນຄວາມເປັນຈິງ ຄຳຖາມນີ້ ຈະອີງໃສ່ ໂຄງການເກັບກູ້ລະເບີດ ໄດ້ກຳນົດບອກເຂດທີ່ມີຄວາມສ່ຽງຂອງລະເບີດບໍ່ທັນແຕກ ຫຼື ອີງໃສ່ ເຫດການທີ່ເກີດຂື້ນຜ່ານມາ ທີ່ມີປະຊາຊົນ ສັບຊ່າວດິນນາ ຫຼື ດິນສວນ ຫຼື ດິນໄຮ່ ຖືກບາດເຈັບ ຫຼື ລົ້ມຕາຍຈາກ ເຫດການທີ່ບໍ່ຄາດຝັນ.

ສຳລັບຄຳຖາມ 5 ແມ່ນຖາມເຖິງ ຈຸດເຂດລະເບີດທີ່ບົ່ມຊ້ອນ ໃນພື້ນດິນ ແລະ ຂອບເຂດວົງເວນຂອງເນື້ອທີ່ ທີ່ຍັງມີຄວາມ ສ່ຽງໃນການທຳມາຫາກິນຂອງຊາວກະສິກອນ ຢູ່ໃນທີ່ວປະ ເທດ, ສຳລັບຄຳຖາມທີ 6 ການປະເມີນເນື້ອທີ່ທີ່ລະເບີດຕົກ ຂ້າງ ບໍ່ທັນແຕກ ບາງທີ່ອາດມີຄວາມຫຍຸ້ງຍາກ

| | | |
|---|---|---|
| **Q4** | **ມີເນື້ອທີ່ດິນກະສິກຳໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກບໍ່?** | |
| ***ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*** | ມີ ☐ | **1** |
| | ບໍ່ມີ ☐ | **2** ➡ *ໄປຫາຄຳຖາມQ7* |
| **Q5** | **(ຖ້າມີ) ລວມເນືອທີ່ກະສິກຳທັງໝົດຢູ່ໃນບ້ານມີຈັກຈຸດ?** | |
| | ☐ | ຈຸດ |
| **Q6** | **ຄາດຄະເນເນື້ອທີ່ກະສິກຳທີ່ລະເບີດບໍ່ທັນແຕກມີຈັກເຮັກຕາ?** | |
| | ☐ , | ຮຕ |

ໃນການ ຄາດຄະເນຈາກບ້ານ ນັກເດີນສຳຫລວດກໍ່ຕ້ອງໃຊ້ຄວາມພະຍາຍາມໃຫ້ນາຍບ້ານຊວ່ຍຄາດຄະເນ ບາງຄັ້ງນາຍບ້ານ ຫລື ຄະນະບ້ານ ອາດກຳບໍ່ໄດ້ດີ ນັກເດີນສຳຫລວດຕ້ອງໄດ້ສອບຖາມເພີ້ມເຕີມນຳເຖົ້າແກ່ແນວໂຮມ ຫຼື ຜູ້ອາວຸໂສທີ່ດຳລົງຊີວິດຢູ່ບ້ານນີ້ຕື່ມອີກ

## ຄຳຖາມ 7: ເນື້ອທີ່ດິນສາມາດຂະຫຍາຍ ແລະ ບຸກເບີກໄດ້ເພີ້ມເພື່ອປູກພືດລ້ຽງສັດໃນຕໍ່ໜ້າຫຼາຍປານໃດ?

ຈຸດປະສົງ ຂອງຄຳຖາມນີ້ ແມ່ນຢາກຮູ້ເຖິງເນື້ອທີ່ດິນທີ່ບໍ່ ທັນ ບຸກເບີກນຳໃຊ້ເຂົ້າໃນການປູກພືດ ຫລື ນຳໃຊ້ລ້ຽງສັດ ດິນດັ່ງກ່າວນັ້ນສາມາດຂະຫຍາຍໄດ້ໃນ ຕໍ່ ໜ້າ. ດິນທີ່ ຂະຫຍາຍໄດ້ເພື່ອທຳການຜະລິດກະສິກຳອາດຈະປະກອບ ດ້ວຍ ດິນຫລາຍປະເພດເຊັ່ນ: ດິນທີ່ມີລະເບີດບໍ່ທັນແຕກ, ດິນປ່າຊຸດໂຊມ, ດິນປ່າເລົ່າ ແລະ ດິນອື່ນໆ ທີ່ສາມາດ ປູກຝັງ ແລະ ລ້ຽງສັດໄດ້ໃຫ້ ຂຽນຈຳນວນ ເນື້ອທີ່ດິນດັ່ງກ່າວໃສ່ໃນຫ້ອງສີ່ຫລ່ຽມ ຖ້າກໍລະນີ້ບໍ່ມີແມ່ນໃຫ້ຂຽນ 0, ຫົວຫນວ່ຍໃຫ້ຄິດ ໄລ່ເປັນເຮັກຕາ

| | | |
|---|---|---|
| **Q7** | **ເນື້ອທີ່ດິນສາມາດຂະຫຍາຍ ແລະ ບຸກເບີກໄດ້ເພີ້ມເພື່ອປູກພືດລ້ຽງສັດໃນຕໍ່ໜ້າຫຼາຍປານໃດ?** | |
| | *(ລວມເອົາທັງເນື້ອທີ່ດິນທີ່ມີລະເບີດ, ດິນປ່າເລົ່າ, ດິນປ່າໄມ້ຊຸດໂຊມ ແລະ ດິນອື່ນໆທີ່ສາມາດປູກຝັງ-ລ້ຽງສັດໄດ້)* ☐ | ຮຕ |

**ຄຳຖາມ 8** : ດິນເຊື່ອມຄຸນທີ່ເກີດຂື້ນຈາກທຳມະຊາດ?

ເນື້ອທີ່ດິນເຊື່ອມຄຸນຫມາຍເຖິງ ດິນທີ່ມີການປ່ຽນແປງທາງກາຍຍະພາບ ແລະ ສວ່ນປະກອບຂອງທາດດິນເຊັ່ນ: ດິນເຄັມ, ດິນ ຂາດຄຸນນະພາບ, ດິນເຊາະເຈື່ອນ ແລະ ດິນອື່ນໆ ທີ່ເຮັດໃຫ້ສະມັດຕະພາບການປູກພືດຫລຸດລົງ ຫລື ບໍ່ສາມາປູກຝັງໄດ້ເລີຍ

ການຈົດກ່າຍແມ່ນໃຫ້ຖືເອົາເນື້ອດິນເຊື່ອມຄຸນທີ່ມີ ໃນຂອບເຂດ ຊາຍແດນຂື້ນກັບບ້ານເທົ່ານັ້ນ ຖ້າຫາກວ່າ ເປັນຕອນດິນ ຫລື ດິນຂອງຄົວເຮືອນທີ່ມີທີ່ຕັ້ງຢູ່ ບ້ານອື່ນ ຫລື ເຂດອື່ນທີ່ບໍ່ແມ່ນບ້ານຂອງຕົນເອງ ແມ່ນບໍ່ໃຫ້ຖືວ່າມີ. ໃຫ້ໝາຍເອົາຄຳຕອບທີ່ຖືກຕ້ອງ ແລະ ເໝາະສົມ

| | | |
|---|---|---|
| **Q8** | **ຢູ່ບ້ານຂອງທ່ານມີດິນກະສິກຳເຊື້ອມຄຸນທີ່ເກີດຂື້ນເອງຈາກທຳມະຊາດບໍ່?** | |
| ***ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*** | ບໍ່ມີ ☐ | **1** |
| | ໜ້ອຍນຶ່ງ ☐ | **2** |
| | ປານກາງ ☐ | **3** |
| | ຮ້າຍແຮງ ☐ | **4** |
| | ບໍ່ຮູ້ ☐ | **5** |

## ຄຳຖາມ 9: ໃນຊວ່ງລະດູຝົນ 3 ປີຜ່ານມາທຽບໃສ່10 ປີກ່ອນເປັນແນວໃດ?

ຄຳຖາມນີ້ເພື່ອສຶກສາເບິ່ງສະພາບການປ່ຽນແປງຂອງດິນຟ້າອາກາດ ໃນຊວ່ງລະດູຝົນສະເລ່ຍ 3 ປີ ຜ່ານມາ ທຽບໃສ 10 ປີຜ່ານ

ມາ ມີການປ່ຽນຄືແນວໃດ, ໝາຍຕີນກາ [ ✓ ] ໃສ່ຄຳຕອບທີ່ຖືກໃສ່ຫ້ອງສີ່ຫລ່ຽມ, 1 ມີຝົນໜ້ອຍລົງ, 2 ປົກກະຕິ, 3 ມີຝົນຫລາຍຂື້ນ. ການກຳນົດເວລາ 10 ປີຄືນຫລັງແມ່ນໃຫ້ເລີ້ມແຕ່ ປີ 2008 ຄືນຫລັງ 10 ປີ.

<u>**ຕົວຢ່າງ:**</u> ລະດູຝົນແຕ່ປີ 2008 ເຖິງປີ 2010 ເວົ້າລວມສະເລ່ຍທຽບໃສ່ລະດູຝົນ 10 ປີ ຜ່ານມາ.

ມີບາງບ້ານ ນາຍບ້ານອາດເປັນຄົນໃໝ່ ຫລືວ່າຍ້າຍມາຈາກບ່ອນອື່ນ ອາດຈະບໍ່ຮູ້ຂໍ້ມູນລະອຽດກ່ຽວກັບ ສະພາບດິນຟ້າອາກາດ ຂອງບ້ານດັ່ງກ່າວ,ນັກເດີນສຳຫລວດ ຕ້ອງໄດ້ສອບຖາມເພີ້ມເຕີມນຳເຖົ້າແກ່ແນວໂຮມ ແລະ ຜູ້ອາວຸໂສທີ່ດຳລົງຊີວິດຢູ່ບ້ານນີ້ມາຫລາຍກວ່າ 10 ປີ

| Q9 ໃນຊ່ວງລະດູຝົນ 3 ປີຜ່ານມາຖ້າສົມທຽບກັບປະລິມານນ້ຳຝົນ 10 ປີກ່ອນເປັນແນວໃດ? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | <u>ນ້ຳຝົນນ້ອຍລົງ</u> | ☐ | 1 |
| | <u>ປົກກະຕິ</u> | ☐ | 2 |
| | <u>ນ້ຳຝົນຫຼາຍຂຶ້ນ</u> | ☐ | 3 |

**ຄຳຖາມ 10:** ການເລີ້ມຕົ້ນລະດູຝົນ ໃນ 3 ປີຜ່ານມາທຽບໃສ່ 10 ຫລັງເປັນຄືແນວໃດ?

ໃຫ້ໝາຍຕີນກາ [ ✓ ] ຄຳຕອບ 1 ຖ້າມາໄວກວ່າ, 2 ຖືກຕ້ອງຕາມລະດູການ, 3 ມາຊ້າກວ່າ

ລາຍລະອຽດ ວິທີຈົດກ່າຍໃຫ້ເບີ່ງຕາມຄຳຖາມ 9

**ຄຳຖາມ 11:** **ລະດູຝົນປີຜ່ານມາປະລິມານນ້ຳຝົນ**ທຽບໃສ່ 10 ປີກ່ອນເປັນຄືແນວໃດ?

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອຢາກຮູ້ເຖິງສະພາບການປ່ຽນແປງ ຂອງປະລິມານນ້ຳຝົນຂອງປີ 2010 ຜ່ານມາ. ການສົມທຽບດັ່ງກ່າວ ອາດມີຄວາມຫຍຸ້ງຍາກໃນການກຳນົດປະລິມານນ້ຳຝົນຢ່າງຊັດເຈນ. ດັ່ງນັ້ນເພື່ອເປັນຂໍ້ສະດວກໃຫ້ບ້ານ ຫລື ນາຍບ້ານຕອບໄດ້ ໃຫ້ສັງເກດເບິ່ງລະດັບນ້ຳຝົນທີ່ຕົກລົງມາຕາມແມ່ນ້ຳລຳເຊ, ຫ້ວຍຮອງຕ່າງໆຄອງບຶງຕ່າງໆພາຍໃນບ້ານ ວ່າມີປະລິມານນ້ຳມີການປ່ຽນແປງແນວໃດ ໃຫ້ໝາຍຕາມລະຫັດຄຳຕອບທີ່ເໝາະສົມ ໃຫ້ ໝາຍຕີນກາ[ ✓ ] ໃສ່ຄຳຕອບ ທີ່ຖືກໃສ່ຫ້ອງສີ່ຫລ່ຽມ, 1 ມີຝົນໜ້ອຍລົງ, 2 ປົກກະຕິ, 3 ມີຝົນຫລາຍຂື້ນ.

**ຄຳຖາມ 12, 13:** ໄພທຳມະຊາດເກີດຂຶ້ນຢູ່ພາຍໃນບ້ານ

ໃຫ້ໝາຍຕີນກາ [ ✓ ] ໃສ່ຄຳຕອບ 1 ຖ້າມີ, 2 ບໍ່ມີ ຂ້າມໄປ ຄຳຖາມ 15 ໃຫ້ໝາຍຕີນກາ ໄພທຳມະຊາດ ໝາຍເຖິງພາຍທຳມະຊາດທີ່ເກີດຂື້ນໃນຊວງ 2-3 ຜ່ານມາຢູ່ໃນບ້ານ. ລວມເອົາໄພທຳມະຊາດເກີດຂື້ນເປັນປະຈຳ ແລະ ບໍ່ເປັນປະຈຳໃນ 2-3 ປີຜ່ານມາ

ສຳລັບຄຳຖາມ 13 ແມ່ນຖາມເຖິງປະເພດຂອງໄພທຳມະຊາດທີ່ເກີດຂື້ນ ເຊິ່ງມີຄຳຕອບໃຫ້ເລືອກທີ່ຖືກຕ້ອງ

| Q12 ໃນ2-3ປີຜ່ານມາຢູ່ບ້ານຂອງທ່ານມີໄພທຳມະຊາດໃດນຶ່ງເກີດຂື້ນບໍ່? | | | | |
|---|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | <u>ມີ</u> | ☐ | 1 | |
| | <u>ບໍ່ມີ</u> | ☐ | 2 | ➡ ໄປຫາຄຳຖາມQ15 |

| Q13 ມີໄພທຳມະຊາດປະເພດໃດແດ່ເກີດຂື້ນຢູ່ໃນບ້ານຂອງທ່ານ? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ(ໝາຍ✓) | <u>ນ້ຳຖ້ວມ</u> | ☐ | 1 |
| | <u>ແຫ້ງແລ້ງ</u> | ☐ | 2 |
| | <u>ດິນເຈື່ອນ</u> | ☐ | 3 |
| | <u>ສັດຕູພືດທຳລາຍ</u> | ☐ | 4 |
| | <u>ອື່ນໆ</u> | ☐ | 5 |

**ຄຳຖາມ 14:**

ໄພທຳມະຊາດທີ່ເກີດຂື້ນເປັນປະຈຳທຸກໆ1 ຫຼື 2 ປີ ໝາຍເຖິງຜົນຮ້າຍຂອງໄພທຳມະຊາດໃດໜຶ່ງທີ່ເກີດຂື້ນໃນຮອບ 1 ຫາ 2 ປີຜ່ານມາ ເຊັ່ນ: ໄພນ້ຳຖ້ວມ, ແຫ້ງແລ້ງ, ດິນເຈື່ອນ, ສັດຕູພືດທຳລາຍ ແລະ ອື່ນໆເປັນຕົ້ນ ທີ່ໄດລະບຸໃນຄຳຖາມ ທີ 13 ຂ້າງເທີງນັ້ນ.

**ຄໍາຖາມ 15:** ສະພາບການດໍາລົງຊີວິດໂດຍລວມຂອງປະຊາຊົນສົມທຽບໃສ່ 2 ປີກ່ອນ

ສະພາບການດໍາລົງຊີວິດດີຂຶ້ນຫມາຍຄວາມປະຊາຊົນໄດ້ມີການປຸກສ້າງເຮືອນຊານ, ມີລາຍຮັບຈາກການຜະລິດ ຫລື ການບໍລິການຕ່າງໆດີຂຶ້ນ ຫມາຍຕິກກາ (✓ ) ໃສ່ຄໍາຕອບທີ່ຖືກຕ້ອງ, 1 ດີຂຶ້ນ, 2 ຄືເກົ່າ, 3 ຫລຸດລົງ

**Q15** ສະພາບການດໍາລົງຊີວິດໂດຍລວມຂອງປະຊາຊົນສົມທຽບໃສ່ 2 ປີກ່ອນເປັນຄືແນວໃດ?

*ເລືອກໄດ້ນຶ່ງຄໍາຕອບ(ໝາຍ✓)*

| | | |
|---|---|---|
| ດີຂຶ້ນ | ☐ | 1 |
| ຄືເກົ່າ | ☐ | 2 |
| ຫລຸດລົງ | ☐ | 3 |

**ຄໍາຖາມ 16, 17:**

ການຈ້າງງານດັ່ງກ່າວແມ່ນຢາກຮູ້ສະເພາະວຽກທີ່ກ່ຽວພັນກັບວຽກງານກະສິກໍາ ຕົວຢ່າງ: ການປັກດໍາ, ການເກັບກ່ຽວເຂົ້າ, ພືດ, ລ້ຽງສັດ ແລະ ອື່ນໆເປັນ....

ຫມາຍຕິກກາ (✓ ) ໃສ່ຄໍາຕອບທີ່ຖືກຕ້ອງ, 1 ຖ້າມີ , 2 ບໍ່ມີ ຖ້າບໍ່ໃຫ້ຂ້າມໄປຫາຄໍາຖາມ 18. ສໍາລັບຄໍາຖາມ 17 ແມ່ນການຈ້າງງານແມ່ຍິງ ທຽບໃສ່ ຜູ້ຊາຍໃນກິດຈະກໍາດຽວກັນຂອງຂະແຫນງກະສິກໍາ. ການສົມທຽບການຈ້າງງານແມ່ນດັ່ງກ່າວແມ່ນໃຫ້ກໍານົດເອົາ ແມ່ຍິງເປັນຫຼັກ ແລະ ວຽກງານທີ່ຄືກັນ. ຕົວຢ່າງ: ຄ່າແຮງງານການເກັບກ່ຽວຫມາກສາລີ 1 ມື້ /ຄົນ ຖ້າແມ່ຍິງໄດ້ຮັບຄ່າຈ້າງຫລາຍກວ່າ ແມ່ນຫມາຍ ຕິກກາ( ✓ ) ໃສ່ຄໍາຕອບ 1, ຄໍາຕອບ 2 ໝາຍເຖິງການຈ່າຍຄ່າຈ້າງລະຫວ່າງແມ່ຍິງ ແລະ ຜູ້ຊາຍເທົ່າກັນ ແລະ ຄໍາຕອບ 3 ໝາຍເຖິງຄ່າຈ້າງງານຂອງແມ່ຍິງ ນ້ອຍກວ່າ ຜູ້ຊາຍ

**Q16** ຢູ່ບ້ານຂອງທ່ານມີການຈ້າງແຮງງານສໍາລັບເຮັດວຽກກະສິກໍາບໍ່?

*ເລືອກໄດ້ນຶ່ງຄໍາຕອບ(ໝາຍ✓)*

| | | | |
|---|---|---|---|
| ມີ | ☐ | 1 | |
| ບໍ່ມີ | ☐ | 2 | ➡ *ໄປຫາຄໍາຖາມ* **Q18** |

**Q17** ຄ່າຈ້າງແຮງງານແມ່ຍິງທຽບໃສ່ຜູ້ຊາຍໃນກິດຈະກໍາດຽວກັນຂອງຂະແໜງກະສິກໍາເປັນແນວໃດ?

*ເລືອກໄດ້ນຶ່ງຄໍາຕອບ(ໝາຍ✓)*

| | | |
|---|---|---|
| ຫຼາຍກວ່າ | ☐ | 1 |
| ເທົ່າກັນ | ☐ | 2 |
| ນ້ອຍກວ່າ | ☐ | 3 |

**ຄໍາຖາມ 18, 19:**

ຮ້ານຄ້າ ຫລື ສະຖານທີ່ບໍລິການໃດໜຶ່ງ ຕ້ອງແມ່ນມີທີ່ຕັ້ງໃນຂອບເຂດສາຍແດນຂອງບ້ານ ແລະ ຢ່າງຫນ້ອຍຕ້ອງມີ 1 ຫົວໜ່ວຍຂຶ້ນໄປ . ບັນດາຮ້ານຄ້າ ຫລື ສະຖານທີ່ບໍລິການທີ່ເປັນຂອງ ປະຊາຊົນໃນບ້ານ ແຕ່ ມີທີ່ຕັ້ງຢູ່ບ້ານອື່ນ . ຈະບໍ່ຖືວ່າມີ. ຕົວຢ່າງ: ນາງ ສຸກສາຄອນ ຂຶ້ນສໍາມະໂນຄົວ ແລະ ດໍາລົງຊີວິດຢູ່ບ້ານອາກາດ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ ລາວໄດ້ມີຮ້ານຂາຍຫົວອາຫານສັດ ຢູ່ບ້ານສີໄຄ ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນດຽວກັນ ໃນກໍລະນີດັ່ງກ່າວຮ້ານຂອງນາງ ສຸກສາຄອນຈະບໍ່ຖືວ່າເປັນຫົວຫນ່ວຍ ຫລື ຮ້ານທີ່ ປ, ຂຶ້ນກັບບ້ານອາກາດ.

**Q18** ຢູ່ບ້ານຂອງທ່ານມີຮ້ານຄ້າ ແລະ ສະຖານທີ່ບໍລິການໃດນຶ່ງບໍ່?

*ເລືອກໄດ້ນຶ່ງຄໍາຕອບ(ໝາຍ✓)*

| | | |
|---|---|---|
| ມີ | ☐ | 1 |
| ບໍ່ມີ | ☐ | 2 |

**Q19** ບ້ານຂອງທ່ານມີປະເພດເຫຼົ່ານີ້ບໍ່?

*ເລືອກໄດ້ຫຼາຍຄໍາຕອບ(ໝາຍ✓)*

| | | |
|---|---|---|
| ຮ້ານຂາຍເຄື່ອງອຸປະໂພກ-ບໍລິໂພກ | ☐ | 1 |
| ຮ້ານຂາຍເຄື່ອງກົນຈັກ, ເຄື່ອງມືກະສິກໍາ | ☐ | 2 |
| ສະຖານທີ່ປິ່ນປົວສັດ | ☐ | 3 |
| ຮ້ານຂາຍອາຫານສັດ, ປຸ່ຍ,ຢາປາບສັດຕູພືດ. | ☐ | 4 |
| ຮ້ານຂາຍນໍ້າມັນ | ☐ | 5 |
| ຮ້ານຄ້າອື່ນໆ.... | ☐ | 6 |

ໃຫ້ຫມາຍຕິກກາ [ ✓ ] ໃສ່ຫ້ອງສີ່ຫລ່ຽມທີ່ເຫມາະສົມ, 1 ຮ້ານຂາຍເຄື່ອງອຸປະໂພກ-ບໍລິໂພກ. 2 ຂາຍເຄື່ອງກົນຈັກ ແລະ ເຄື່ອງມືກະສິກໍາ, 3 ສະຖານທີ່ປິ່ນປົວສັດ, 4 ຂາຍອາຫານສັດ, ປຸຍ, ຢາປາສັດຕູພືດ, 5 ຂາຍນໍ້າມັນ ລາຍລະອຽດຂອງແຕ່ລາຍການໃຫ້ສັງເກດເບິ່ງໃນຄໍາຖາມ 19.

**ຂໍ້ສັງເກດ:**

- ຂາຍເຄື່ອງອຸປະໂພກ-ບໍລິໂພກ ປະກອບດ້ວຍເຄື່ອງອຸປະໂພກ-ບໍລິໂພກຕ່າງໆເຊິ່ງອາດຈະຂາຍໃນຮ້ານ ສະເພາະ, ຂາຍພາຍຢູ່ກັບເຮືອນ ຫລື ສະຖານທີ ທົ່ວໄປທີ່ຢູ່ໃນບ້ານ ແມ່ນຖືວ່າມີ
- ຂາຍເຄື່ອງກົນຈັກ ແລະ ເຄືອງມືກະສິກຳ ໝາຍເຖິງຮ້ານທີ່ປະກອບທຸລະກິດການຂາຍເຄື່ອງກົນຈັກ ແລະ ເຄື່ອງ ມື ຕ່າງໆທີ່ຮັບໃຊ້ວຽກງານກະສິກຳເປັນສ່ວນໃຫຍ່.
- ສະຖານທີ່ປິ່ນປົວສັດ ລວມເຖິງຄລີນິກ ປິນປົວສັດທີ່ເປັນຂອງລັດ ແລະ ເອກະຊົນ
- ຂາຍອາຫານສັດ, ປຸຍ, ຢາປາສັດຕູພືດ ໝາຍເຖິງຮ້ານທີ່ປະກອບທຸລະກິດ ທີ່ກ່ຽວກັບອາຫານ, ປຸຍ ແລະ ຢາປາບ ສັດຕູພືດ ເປັນສ່ວນໃຫຍ່.
- ຂາຍນໍ້າມັນ, ໝາຍເຖິງປໍ້ານໍ້າມັນອັດຕະໂນມັດ ຫລື ປໍ້າດ້ວຍມືທີ່ຂາຍເປັນປົກກະຕິໃນບ້ານ

**ຄຳຖາມ 20, 21:**

ການມີໄຟຟ້າ ໝາຍເຖິງປະຊາຊົນໃນບ້ານໄດ້ນຳໃຊ້ໄຟຟ້າເຂົ້າຄົວເຮືອນເພື່ອເປັນແສງສະຫວ່າງ ຫລື ນຳໃຊ້ເຂົ້າກິດຈະກຳ ໃດໜຶ່ງຈຶ່ງຖືວ່າມີ. ບາງບ້ານອາດມີຕາຂ່າຍໄຟຟ້າຜ່ານບ້ານ ແຕ່ບໍ່ທັນຕໍ່ເຂົ້ານຳໃຊ້ຂອງບ້ານເທື່ອ ຖືວ່າບໍ່ມີ ໃຫ້ໝາຍຄຳຕອບ1= ມີ , ແລະ ສືບຕໍ່ຖາມ ຈຳນວນເປີເຊັນຂອງຄົວເຮືອນທີ່ໃຊ້ໄຟ້ຟ້າຢູ່ໃນບ້ານ ຖ້າມີ້ຖືງ 70 % ຂຶ້ນໄປ ໃຫ້ໝາຍຕີນກາໃສ່ ໃນຄຳຖາມ 20 ຕ, 2= ບໍ່ມີ ຖ້າວ່າບໍ່ມີ ໃຫ້ຂ້າມໄປຫາ ຄຳຖາມທີ 22. ສຳລັບຄຳຖາມ 21 ໃຫ້ທ່ານສັງເກດເບິ່ງວ່າ ຖ້າຄຳຕອບມີ ໃນຄຳຖາມ 20 ໃຫ້ສືບຕໍ່ຖາມ ແຫລ່ງໄຟຟ້າ ທີ່ໃຊ້ໃນບ້ານ ໂດຍໃຫ້ໝາຍ ໃສ່ຄຳຕອບທີ່ຖືກຕ້ອງໃສ່ຊ່ອງຕາມລະຫັດຍອ່ຍ 6 ຄຳຕອບ.

| Q20 ບ້ານຂອງທ່ານມີໄຟຟ້າໃຊ້ບໍ່? | | | | Q20a (v) ຄ/ຮນຳໃຊ້ໄຟ້າ |
|---|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ມີ | ☐ | 1 | ➡ ☐ 70%ຂື້ນໄປ |
| | ບໍ່ມີ | ☐ | 2 | ➡ ໄປຫາຄຳຖາມ Q22 |

| Q21 ໄດ້ນຳໃຊ້ໄຟຟ້າຈາກໃສແດ່? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ (ໝາຍ✓) | ຕາຂ່າຍຂອງລັດ(ຈາກເຄື່ອນໄຟຟ້າ) | ☐ | 1 |
| | ຈັກປັ່ນໄຟຟ້າຂອງລັດ | ☐ | 2 |
| | ຈັກປັ່ນໄຟຟ້າເອກກະຊົນ | ☐ | 3 |
| | ໄຟຟ້ານ້ຳຍອດ | ☐ | 4 |
| | ໃຊ້ພະລັງງານຈາກແສງຕາເວັນ (SOLAR CELL) | ☐ | 5 |
| | ອື່ນໆ.................................................................... | ☐ | 6 |

**ຄຳຖາມ 22, 23:**

ການນຳໃຊ້ຊົນລະປະທານໝາຍເຖິງຊົນລະປະທານທີ່ປະຊາຊົນພາຍໃນບ້ານໄດ້ນຳໃຊ້. ໃຫ້ໝາຍຕີນກາ[✓] ໃສ່ຫ້ອງສີ່ຫລ່ຽມທີ່ຖືກຕ້ອງ 1 ມີ ການນຳໃຊ້, 2 ບໍ່ມີ, ຖ້າບໍ່ມີໃຫ້ຂ້າມໄປ ຄຳຖາມ 27. ປະເພດຂອງຊົນລະປະທານ ໃຫ້ໝາຍຕີນກາ [ ✓ ] ໃສ່ຫ້ອງສີ່ຫລ່ຽມທີ່ຖືກຕ້ອງ. 1 ຝາຍນ້ຳລົ້ນ, 2 ອ່າງເກັບນ້ຳ, 3 ຈັກສູບນ້ຳ, 4 ປະຕູ ແລະ ຄູກັນນ້ຳ, 5 ຝາຍປະຖົມປະຖານ, 6 ຝາຍກວຍຫີນ, 7 ອື່ນໆ(ໃຫ້ລະບຸຊື່ແຈ້ງ).

ລາຍລະອຽດໃຫ້ນັກເດີນ ສຳຫລວດສັງເກດຮູບພາບຕົວຢ່າງ ໃນເອກະສານຊ້ອນທ້າຍ ຂອງປຶ້ມຄູ່ມື.

| Q22 ຢູ່ບ້ານຂອງທ່ານຊາວກະສິກອນໄດ້ນຳໃຊ້ນ້ຳຊົນລະປະທານບໍ່? | | | | |
|---|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ມີ | ☐ | 1 | |
| | ບໍ່ມີ | ☐ | 2 | ➡ ໄປຫາຄຳຖາມQ27 |

| Q23 ມີລະບົບຊົນລະປະທານປະເພດໃດແດ່? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ (ໝາຍ✓) | ຝາຍນ້ຳລົ້ນ | ☐ | 1 |
| | ອ່າງເກັບນ້ຳ | ☐ | 2 |
| | ຈັກສູບນ້ຳ | ☐ | 3 |
| | ປະຕູ ແລະ ຄູກັນນ້ຳ | ☐ | 4 |
| | ຝາຍປະຖົມປະຖານ | ☐ | 5 |
| | ຝາຍກວຍຫີນ | ☐ | 6 |
| | ອື່ນໆ........... | ☐ | 7 |

<u>ການໃຊ້ນ້ຳຊົນລະປະທານ</u> ໝາຍເຖິງການຈັດຫາແລະສະໜອງນ້ຳ ໃຫ້ດິນປູກພືດ, ບໍ່ໝາຍເຖິງນ້ຳຟ້ານ້ຳຝົນ. ກໍລະນີນ້ຳຖ້ວມ ຫຼື ນ້ຳລົ້ນຝັ່ງ ບໍ່ໃຫ້ຖືວ່າເປັນການໃຊ້ນ້ຳຊົນລະປະທານ. ຊົນລະປະທານ ແມ່ນລວມທັງໝົດ ທີ່ນຳເອົາ ນ້ຳທຳມະຊາດເຂົ້າສູ່ການຜະລິດ ໂດຍບໍ່ໃຫ້ ເຂົ້າໃຈ ພຽງແຕ່ ແມ່ນ ໂຄງການຊົນລະປະທານຂອງລັດສ້າງໃຫ້ເທົ່ານັ້ນ. ມັນລວມທັງນ້ຳ ຈາກ ແມ່ນ້ຳລຳເຊ, ອ່າງເກັບນ້ຳ, ນ້ຳສ້າງ, ນ້ຳບາດານ ຮັບໃຊ້ເຮັດສວນຜັກ ກໍໃຫ້ຖືວ່າ ເປັນການໃຊ້ນ້ຳຊົນລະປະທານ.

**ຄຳຖາມ 24, 25, 26:**

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ. ໝາຍເຖິງທາງບ້ານມີການຈັດຕັ້ງກຸ່ມນຳໃຊ້ນ້ຳຊົນລະປະທານເພື່ອການຜະລິດກະສິກຳໃດໜຶ່ງ, ໃຫ້ໝາຍຕີນກາ [ ✓ ]ໃສ່ຄຳຕອບ 1 ຖ້າມີ ແລະ ຂຽນຈຳນວນກຸ່ມໃສ່ຫ້ອງ ຄຳຖາມທີ 25 , 2 ບໍ່ມີ ຂ້າມໄປ ຄຳຖາມ 26 ຈຸດປະສົງຂອງ ຄຳຖາມນີ້ ຖາມກ່ຽວກັບລະດັບ ສຳລັບຄຳຖາມ 26 ຄວາມສາມາດສະໜອງນ້ຳຂອງຊົນລະປະທານຕໍ່ການຜະລິດກະສິກຳ ຕາມລະດູການ, ໃຫ້ ໝາຍ ຕີນກາ [ ✓ ] ໃສ່ຄຳຕອບທີ່ຖືກຕ້ອງ, 1 ໄດ້ພຽງ ລະດູແລ້ງ, 2 ດູຝົນ, 3 ໄດ້ທັງສອງລະດູ.

| | | | | |
|---|---|---|---|---|
| **Q24 ມີການຈັດຕັ້ງກຸ່ມຜູ້ນຳໃຊ້ນ້ຳບໍ່?** | | | | |
| ***ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*** | ມີ | ☐ | **1** | |
| | ບໍ່ມີ | ☐ | **2** | ➡ *ໄປຫາຄຳຖາມQ26* |
| **Q25 ຢູ່ໃນບ້ານຂອງທ່ານລວມມີຈັກກຸ່ມຜູ້ນຳໃຊ້ນ້ຳ?** | | | | |
| | | ☐ | ກຸ່ມ | |
| **Q26 ລະບົບຊົນລະປະທານສະໜອງນ້ຳໄດ້ລະດູການໃດແດ່?** | | | | |
| ***ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*** | ລະດູແລ້ງ | ☐ | **1** | |
| | ລະດູຝົນ | ☐ | **2** | |
| | ທັງສອງລະດູ | ☐ | **3** | |

**ຄຳຖາມ 27,28:**

ຈຸດປະສົງໃນຄຳຖາມເລົ່ານີ້ ແມ່ນຖາມເຖິງສະບັນການເງິນ ຫລື ໜ່ວຍບໍລິການສິນເຊື່ອທີ່ມີການບໍລິການ ຕໍ່ປະຊາຊົນ ຫລື ຊາວກະສິກອນພາຍໃນບ້ານ ລວມທັງສະຖາບັນ ຫລື ໜ່ວຍບໍລິການທີ່ມີທີ່ຕັ້ງພາຍບ້ານ ແລະ ອື່ນໆທີ່ມາບໍລິການໃນບ້ານ

ສ່ວນສະຖານບັນການເງິນ ຫລື ໜ່ວຍບໍລິການສິນເຊື່ອຢູ່ບ່ອນອື່ນ ທີ່ຊາວກະສິກອນໄປກູ້ຢືມແມ່ນບໍ່ໃຫ້ເອົາ. ໃຫ້ ໝາຍຕີນກາ [ ✓ ] ໃສ່ຄຳຕອບ 1= ມີ, 2= ບໍ່ມີ ຖ້າບໍ່ມີໃຫ້ຂ້າມໄປຫາຄຳຖາມ 29. ໃຫ້ນັກເດີນສຳຫລວດສັງເກດເບິ່ງວ່າ ຖ້າມີຄຳຕອບ 1 ມີ ໃນຄຳຖາມ 27 ໃຫ້ສືບ ຕໍ່ຖາມປະເພດສະຖາບັນການເງິນທີ່ບໍລິການໃຫ້ສິນເຊື່ອ

ໃນຄຳຖາມ 28 ເຊິ່ງມີລາຍລະອຽດຄຳຕອບໃຫ້ເລືອກ 6 ລາຍການຍ່ອຍ. ໃຫ້ໝາຍຕີນກາ [ ✓ ] ແລະ ສາມາດ ໝາຍໄດ້ຫລາຍຄຳ ຕອບຕາມຄວາມເໝາະສົມ

| | | | |
|---|---|---|---|
| **Q27 ໃນບ້ານມີສະຖາບັນການເງິນຫຼືໄດ້ຮັບການບໍລິການສິນເຊື່ອບໍ່?** | | | |
| ***ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*** | ມີ | ☐ **1** | |
| | ບໍ່ມີ | ☐ **2** | ➡ *ໄປຫາຄຳຖາມQ29* |
| **Q28 ປະເພດສະຖາບັນການເງິນໃຫ້ສິນເຊື່ອມີຫຍັງ?** | | | |
| ***ເລືອກໄດ້ຫຼາຍຄຳຕອບ(ໝາຍ✓)*** | ທະນາຄານທຸລະກິດຂອງລັດ | ☐ | **1** |
| | ທະນາຄານທຸລະກິດຕ່າງປະເທດ | ☐ | **2** |
| | ທະນາຄານທຸລະກິດເອກກະຊົນ | ☐ | **3** |
| | ສະຖາບັນການເງິນຈຸລະພາກ | ☐ | **4** |
| | ກອງທຶນພັດທະນາບ້ານ | ☐ | **5** |
| | ອື່ນໆ.................................. | ☐ | **6** |

**ຄຳຖາມ 29, 30:**

ຈຸດປະສົງ ຂອງຄຳຖາມເລົ່ານີ້ ເພື່ອໃຫ້ມີຂໍ້ມູນຂ່າວສານກ່ຽວກັບການຖາງປ່າເຮັດ ເພື່ອເປັນການວາງແຜນ ແລະ ຈັດສັນການທຳມາຫາກິນຂອງປະຊາຊົນແບບຄົງທີ່ . ເພື່ອເຮັດໃຫ້ ການຍຸດຕິການຖາງປ່າເຮັດໄຮ່, ໃຫ້ໝາຍເອົາຄຳຕອບທີ່ຖືກຕ້ອງ

**- ໄຮ່ໝູນວຽນ:** ໝາຍເຖິງພື້ນທີ່ທຳການຜະລິດກະສິກຳ ຊຶ່ງສ່ວນໃຫຍ່ຍັງມີການຖາງ, ການຈູດ ແລະ ການຮື້ເພື່ອ ປູກເຂົ້າ, ປູກພືດ ແລະ ຕົ້ນໄມ້ອື່ນໆ, ໂດຍດຳເນີນການຜະລິດຕາມຮອບວຽນ ໃນກຳນົດເວລາໃດໜຶ່ງ ຊຶ່ງ ສ່ວນໃຫຍ່ແມ່ນ 3-5 ປີ ໃນຂອບເຂດຈຳກັດ ແລ້ວກັບຄືນມາທຳການຜະລິດ ຢູ່ດິນຕອນເກົ່າຕາມການກຳນົດ ແລະ ຈັດສັນ ພາຍໃຕ້ການ ຕິກລົງເຫັນດີ

ແລະ ເປັນເອກະພາບ ຂອງອົງການປົກຄອງທ້ອງຖິ່ນ, ພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນໃນທ້ອງຖິ່ນເອງ.

- **ໄຮ່ເລື່ອນລອຍ:** ໝາຍເຖິງພື້ນທີ່ທຳການຜະລິດກະສິກຳ ໂດຍສະເພາະແມ່ນເພື່ອປູກເຂົ້າເປັນຕົ້ນຕໍ, ແຕ່ກໍ່ມີບາງກໍລະນີທີ່ປູກພືດ ເຊັ່ນ: ສາລີ ແລະ ພືດອື່ນໆ ຊຶ່ງມີການ ເຄື່ອນຍ້າຍໄປເລື້ອຍໆ ແບບເລື່ອນລອຍ ຫລື ແບບຊະຊາຍ ເປັນ ແຕ່ລະປີ ໂດຍບໍ່ເລືອກຂອບເຂດພື້ນທີ່ ຂອງແຕ່ລະປະເພດທີ່ດິນປ່າໄມ້(ທີ່ດິນປ່າສະຫງວນ,ທີ່ດິນປ່າປ້ອງກັນ ແລະ ທີ່ດິນປ່າ ຜະລິດ) ແລະ ບໍ່ຄຳນຶງເຖິງການບຸກລຸກທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ອັນໄດ້ສ້າງຜົນກະທົບດ້ານລົບຕໍ່ສິ່ງ ແວດລ້ອມທຳມະຊາດ ໃນແຕ່ລະປີ

| Q29 ໃນ12ເດືອນຜ່ານມາຢູ່ບ້ານຂອງທ່ານໄດ້ເຮັດໄຮ່ໝູນວຽນບໍ່? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ໄດ້ເຮັດ | ☐ | 1 |
| | ບໍ່ໄດ້ເຮັດ | ☐ | 2 |

| Q30 ໃນ12ເດືອນຜ່ານມາຢູ່ບ້ານຂອງທ່ານໄດ້ເຮັດໄຮ່ເລື່ອນລອຍບໍ່? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ໄດ້ເຮັດ | ☐ | 1 |
| | ບໍ່ໄດ້ເຮັດ | ☐ | 2 |

**ຄຳຖາມ 31, 32:**

ໃນຄຳຖາມເລົ່ານີ້ແມ່ນຖາມເຖິງການຂາຍຜົນຜະລິດກະສິກຳຂອງຄົວເຮືອນພາຍໃນບ້ານໃນໄລຍະ 12 ເດືອນຜ່ານມາ, ຜົນຜະລິດດັ່ງກ່າວແມ່ນຜົນຜະລິດຂອງຄົວເຮືອນທີ່ຜະລິດໄດ້ເຊັ່ນ: ການປູກພືດ, ສັດລ້ຽງ ແລະ ຜົນຜະລິດກະສິກຳອື່ນໆ ໃຫ້ໝາຍຕີນກາ [ ✓ ] ໃສ່ ຄຳຕອບ 1= ໄດ້ຂາຍ, 2= ບໍ່ໄດ້ຂາຍ ຖ້າບໍ່ໄດ້ຂາຍ ຂ້າມໄປຫາຄຳຖາມ 33 ຖ້າວ່າໄດ້ຂາຍໃນຄຳຕອບທີ 31 ໃຫ້ຖາມຕໍ່ຖາມ 32 ກ່ຽວກັບລາຍລາຍອຽດຮູບແບບການຂາຍຜົນຜະລິດຂອງຊາວກະສິກອນພາຍໃນບ້ານໃນ 1 ປີຜ່ານມາ, ມີຄຳຕອບຍ່ອຍ 6 ຄຳຕອບ ແລະ ສາມາດ ໝາຍໄດຫລາຍຄຳຕອບ

| Q31 12 ເດືອນຜ່ານມາຊາວບ້ານ/ຊາວກະສິກອນຢູ່ບ້ານຂອງທ່ານໄດ້ຂາຍຜົນຜະລິດກະສິກຳບໍ່? | | | | |
|---|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ໄດ້ຂາຍ | ☐ | 1 | |
| | ບໍ່ໄດ້ຂາຍ | ☐ | 2 | ➡ ໄປຫາຄຳຖາມQ33 |

| Q32 ຮູບແບບການຂາຍຜົນຜະລິດໃນບ້ານຂອງທ່ານຄືແນວໃດ? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ(ໝາຍ✓) | ຂາຍຕາມສັນຍາຜູກພັນ(CFS) | ☐ | 1 |
| | ເອົາໄປຂາຍໂດຍກົງໃຫ້ບໍລິສັດປຸງແຕ່ງ | ☐ | 2 |
| | ຂາຍໃຫ້ພໍ່ຄ້າມີກາງຢູ່ກັບທີ່ | ☐ | 3 |
| | ຂາຍທົ່ວໄປໃຫ້ຜູ້ຕ້ອງການຢູ່ກັບທີ່ | ☐ | 4 |
| | ຂາຍຢູ່ຕະຫຼາດໃນບ້ານຕົນເອງ | ☐ | 5 |
| | ອື່ນໆ........................................... | ☐ | 6 |

**ຄຳຖາມ 33, 34:**

ໃຫ້ໝາຍຕີນກາ [ ✓ ] ໃສ່ຫ້ອງຄຳຕອບທີ່ເໝາະສົມ, 1= ມີໂຮງຮຽນປະຖົມສົມບູນ ແລ້ວ ຂ້າມໄປຫາຄຳຖາມທີ 35, 2= ມີໂຮງຮຽນມູນລະປະຖົມ, 3= ບໍ່ມີໂຮງຮຽນ. ຖ້າບໍ່ມີໂຮງ ຂ້າມໄປຫາຄຳຖາທທີ 34

ໂຮງຮຽນປະຖົມ ແມ່ນລວມເອົາທັງພາກລັດ ແລະ ເອກະຊົນ

*- ໂຮງຮຽນປະຖົມສົມບູນ ໝາຍເຖິງໂຮງຮຽນທີ່ມີຊັ້ນຮຽນຈາກ ປໍ 1 ເຖິງຊັ້ນປໍ 5 ເຖິງວ່າໂຮງຮຽນຫລັງດັ່ງກ່າວຈະບໍ່ມີຫ້ອງຮຽນຄົບ 5 ຫ້ອງ ຫລື ວ່າຮຽນຄວບຫ້ອງກັນ ກໍ່ຖືວ່າມີໂຮງຮຽນປະຖົມສົມບູນ*

ໃນຄຳຖາມ 33 ຖ້າໃນບ້ານມີພຽງແຕ່ໂຮງຮຽນມູນລະປະຖົມ ຫລື ບໍ່ມີໂຮງຮຽນ ໃຫ້ຖາມການໃຊ້ເວລາຍ່າງ ຂອງນັກຮຽນທີ່ໄປເຖິງໂຮງຮຽນປະຖົມສົມບູນທີ່ໃກ້ທີ່ສຸດ ການໃຊ້ເວລາຫລາຍປານໃດ. ໃຫ້ຄາດຄະເນການຍ່າງ, ບໍ່ໃຫ້ຄາດຄະເນການໃຊ້ພະຫານະອື່ນໆ ໃຫ້ໝາຍຄຳຕອບທີ່ເໝາະສົມ, 1 = ຖ້າໃຊ້ເວລາໜ້ອຍ 1 ຊົ່ວໂມງ, 2 =ໃຊ້ເວລາ ຫລາຍກວ່າ 1 ຊົ່ວໂມງ

| Q33 ບ້ານຂອງທ່ານມີໂຮງຮຽນປະເພດເຫຼົ່ານີ້ບໍ່? | | | | |
|---|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ(ໝາຍ✓) | ປະຖົມສົມບູນ | ☐ | 1 | ➡ ໄປຫາຄຳຖາມQ35 |
| | ມູນລະປະຖົມ | ☐ | 2 | ➡ ສືບຕໍ່ຄຳຖາມQ34 |
| | ບໍ່ມີ | ☐ | 3 | |

| Q34 ຖ້າບໍ່ມີໂຮງຮຽນປະຖົມສົມບູນ, ໄຊ້ເວລາຍ່າງຈັກຊົ່ວໂມງຈາກບ້ານຂອງທ່ານໄປໂຮງຮຽນປະຖົມສົມບູນທີ່ໃກ້ສຸດ? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ນ້ອຍກວ່າ 1 ຊົ່ວໂມງ. | ☐ | 1 |
| | ຫຼາຍກວ່າ 1 ຊົ່ວໂມງ. | ☐ | 2 |

**ຄຳຖາມ 35, 36, 37:**

ໃຫ້ໝາຍຕີນກາ [ ✓ ] ໃສ່ຫ້ອງຄຳຕອບໃຫ້ຖືກຕ້ອງ, 1 ຖ້າຫາກວ່າມີຖົງຢາປະຈຳບ້ານ 2 ຮ້ານຂາຍຢາ, 3 ບໍ່ມີ

ຄຳຖາມທີ 36: ບ້ານຂອງທ່ານມີສຸກສາລາ ຫລື ໂຮງຫມໍໃດຫນຶ່ງບໍ່?

ໃນຄຳຖາມ 36 ໃຫ້ຫມາຍຕີນກາ [ ✓ ] ໃສ່ຫ້ອງຄຳຕອບໃຫ້ຖືກຕ້ອງ, 1 ຖ້າມີສຸກສາລາ, 2 ມີໂຮງຫມໍ ແລ້ວຂ້າມໄປຫາຄຳຖາມທີ 38, 3 ບໍ່ມີທັງສອງຢ່າງ ໃຫ້ຖາມຕໍ່ຄຳຖາມທີ 37.

ໃນຄຳຖາມທີ 37 ຖາມກ່ຽວກັບການໃຊ້ເວລາຢ່າງຈາກບ້ານໄປຫາ ສຸກສາລາ ຫລື ໂຮງຫມໍໃກ້ທີ່ສຸດ ຫລາຍປານໃດ? ຫມາຍຕີນກາ [ ✓ ] ໃສຄຳຕອບທີ່ເຫມາະສົມ, 1= ໃຊ້ເວລາໜ້ອຍກວ່າ 2 ຊົ່ວໂມງ, 2=ໃຊ້ເວລາຫລາຍກວ່າ 2 ຊົ່ວໂມງ. ການໃຊ້ເວລາໄປເຖິງສຸກສາລາຫລືໂຮງໝໍແມ່ນໃຫ້ຄາດຄະເນການຢ່າງເທົ່ານັ້ນ

| Q35 ບ້ານຂອງທ່ານມີຖົງຢາປະຈຳບ້ານ ຫຼື ຮ້ານຂາຍຢາບໍ່? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ (ໝາຍ✓) | ຖົງຢາ | ☐ | 1 |
| | ຮ້ານຂາຍຢາ | ☐ | 2 |
| | ບໍ່ມີ | ☐ | 3 |

| Q36 ບ້ານຂອງທ່ານມີສະຖານທີ່ບໍລິການດ້ານສາທາລະນະສຸກບໍ່? | | | | |
|---|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ (ໝາຍ✓) | ສຸກສາລາ | ☐ | 1 | ➡ ໄປຫາຄຳຖາມQ38 |
| | ໂຮງໝໍ | ☐ | 2 | |
| | ບໍ່ມີ | ☐ | 3 | ➡ ສືບຕໍ່ຄຳຖາມQ37 |

| Q37 ຖ້າຫາກບໍ່ມີສຸກສາລາ ຫຼື ໂຮງໝໍ, ໃຊ້ເວລາຍ່າງຈັກຊົ່ວໂມງຈາກບ້ານຂອງທ່ານໄປສຸກສາລາ ຫຼື ໂຮງໝໍທີ່ໃກ້ສຸດ? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ນ້ອຍກວ່າ 2 ຊົ່ວໂມງ | ☐ | 1 |
| | ຫຼາຍກວ່າ 2 ຊົ່ວໂມງ | ☐ | 2 |

**ຄຳຖາມ 38:**

ຄຳຖາມເລົ່ານີ້ ແມ່ນເພື່ອຢາກສຶກສາຂໍ້ມູນ ພື້ນຖານໂຄງລ່າງຂອງການຄົມມະນາຄົມສຳລັບຂັ້ນທ້ອງຖິ່ນ ເຊິ່ງມັນຄວາມສຳຄັນ ແລະ ຕິດພັນກັບວຽກງານການຜະລິດກະສິກຳເພື່ອເປັນສິນຄ້າ ເພື່ອສ້າງລາຍຮັບໃຫ້ແກ່ຂັ້ນຄົວເຮືອນ

ໃຫ້ໝາຍຄຳຕອບທີ່ຖືກຕ້ອງ1= ໄດ້ແຕ່ລະດູຝົນ, 2 = ລະດູແລ້ງ, 3= ໄດ້ທັງສອງລະດູ, 4 = ບໍ່ມີເສັ້ນ ທາງເຂົ້າໄດ້

| Q38 ບ້ານທ່ານມີເສັ້ນທາງລົດສາມາດເຂົ້າເຖິງເທດສະບານເມືອງບໍ່? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ໄດ້ແຕ່ລະດູຝົນ | ☐ | 1 |
| | ໄດ້ແຕ່ລະດູແລ້ງ | ☐ | 2 |
| | ໄດ້ທັງສອງລະດູ | ☐ | 3 |
| | ບໍ່ມີເສັ້ນທາງເຂົ້າເຖິງ | ☐ | 4 |

**ຄຳຖາມ 39:** ບ້ານຂອງທ່ານມີການຈັດຕັ້ງຮູບແບບການບໍລິການສັງຄົມບໍ່?

ຫມາຍຕີນກາ [ ✓ ] ໃສ່ຫ້ອງສີ່ຫລ່ຽມຕາມຄວາມເຫມາະສົມຂອງລາຍການຄຳຕອບທີ່ມີ,

1= ກຸ່ມຜະລິດສິນຄ້າ,

2= ທະນາຄານເຂົ້າ,

3= ທະນາຄານສັດ,

4 = ສັດຕະວະແພດປະຈຳບ້ານ,

5= ກຸ່ມການຜະລິດ/ສະຫະກອນ,

6 = ກອງທຶນບ້ານ,

7= ອື່ນໆ ,

| Q39 ບ້ານຂອງທ່ານມີການຈັດຕັ້ງຮູບແບບການບໍລິການສັງຄົມບໍ່? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ (ໝາຍ✓) | ກຸ່ມຜະລິດສິນຄ້າ | ☐ | 1 |
| | ທະນາຄານເຂົ້າ | ☐ | 2 |
| | ທະນາຄານສັດ | ☐ | 3 |
| | ສັດຕະວະແພດປະຈຳບ້ານ | ☐ | 4 |
| | ກຸ່ມການຜະລິດ/ສະຫະກອນ | ☐ | 5 |
| | ກອງທຶນບ້ານ | ☐ | 6 |
| | ອື່ນໆ | ☐ | 7 |

*- ກຸ່ມຜະລິດເປັນສິນຄ້າ: ໝາຍເຖິງປະຊາຊົນໃນບ້ານໄດ້ຈັດຕັ້ງກຸ່ມການຜະລິດໃດໜຶ່ງຂຶ້ນເພື່ອຂາຍເປັນສິນຄ້າ ເພື່ອສ້າງລາຍຮັບເພີ້ມໃຫ້ແກ່ຄົວເຮືອນ, ຕົວຢ່າງ: ກຸ່ມຈັກສານເຄື່ອງຫັດຖະກຳຕ່າງໆ, ກຸ່ມຕຳຫູກເພື່ອເປັນສິນຄ້າອື່ນໆ...*

**ຄຳຖາມ 40, 41:**

ການຍົກຍ້າຍຂອງບ້ານ, ໝາຍເຖິງບ້ານດັ່ງກ່າວໄດ້ຖືກຍົກຍ້າຍມາຈາກບ່ອນອື່ນ ຫລື ເມືອງອື່ນໃນຂອບເຂດທົ່ວປະເທດ ບໍ່? ໃນໄລຍະ ປີ 2000 ເປັນຕົ້ນມາ ເຖິງປະຈຸບັນ ໃຫ້ໝາຍຕີນກາ [ ✓ ] ຄຳຕອບ 1 = ຖ້າໄດ້ຍ້າຍ, 2 = ບໍ່ໄດ້ຍ້າຍ ຖ້າມີຄຳຕອບ 2 ບໍ່ໄດ້ຍ້າຍ ຂ້າມໄປຖາມຄຳຖາມທີ 42 ຖ້າວ່າມີຄຳຕອບ ວ່າ ໄດ້ຍົກຍ້າຍ ແມ່ນໃຫ້ ສືບຕໍ່ຖາມ ປີ ທີ່ໄດ້ຍົກຍ້າຍມາຕັ້ງຖິ່ນຖານຂອງບ້ານໃນປະຈຸບັນ.

**Q40** ແຕ່ປີ 2000ເປັນຕົ້ນມາບ້ານທ່ານໄດ້ມີການຍົກຍ້າຍບໍ່?

*ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*

| | | |
|---|---|---|
| ໄດ້ | 1 | |
| ບໍ່ໄດ້ | 2 | ➡ *ໄປຫາຄຳຖາມQ42* |

**Q41** ໄດ້ຍົກຍ້າຍມາປີ ຄສ ໃດ? ➡ [ ]

**ຄຳຖາມ 42, 43:** ບ້ານຂອງທ່ານໄດ້ມີແຜນຈະຍົກຍ້າຍບໍ່ ?

ການມີແຜນຍົກຍ້າຍບ້ານ ໝາຍ ເຖິງການມີແຜນຂອງບ້ານ ຫລື ອຳນາດການປົກຄອງຂັ້ນເທິງໃຫ້ຍົກຍ້າຍໄປຕັ້ງບ້ານເຮືອນຢູ່ບ່ອນໃໝ່ ຫລື ຍ້າຍໄປຮວ່ມເຂົ້າກັບບ້ານອື່ນໆໃຫ້ໝາຍຕີນກາ [ ✓ ] ໃສ່ຄຳຕອບ 1 ຖ້າມີ ແລະ ໃຫ້ສືບຕໍ່ຖາມປີທີ່ຈະຍົກ ຍ້າຍໃສ່ຫ້ອງ ໃນຄຳຖາມທີ 43. ຖ້າ ບໍ່ມີ ຂ້າມໄປຫາຄຳຖາມ 44

**Q42** ບ້ານຂອງທ່ານໄດ້ມີແຜນຈະຍົກຍ້າຍ/ລວມກັບບ້ານອື່ນບໍ່ ?

*ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*

| | | |
|---|---|---|
| ມີ | 1 | |
| ບໍ່ມີ | 2 | ➡ *ໄປຫາຄຳຖາມQ44* |

**Q43** ມີແຜນການຍົກຍ້າຍປີ ຄສ ໃດ? ➡ [ ]

**ຄຳຖາມ 44, 45:**

ໝາຍຕີນກາ [ ✓ ] ຄຳຕອບ 1 ຖ້າໄດ້ແບ່ງດິນແບງປ່າ, 2 ບໍ່ໄດ້. ການແບ່ງດິນ ແບ່ງປ່າ ແມ່ນ ໂຄງການຈັດສັນ ແລະ ປ່າຂອງລັດຖະບານ ເປັນຜູ້ມອບໃຫ້ບ້ານເປັນຜູ້ຄຸ້ມຄອງ. ກໍລະນີບ້ານ ກຳລັງດຳເນີນການມອບດິນມອບປ່າຢູ່ກໍ່ຖືວ່າ ບ້ານນີ້ ໄດ້ມອບດິນມອບປ່າແລ້ວ

ຄຳຖາມ 45 ແມ່ນຖາມເນື້ອທີ່ທີ່ແຕ່ລະປະເພດ ແມ່ນໃຫ້ແຍກບັນດາເນື້ອທີ່ທັງໝົດນັ້ນ ອອກເປັນແຕ່ລະປະເພດຂອງດິນຕາມລາຍການຍ່ອຍໃນຄຳຖາມນີ້ ເຊັ່ນ : 1= ດິນກະສິກຳ, 2= ດິນປຸກສ້າງ, 3= ເນື້ອທີ່ປ່າສະຫງວນ 4= ເນື້ອທີ່ປ່າປ້ອງກັນ, 5= ປ່າຊົມໃຊ້, 6= ເນື້ອທີ່ດິນອື່ນໆ.ໃຫ້ຂຽນຈຳນວນເນື້ອທີ່ຂອງແຕ່ລະຕອນດິນໃຫ້ຖືກຕ້ອງ

**Q44** ບ້ານຂອງທ່ານໄດ້ຮັບການມອບດິນ-ມອບປ່າແລ້ວບໍ່?

*ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*

| | | |
|---|---|---|
| ໄດ້ | 1 | |
| ບໍ່ໄດ້ | 2 | ➡ *ໄປຫາຄຳຖາມ Q46* |

**Q45** (ຖ້າໄດ້ມອບ) ເນື້ອທີ່ແຕ່ລະປະເພດມີຫຼາຍປານໃດ?

ຂໍ້ສັງເກດ: ລວມເນື້ອທີ່ທັງໝົດຕ້ອງເທົ່າກັບເນື້ອທີ່ລວມ ຂອງບ້ານຢູ່ໃນຄຳຖາມ Q3

| | | |
|---|---|---|
| 1. ເນື້ອທີ່ດິນກະສິກຳ | , | ຮຕ |
| 2. ເນື້ອທີ່ດິນປຸກສ້າງ | , | ຮຕ |
| 3. ເນື້ອທີ່ດິນປ່າສະຫງວນ | , | ຮຕ |
| 4. ເນື້ອທີ່ດິນປ່າປ້ອງກັນ | , | ຮຕ |
| 5. ເນື້ອທີ່ປ່າຜະລິດ | , | ຮຕ |
| 6. ເນື້ອທີ່ດິນອື່ນໆ | , | ຮຕ |

ຖ້າກໍລະນີບໍ່ມີແມ່ນໃຫ້ຂຽນ 0 ໃສ່, ຫົວໜ່ວຍໃຫ້ຄິດໄລ່ເປັນເຮັກຕາ ໃຫ້ກວດເບິ່ງ ໂດຍບວກເອົາເນື້ອທີ່ ດິນກະສິກຳ, ດິນປຸກ

ສ້າງ, ເນື້ອທີ່ປ່າສະຫງວນ, ເນື້ອທີ່ປ່າປ້ອງກັນ, ປ່າຊົມໃຊ້, ນອກນັ້ນໃນຈັດເຂົ້າເປັນດິນປະເພດອື່ນໆ

**ຄຳຖາມ 46:** ສະຖານທີ່ເພື່ອຊຸມຊົນ ຫມາຍເຖິງສະຖານທີ່ໆໃຫ້ການບໍລິການແກ່ຊຸມຊົນພາຍໃນບ້ານ ຫລື ນອກບ້ານ, ມີທີ່ຕັ້ງໃນຂອບເຂດບ້ານບ້ານຂອງຕົນ, ໃຫ້ຫມາຍຕົນກາ [ ✓ ] ໃສ່ຫ້ອງສີ່ຫລ່ຽມທີ່ມີ,

1= ຫ້ອງການປົກຄອງເມືອງ/ແຂວງ,

2= ຫ້ອງການບ້ານ,

3= ຕະຫຼາດຖາວອນ,

4= ສະໂມສອນ, ວັດ

5= ສູນບໍລິການເຕັກນິກກະສິກຳປ່າໄມ້,

6= ເດີ່ນກິລາ,

7 = ວັງປາສະຫງວນ,

8= ໄປສະນີ ຫລື ລະບົບໂທລະຄົມມະນາຄົມ,

| Q46 ບ້ານຂອງທ່ານມີສຳນັກງານ/ສະຖານທີ່ບໍລິການເພື່ອຊຸມຊົນບໍ່? | | |
|---|---|---|
| ເລືອກໄດ້ ຫຼາຍຄຳຕອບ (ໝາຍ✓) | ຫ້ອງການປົກຄອງເມືອງ/ແຂວງ | 1 |
| | ຫ້ອງການປົກຄອງບ້ານ | 2 |
| | ຕະຫຼາດຖາວອນ | 3 |
| | ສະໂມສອນ, ວັດ........ | 4 |
| | ສູນບໍລິການເຕັກນິກ ກະສິກຳ-ປ່າໄມ້ | 5 |
| | ເດີ່ນກິລາ | 6 |
| | ວັງປາສະຫງວນ | 7 |
| | ລະບົບໄປສະນີ ຫຼື ລະບົບໂທລະຄົມມະນາຄົມ | 8 |

*- ຕະຫລາດຖາວອນ: ຫມາຍເຖິງຕະຫລາດທີ່ມີການຈັດສັນ ແລະ ຊື້ຂາຍເປັນປະຈຳຕະຫລອດວັນ*

*- ສູນບໍລິການເຕັກນິກກະສິກຳປ່າໄມ້: ຫມາຍເຖິງສະຖານທີໃຫ້ຄຳປຶກສາ ແລະ ແນະນຳທາງດ້ານເຕັກນິກທີ່ກ່ຽວພັນກັບວຽກງານກະສິກຳເຊັ່ນ: ແນະນຳວິທີປູກພືດ, ການລ້ຽງສັດ, ການປະມົງ ແລະ ອື່ນໆ*

*- ເດີ່ນກິລາ: ຫມາຍເຖິງສະຖານຂອງບ້ານທີ່ໆຊາວບ້ານໃຊ້ຫລິ້ນກິລາ ຫລື ອອກກຳລັງກາຍປະເພດຕ່າງໆ ເຊັ່ນ: ເດີນຕີດອກປີກໄກ່, ເດີນບານສົ່ງ, ເດີນບານເຕະ, ກະຕໍ້, ຕີຫມາກຂາງ, ເດີນເປຕັ້ງ,*

*- ວັງປາສະຫງວນ: ຫມາຍເຖິງວັງນ້ຳທີ່ມີການສະຫງວນທີ່ຂື້ນກັບການຄຸ້ມຄອງຂອງບ້ານ. ກໍລະນີ ຟາມ ຫລື ຫນອງປາເປັນຂອງຄົວເຮືອນ ຫລື ບໍລິສັດທີມີການຜະລິດກະສິກຳຕ່າງໆຕັ້ງຢູ່ໃນເຂດບ້ານແມ່ນຈະໄດ້ສຳຫລວດຕ່າງຫາກ.*

**ຄຳຖາມ 47:** ບັນຫາທີ່ມີຜົນກະທົບຕໍ່ການຜະລິດກະສິກຳຢູ່ໃນບ້ານ

ຈຸດປະສົງຂອງຄຳຖາມນີ້ແມ່ນຢາກຮູ້ສະພາບຜົນກະທົບຫລື ບັນຫາຕ່າງໆທີ່ມີຕໍ່ຂອງຊາວກະສິກອນໃນການຜະລິດກະສິກຳ ໃຫ້ຫມາຍເອົາຄຳຕອບທີ່ຖືກຕ້ອງ ແລະ ເໝາະສົມ

| Q47 ບັນຫາທີ່ມີຜົນກະທົບຕໍ່ການຜະລິດກະສິກຳຢູ່ບ້ານຂອງທ່ານ? | | |
|---|---|---|
| ເລືອກໄດ້ ຫຼາຍຄຳຕອບ (ໝາຍ✓) | ບໍ່ມີດິນ/ດິນບໍ່ເໝາະສົມໃນການປູກຝັງ | 1 |
| | ຂາດແນວພັນພືດ/ສັດ | 2 |
| | ຂາດນ້ຳຊົນລະປະທານ | 3 |
| | ຂາດແຮງງານ | 4 |
| | ບໍ່ມີບ່ອນຈຳໜ່າຍສິນຄ້າ | 5 |
| | ບໍ່ມີສັດລາກແກ່/ກົນຈັກ | 6 |
| | ບໍ່ມີວັກຊີນປ້ອງກັນພະຍາດສັດ | 7 |
| | ລາຄາຜົນຜະລິດ | 8 |
| | ບໍ່ມີ | 9 |

**ຄຳຖາມ 48, 49:**

ໂຄງການພັດທະນາ ຫມາຍເຖິງໂຄງການພັດທະນາດ້ານວຽກງານກະສິກຳໃດຫນຶ່ງຢູ່ພາຍໃນບ້ານເຊັ່ນ, ໃຫ້ຫມາຍຄຳຕອບທີຖືກຕ້ອງ ແລະ ເຫມາະສົມ ໃນຄຳຖາມທີ 49: ໂຄງການນີ້ ໄດ້ຮັບການຊ່ວຍ ເຫລືອທາງດ້ານ ທຶນຮອນຈາກໃສ? ຄຳຖາມ ນີ້ ໝາຍເຖິງການລົງທຶນເຂົ້າໃນແຕ່ລະໂຄງການນັ້ນ ສ່ວນ ໃຫ່ຍໄດ້ມາຈາກໃສ.

- ທຶນຂອງລັດຖະບານ ໝາຍເຖິງທຶນຂອງລັດ ຫລື ໂຄງການໃດໜຶ່ງໂດຍຜ່ານລັດຖະບານ
- ທຶນເອກະຊົນພາຍໃນ ແມ່ນທຶນເອກະຊົນພາຍໃນປະເທດ.
- ເອກະຊົນຕ່າງປະເທດ ແມ່ນການເອົາແຫລ່ງເອກະຊົນຈາກຕ່າງປະເທດ.

| **Q48** | **ບ້ານຂອງທ່ານມີໂຄງການພັດທະນາກະສິກໍາເຫຼົ່ານີ້ບໍ່?** | | | |
|---|---|---|---|---|
| | ປູກຝັງ | ☐ | 1 | *ເລືອກໄດ້ ຫຼາຍຄໍາຕອບ (ໝາຍ✓)* |
| | ລ້ຽງສັດ | ☐ | 2 | |
| | ການປະມົງ | ☐ | 3 | |
| | ປ່າໄມ້ | ☐ | 4 | |
| | ຢຸດຕິການຖາງປ່າເຮັດໄຮ່ | ☐ | 5 | |
| | ອະນຸລັກສິ່ງແວດລ້ອມ | ☐ | 6 | |
| | ອື່ນໆ | ☐ | 7 | |
| | ບໍ່ມີ | ☐ | 8 | ➡ *ໄປຫາຄໍາຖາມ Q50* |

| **Q49** | **ພາກສ່ວນໃດໃຫ້ທຶນເປັນຕົ້ນຕໍ?** | | |
|---|---|---|---|
| *ເລືອກໄດ້ ຫຼາຍຄໍາຕອບ (ໝາຍ✓)* | ລັດຖະບານ | ☐ | 1 |
| | ເອກກະຊົນພາຍໃນ | ☐ | 2 |
| | ເອກກະຊົນຕ່າງປະເທດ | ☐ | 3 |
| | ອົງການບໍ່ສັງກັດລັດ (INGO) | ☐ | 4 |

**ຄໍາຖາມ 50:** ແຫຼ່ງນໍ້າໃຊ້ຂອງປະຊາຊົນໃນບ້ານ

ໃຫ້ໝາຍຕົບກາໃສ່ຫ້ອງສີ່ຫຼ່ຽງ ຂອງແຫລ່ງນໍ້າໃຊ້ທີ່ຄົວເຮືອນໃຊ້ຕາມຄວາມເໝາະສົມ ແລະ ສາມາດໝາຍໄດ້ຫຼາຍຄໍາຕອບ, ສໍາລັບຄໍາຖາມ 50a ແມ່ນຖາມເຖິງເປີເຊັນຂອງຄົວເຮືອນຢູ່ໃນບ້ານໄດ້ຊົມໃຊ້ນໍ້າ . ຖ້າ ມີ 70% ຂື້ນໄປໃຫ້ໝາຍ ຕົບກາໃສ່ຫ້ອງໝາຍເລກ 1 ແລະ ໜ້ອຍກວ່າ 70% ໃຫ້ໝາຍໃສ່ຫ້ອງເລກ 2. ໂດຍໃຫ້ນາຍບ້ານ ຄາດຄະເນການນໍາໃຊ້ນໍ້າພາຍໃນບ້ານ

| **Q50** | **ແຫຼ່ງນໍ້າໃຊ້ຂອງປະຊາຊົນໃນບ້ານມາຈາກໃສ?** | | | | | | |
|---|---|---|---|---|---|---|---|
| | ນໍ້າປະປາ | ☐ | 1 | ➡ **Q50a** ຄ/ຣ ໃນບ້ານນໍາໃຊ້ນໍ້າ | 70% ຂື້ນໄປ | ☐ | 1 |
| *ເລືອກໄດ້ ຫຼາຍຄໍາຕອບ (ໝາຍ✓)* | ນໍ້າບາດານ/ນໍ້າສ້າງມີຝາປິດ | ☐ | 2 | ຄິດເປັນ%ຫຼາຍປານໃດ? | ນ້ອຍກວ່າ 70% | ☐ | 2 |
| | ນໍ້າສ້າງບໍ່ມີຝາປິດ | ☐ | 3 | | | | |
| | ແມ່ນໍ້າ, ເຂື່ອນ, ໜອງນໍ້າ | ☐ | 4 | | | | |
| | ນໍ້າຝົນ | ☐ | 5 | | | | |
| | ອື່ນໆ | ☐ | 6 | ລະບຸແຈ້ງ....................................................................... | | | |

# 7. ການຈົດກ່າຍໃບສອບຖາມຄົວເຮືອນ

## (ແບບສອບຖາມ F4)

### 7.1 ກ່ອນການເລີ້ມສຳພາດຄົວເຮືອນ

ກ່ອນການເລີ້ມສຳພາດຄົວເຮືອນນັກເດີນສຳຫຼວດຕ້ອງຂຽນຂໍ້ມູນເອກະລັກໃສ່ເທິງຂອງແບບສອບຖາມ F4 :

- ຈົດກ່າຍ ລະຫັດ ແຂວງ, ເມືອງ, ບ້ານ ໃສ່ຫ້ອງສີ່ລ່ຽມທີ່ໄດ້ກຳນົດໄວ້
- ຈົດກ່າຍເລກທີ່ຂອງຄົວເຮືອນຈາກຖັນທີ່ 1 ຂອງຕາຕະລາງຂຶ້ນບັນຊີຄົວເຮືອນ F1
- ຈົດກ່າຍ ຊື່ແຂວງ, ເມືອງ, ບ້ານ, ໜ່ວຍ ແລະ ຊື່ຄົວເຮືອນ ຈາກ ຕາຕະລາງຂຶ້ນບັນຊີຄົວເຮືອນ F1

[redacted]

ຂໍ້ມູນເອກະລັກຕ່າງໆ ຕ້ອງໄດ້ຈົດກ່ອນການສຳພາດ ຖ້າຫາກວ່າທ່ານລືມລະບຸຂໍ້ມູນເອກະລັກດັ່ງກ່າວຈະບໍ່ສາມາດຮູ້ ແລະ ນຳໃຊ້ແບບສອບຖາມນັ້ນໄດ້. ເຊື່ອໝັ້ນວ່າລະຫັດດັ່ງກ່າວນັ້ນຖືກຕ້ອງ, ລະຫັດດັ່ງກ່າວນັ້ນມັນເປັນການລະບຸເຖິງທີ່ຕັ້ງຂອງແຕ່ລະຄົວເຮືອນ

### 7.2 ໂຄງປະກອບຂອງແບບສອບຖາມ

**ແບບສອບຖາມໄດ້ແບ່ງອອກເປັນຫຼາຍພາກ:**

- ຄຳຖາມທີ 1 ແມ່ນຂໍ້ມູນເອກະລັກຂອງຄົວເຮືອນ ເຊັ່ນ: ແຂວງ, ເມືອງ, ບ້ານ ແລະ ລະຫັດຂອງຄົວເຮືອນ.
- ຄຳຖາມທີ 2-7 ຈະໄດ້ຖາມກ່ຽວກັບກິດຈະກຳຂອງຄົວເຮືອນ ກ່ຽວກັບການປູກພືດ, ລ້ຽງສັດ, ສັດນ້ຳ ແລະ ກິດຈະກຳອື່ນໆ. ຄຳຖາມເລົ່ານີ້ໃຊ້ເພື່ອກຳນົດ ຄົວເຮືອນກະສິກຳ. ສ່ວນຄຳຖາມອື່ນ ນັ້ນຈະຖາມກ່ຽວກັບການດຳເນີນກິດຈະກຳກະສິກຳຂອງຄົວເຮືອນ, ຖ້າຫາກຄົວເຮືອນດັ່ງກ່າວບໍ່ແມ່ນຄົວເຮືອນກະສິກຳ ບໍ່ຈຳເປັນຈະຕ້ອງຖາມຄຳຖາມອື່ນໆ. ຖ້າຫາກແມ່ນຄົວເຮືອນກະສິກຳທ່ານຈະໄດ້ຖາມລາຍລະອຽດ ແຕ່ລະຄຳຖາມອື່ນຕໍ່ໄປ.
- ຄຳຖາມທີ 8, 9 ຖາມກ່ຽວກັບດິນ ແລະ ຊົນລະປະທານ
- ຄຳຖາມທີ 10-13 ຖາມກ່ຽວກັບການປູກພືດລົ້ມລຸກໃນລະດູຝົນປີ 2010
- ຄຳຖາມທີ 14-17 ຖາມກ່ຽວກັບການປູກພືດລົ້ມລຸກໃນລະດູແລ້ງ ສົກປີ 2010/11
- ຄຳຖາມທີ 18-21 ຖາມກ່ຽວກັບພືດຢືນຕົ້ນ
- ຄຳຖາມທີ 22-23 ສັດລ້ຽງ
- ຄຳຖາມທີ 24-25 ຖາມກ່ຽວກັບຈຸດປະສົງຕົ້ນຕໍ ຂອງການຜະລິດກະສິກຳ ແລະ ການຂາຍຜົນຜະລິດກະສິກຳ
- ຄຳຖາມທີ 26-29 ຖາມກ່ຽວກັບຄຸນລັກສະນະຂອງຄົວເຮືອນ: ຂະໜາດຄົວເຮືອນ, ຊົນເຜົ່າ, ເພດ ແລະ ອາຍຸຂອງ

ທິວໜ້າຄົວເຮືອນ.

- ຄຳຖາມທີ 32-33 ຖາມກ່ຽວກັບການເປັນເຈົ້າຂອງເຄື່ອງກົນຈັກກະສິກຳ: ລົດໄຖນາ ແລະ ຈັກສູບນ້ຳ
- ຄຳຖາມທີ 34 ຖາມກ່ຽວກັບດິນປ່າໄມ້

## 7.3 ການຕັ້ງຄຳຖາມ

**ຄຳຖາມທີ 2:** ຄົວເຮືອນຂອງທ່ານໄດ້ເຮັດການຜະລິດກະສິກຳໃນລະດູຝົນ ປີ 2010 ແລະ ຫຼື ລະດູແລ້ງ ສົກປີ 2010/2011ບໍ່?.

ຂໍ້ຄວນເອົາໃຈໃສ່:ຂອງຄຳຖາມນີ້ ການນຳໃຊ້ດິນເພື່ອປູກພືດທຸກຊະນິດເຊັ່ນ: ການປູກເຂົ້າ, ພືດລົ້ມລຸກ, ຕົ້ນໄມ້ກິນໝາກ ແລະພືດຍືນຕົ້ນອື່ນໆທີ່ຢູ່ບ້ານຕົນເອງ ຫລືບ່ອນອື່ນ ລວມທັງດິນປະເຮື້ອໃຫ້ໝາຍຕົນກາ (✓) ໃສ່ຫ້ອງສີ່ຫລ່ຽມທີ່ຖືກຕ້ອງ, 1 =ໄດ້ , 2= ບໍ່ໄດ້ ຖ້າບໍ່ມີຂ້າມໄປຄຳຖາມທີ 4 . ຄວນອ່ານໃຫ້ຜູ້ຕອບເຂົ້າໃຈຄຳຖາມ ເຮັດໃຫ້ຜູ້ຕອບສາມາດສັງເກດຄວາມແຕກຕ່າງປະເພດຂອງດິນກະສິກຳ ເພື່ອເຮັດໃຫ້ທຸກຕອນດິນໄດ້ຖືກຈົດເຂົ້າ.

*ລາຍລະອຽດໃຫ້ເບິ່ງນິຍາມ ຂໍ້ 3.2*

**Q2** ຄົວເຮືອນຂອງທ່ານໄດ້ເຮັດການຜະລິດກະສິກຳ

(ລະດູຝົນປີ 2010 / ລະດູແລ້ງ ສົກປີ 2010/2011) ບໍ່?

| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | | | |
|---|---|---|---|
| | ໄດ້ເຮັດ | 1 | |
| | ບໍ່ໄດ້ເຮັດ | 2 | ➡ *ໄປຫາຄຳຖາມQ4* |

*__ຂໍ້ຄວນເອົາໃຈໃສ່:__ ລວມທັງພື້ນທີ່ພືດເຂົ້າ, ພືດລົ້ມລຸກ, ພືດຍືນຕົ້ນທີ່ດິນປະເປັນເຮື້ອ ແລະ ອື່ນໆທີ່ໄດ້ປູກຢູ່ບ້ານຕົນເອງ ແລະ ບ່ອນອື່ນ.*

**ຄຳຖາມທີ 3:** ທ່ານມີເນື້ອທີ່ດິນທຳການຜະລິດກະສິກຳໃນລະດູຝົນປີ 2010 ແລະ ລະດູແລ້ງ 2010/2011 ຫຼາຍກວ່າຫຼືນ້ອຍກວ່າ 200 ມ2 ບໍ່?

ສຳລັບຄຳຖາມທີ 3 ໃຫ້ທ່ານສັງເກດເບິ່ງວ່າຖ້າຄົວເຮືອນໄດ້ເຮັດການຜະລິດກະສິກຳໃນຄຳຖາມ 2. ໃຫ້ໝາຍ 1 ຖ້າຫາກຄົວເຮືອນເທົ່າກັບຫຼື ຫລາຍກວ່າ 200 ມ$^2$; (1/8ໄລ່), 2= ນ້ອຍກວ່າ 200 ມ$^2$; (1/8ໄລ່). ດິນກະສິກຳໝາຍເຖິງດິນທີ່ນຳໃຊ້ເຂົ້າໃນການດຳເນີນການຜະລິດເຊັ່ນປູກພືດລົ້ມລຸກ ຫຼື ຍືນຕົ້ນ ລວມທັງດິນປະເປັນເຮື້ອ(ລາຍລະອຽດເບິ່ງໃນນິຍາມ ຂໍ້ 3.2)

**Q3** ທ່ານມີເນື້ອທີ່ດິນທຳການຜະລິດກະສິກຳໃນລະດູຝົນປີ 2010

ແລະ ລະດູແລ້ງ 2010/2011 ຫຼາຍກວ່າຫຼືນ້ອຍກວ່າ 200 ມ$^2$ ບໍ່?

| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | | | |
|---|---|---|---|
| | ຫຼາຍກວ່າ | 1 | ➡ *ໄປຫາຄຳຖາມQ5* |
| | ນ້ອຍກວ່າ | 2 | ➡ *ສືບຕໍ່ຄຳຖາມQ4* |

**ຄຳຖາມ 4:** ຄົວເຮືອນ ຂອງ ທ່ານ ໄດ້ລ້ຽງສັດປະເພດໃດນຶ່ງ ເຊັ່ນ: ງົວ/ຄວາຍ 2 ໂຕຂຶ້ນໄປ ຫຼື ໝູ/ແບ້/ ແກະ 5 ໂຕຂຶ້ນໄປ ຫຼື ສັດປີກ 20 ໂຕຂຶ້ນໄປ ຫຼື ລ້ຽງສັດອື່ນ ບໍ່?

ໃຫ້ໝາຍ ຕົນກາ(✓) ໃສ່ ຫ້ອງສີ່ຫຼ່ຽມ "1" ຫຼື "2" ອີງຕາມ ຄົວເຮືອນ ໄດ້ລ້ຽງ ຫຼື ບໍ່ ງົວ ຫຼື ຄວາຍ 2 ໂຕ ຂຶ້ນໄປ ຫຼື ໝູ, ແບ້, ແກະ 5 ໂຕ ຂຶ້ນໄປ ຫຼື ສັດປີກ 20 ໂຕ ຂຶ້ນໄປ ຫຼື ລ້ຽງສັດອື່ນ. ສັດລ້ຽງ ອື່ນ ລວມ ມີ ຊ້າງ, ມ້າ, ນົກ ກະຈອກເທດ ແລະ ສັດປະເພດອື່ນທີ່ລ້ຽງ. ອີງໃສ່ຂໍ້ 3.5 ໄດ້ອະທິບາຍລະອຽດ ຄວາມໝາຍຄຳວ່າ **__ລ້ຽງສັດ.__** ຄຳຖາມນີ້ ແມ່ນອີງໃສ່ ສັດລ້ຽງທີ່ມີໃນມື້ສຳຫຼວດ.

**Q4** ປະຈຸບັນຄົວເຮືອນຂອງທ່ານໄດ້ລ້ຽງສັດປະເພດໃດນຶ່ງເຊັ່ນ:

ງົວ/ຄວາຍ 2 ໂຕຂຶ້ນໄປ ຫຼື ໝູ/ແບ້/ແກະ 5 ໂຕຂຶ້ນໄປ ຫຼື

ສັດປີກ 20 ໂຕຂຶ້ນໄປ ຫຼື ສັດລ້ຽງອື່ນໆ ບໍ່?.

| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | | |
|---|---|---|
| | ໄດ້ລ້ຽງ | 1 |
| | ບໍ່ໄດ້ລ້ຽງ | 2 |

## ຄຳຖາມ 5: ຄົວເຮືອນໄດ້ລ້ຽງສັດນ້ຳ ບໍ່ ?

ໃຫ້ໝາຍ ຕີນກາ ໃສ່ ຫ້ອງສີ່ຫຼ່ຽມ “1” ຫຼື “2” ອີງໃສ່ ຄົວເຮືອນ ມີ ຫຼື ບໍ່ ກິດຈະກຳການລ້ຽງສັດນ້ຳ ໃນ ຊ່ວງ 12 ເດືອນຜ່ານມາ. ການລ້ຽງສັດນ້ຳ ແມ່ນ ການເພາະລ້ຽງ (ຟາມ) ປະເພດນ້ຳ ເຊັ່ນ ປາ, ກົບ ແລະ ກຸ້ງ. ຄຳວ່າ “ການເພາະລ້ຽງ” ໝາຍເຖິງເຂົ້າໄປ ຫຍຸ້ງກ່ຽວບາງຄັ້ງໃນຂະບວນການລ້ຽງສິ່ງເສີມການຜະລິດ, ເຊັ່ນກັກຂັງ, ລ້ຽງເກືອ ແລະ ປົກປ້ອງ ຈາກສັດອື່ນມາກິນເປັນອາຫານ. ການລ້ຽງສັດນ້ຳ ໂດຍປົກ ກະຕິ ຈະພົວພັນ ເຖິງການເພາະລ້ຽງ ຜະລິດຕະພັນການ ປະມົງຕັ້ງແຕ່ ລູກປາ, ສັດນ້ຳຕົວອ່ອນ ຫຼື ສັດນ້ຳຂັ້ນ ອະນຸບານ. ການລ້ຽງສັດນ້ຳ ຈະລ້ຽງໃນ ສະປາ, ນາເຂົ້າ, ປາກແມ່ນ້ຳ ຫຼື ຄອງຊົນລະປະທານ, ນຳໃຊ້ ສິ່ງທີ່ສ້າງຂຶ້ນ ເປັນຕົ້ນ ກົງຂັງ ແລະ ກະຊັ່ງ.

| | | |
|---|---|---|
| **Q5** ຄົວເຮືອນຂອງທ່ານໄດ້ລ້ຽງສັດນ້ຳບໍ່? | | |
| *ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)* | ໄດ້ລ້ຽງ | 1 |
| | ບໍ່ໄດ້ລ້ຽງ | 2 |

ມີຄວາມແຕກຕ່າງກັນຈະແຈ້ງ ລະຫວ່າງ ການລ້ຽງສັດນ້ຳ ແລະ ການຈັບປາ. ການຈັບປາ ໝາຍເຖິງ ປາທີ່ ຈັບໄດ້ ຫຼື ສັດນ້ຳອື່ນ ໆ ໃນທຳມະຊາດ. ຈຸດພິເສດ ຂອງ ການຈັບປາ ແມ່ນ ປາ ຫຼື ສັດນ້ຳ ອື່ນໆ ຖືກຂຸດຄົ້ນ ສະແວງຫາ ມັນແມ່ນສິນລະປະ ວິທີການທີ່ນິຍົມກັນທົ່ວໄປ, ຊຶ່ງມີລັກສະນະກົງກັນຂ້າມ ກັບ ການເປັນ ເຈົ້າ ຂອງ ໂດຍຄົວເຮືອນ ດັ່ງກໍລະນີ ການລ້ຽງສັດນ້ຳ.

## ຄຳຖາມ 6: ຄົວເຮືອນ ໄດ້ດຳເນີນກິດຈະກຳ ກະສິກຳ ສະເພາະ ໃດນຶ່ງບໍ່?

ຈຸດປະສົງຂອງຄຳຖາມນີ້, ແມ່ນຖາມ ສະເພາະແຕ່ລະ ກິດຈະກຳທີ່ ດຳເນີນກະສິກຳ ແຕ່ລະປະເພດ. ເຊັ່ນ: ທຳອິດ ຖາມ ປູກມອນລ້ຽງມ້ອນ ໃນປີ 2010/11 ບໍ່? ”, ອັນດັບຕໍ່ໄປ ຖາມວ່າ “ ໄດ້ປູກເຫັດ ໃນປີ 2010/11”? ແລະ ຕໍ່ໆໄປ. ໃຫ້ໝາຍ ຕີນກາ (✓)ໃສ່ ຫ້ອງຄຳຕອບ ທີ່ຖືກຕ້ອງ ຖ້າໄດ້ດຳເນີນກິດຈະກຳນັ້ນໆ. ສາມາດ ໝາຍໄດ້ຫລາຍຄຳຕອບ.

| | | |
|---|---|---|
| **Q6** ຄົວເຮືອນຂອງທ່ານໄດ້ດຳເນີນກິດຈະກຳດັ່ງຕໍ່ໄປນີ້ບໍ່? | | |
| | ປູກມອນລ້ຽງມ້ອນ | 1 |
| ***ເລືອກໄດ້ຫຼາຍຄຳຕອບ(ໝາຍ✓)*** | ປູກເຫັດ | 2 |
| | ປູກດອກໄມ້ | 3 |

ປູກໝອນລ້ຽງມ້ອນ ແມ່ນການລ້ຽງ ຕົວມ້ອນ ເພື່ອຜະລິດເສັ້ນໄໝ.

ການປູກເຫັດ ແມ່ນ ການປູກເຫັດ ພາຍໃຕ້ ເງື່ອນໄຂທີ່ ຄວບຄຸມ. ບໍ່ລວມເອົາ ເຫັດທີ່ເກັບຈາກ ທຳມະຊາດ.

ປູກດອກໄມ້ ແມ່ນການປູກດອກໄມ້ ແລະ ຕົ້ນໄມ້ປະດັບ ເພື່ອຂາຍ ດັ່ງ ຕົ້ນດອກໄມ້ ຫຼື ເດັດເອົາດອກໄມ້. ບໍ່ລວມເອົາ ດອກໄມ້ຈາກ ຕົ້ນດອກໄມ້ທີ່ເກີດຈາກທຳມະຊາດ.

ການລ້ຽງແມງໄມ້ ແມ່ນການລ້ຽງແມງໄມ້ ປະເພດ ຈິງຫຼີດ, ຈີ່ລໍ້ ເພື່ອ ຈຸດປະສົງເປັນ ອາຫານ. ບໍ່ລວມເອົາ ແມງໄມ້ ທີ່ຈັບໄດ້ ໃນທຳມະຊາດ.

ການລ້ຽງເຜິ້ງ ແມ່ນລ້ຽງ ເອົາ ນ້ຳເຜິ້ງ ຂອງຝູງເຜິ້ງ, ໂດຍປົກກະຕິລ້ຽງ ຢູ່ ຮັງເຜິ້ງ ສຳລັບຈຸດປະສົງ ເກັບເອົາ ນ້ຳເຜິ້ງ ແລະ ຂີ້ເຜິ້ງ, ເຮັດການປະສົມເກສອນພືດ ຫຼື ຜະລິດເຜິ້ງ ເພື່ອຂາຍ ໃຫ້ແກ່ການລ້ຽງເຜິ້ງຕໍ່ໄປ.

ຟາມລ້ຽງແຂ້ ແມ່ນການ ເພາະພັນ ແລະລ້ຽງ ແຂ້ ເອົາ ຊີ້ນ, ເອົາໜັງ ແລະ ເປັນສິນຄ້າອື່ນໆ. ບໍ່ລວມເອົາ ແຂ້ ໃນທຳມະຊາດ.
ອື່ນໆ (ການປູກ/ການລ້ຽງສະເພາະ) ລວມ ມີກິດຈະກຳກະສິກຳ ເປັນຕົ້ນ ລ້ຽງເປັນ ອາຫານພິເສດ

### ຄຳຖາມ 7: ໃຫ້ກວດຄືນ ທຸກຄຳຕອບທີ່ຖາມໄປແລ້ວ.

ຄຳຖາມເລົ່ານີ້ ບໍ່ແມ່ນຄຳຖາມ ເພື່ອຖາມ ຄົວເຮືອນ. ມັນສັງລວມ ເບິ່ງ ຄືນ ຄຳຖາມ Q2 ເຖິງ Q6 ເພື່ອ ຊອກຮູ້ວ່າ ຄົວເຮືອນໃດ ແມ່ນຄົວເຮືອນ ກະສິກຳ.

ມັນມີຄວາມສຳຄັນທີ່ສຸດ ຊຶ່ງພວກທ່ານ ສະຫຼຸບໄດ້ ຖືກຕ້ອງ ຄຳຖາມ “Q7” ເພາະມັນຈະໄດ້ກຳນົດວ່າ ຄຳຖາມ ໃດ ທີ່ ຄົວເຮືອນຕອບຜ່ານມາ. ຜົນສຳເລັດທັງ ໝົດຂອງ ການສຳຫຼວດສະຖິຕິຂຶ້ນກັບສະຖານະການ ເຮັດຖືກຕ້ອງດີ. ໃຫ້ ປະຕິບັດຕາມ ລຳດັບ ຄຳແນະນຳ ຢ່າງລະມັດລະວັງ.

**Q7 ໃຫ້ນັກເດີນສຳຫຼວດກວດຄືນເພື່ອຄວາມໝັ້ນໃຈດັ່ງລຸ່ມນີ້:**

| | | | |
|---|---|---|---|
| ມີ v ໃນບ໊ອກ 1ຢູ່ Q3 | ☐ | 1 | ຖ້າໝາຍ √ ໃດນຶ່ງ ໃນນີ້ ໄປຫາ Q8 |
| ມີ v ໃນບ໊ອກ 1ຢູ່ Q4 | ☐ | 2 | |
| ມີ v ໃນບ໊ອກ 1ຢູ່ Q5 | ☐ | 3 | |
| ມີ v ໃດນຶ່ງຢູ່ບ໊ອກ1ຫາ8 ຢູ່Q6 | ☐ | 4 | |
| ຖ້າບໍ່ມີໝາຍvຂ້າງເທິງ | ☐ | 5 | ⇨ ສິ້ນສຸດການສຳພາດ |

### ຄຳຖາມ 8: ໃນ 12 ເດືອນຜ່ານມາຄົວເຮືອນໄດ້ຄອບຄອງ ດິນ ຫຼາຍປານໃດ?

ຈຸດປະສົງຂອງ ຄຳຖາມ Q8 ເພື່ອ ຢາກຮູ້ວ່າ ຄົວເຮືອນ ດັ່ງກ່າວ ມີເນື້ອທີ່ດິນເທົ່າໃດ. ມີ ສອງປະເພດ ການ ຄອບຄອງ ດິນ ຄື:

- ດິນກະສິກຳ (Q 8a). ດິນກະສິກຳ ແມ່ນ ດິນທີ່ ນຳໃຊ້ໂດຍຄົວເຮືອນ ຊຶ່ງ ນຳໃຊ້ ຢ່າງໃດຢ່າງນຶ່ງ ເພື່ອປູກພືດລົ້ມລຸກ ຫຼື ພືດຢືນຕົ້ນ ຫຼື ປະເປັນເຮື້ອຊົ່ວຄາວ (ໃຫ້ເບິ່ງ ລາຍລະອຽດ ໃນ ຫົວຂໍ້ 3.3).

- ບໍ່ແມ່ນດິນເພື່ອການກະສິກຳ(Q8b). ບໍ່ແມ່ນດິນກະສິກຳລວມມີດິນອື່ນໆທັງໝົດເຊັ່ນ: ດິນປ່າໄມ້ ດິນປູກເປັນປ່າ, ດິນໄຕ້ນ້ຳ, ດິນປູກສ້າງອາຄານຂອງເຂດພື້ນທີ່ການຜະລິດ ແລະ ດິນອື່ນໆ (ຍົກເວັ້ນດິນຢູ່ໃນຕົວເມືອງ) ຕົວຢ່າງ: ເຮືອນຢູ່, ໂຮງແຮມ, ໂຮງຮຽນ.

**Q8 ໃນ12ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ຄອບຄອງດິນຫຼາຍປານໃດ?** *(ລວມເອົາຕອນດິນທີ່ເປັນຂອງຕົນເອງ ແລະ ບໍ່ແມ່ນຂອງຕົນເອງ)*

| | | | |
|---|---|---|---|
| **Q8a** | ເນື້ອທີ່ດິນກະສິກຳທັງໝົດເທົ່າໃດ? | , | ຮຕ |
| **Q8b** | ເນື້ອທີ່ບໍ່ແມ່ນດິນກະສິກຳທັງໝົດເທົ່າໃດ? | , | ຮຕ |

### ຄຳຖາມ 9: ຖາມ ກ່ຽວກັບ ການນຳໃຊ້ນ້ຳຈາກລະບົບຊົນລະປະທານ

Q.9 ຖາມ ກ່ຽວກັບ ຄົວເຮືອນ ທີ່ ມີດິນກະສິກຳ ໄດ້ຮັບນ້ຳ ຊົນລະປະທານ ໃນ ຊ່ວງລະດູຝົນ 2010 ແລະ ລະດູແລ້ງ 2010/11.

ຊົນລະປະທານ ແມ່ນການສະໜອງນ້ຳໃຫ້ແກ່ດິນ, ບໍ່ແມ່ນອາໃສນ້ຳຝົນ ໂດຍຈຸດປະສົງເພື່ອປັບປຸງທົ່ງຫຍ້າ ແລະ ຜົນຜະລິດພືດ. ໂດຍປົກກະຕິ, ຊົນລະປະທານ ໄດ້ນຳໃຊ້ໂຄງລ່າງພື້ນຖານ ແລະ ອຸປະກອນ ທີ່ມີ ຢູ່ ແລ້ວ ນຳໃຊ້ເປັນປະໂຫຍດ

ລະບາຍນ້ຳໃຫ້ພືດ, ດັ່ງ ຄອງຊົນລະປະທານ, ຈັກສູບນ້ຳ, ຈັກທົດນ້ຳ ຫຼື ລະບົບຊົນລະປະທານ ແບບປະຖົມປະຖານຂອງທ້ອງຖິ່ນ. ແນວໃດກໍຕາມ, ຊົນລະປະທານ ຍັງລວມເອົາ ອຸປະກອບປັ່ນນ້ຳດ້ວຍມື ໂດຍນຳໃຊ້ ກັງຫັນນ້ຳ, ດ້ວຍການຕັກນ້ຳ ຫຼື ດ້ວຍເຄື່ອງປະດິດອື່ນໆ. ບໍ່ ລວມເອົາ ແມ່ນ້ຳ ຫຼື ໜອງນ້ຳ ທີ່ ລົ້ນໄຫຼເຂົ້າເອງເຮັດໃຫ້ ນ້ຳຖ້ວມ ອັນນີ້ ບໍ່ນັບວ່າ ແມ່ນ ຊົນລະປະທານ.

**Q9** ເນື້ອທີ່ດິນທີ່ທ່ານຄອບຄອງໄດ້ນຳໃຊ້ນ້ຳຈາກລະບົບຊົນລະປະທານບໍ່?

| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | | | | |
|---|---|---|---|---|
| | <u>ໄດ້ນຳໃຊ້</u> | ☐ | **1** | ➡ *ໄປຫາຄຳຖາມQ9a* |
| | <u>ບໍ່ໄດ້ນຳໃຊ້</u> | ☐ | **2** | ➡ *ໄປຫາຄຳຖາມQ10* |

**Q9a** ເນື້ອທີ່ຊົນລະປະທານທັງໝົດຫຼາຍປານໃດ? [ , ] ຮຕ

ຊົນລະປະທານ ປະກອບດ້ວຍ ຂະບວນໃດນຶ່ງທີ່ນຳເອົາແຫຼ່ງນ້ຳມາຮັບໃຊ້ ປູກພືດກະສິກຳ. ນ້ຳ ເພື່ອການຊົນລະປະທານອາດໄດ້ມາຈາກຫຼາຍແຫຼ່ງນ້ຳ ເຊັ່ນ ແມ່ນ້ຳ ລຳເຊ, ເຂື່ອນ ຫຼື ນ້ຳບາດານ. ນ້ຳຊົນລະປະທານອາດ ແມ່ນ ຜະລິດຕະພົນຂອງໂຄງການຊົນລະປະທານຮັບໃຊ້ຊາວກະສິກອນຫຼາຍຄົວເຮືອນ ໃນ ພື້ນທີ່ກວ້າງໃຫຍ່, ຫຼື ໂຄງການຊົນລະປະທານທ້ອງຖິ່ນ ຮັບໃຊ້ ຊຸມຊົນຂະໜາດນ້ອຍ. ຊາວກະສິກອນ ສາມາດ ມີນ້ຳຊົນລະປະທານດ້ວຍຕົນເອງ ຈາກ ແມ່ນ້ຳ, ລຳທານ, ນ້ຳບາດານ ຫຼື ນ້ຳສ້າງ, ໂດຍນຳໃຊ້ ຈັກສູບນ້ຳ ຫຼື ດ້ວຍວິທີການນຳໃຊ້ແຮງງານ ເຊັ່ນ ກັງຫັນນ້ຳ. ໃນຕົວເມືອງ ແລະ **ຊານເມືອງ, ຊົນລະປະທານ ອາດນຳໃຊ້ ທໍ່ນ້ຳ ແລະ ຄຸ/ຖັງ, ບາງຄັ້ງອາດນຳໃຊ້ນ້ຳປະປາສາທາລະນະ.**

ຄວາມໝາຍ ຄຳວ່າຊົນລະປະທານ ແມ່ນ "ຄວບຄຸມໄດ້ເຕັມສ່ວນ" ກ່ຽວກັບການສະໜອງນ້ຳ, ຊຶ່ງຕ່າງຈາກປະເພດການ ຄຸ້ມຄອງນ້ຳ ຂຶ້ນກັບຄວາມກຽມພ້ອມຂອງນ້ຳ ໂດຍອາໃສ ສະພາບນ້ຳຝົນ. ປະເພດກິດຈະກຳ ດ້ານການຄຸ້ມຄອງນ້ຳ ຕົວຢ່າງ ຄວບຄຸມນ້ຳໄຫຼຖ້ວມ ເພື່ອ ທົດພືດ, ວິທີການຄວບຄຸມນ້ຳ ໃນເຂດດິນທາມ, ແລະ ການປູກພືດໃນເຂດນ້ຳຖ້ວມຫຼົດລົງ ບໍ່ຖືວ່າ ແມ່ນ ຊົນລະປະທານ.

**ຄຳຖາມ Q9** ກ່ຽວພັນ ກັບການນຳໃຊ້ຊົນລະປະທານ, ເຖິງແມ່ນວ່າ ຄົວເຮືອນບໍ່ມີອຸປະກອນເພື່ອ ຊົນລະປະທານ ກໍ່ຕາມ. ໂຄງລ່າງພື້ນ ກ່ຽວກັບຊົນລະປະທານ ທີ່ມີຢູ່ ໃນຄົວເຮືອນ-ຊຶ່ງ ແມ່ນ, ເຄື່ອງມືດ້ານ ຊົນລະ ປະທານ ເຊັ່ນ ມີລະບົບຄອງ ແລະ ລະບົບສີດນ້ຳ - ແຕ່ວ່າ ສິ່ງອຳນວຍຄວາມສະດວກເລົ່ານີ້ ພັດບໍ່ໄດ້ນຳໃຊ້ ໂດຍ ຄົວເຮືອນ ໃນ ຊ່ວງໄລຍະ ອ້າງອີງ ເນື່ອງຈາກ ວ່ານ້ຳຂາດ, ບໍ່ມີນ້ຳມັນ, ຫຼື ບໍ່ ມີ ເງິນ ຈ່າຍ ຄ່ານ້ຳ. ຊົນລະປະທານ ອ້າງອີງໃສ່ ການສະໜອງນ້ຳຜ່ານມາ, ໂດຍບໍ່ຄຳນຶ່ງເຖິງວ່າມີປະລິມານນ້ຳສະໜອງພຽງພໍ.

## ຄຳຖາມ 10 ໃນລະດູຝົນ ປີ 2010 ຄົວເຮືອນ ໄດ້ປູກພືດລົ້ມລຸກຊະໜິດໃດນຶ່ງບໍ່?

ຈຸດປະສົງ ຂອງ ຄຳຖາມນີ້ ແມ່ນ ຢາກຮູ້ວ່າ ຄົວເຮືອນໄດ້ປູກພືດລົ້ມລຸກຊະນິດໃດແດ່ ໃນຊ່ວງລະດູຝົນ ປີ 2010. ຖ້າ ຄຳຕອບ ແມ່ນ "ໄດ້ປູກ" ໃຫ້ໝາຍຕົນກາ ໃສ່ ຫ້ອງສີ່ຫຼ່ຽມ ແລະ ໃຫ້ ສືບຕໍ່ຖາມລາຍລະອຽດ ຂອງແຕ່ລະພືດ ໃນ ຄຳຖາມ Q11, Q12 ແລະ Q13. ຖ້າ ຄຳຕອບ ແມ່ນ "ບໍ່ໄດ້ປູກ" ຂ້າມໄປຫາຄຳຖາມ Q14 ເພື່ອຖາມ ການປູກພືດໃນລະດູແລ້ງ.

**Q10** ໃນລະດູຝົນປີ 2010 ຄົວເຮືອນຂອງທ່ານໄດ້ປູກພືດລົ້ມລຸກຊະນິດໃດນຶ່ງບໍ່?

| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | | | | |
|---|---|---|---|---|
| | <u>ໄດ້ປູກ</u> | ☐ | **1** | |
| | <u>ບໍ່ໄດ້ປູກ</u> | ☐ | **2** | ➡ *ໄປຫາຄຳຖາມQ14* |

***(ເຂົ້າ ແລະ ພືດອື່ນໆ) ທີ່ປູກໃນເຂດທົ່ງພຽງ, ພູພຽງ, ພູດອຍ ທຸກຕອນດິນໂດຍປູກເປັນສວນ, ປູກກະແຈກກະຈາຍ.***

ທຸກຄຳຖາມ ກ່ຽວກັບ ພືດລົ້ມລຸກ ໃຫ້ ອ້າງອີງໃສ່ ພືດ **ທີ່ໄດ້ປູກ** ໃນລະດູການທີ່ ອ້າງອີງໄວ້, ບໍ່ຄຳນຶ່ງເຖິງວ່າ ມັນໄດ້ເກັບກ່ຽວໄປແລ້ວກໍຕາມ. ດ້ວຍເຫດນີ້, ຖ້າພືດທີ່ປູກ ຫາກຖືກເສຍຫາຍ ຍ້ອນ ສັດຕູພືດ, ນ້ຳຖ້ວມ ຫຼື ເຫດຜົນອື່ນ, ມັນຍັງພິຈາລະນາ ວ່າ ເປັນ ເນື້ອທີ່ປູກພືດ. ໃຫ້ເບິ່ງຕາຕະລາງ 3.1 ສຳລັບ ພືດໄດ້ຄວນ ລາຍງານ ໃນແຕ່ລະ ລະດູການ.

**ຄຳຖາມ 11, 12,13**

ຄຳຖາມເລົ່ານີ້ ຖາມ ກ່ຽວກັບ ແຕ່ລະ ຊະນິດພືດລົ້ມລຸກທີ່ ປູກ ໃນລະດູຝົນ 2010. ໃຫ້ບັນທຶກ ໜຶ່ງພືດ ໃນ ແຕ່ລະແຖວ. ນຳໃຊ້ວິທີການສອບຖາມຢ່າງເປັນລະບົບສ້າງຄວາມໝັ້ນໃຈວ່າ ພວກt5ທ່ານໄດ້ ບັນຈຸ ທຸກພືດ ທີ່ ຄົວເຮືອນໄດ້ປູກຜ່ານມາ. ວິທີການນຶ່ງ ອາດ ຖາມ ໄປ ຕາມ ແຕ່ລະຕອນດິນ.

| Q11 | | Q12 | | Q13 |
|---|---|---|---|---|
| <u>ໃນລະດູຝົນປີ 2010</u> ມີພືດລົ້ມລຸກຊະນິດໃດແດ່? | | ເນື້ອທີ່ປູກພືດດັ່ງກ່າວມີຫຼາຍປານໃດ?<br>ລະບຸຕົວເລກຖ້າຫາກມີເນື້ອທີ່ຫຼາຍກວ່າ **0,01**ຮຕ ຫຼື **100**ມ$^2$ຂຶ້ນໄປ | | ເນື້ອທີ່ນ້ອຍ ປູກກະແຈກ ກະຈາຍ |
| ໃຫ້ລະບຸຊື່ພືດ | ACO | ຫົວໜ່ວຍທ້ອງຖິ່ນ | ເຮັກຕາ | *(ໝາຍ√ )* |
| | \| \| | | , | ☐ |
| | \| \| | | , | ☐ |
| | \| \| | | , | ☐ |

ອີງໃສ່ ບົດ 3.4 ເພື່ອສອບຖາມໄດ້ຂໍ້ມູນ ກ່ຽວກັບ ພືດລົ້ມລຸກ, ມີລາຍລະອຽດ ວ່າ ປູກພືດລະດູຝົນ, 2010 ມີຄວາມໝາຍ ແນວໃດ, ແລະ ລາຍຊື່ພືດທີ່ປູກ ໃນຊ່ວງໄລຍະດັ່ງກ່າວ.

ຂຽນລາຍລະອຽດທັງໝົດ ຂອງແຕ່ລະພືດ. ຫ້າມຈົດຂຽນ ຄຳວ່າ “ພືດຜັກ”; ພວກ ທ່ານ ຄວນ ແຍກ ຊື່ ແຕ່ລະປະເພດພືດຜັກ ແລະ ສະແດງ ຊື່ ຂອງມັນ ໃຫ້ເຫັນ ໃນແຕ່ລະແຖວ. ໃຫ້ອີງໃສ່ ບັນຊີລາຍຊື່ ພືກລົ້ມລຸກ ໃນເອກະສານຊ້ອນທ້າຍ 1, ຖ້າກໍລະນີ ພວກ ທ່ານ ບໍ່ມີຄວາມໝັ້ນໃຈລາຍລະອຽດກ່ຽວກັບພືດ. ໃຫ້ໝັ້ນໃຈວ່າ ພວກ ທ່ານ ໄດ້ລວມເອົາແລ້ວ:

- ພືດທີ່ປູກ ໃນ ເນື້ອທີ່ນ້ອຍໆ ຫຼື ປູກພືດກະແຈກກະຈາຍ;
- ພືດ ຊຶ່ງໄດ້ປູກແລ້ວ ແຕ່ບໍ່ໄດ້ ເກັບກ່ຽວ ເນື່ອງຈາກ ນ້ຳຖ້ວມ, ສັດຕູພືດ ຫຼື ເສຍຫາຍອື່ນໆ;
- ປູກພືດລະດູຝົນ ແມ່ນປູກໃນ ເນື້ອທີ່ດິນດຽວກັນ ກັບ ການປູກພືດໃນລະດູແລ້ງ (ປູກພືດ 2 ຄັ້ງ);
- ປູກປົນກັນ.

**ໃນຄຳຖາມ 12,** ໃຫ້ ບັນທຶກ ເນື້ອທີ່ປູກ ເປັນ ຫົວໜ່ວຍທ້ອງຖິ່ນ ຫຼື ເຮັກຕາ, ໂດຍນຳໃຊ້ ວິທີການ ທີ່ ຂຽນ ລະອຽດ ໃນ ຂໍ້ 5.8. ເນື້ອທີ່ ໃຫ້ອີງໃສ່ ເນື້ອທີ່ປູກ, ບໍ່ເອົາເນື້ອທີ່ເກັບກ່ຽວ. ຖ້າເນື້ອທີ່ປູກ ຫາກຕ່ຳກວ່າ 100 ແມັດມົນທົນ, ຂຽນ ເນື້ອທີ່ ໃນ ບ່ອນ ”ຫົວໜ່ວຍທ້ອງຖິ່ນ”, ຫ້ອງ “ຫົວໜ່ວຍ ເຮັກຕາ” ໃຫ້ ປະເປົ່າວ່າງ, ແລະ ໝາຍຕີນກາ ໃສ່ ຫ້ອງສີ່ຫຼ່ຽມ “ເນື້ອທີ່ນ້ອຍປູກກະແຈກກະຈາຍ” ຂອງ ຖັນ ຄຳຖາມ Q.13. ເນື້ອທີ່ ໃນ ຖັນ ຫົວໜ່ວຍທ້ອງຖິ່ນ ປົກກະຕິ ຈະ ແມ່ນເນື້ອທີ່ຂະໜາດນ້ອຍ (ຕົວຢ່າງ 10

ແມັດ ຄູນ 5 ແມັດ) ຫຼື " ປູກກະແຈກກະຈາຍ ". ຖ້າວ່າ ຄົວເຮືອນ ມີເນື້ອທີ່ ຫຼາຍກວ່າ 100 ແມັດມົນທົນ ທັງປູກພືດ ກະແຈກກະຈາຍບາງສ່ວນ, ໃຫ້ ຂຽນເນື້ອທີ່ ໃສ່ ຖັນທີ່ກ່ຽວຂ້ອງ ແລະ ໃຫ້ ໝາຍຕີນກາ ເຊັ່ນດຽວກັນ ໃສ່ ຫ້ອງສີ່ຫຼ່ຽມ "ເນື້ອທີ່ນ້ອຍ ປູກກະແຈກກະຈາຍ".

ຂໍ້ຄວນເອົາໃຈໃສ່ບັນທຶກແນວໃດ **<u>ປູກພືດສອງຄັ້ງ.</u>** ຖ້າ ດິນຕອນດຽວ ນຳໃຊ້ທັງສອງ ລະດູຝົນ ແລະ ລະດູແລ້ງ,

ໃຫ້ ບັນທຶກພືດລະດູຝົນ ໃນ ຄຳຖາມ Q11, Q12 ແລະ Q13 ແລະ ພືດລະດູແລ້ງ ໃນ ຄຳຖາມ Q14, Q15 ແລະ Q16. ໃນ ຄຳເວົ້າອື່ນເວົ້າວ່າ, ດິນຖືກບັນທຶກ 2 ຄັ້ງ, ຈົດໜຶ່ງຄັ້ງ ສຳລັບແຕ່ລະພືດ. ຖ້າ ຫາກ ມີ ການປູກພືດຫຼາຍຊະໜິດ ໃຫ້ຈົດລົງ ແຕ່ລະແຖວ ໃນ ຄຳຖາມ Q11, Q12 ແລະ Q13. ຖ້າມີກໍລະນີ, ຕົວຢ່າງ, ມີເນື້ອທີ່ດິນ 0,5 ເຮັກຕາ ໄດ້ ປູກເຂົ້າ 2 ເທື່ອ ໃນລະດູຝົນ, ໃຫ້ ຂຽນ ເນື້ອທີ່ 0,5 ເຮັກຕາ ລົງ ໃນ ສອງແຖວ ຕ່າງກັນ. ເກັບກ່ຽວຕໍ່ເນື່ອງກັນ ຈາກ ພືດດຽວຕາຍຕົວ, ເຊັ່ນ ອອ້ຍ, ບໍ່ແມ່ນ ປູກພືດ ສອງຄັ້ງ, ເນື້ອທີ່ ໃຫ້ ລາຍງານ ພຽງເປັນເນື້ອທີ່ ຄັ້ງດຽວເທົ່ານັ້ນ.

ປູກພືດປົນກັນ ແມ່ນພືດ ປູກເວລາດຽວໃນດິນພື້ນດຽວ, ຢ່າງໃດຢ່າງນຶ່ງ ເຊັ່ນ ປູກພືດປົນເປກັນ ຫຼື ປູກສະລັບ ວ່າງ ( ປູກພືດໜຶ່ງ ເປັນແຖວ ກັບ ພືດອື່ນໆ). ຕົວຢ່າງ ປູກພືດປົນກັນ, ຜົນບວກຂອງເນື້ອທີ່ ແຕ່ລະພືດ ຕ້ອງເທົ່າກັບ ເນື້ອທີ່ ຂອງ ຕອນດິນ ຊຶ່ງປູກພືກດັ່ງກ່າວ. ຍົກຕົວຢ່າງ, ຖ້າ ເນື້ອທີ່ 0,5 ເຮັກຕາ ປູກພືດປົນກັນ ລະຫວ່າງ ໝາກແຕງ ແລະໝາກເລັ່ນ, ເນື້ອທີ່ ໝາກແຕ່ງ ແລະ ເນື້ອທີ່ ໝາກເລັ່ນ ບວກກັນ ແລ້ວ ຕ້ອງເທົ່າກັບ 0, 5 ເຮັກຕາ. ໃຫ້ຄາດຄະເນເນື້ອທີ່ຂອງແຕ່ລະພືດທີ່ປູກໃຫ້ດີເທົ່າທີ່ເຮັດໄດ້. ທົນທາງໜຶ່ງ ໃຫ້ ອີງໃສ່ ປະລິມານແນວປູກຂອງແຕ່ລະພືດ ໃນການປູກພືດປົນກັນ; ແນວທາງອື່ນ ແມ່ນໃຫ້ ອີງໃສ່ ອັດຕາສ່ວນຂອງການປົກຫຸ້ມພືດ ແຕ່ລະຊະນິດໃນທີ່ດິນ ທີ່ປູກ. ພວກທ່ານຕ້ອງບັນທຶກພືດແຕ່ລະຊະໜິດ ແລະ ພ້ອມດ້ວຍ ເນື້ອທີ່ຂອງແຕ່ລະພືດ. ຈະຮັບບໍ່ໄດ້ ຖ້າບັນທຶກເນື້ອທີ່ "ປູກຜັກປົນກັນ" ເປັນຂໍ້ມູນນຶ່ງດຽວ. ຮັບບໍ່ໄດ້ ເຊັ່ນດຽວກັນຖ້າບັນທຶກ ພືດ ແຕ່ລະຊະໜິດແຍກອອກຈາກກັນ, ແຕ່ ພັດສະແດງຂໍ້ມູນເນື້ອທີ່ລວມເທົ່ານັ້ນ ຂອງ ການປູກພືດປົນເປກັນ.

ໜຶ່ງຊະນິດຂອງການປູກພືດ ປົນກັນ ແມ່ນບ່ອນທີ່ປູກພືດລົ້ມລຸກ ປົນກັບ ການປູກພືດຢືນຕົ້ນທີ່ປູກເປັນ ລະບຽບ.ໃນນີ້, ເນື້ອທີ່ພືດຍືນຕົ້ນ ຖືວ່າ ແມ່ນ ເນື້ອທີ່ສວນຂອງການປູກພືດຢືນຕົ້ນ (ໃນນີ້ໃຫ້ ບັນທຶກ ໃນ ຄຳຖາມ 19, 20 ແລະ 21), ) ສ່ວນເນື້ອທີ່ ປູກພືດລົ້ມລຸກ ແມ່ນຄາດຄະເນ ຊຶ່ງໄດ້ ອະທິບາຍ ລະອຽດໃນປະໂຍກວັກທີ່ຜ່ານມາ. ເນື້ອທີ່ປູກພືດລົ້ມລຸກເປັນສ່ວນເກີນ, ເນື້ອທີ່ລວມຂອງການປູກພືດປົນກັນ ຊຶ່ງລວມ ມີ ພືດລົ້ມລຸກ ແລະ ພືດຍືນຕົ້ນ ແມ່ນໃຫຍ່ກ່ວາເນື້ອທີ່ຂອງ ດິນຊຶ່ງປູກພືດດັ່ງກ່າວນັ້ນ.

ເນື້ອທີ່ພືດ ແມ່ນ ບັນຫາໜຶ່ງ ທີ່ສຳຄັນທີ່ສຸດ ໃນການເກັບກຳຂໍ້ມູນ ໃນການສຳຫຼວດສະຖິຕິ ແລະ ມັນຈຳ ເປັນທີ່ສຸດ ທີ່ຕ້ອງໄດ້ຂໍ້ມູນທີ່ຊັດເຈນ. ໃຫ້ອີງໃສ່ ຂໍ້ 5.9 ເພື່ອໄດ້ຂໍ້ມູນລະອຽດ ກ່ຽວກັບ ຈະໃຫ້ ຂໍ້ມູນເນື້ອ.ທີ່

**ຄຳຖາມ 14, 15, 16 ແລະ 17**

ຈຸດປະສົງຂອງຄຳຖາມນີ້ແມ່ນຊອກຮູ້ ຖ້າຄົວເຮືອນ/ການຄອງຄອງ ໄດ້ປູກພືດລົ້ມລຸກໃນະດູແລ້ງ 2010/11. ຖ້າຄຳຕອບ ແມ່ນ "ໄດ້ປູກ"ໃນ ຄຳຖາມ Q14, ໝາຍ ຕີນກາ ໃສ່ ຫ້ອງສີ່ຫຼ່ຽມທີ່ເໝາະສົມ ແລະ ສືບຕໍ່ ຖາມ ຄຳຖາມ ກ່ຽວກັບ

ແຕ່ລະດັ່ງກ່າວນັ້ນ ໃນ ຄຳຖາມ Q15, Q16 and Q17. ຖ້າ ຄຳຕອບ ແມ່ນ “ບໍ່ໄດ້ປູກ”, ຂ້າມໄປຫາ ຄຳຖາມ Q18 ເພື່ອ ຖາມ ກ່ຽວກັບ ພືດຢືນຕົ້ນ.

ໃຫ້ອີງໃສ່ ເນື້ອໃນ ຂໍ້ 3.4 ເພື່ອໄດ້ຂໍ້ມູນລະອຽດ ກ່ຽວກັບ ພືດລົ້ມລຸກ, ອະທິບາຍລະອຽດ ຄວາມໝາຍ ຂອງ ຄຳວ່າ ປູກພືດລົ້ມລຸກ **ລະດູແລ້ງໃນສົກປີ 2010/11,** ແລະ ບັນຊີພືດຕົ້ນຕໍທີ່ປູກ ໃນຊ່ວງລະດູດັ່ງກ່າວນັ້ນ. ໃຫ້ ອີງໃສ່ ຫົວຂໍ້ກ່ຽວກັບ ພືດລະດູຝົນ ທີ່ສະເໜີຂ້າງເທິງ ກ່ຽວກັບ ການລາຍງານດ້ານເນື້ອທີ່.

## ຄຳຖາມ 18. ປະຈຸບັນ ຄົວເຮືອນນີ້ ມີ ຕົ້ນໄມ້ໃຫ້ໝາກ ຫຼື ພືດຢືນຕົ້ນບໍ່?

ຈຸດປະສົງຂອງຄຳຖາມນີ້ ແມ່ນ ຊອກຮູ້ ຖ້າ ຄົວເຮືອນ/ຜູ້ຄອບຄອງ ມີ ຕົ້ນໄມ້ໃຫ້ໝາກ ຫຼື ພືດຢືນຕົ້ນອື່ນໆ. ຖ້າ ຄຳຕອບ ແມ່ນ “ ມີ ”, ໃຫ້ໝາຍ ຕິກກາ (✓) ໃສ່ຫ້ອງສີ່ຫຼ່ຽມທີ່ເໝາະສົມ ແລະ ສືບຕໍ່ ຖາມ ຄຳຖາມ ກ່ຽວກັບ ແຕ່ລະ ຊະນິດພືດ ໃນ ຄຳຖາມ Q19, Q20 ແລະ Q21. ຖ້າ ຄຳຕອບ ແມ່ນ “ບໍ່ມີ”, ບໍ່ມີ ຄຳຖາມ ຖາມຕື່ມ.

ໃຫ້ອີງໃສ່ ເນື້ອໃນຂອງ ຂໍ້ 3.5 ເພື່ອໄດ້ ຂໍ້ມູນລະອຽດ ກ່ຽວກັບ ພືດຢືນຕົ້ນ.

**Q18 ປະຈຸບັນຄົວເຮືອນຂອງທ່ານມີພືດຢືນຕົ້ນບໍ່?**

*ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*

ມີ ☐ 1

ບໍ່ມີ ☐ 2 ➡ *ໄປຫາຄຳຖາມQ22*

*ທີ່ປູກເປັນລະບຽບ, ເປັນສວນ ສາມາດຄິດໄລ່ເນື້ອທີ່ໄດ້, ແລະ ປູກກະແຈກກະ ຈາຍມີເນື້ອທີ່ຂະໜາດນ້ອຍ. ບໍ່ລວມໄມ້ປູກເປັນປ່າ ນອກຈາກຕົ້ນຢາງພາລາ*

## ຄຳຖາມ 19, 20 ແລະ 21

ຄຳຖາມເຫຼົ່ານີ້ ຖາມ ກ່ຽວກັບ ພືດຢືນຕົ້ນທີ່ມີປະຈຸບັນ ໃນການຄອບຄອງເຮັດກະສິກຳ ໃນມື້ເດີນສຳຫຼວດ. ເອກະສານ ຊ້ອນທ້າຍ 2 ບັນຊີລາຍຊື່ ພືດຢືນຕົ້ນ ທີ່ ນິຍົມປູກຫຼາຍ.

ນຳໃຊ້ວິທີການເຂົ້າຫາບັນຫາຢ່າງເປັນລະບົບ ເພື່ອ ແນ່ໃຈວ່າ ໄດ້ລວມເອົາ ທຸກຊະນິດພືດຢືນຕົ້ນທີ່ປູກ ຂອງຄົວ ເຮືອນ/ ຜູ້ຄອບຄອງ. ໃຫ້ຂຽນລາຍລະອຽດຄົບຖ້ວນຂອງແຕ່ລະພືດ. ບໍ່ຄວນຂຽນແບບງ່າຍດາຍ “ຕົ້ນໄມ້ໃຫ້ໝາກ”, ພວກທ່ານ ຕ້ອງ ແຍກ ແຕ່ລະຊະນິດຂອງຕົ້ນໄມ້ໃຫ້ໝາກ ແລະ ຂຽນລົງ ຈະແຈ້ງ ໃນແຕ່ລະແຖວ.

| Q19 | | Q20 | | | Q21 |
|---|---|---|---|---|---|
| **ມີພືດຢືນຕົ້ນຊະນິດໃດແດ່?** | | **ເນື້ອທີ່ປູກພືດຢືນຕົ້ນມີຫຼາຍປານໃດ?** ລະບຸຕົວເລກຖ້າຫາກມີເນື້ອທີ່ຫຼາຍກວ່າ **0,01**ຮຕ ຫຼື **100**ມ²ຂຶ້ນໄປ | | | ເນື້ອທີ່ນ້ອຍ ປູກກະແຈກ ກະຈາຍ *(ໝາຍ✓)* |
| ໃຫ້ລະບຸຊື່ແຈ້ງ | **ACO** | ຫົວໜ່ວຍທ້ອງຖິ່ນ | **Q20a** (ຮຕ) ເນື້ອທີ່ທັງໝົດ | **Q20b** (ຮຕ) ເນື້ອທີ່ໃຫ້ຜົນ | |
| | \| \| | | , | , | ☐ |
| | \| \| | | , | , | ☐ |
| | \| \| | | , | , | ☐ |

ບາງພືດຢືນຕົ້ນ ໄດ້ປູກເປັນລະບຽບ ຫຼື ເປັນສວນ; ຕາງໄປກວ່ານັ້ນ ປະກອບມີ ການປູກຕົ້ນໄມ້ ກະແຈກ ກະຈາຍ ອ້ອມແອ້ມ ການຄອບຄອງ. ການ**<u>ປູກເປັນສວນ</u>** ແມ່ນ ສະຖານທີ່ທີ່ປູກຕົ້ນໄມ້ ແບບເປັນລະບົບ ຫຼື ມີຄວາມໜາແໜ້ນ ພໍທີ່ຈະສາມາດວັດແທກເນື້ອທີ່ໄດ້. ຖ້າ ໄລຍະຫ່າງ ລະຫວ່າງ ຕົ້ນໄມ້ທີ່ປູກ ຫາກ ຫ່າງ ເກີນໄປ ກວ່າ ການປູກ ແບບປົກກະຕິ, ໃຫ້ຖື ວ່າເປັນການປູກແບບກະແຈກກະຈາຍ.

ສຳລັບການປູກເປັນສວນ ຫຼື ປູກເປັນລະບຽບ, ໃຫ້ ບັນທຶກເນື້ອທີ່ ໃສ່ຄຳຖາມ Q20 ໃນຫົວໜ່ວຍທ້ອງຖິ່ນ ຫຼື ເຮັກຕາ, ນຳໃຊ້ ວິທີການ ທີ່ລະບຸລະອຽດແລ້ວ ໃນ ຂໍ້ 5.8. ສຳລັບການປູກແບບ ກະແຈກກະຈາຍ ໃນ ຄຳຖາມ ທີ່ 21 ( ຫຼື ເນື້ອທີ່ ຊຶ່ງປູກນ້ອຍກວ່າ 100 ແມັດມົນທົນ), ໃຫ້ ປະຫ້ອງຫົວໜ່ວຍເນື້ອທີ່ “ເຮັກຕາ” ແລະ ໃຫ້ໝາຍ ຕິກກາ (✓) ໃສ່ ຫ້ອງສີ່ຫຼ່ຽມ ຂອງຖັນ “ເນື້ອທີ່ນ້ອຍ ຫຼື ປູກກະແຈກກະຈາຍ”. ຖ້າ ມີການປູກ ທັງສອງ ປູກເປັນສວນ ແລະ ປູກກະແຈກກະຈາຍ, ໃຫ້ບັນທຶກເນື້ອທີ່ຕາມວິທີການປົກກະຕິ ແລະ ໝາຍຕິກກາ (✓) “ ເນື້ອທີ່ນ້ອຍ ຫຼື ກະແຈກກະຈາຍ” ເຊັ່ນດຽວກັນ.. ໃຫ້ເອົາໃຈໃສ່ ພິເສດ ເພື່ອ ເອົາທຸກ ພືດທີ່ປູກກະແຈກກະຈາຍ ເພາະ ມັນງ່າຍ ຕໍ່ ການລືມຂໍ້ມູນດັ່ງກ່າວນີ້.

<u>ການປູກປົນກັນ</u> ຂອງ ພືດຢືນຕົ້ນ ແມ່ນ ນິຍົມຫຼາຍທົ່ວໄປ. ໃນນີ້, ຜົນບວກຂອງເນື້ອທີ່ ແຕ່ລະ ຊະນິດພືດ ຕ້ອງເທົ່າກັບເນື້ອທີ່ຂອງການປູກຕົ້ນໄມ້. ຄາດຄະເນເນື້ອທີ່ ຂອງ ແຕ່ລະພືດ ແມ່ນອີງໃສ່ ອັນຕາສ່ວນ ຂອງຕົ້ນໄມ້ທີ່ປູກ ແຕ່ລະ ຊະນິດ. ໃຫ້ບັນທຶກຊື່ ແຕ່ລະຊະນິດພືດ ແລະ ເນື້ອທີ່ຂອງມັນ. ຮັບບໍ່ໄດ້ທີ່ຂຽນ ຊື່ ພືດດຽວ ຂອງ ການປູກພືດປົນກັນ ເຊັ່ນ “ປູກຕົ້ນໄມ້ໃຫ້ໝາກປົນກັນ”. ຮັບບໍ່ໄດ້ເຊັ່ນດຽວກັນ ທີ່ ບັນທຶກ ຂຽນຊື່ ພືດຢືນຕົ້ນ ລະອຽດ ແຕ່ ເນື້ອທີ່ປູກພືດຢືນຕົ້ນພັດລວມກັນ.

ຖ້າ ໄດ້ປູກພືດລົ້ມລຸກໃນເນື້ອທີ່ສວນຂອງພືດຢືນຕົ້ນ, ເນື້ອທີ່ ຂອງ ພືດຢືນຕົ້ນ ແມ່ນເນື້ອທີ່ ຂອງຕົ້ນໄມ້. ( ໃຫ້ ອີງໃສ່ເອກະສານແນະນຳ ສຳລັບ ຄຳຖາມ Q.11, Q.12 ແລະ Q.13 ສຳລັບລາຍລະອຽດ ກ່ຽວກັບການຄາດຄະເນ ເນື້ອທີ່ຂອງພືດລົ້ມລຸກໃນສະຖານະການແບບນີ້.)

## ຄຳຖາມ 22, 23. ປະຈຸບັນ ຄົວເຮືອນນີ້ໄດ້ລ້ຽງສັດຈຳນວນເທົ່າໃດ?

ໃຫ້ ຖາມ ກ່ຽວກັບ ຈຳນວນ ສັດລ້ຽງ ແລະ ສັດປີກແຕ່ລະປະເພດ ແລະ ໃຫ້ບັນທຶກ ຄຳຕອບ ໃນ ຫ້ອງສີ່ຫຼ່ຽມ ທີ່ ຈັດໄວ້. ສຳລັບສັດລ້ຽງ ຫຼື ສັດປີກ ອື່ນໆ, ໃຫ້ ລະບຸຊື່ ແຈ້ງ- ຕົວຢ່າງ “ມ້າ” ແລະ ຂຽນຈຳນວນ ໃສ່ ຫ້ອງສີ່ຫຼ່ຽມ ທີ່ ຈັດໄວ້ໃຫ້.

ສຳລັບຄວາມໝາຍ ລະອຽດ ລ້ຽງສັດປະເພດໃດແດ່, ໃຫ້ອີງໃສ່ ຂໍ້ 3.6. ໃຫ້ລາຍງານ ຈຳນວນ ສັດ ໃນມື້ ເດີນສຳຫຼວດ. ໃຫ້ ຂຽນ “0” ໃນ ຫ້ອງສີ່ຫຼ່ຽມ ຖ້າ ບໍ່ມີ ສັດ.

**Q22** ປະຈຸບັນທ່ານໄດ້ລ້ຽງສັດຊະນິດຕ່າງໆຫຼາຍປານໃດ?

1 ລ້ຽງງົວທັງໝົດຈັກໂຕ? → [ ] ໂຕ

2 ລ້ຽງຄວາຍທັງໝົດຈັກໂຕ? → [ ] ໂຕ

**Q23** ຄົວເຮືອນຂອງທ່ານຍັງໄດ້ລ້ຽງສັດ ແລະ ສັດປີກອື່ນໆອີກບໍ່? (ໃຫ້ລະບຸຊື່ ແລະ ຈຳນວນ) **ACO**

________________ ຈຳນວນຈັກໂຕ? → [ ] ໂຕ [ ]

________________ ຈຳນວນຈັກໂຕ? → [ ] ໂຕ [ ]

## ຄຳຖາມ 24, 25

ຈຸດປະສົງຂອງຄຳຖາມນີ້ ແມ່ນໃຫ້ຮູ້ ວ່າ ຜົນຜະລິດ ນຳໃຊ້ ຄືແນວໃດ ແລະ ສາມາດຮູ້ໄດ້ຄວາມສຳຄັນ ຂອງ ເສດຖະກິດກຸ້ມຕົນເອງ ແລະ ເສດຖະກິດເປັນສິນຄ້າແນວໃດ. ຄຳຖາມມັນກ່ຽວຂ້ອງ ກັບ ການຂາຍ ຜົນຜະລິດກະສິກຳ ລວມມີ ພືດ, ສັດລ້ຽງ,

ການລ້ຽງສັດນ້ຳ ແລະ ກິດຈະກຳກະສິກຳອື່ນໆ ສະເພາະ. ຂາຍ ໝາຍເຖິງ ຂາຍ ເພື່ອໄດ້ເງິນ. ການແລກປ່ຽນຜະ ລິດຕະພັນອື່ນ (ແລກປ່ຽນສິນຄ້າດ້ວຍກັນ) ຈະບໍ່ຖືວ່າເປັນການຂາຍ.

| | | | |
|---|---|---|---|
| **Q24 ເປົ້າໝາຍຕົ້ນຕໍຂອງຜົນຜະລິດພືດ-ລ້ຽງສັດແມ່ນເພື່ອຫຍັງ?** | | | |
| ***ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*** | <u>ເພື່ອຂາຍ</u> | **1** | ➡ *ໄປຫາຄຳຖາມQ26* |
| | <u>ເພື່ອຊົມໃຊ້ຄົວເຮືອນ</u> | **2** | |
| **Q25 ຄົວເຮືອນຂອງທ່ານໄດ້ຂາຍຜົນຜະລິດພືດ-ສັດລ້ຽງໃດນຶ່ງບໍ່?** | | | |
| ***ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)*** | <u>ໄດ້ຂາຍ</u> | **1** | |
| | <u>ບໍ່ໄດ້ຂາຍ</u> | **2** | |

ຈຸດປະສົງ ຂອງຄຳຖາມ Q.24 ແມ່ນ ໄດ້ກຳນົດເປົ້າໝາຍນຳໃຊ້ຜົນຜະລິດກະສິກຳ. ໃຫ້ໝາຍ ຕົນກາ (✓)ໃສ່ ໜຶ່ງໃນ ສອງຫ້ອງສີ່ຫຼ່ຽມ "ຂາຍ"; ຫຼື "ເພື່ອຊົມໃຊ້ຄົວເຮືອນ". ຕົ້ນຕໍ ຂອງຄຳຖາມ 24 ແມ່ນ ໄດ້ຕົວຊີ້ບອກ ຈະແຈ້ງຂອງ ການສົ່ງເສີມ ຄົວເຮືອນໃດ ເຂົ້າຮ່ວມໃນເສດຖະກິດການຕະຫຼາດ. ທີ່ຄົວເຮືອນ ຂາຍບາງຜະລິດຕະພັນ ແລະ ນຳໃຊ້ ສ່ວນເຫຼືອ ເພື່ອການ ຊົມໃຊ້ຄົວເຮືອນ, ຈຸດປະສົງຕົ້ນຕໍ ມີ ສອງຄຳຕອບ ຄື ຊົມໃຊ້ໃນຄົວເຮືອນ ຫຼື ຂາຍເອົາເງິນເປັນສັນຍາຫຼັກ ຂອງການຜະລິດ ກະສິກຳຂະໜາດໃຫຍ່. ການຈັບ ຈ່າຍການຜະລິດກະສິກຳໃນທາງອື່ນ ຍົກຕົວຢ່າງ, ແລກປ່ຽນ ວັດຖຸສິນຄ້າອື່ນ, ຈ່າຍຄ່າ ແຮງງານ, ສົ່ງໄປໃຫ້ ສະມາຊິກຄົວເຮືອນ, ຂອງຂວັນ, ຫຼື ຈ່າຍ ພາສີອາກອນທັງໝົດ ຖືວ່າ ບໍ່ແມ່ນ ໃນການຕີລາຄາເປົ້າໝາຍ ຕົ້ນຕໍ ຂອງການຜະລິດ.

ຈຸດປະສົງຂອງ ຄຳຖາມ Q.25 ແມ່ນກຳນົດ ຜະລິດກະສິກຳໄດ້ຂາຍ ຫຼື ບໍ່, ເຖິງແມ່ນວ່າ ກິດຈະກຳ ກະສິກຳ ສ່ວນໃຫຍ່ ໄດ້ຂາຍເອົາເງິນ, ເຖິງວ່າ ກິດຈະກຳກະສິກຳຕົ້ນຕໍ ແມ່ນ ເພື່ອຊົມໃຊ້ໃນຄົວເຮືອນ. ໃຫ້ໝາຍຕົນກາ "ໄດ້ຂາຍ" ຫຼື "ບໍ່ໄດ້ຂາຍ".

## ຄຳຖາມ 26: ມີຈຳນວນຈັກຄົນ ອາໃສ ຢູ່ ໃນຄົວເຮືອນ?

ຈຸດປະສົງຂອງຄຳຖາມນີ້ ແມ່ນ ກຳນົດໃຫ້ຮູ້ວ່າ ຢູ່ຮ່ວມກັນມີຈັກຄົນໃນຄົວເຮືອນ. ຂະໜາດຂອງຄົວເຮືອນ ແມ່ນ ຈຳນວນ ບຸກຄົນ ໂດຍປົກກະຕິ ໄດ້ ອາໃສ ຢູ່ ໃນຄົວເຮືອນ ຫຼາຍ ກວ່າ 6 ເດືອນ. ເພື່ອຮູ້ລາຍລະອຽດ ໃຫ້ ເບິ່ງ ຂໍ້ 3.1

| | | |
|---|---|---|
| **Q26 ປະຈຸບັນຄົວເຮືອນຂອງທ່ານຢູ່ຮ່ວມກັນທັງໝົດມີຈັກຄົນ?** | ☐ | ຄົນ |

## ຄຳຖາມ 27 ຫົວໜ້າຄົວເຮືອນ ແມ່ນ ເຜົ່າໃດ?

ໃຫ້ຂຽນຊື່ເຜົ່າ ຂອງ ຫົວໜ້າ ຄົວເຮືອນໃສ່ ບ່ອນທີ່ ກຽມໄວ້ໃຫ້. ຫົວໜ້າຄົວຮືອນແມ່ນບຸກຄົນ ທີ່ຮັບຮອງ ໂດຍ ຄົວເຮືອນ. **ລາຍລະອຽດຊື່ຊົນເຜົ່າໃຫ້ເບິ່ງເອກະສານຊ້ອນທ້າຍ 5**

## ຄຳຖາມ 28: ເພດຂອງຜູ້ເປັນຫົວໜ້າ ຄົວເຮືອນ ແມ່ນຫຍັງ?

ໃຫ້ໝາຍຕົນກາ (✓)ໃສ່ຫ້ອງສີ່ຫຼ່ຽມ "ຊາຍ" ຫຼື "ຍິງ" ອີງຕາມ ເພດຂອງຜູ້ເປັນຫົວໜ້າ ຄົວເຮືອນ. ຖ້າບຸກຄົນມີໜ້າ ໃຫ້ເຫັນ, ພວກ ທ່ານ ສາມາດ ຕອບຄຳຖາມແທນໄດ້ ຈາກການສັງເກດ ຂອງ ພວກທ່ານ ເອງ. ບໍ່ໃຫ້ ຄາດເດົາລ່ວງໜ້າ

ເພດຂອງຫົວໜ້າຄົວເຮືອນ, ຈາກ ຊື່ ເນື່ອງຈາກວ່າ ບາງຄັ້ງ ຊື່ ຜູ້ ຊາຍ ແລະ ຜູ້ຍິງ ຄ້າຍຄືກັນ.

## ຄຳຖາມ 29: ອາຍຸຂອງຫົວໜ້າຄົວເຮືອນເທົ່າໃດ?

ໃຫ້ຂຽນ ຄຳຕອບ ອາຍຸ ເຕັມ. ຖ້າ ບໍ່ຮູ້ອາຍຸ, ພວກທ່ານ ຈຳເປັນ ຕ້ອງໄດ້ ສອບສວນຫາຄວາມຈິງ. ບາງຄັ້ງ, ບຸກຄົນ ສາມາດຈື່ ເຫດການ ເວລາ ຜູ້ກ່ຽວເກີດ ແລະສາມາດຊ່ວຍໃນການຄາດຄະເນອາຍຸ.ນີ້ສາມາດເຮັດໄດ້ ໂດຍອາໃສ່ ປະຕິທິນ ຂອງ ເຫດການສຳຄັນ ໃນເອກກະສານຊ້ອນທ້າຍ 4. ບາງຄັ້ງ, ບຸກຄົນ ຮູ້ ປີເກີດ ໂດຍນຳໃຊ້ ປີ ລາວ ຫຼື ປະຕິທິນ ພຸດທະສາດສະໜາ ຫຼື ປະຕິທິນ ດວງອາທິດ. ໃນກໍລະນີເລົ່ານີ້, ນຳໃຊ້ ເອກະສານຊ້ອນທ້າຍ 4 ເພື່ອຊ່ວຍກຳນົດອາຍຸຂອງຄົນ.

| Q29 ອາຍຸຂອງຫົວໜ້າ ຄົວເຮືອນເທົ່າໃດ? | | |
|---|---|---|
| ອາຍຸເຕັມ: | [ ] | ປີ |

## ຄຳຖາມ 30: ຄົວເຮືອນໄດ້ມີການຫາປາ ຜ່ານມາບໍ່?

ຈຸດປະສົງຂອງຄຳຖາມນີ້ ແມ່ນກວດສອບ ກິດຈະກຳ ດ້ານການປະມົງ ອື່ນອີກວ່າ ການລ້ຽງສັດນ້ຳ. ໃຫ້ລາຍງານ ກິດຈະກຳການປະມົງໃນຊ່ວງ 12 ເດືອນຜ່ານມາ.

| Q30 ຄົວເຮືອນຂອງທ່ານໄດ້ຫາປາຈາກແຫຼ່ງນ້ຳທຳມະຊາດບໍ່? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍປ) | ໄດ້ຫາ | [ ] | 1 |
| | ບໍ່ໄດ້ຫາ | [ ] | 2 |

ການຫາປາ ກ່ຽວພັນ ການຈັບ, ດັກ ຫຼື ລໍ້ ສັດນ້ຳອື່ນໃນທຳມະຊາດ. ການຫາປາ ຈະເຫັນໃນ ແມ່ນ້ຳ, ອ່າງເກັບນ້ຳ, ຫ້ວຍ, ບໍ່ນ້ຳ, ຄອງຊົນລະປະທານ ແລະ ອື່ນໆ. ມີການ ແຕກຕ່າງກັນຈະແຈ້ງ ລະຫວ່າງ ການຫາປາ ແລະ ການລ້ຽງ ສັດນ້ຳ. ການລ້ຽງສັດນ້ຳ ແມ່ການເພະລ້ຽງສັດນ້ຳ ປະເພດ ປາ, ກົບ ແລະ ກຸ້ງ. ຄຸນລັກສະນະ ທີ່ສຳຄັນ ຂອງການຫາປາ ຊຶ່ງ ປາ ຫຼື ສັດນ້ຳອື່ນໄດ້ ຖືກຂຸດຄົ້ນຈັບ, ຊຶ່ງມີລັກສະນະ ກົງກັນຂ້າມກັບການລ້ຽງສັດນ້ຳ ທີ່ມີຄົວເຮືອນເປັນເຈົ້າ ຂອງ ກຳມະສິດ.

## ຄຳຖາມ 31: ແຫຼ່ງລາຍຮັບຕົ້ນຕໍຂອງຄົວເຮືອນໄດ້ມາຈາກໃສ?

ຄຳຖາມນີ້ ຖາມ ກ່ຽວກັບ ແຫຼ່ງລາຍຮັບຕົ້ນຕໍຂອງຄົວເຮືອນ. ລາຍຮັບ ໝາຍເຖິງ ລາຍຮັບທີ່ເປັນ ເງິນ ແລະ ບໍ່ ເປັນເງິນ ຂອງຄົວເຮືອນ, ລວມທັງວຽກການຜະລິດກະສິກຳ ເພື່ອຊົມໃຊ້ພາຍໃນ. ຍົກບາງຕົວຢ່າງ ຈະ ຕອບຄຳຖາມເລົ່ານີ້ ແນວໃດ?

- ຖ້າຄົວເຮືອນຜະລິດເຂົ້າຕົນຕໍເພື່ອຊົມໃຊ້ກິນເອງ ແລະ ມີບາງແຫຼ່ງລາຍຮັບອື່ນເລັກນ້ອຍ ທີ່ເປັນ ເງິນສົດ, ແຫຼ່ງລາຍຮັບຕົ້ນຕໍ ແມ່ນ " ພືດກະສິກຳ".
- ຖ້າຄົວເຮືອນໄດ້ປູກພືດ ແລະ ບາງສະມາຊິກ ຄົວເຮືອນໄດ້ຮັບຄ່າຈ້າງ, ແຫຼ່ງລາຍຮັບຕົ້ນຕໍ ແມ່ນ "ພືດກະສິກຳ" ຫຼື "ອື່ນໆ" ຂຶ້ນກັບ ສອງ ຢ່າງ ຄວນພິຈາລະນາ ຕໍ່ ລາຍຮັບຂອງຄົວເຮືອນ.

| Q31 ແຫຼ່ງລາຍຮັບຕົ້ນຕໍຂອງຄົວເຮືອນທ່ານໄດ້ມາຈາກໃສ? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍປ) | ປູກພືດ | [ ] | 1 |
| | ລ້ຽງສັດ | [ ] | 2 |
| | ລ້ຽງປາ | [ ] | 3 |
| | ຫາປາ | [ ] | 4 |
| | ປ່າໄມ້ (ໄມ້ທ່ອນ) | [ ] | 5 |
| | ເຄື່ອງປ່າຂອງດົງ | [ ] | 6 |
| | ອື່ນໆ | [ ] | 7 |

- “ອື່ນໆ” ລວມໝົດທຸກກິດຈະກຳ ທີ່ບໍ່ກ່ຽວຂ້ອງ ກັບ ພືດ, ສັດລ້ຽງ, ການປະມົງ ແລະ ປ່າໄມ້. ມັນ ປະກອບ ດ້ວຍ ກິດຈະກຳທີ່ເປັນ ທຸລະກິດຂອງ ຄົວເຮືອນ ຊຶ່ງ ບໍ່ແມ່ນ ຄົວເຮືອນກະສິກຳ ແລະ ເຮັດວຽກ ເປັນ ນາຍຈ້າງ ຂອງ ພາກສ່ວນ ລັດຖະບານ ຫຼື ບໍລິສັດເອກະຊົນ.

## ຄຳຖາມ 32, 33:

ຄຳຖາມ 32 ແລະ 33 ຖາມຄົວເຮືອນ ມີ ຫຼື ບໍ່ ສອງລາຍການທີ່ສຳຄັນເຊັ່ນກົນຈັກກະສິກຳໃນນັ້ນລົດໄຖນາ ທຸກຊະໜິດ ແລະ ຈັກສູບນ້ຳ ເຊັ່ນດຽວກັນ. ໃຫ້ ໝາຍ ຕີນກາ ໃສ່ຫ້ອງສີ່ຫຼ່ຽມ “ມີ” ຫຼື “ບໍ່ມີ” ຂອງ ແຕ່ລະຄຳຖາມ. ໄລຍະເວລາອ້າງອີງແມ່ນມື້ເດີນສຳຫຼວດ. ລາຍງານ “ມີ ” ຖ້າ ຄົວເຮືອນ ມີກົນຈັກເປັນ ຂອງ ຕົນເອງ ແລະ ກຽມ ພ້ອມ ໃຊ້ ໄດ້, ເຖິງວ່າ ຊາວກະສິກອນ ບໍ່ໄດ້ນຳ ໃຊ້ມັນກໍ່ຕາມ.

| Q32 ຄົວເຮືອນຂອງທ່ານມີລົດໄຖນາເປັນຂອງຕົນເອງບໍ່? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ມີ | ☐ | 1 |
| | ບໍ່ມີ | ☐ | 2 |
| **Q33 ຄົວເຮືອນຂອງທ່ານມີຈັກສູບນ້ຳສຳລັບການຜະລິດກະສິກຳ ເປັນຂອງຕົນເອງບໍ່?** | | | |
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ມີ | ☐ | 1 |
| | ບໍ່ມີ | ☐ | 2 |

ສຳລັບ ຄຳຖາມ Q33, ຈັກສູບນ້ຳ ຕ້ອງນຳໃຊ້ຈຸດປະສົງໃນວຽກງານ ກະສິກຳເທົ່ານັ້ນ. ຄວນເອົາໃຈໃສ່ ອີກຕື່ມ ຊຶ່ງ ຄຳຖາມ ກ່ຽວພັນ ກົນຈັກ, ສະນັ້ນ ຈັກສູບນ້ຳ ໂດຍປົກກະຕິ ແລ່ນດ້ວຍນ້ຳມັນ ຫຼື ໄຟຟ້າ. ບໍ່ລວມເອົາ ສິ່ງປະດິດຂຶ້ນ ໂດຍອາໃສ ແຮງງານສັດ ຫຼື ແຮງງານຄົນ ເພື່ອດູດນ້ຳຊົນລະປະທານ.

## ຄຳຖາມ 34: ປະຈຸບັນຄົວເຮືອນ ຂອງ ທ່ານ ມີການຄອບຄອງດິນປ່າໄມ້ບໍ່?

ຄຳຖາມ Q34 ຖາມ ກ່ຽວກັບຄົວເຮືອນມີດິນ ປູກໄມ້ເປັນປ່າ ຫຼື ດິນປ່າໄມ້. ໃຫ້ ໝາຍ ຕີນກາ (✓) “ ມີ ” ຫຼື “ ບໍ່ມີ ”. ລວມເອົາພຽງດິນຕົນເອງຂອງຄົວເຮືອນ. ລວມທັງດິນ ປ່າໄມ້ ທຳມະຊາດ ແລະ ປ່າ ປູກ ທີ່ ເປັນຂອງຕົນເອງ. ບໍ່ ລວມເອົາ ປ່າໄມ້ ຂອງບ້ານ ຊຶ່ງປະຊາຊົນຊຸດຄົ້ນນຳໃຊ້.

| Q34 ປະຈຸບັນຄົວເຮືອນຂອງທ່ານມີການຄອບຄອງດິນປ່າໄມ້ ເປັນຂອງຕົນເອງບໍ່? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ✓) | ມີ | ☐ | 1 |
| | ບໍ່ມີ | ☐ | 2 |

<u>ດິນປ່າໄມ້</u> ໃຫ້ ນິຍາມວ່າ ເປັນດິນ ມີເຮືອນຍອດປົກຫຸ້ມ ຫຼາຍກວ່າ 10 ເປີເຊັນ ຂອງຕົ້ນໄມ້ ມີຂະໜາດຄວາມສູງ 5 ແມັດຂຶ້ນໄປ. <u>ດິນປ່າອື່ນໆ</u>, ຊຶ່ງແມ່ນດິນດ້ວຍ: (i) ມີເຮືອນຍອດປົກຫຸ້ມແຕ່ 5-10% ຂອງຕົ້ນໄມ້ ມີຂະໜາດຄວາມສູງ 5 ແມັດຂຶ້ນໄປ ເມື່ອມີອາຍຸ ແກ່; ຫຼື (ii) ມີເຮືອນຍອດປົກຫຸ້ມ ຫຼາຍກວ່າ 10% ເມື່ອ ມີອາຍຸແກ່ ມີຂະໜາດຄວາມສູງ 5 ແມັດ; ຫຼື (iii) ຕົ້ນໄມ້ຕະກຸນເຕັ້ຍ ຫຼື ພຸ່ມ ໄມ້ ປົກຫຸ້ມ ຫຼາຍກວ່າ 10%. ເນື້ອທີ່ ເປັນການຊົ່ວຄາວ ຂ້າງໃນຍັງບໍ່ມີຕົ້ນໄມ້ ແຕ່ ມີຄວາມຫວັງ ທັນເປັນ ປ່າໄມ້ ຕ້ອງລວມເອົາ ເຊັ່ນກັນ.

ບໍ່ຄວນສັບສົນ “ປ່າໄມ້ ແລະ ດິນປ່າໄມ້” ກັບ “ ດິນ ພືດຍືນຕົ້ນ”. ສວນຢາງພາລາ, ຕົ້ນປາມ, ແລະ ພືດຕະກຸນອາຫານ ຖືວ່າ ເປັນ ໄມ້ຍືນຕົ້ນ, ດ້ວຍເຫດນີ້, ໄມ້ໄຜ່, ໄມ້ ກອກ ໂອກ, ໄມ້ຫວິກ, ຫຼື ປູກຕົ້ນໄມ້ອື່ນທີ່ບໍ່ແມ່ນອາຫານ ຖືວ່າ ເປັນ ປ່າໄມ້ ແລະ ດິນປ່າໄມ້ ອື່ນໆ.

## 7.4 ຖ້າ ທ່ານບໍ່ມີບ່ອນຈົດກ່າຍຂໍ້ມູນພຽງພໍໃນຄຳຖາມ 11, 15, ຫຼື 19

ຖ້າບໍ່ມີບ່ອນພຽງພໍໃນການຈົດກ່າຍລາຍການພືດຕ່າງໆໃນຄຳຖາມທີ່ 11, 15 ຫຼື 19, ໃຫ້ໝາຍ (√)ໃສ່ຫ້ອງສີ່ຫຼ່ຽມເບື້ອງລຸ່ມເພື່ອສະແດງໃຫ້ເຫັນວ່າຍັງມີລາຍການພືດອື່ນໆອີກຕື່ມທີ່ຈະຈົດກ່າຍເຂົ້າ ແລະ ໃຫ້ ເອົາໃບສອບຖາມ F4 ຊຸດໃໝ່ມາຈົດເພີ້ມ. ຢູ່ໜ້າປົກຂອງແບບສອບຖາມໃໝ່,ໃຫ້ກ່າຍລະຫັດຄືນໃໝ່ໝົດ ແລະ ໃຫ້ໝາຍເຫດວ່າ ເປັນຕາຕະລາງສອບຖາມຄົວເຮືອນດຽວກັນ.

## 7.5 ພາຍຫຼັງສຳເລັດການສຳພາດຄົວເຮືອນ

ເວລາທີ່ ທ່ານ ສຳເລັດການຈົດກ່າຍ ໃບສອບຖາມ F4 ສຳລັບແຕ່ລະຄົວເຮືອນ/ຜູ້ຄອບຄອງ, ໃຫ້ກວດເບິ່ງຄືນໃບສອບຖາມທີ່ຈົດກ່າຍແລ້ວ ເຫັນວ່າຖືກຕ້ອງ ແລະຄົບຖ້ວນໝົດ. ການກວດກາ ເພື່ອຄວາມຖືກຕ້ອງແລະຄວາມສອດຄ່ອງຂອງຂໍ້ມູນ. ນັກກວດກາພາກສະໜາມ ຂອງ ທ່ານ ຈະໄດ້ກວດອີກຕື່ມ. ກ່ອນສົ່ງໃບສອບຖາມ ທ່ານບໍ່ຄວນລືມເຊັນ ເພື່ອເປັນການຢັ້ງຢືນວ່າ ທ່ານໄດ້ກວດເບິ່ງຖືກຕ້ອງຄົບຖ້ວນແລ້ວ.

**(ສຳລັບນັກເດີນສຳຫຼວດບ້ານຕົວແທນເທົ່ານັ້ນ)**

## 8. ວິທີການເລືອກຕົວແທນຈະເຮັດແນວໃດ?

*<u>ບາງຄັ້ງທ່ານອາດພົບເຫັນບ້ານທີ່ມີການປ່ຽນແປງ.</u>*

- <u>ຫາກບ້ານໄດ້ປ່ຽນຊື່ໃໝ່</u>, ການເກັບກຳຂໍ້ມູນແມ່ນໃຫ້ປະຕິບັດປົກກະຕິ. ໃຫ້ອະທິບາຍ ແລະ ບັນທຶກຊື່ບ້ານໃໝ່ໃສ່ ຕາຕະລາງຂຶ້ນບັນຊີຄົວເຮືອນ F1.

- <u>ຖ້າຫາກບ້ານໜຶ່ງໄດ້ຍົກຍ້າຍທີ່ຕັ້ງບ້ານໄປຮ່ວມກັບບ້ານອື່ນ,</u> ການສຳຫຼວດໃຫ້ເຮັດແບບປົກກະຕິ.

- <u>ຖ້າຫາກບ້ານແຍກອອກຈາກກັນເປັນ 2 ບ້ານ:</u> ບ້ານທີ່ 1 ໃຫ້ໃສ່ລະຫັດບ້ານເດີມ ແລະ ບ້ານທີ 2ໃຫ້ໃສ່ລະຫັດ "999" ໃຫ້ເກັບກຳທັງ 2 ບ້ານ, ໂດຍນຳໃຊ້ ຟອມ 1 ແລະ ຟອມ 3 ສຳລັບທຸກໆບ້ານ. ໃຫ້ບັນທຶກໝາຍເຫດ ແລະ ອະທິບາຍ ລະອຽດ ກໍລະນີທີ່ເກີດໃສ່ F1

  *ຕົວຢ່າງ. ບ້ານທີ່ມີ ລະຫັດ 032 ໄດ້ແຍກເປັນ 2 ບ້ານ. ບ້ານທຳອິດໃຫ້ຮັກສາລະຫັດເດີມ 032 ແລະ ບ້ານທີ 2 ໃຫ້ລະຫັດ 999 . ໃຫ້ເກັບກຳຂໍ້ມູນທັງສອງບ້ານ ໃຫ້ນຳໃຊ້ ຟອມ 1 ແລະ ຟອມ 3 ສຳລັບແຕ່ລະບ້ານ.*

- <u>ຖ້າຫາກບ້ານຮ່ວມເຂົ້າກັບບ້ານອື່ນ</u>, ໃຫ້ເກັບກຳຂໍ້ມູນເປັນບ້ານດຽວ

  *ຕົວຢ່າງ: ບ້ານລະຫັດ 032 ລວມເຂົ້າບ້ານລະຫັດ 033. ໃຫ້ເກັບກຳຂໍ້ມູນຄົວເຮືອນໃນບ້ານ 033 ລວມກັບບ້ານ 032 ນຳໃຊ້ ຟອມ 1 ແລະ F3 ຊຸດດຽວກັນ. ໃນຟອມ F1 ໃຫ້ອະທິບາຍ ວ່າບ້ານ 032 ຮ່ວມກັບບ້ານ 033 ແລະ ດຳເນີນຕາມປົກກະຕິ.*

- <u>ຖ້າ 2 ຫຼື ຫຼາຍບ້ານ ຮ່ວມເຂົ້າກັນເປັນບ້ານໜຶ່ງແລະ ຕັ້ງເປັນຊື່ໃໝ່,</u> ໃຫ້ໃສ່ລະຫັດບ້ານໃໝ່ນັ້ນ 999 ແລະ ໃຫ້ເກັບກຳຂໍ້ມູນເປັນບ້ານດຽວ

  *ຕົວຢ່າງ. ບ້ານລະຫັດ 031, 032 ແລະ 033 ຮ່ວມເຂົ້າກັນເປັນບ້ານໜຶ່ງແລະໃສ່ຊື່ໃໝ່, ໃຫ້ໃສ່ລະຫັດ 999. ແລະ ອະທິບາຍໃສ່ໃນຟອມ 1 ວ່າບ້ານດັ່ງກ່າວຮ່ວມເຂົ້າກັນເປັນບ້ານໃໝ່.*

**ຈະເຮັດຫຍັງແດ່ໃນການເລືອກຕົວແທນບ້ານທີ່ຮວມເຂົ້າກັນ ແລະ ແຍກອອກຈາກກັນ?**

- <u>ຖ້າຫາກບ້ານແຍກອອກຈາກກັນເປັນ 2 ບ້ານໃໝ່</u>:
  1. ຖ້າຫາກບ້ານບໍ່ຖືກເລືອກເປັນຕົວແທນ, ແຕ່ລະບ້ານໃໝ່ກໍ່ຈະບໍ່ເປັນບ້ານຕົວແທນ.
  2. ຖ້າຫາກບ້ານທີ່ຖືກເລືອກເປັນຕົວແທນ, ໃຫ້ເລືອກຄົວເຮືອນກະສິກຳທີ່ເປັນຕົວແທນ ບ້ານລະ 8

ຄົວເຮືອນ.

*ຕົວຢ່າງ ບ້ານທີ່ມີລະຫັດ 032 ໄດ້ແຍກອອກເປັນ 2 ບ້ານ.* ໃຫ້ເລືອກຄົວເຮືອນກະສິກຳທີ່ເປັນຕົວແທນ 8 ຄົວເຮືອນ ຈາກບ້ານທີ່ມີລະຫັດ *032 ແລະ 8 ຄົວເຮືອນຈາກບ້ານທີ 2 ທີ່ໃສ່ລະຫັດ 999.*

- ຖ້າຫາກບ້ານຮ່ວມເຂົ້າກັນກັບບ້ານອື່ນ:
  1. ຖ້າຫາກວ່າທັງ 2 ບ້ານບໍ່ຖືກເລືອກເປັນບ້ານຕົວແທນ, ສະແດງວ່າທັງ 2 ບ້ານບໍ່ເປັນບ້ານຕົວແທນ.
  2. ຖ້າ 1 ບ້ານເປັນບ້ານຕົວແທນ, ໃຫ້ປະຕິບັດແບບປົກກະຕິ.

     *ຕົວຢ່າງ: ບ້ານທີ່ມີລະຫັດ 031 (ບ້ານຕົວແທນ) ຮ່ວມກັບບ້ານທີ່ມີລະຫັດ 032. ບ້ານລະຫັດ 032 ກໍ່ຕ້ອງແມ່ນບ້ານຕົວແທນ ແລະ ປະຕິບັດປົກກະຕິເລືອກເອົາ ຄົວເຮືອນກະສິກຳ 16 ຄົວເຮືອນ..*
  3. ຖ້າທັງ 2 ບ້ານຖືກເລືອກເປັນບ້ານຕົວແທນໃນການສຳຫຼວດ ຈະລວມເຂົ້າກັນ ເປັນ 32 ຄົວເຮືອນຕົວແທນ.

     *ຕົວຢ່າງ: ບ້ານທີ່ມີລະຫັດ 031 (ບ້ານຕົວແທນ) ຮ່ວມເຂົ້າກັບບ້ານທີ່ມີລະຫັດ 032 (ບ້ານຕົວແທນ). ໃຫ້ເອົາບ້ານ ທີ່ມີລະຫັດ 032 ຄືເກົ່າ ແລະ ເລືອກເອົາ 32 ຄົວເຮືອນຕົວແທນ.*

- ຖ້າ 2 ຫຼື ຫຼາຍບ້ານຮ່ວມເຂົ້າກັນຕັ້ງເປັນບ້ານໃໝ່:
  1. ຖ້າຫາກບ້ານທັງໝົດບໍ່ຖືກເລືອກເປັນຕົວແທນ, ຖືວ່າເປັນບ້ານໃໝ່ໃຫ້ໃສ່ລະຫັດ 999 ນັ້ນ ບໍ່ເປັນບ້ານຕົວແທນ.
  2. ຖ້າຫາກບ້ານໃດໜຶ່ງ "x" ຖືກເລືອກເປັນບ້ານຕົວແທນ, ບ້ານທີ່ຮ່ວມເຂົ້າກັນຈະເລືອກເອົາ 16 ຄົວເຮືອນຕົວແທນຄືເກົ່າ.

     *ຕົວຢ່າງ: ບ້ານທີ່ມີລະຫັດ 031 (ບ້ານຕົວແທນ), ບ້ານທີ່ມີລະຫັດ 032 (ບ້ານຕົວແທນ) ລະບ້ານທີ່ມີລະຫັດ 033 (ບໍ່ເປັນບ້ານຕົວແທນ) ຮ່ວມເຂົ້າກັນ ແລະ ໄປຕັ້ງເປັນບ້ານໃໝ່ (ໃສ່ລະຫັດບ້ານເປັນ 999) ການເລືອຄົວເຮືອນຕົວແທນແມ່ນໃຫ້ກຳນົດເອົາ 32 ຄົວເຮືອນ.*

ຖ້າຫາກວ່າທ່ານມີຄວາມຫຍຸ້ງຍາກໃນການກຳນົດບ້ານ, ໃຫ້ຕິດຕໍ່ພົວພັນກັບນັກກວດກາຢ່າງຮີບດ່ວນ ເພື່ອແກ້ໄຂບັນຫາໃຫ້ທັນການ.

ພາຍຫຼັງສຳເລັດການສຳພາດແບບສອບຖາມຟອມ F4 ຢູ່ພາຍໃນບ້ານແລ້ວໃຫ້ບັນທຶກຂໍ້ມູນຈາກແບບສອບຖາມ F4 ໃສ່ຖັນທີ c4-c7 ໃນໜ້າປົກຂອງແບບຟອມ 1, ທ່ານຈະໄດ້ຄັດເລືອກເອົາຄົວເຮືອນຕົວແທນກະສິກຳ ເພື່ອຈະໄດ້ນຳໃຊ້ແບບສອບຖາມ F5 ສຳພາດຄົວເຮືອນ . ການຄັດເລືອກຕົວແທນແມ່ນຈະໄດ້ເລືອກຄົວເຮືອນກະສິກຳທີ່ໄດ້ລະບຸເຄື່ອງໝາຍ (✓) ໃນຖັນ c4. ການຄັດເລືອຕົວແທນແມ່ນໄດ້ນຳໃຊ້ຕາຕະລາງເລກສຸ່ມຈາກເອກະສານຊ້ອນທ້າຍ 6 ຂອງປື້ມຄູ່ມື ແລະ ໃຫ້ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

- <u>ຂັ້ນຕອນທີ 1</u>. ໃຫ້ໝາຍເລກໃສ່ຄົວເຮືອນທີ່ເປັນກະສິກຳໃນຖັນທີ 3 ໂດຍເລີ້ມແຕ່ 1, 2 .. ຈົນຮອດສຸດທ້າຍຂອງຄົວເຮືອນກະສິກຳທີ່ມີໃນບັນຊີ.
- <u>ຂັ້ນຕອນທີ 2</u>. ໃຫ້ນັບຄືນຄົວເຮືອນທີ່ແມ່ນກະສິກຳເຊິ່ງຖືກໝາຍຕົນກາ ວ່າມີຈຳນວນເທົ່າໃດ ແລ້ວໃຫ້ບັນທຶກຈຳນວນດັ່ງກ່າວໃສ່ຄຳຖາມ Q10 ໃນໜ້າປົກຂອງແບບສອບຖາມຟອມ 1.
- <u>ຂັ້ນຕອນ 3</u>. ໃຫ້ບັນທຶກໄລ່ຍະຫ່າງໃສ່ໃນ Q11 ໂດຍການເອົາ Q10 ຫານໃຫ້ Q5 ແລະ ໃຫ້ບັນທຶກເປັນເລກຖ້ວນ. ຖ້າຜົນຫານທ້າຍຈຸດເທົ່າ 0.5 ຂື້ນໄປແມ່ນໃຫ້ປັດເປັນເລກຖ້ວນຄ່າຖັດໄປ ແລະ ຖ້າກໍລະນີ້ 0.4 ລົງມາແມ່ນໃຫ້ຖືເອົາເລກຖ້ວນຄ່າເດີມ. ຕົວເລກໃນ Q11 ເອີ້ນວ່າໄລຍະຫ່າງ ລາຍລະອຽດໃຫ້ເບິ່ງຄົວຢ່າງລຸ່ມນີ້:

  *ຕົວຢ່າງ A. Q10=36 ແລະ Q5=16; Q10 ÷ Q5 = 2,25, ແມ່ນໃຫ້ເອົາ 2. ໃຫ້ບັນຖຶກ "2" ໃນ Q11.*

  *ຕົວຢ່າງ B. Q10=60 ແລະ Q5=16; Q10 ÷ Q5 = 3,75, ໃຫ້ກຳນົດເອົາ 4. ເພາະວ່າທ້າຍຈຸດໃຫຍ່ກວ່າ 5 ແລະ ໃຫ້ບັນທຶກ "4" ໃສ່ Q11.*

- <u>ຂັ້ນຕອນທີ 4</u>. ການສຸ່ມເອົາຄົວເຮືອນຕົວແທນກະສິກຳທຳອິດ ໂດຍການໃຊ້ຕາຕະລາງເລກສຸ່ມ ໃນຄ່າແຕ່ 1 ເຖິງຄ່າທີ່ມີໃນຄຳຕອບ Q10. ໃຫ້ບັນທຶກເລກສຸ່ມທຳອິດຈາກຖັນ C3 ໃສ່ໃນ Q12. ໃຫ້ສັງເກດຕົວຢ່າງການນຳໃຊ້ຕົວເລກສຸ່ມດັ່ງລຸ່ມນີ້:

  *ຕົວຢ່າງA: Q10=60. ທ່ານຕ້ອງການຊອກຫາເລກສຸ່ມແຕ່ລະຫວ່າງ 1 ຫາ 60. ກຳນົດເອົາເລກສຸ່ມເລີ້ມຕົ້ນແຖວໃດໜຶ່ງໃນຕາຕະລາງຕົວເລກສຸ່ມ. ສົມມຸດວ່າ ເລືອກໄດ້ແຖວທີ່ມີຕົວເລກ 7 6 3 4. ທ່ານຕ້ອງສັງເກດເອົາ 2 ຕົວເລກ. 2 ຕົວເລກທຳອິດແມ່ນ "76" ເຊິ່ງໃຫຍ່ກວ່າ 60 ໝາຍເລກ 76 ຈະຖືເປັນຄົວເຮືອນທຳອິດບໍ່ໄດ້ເພາະວ່າຄ່າ 76 ບໍ່ນອນຢູ່ໃນລະຫວ່າງ 1 ຫາ 60, ດັ່ງນັ້ນໃຫ້ສືບຕໍ່ນັບ2 ຕົວເລກຖັດໄປ; ຄື "63". ຍັງໃຫຍ່ກວ່າ 60 ໃຫ້ສືບຕໍ່ນັບຖັດໄປອີກ 2 ຕົວເລກ ຄື "34". ສະແດງວ່າຄ່າຂອງ 34 ແມ່ນນອນໃນລະຫວ່າງ 1 ຫາ 60.ຖືວ່າ 34 ສາມາດເປັນຄົວເຮືອນທຳອິດໄດ້, ໃຫ້ທຶກ "34" ໃສໃນຫ້ອງ Q12.*

  *ຕົວຢ່າງ B: Q10=156.ທ່ານຕ້ອງການຊອກຫາເລກສຸ່ມໃນລະຫວ່າງຄ່າ 1 ຫາ 156. ກຳນົດ*

*ເລກສຸ່ມເລີ້ມຕົ້ນແຖວໃດໜຶ່ງໃນຕາຕະລາງເລກສຸ່ມ. ສົມມຸດວ່າ ເລືອກໄດ້ແຖວທີ່ມີຕົວເລກ 7 0 6 3. ທ່ານຕ້ອງໄດ້ນັບເອົາສາມຕົວເລກທຳອິດຄື "760" ຖືວ່າມີຄ່າໃຫຍ່ກວ່າ 156,ຈະບໍ່ນອນໃນລະຫວ່າງ1 ຫາ 156 , ດັ່ງນັ້ນໃຫ້ສືບຕໍ່ນັບເອົາ 3 ຕົວເລກທັດໄປ ຄື , "063". ຖືວ່າມີຄ່າໃນລະຫວ່າງ 1 ຫາ 156 ສະແດງວ່າ 63 ເປັນຄົວເຮືອນທຳອິດ . ໃຫ້ບັນທຶກເລກ "63" ໃສ່ໃນ Q12.*

- <u>ຂັ້ນຕອນທີ 5</u>. ເລກສຸ່ມທີ່ໄດ້ຖືກບັນທຶກໃສ່ Q12 ແມ່ຄົວເຮືອນກະສິກຳທຳອິດທີ່ເລືອກໄດ້. ແລະ ໃຫ້ໝາຍວົງອ້ອມເອົາເຄື່ອງໝາຍຕີນກາໃນຖັນ c4 ແລ້ວພ້ອມທັງໝາຍວົງອ້ອມເລກລຳດັບຂອງຄົວເຮືອນໃນຖັນc1 ອີກດ້ວຍ.
- <u>ຂັ້ນຕ້ອນ 6</u>. ການກຳນົດຄົວເຮືອນຕົວແທນທີ 2 ແມ່ນໃຫ້ເອົາໄລຍະຫ່າງ Q11) ບວກກັບໝາຍເລກຄົວເຮືອນທຳອິດໃນ(Q12) . ຕົວຢ່າງ :ຖ້າ Q11=4 ແລະ Q12=34, ຄົວເຮືອນທີ່ສອງແມ່ນ 34+4=38; ຄົວເຮືອນເລກທີ 38 ເປັນຄົວເຮືອນກະສິກຳທີສອງ . ແລະ ໃຫ້ອ້ອມວົງມົນເອົາເຄື່ອງໝາຍຕີນກາ ແລະ ເລກທີຄົວເຮືອນໃນຖັນ c1.
- <u>ຂັ້ນຕອນ 7</u>. ການກຳນົດເອົາຄົວເຮືອນທີສາມແມ່ນເອົາໄລຍະຫ່າງບວກກັບເລກທີຄົວເຮືອນທີ 2, ຕົວຢ່າງ: ຖ້າວ່າ Q11=4 ແລະ Q12=34, ຄົວເຮືອນທຳອິດແມ່ນ34, ຄົວເຮືອນທີສອງແມ່ນ 38 ແລະ ຄົວເຮືອນທີສາມແມ່ນເອົາ 38+4=42; ຖືວ່າຄົວເຮືອນ 42 ເປັນຄົວເຮືອນທີສາມ. ໃຫ້ໝາຍວົງອ້ອມເອົາເຄື່ອງໝາຍຕີນກາ ແລະ ເລກລຳດັບໃນຖັນ c1.
- <u>ຂັ້ນຕອນ 8</u>. ໃຫ້ສືບຕໍ່ຄັດເລືອກຈົນໃຫ້ຄົບ 16 ຄົວເຮືອນກະສິກຳທີ່ຕ້ອງການ. ກໍລະນີການຄັດເລືອກເອົາຄົວເຮືອນກະສິກຳບໍ່ທັນຄົບຕາມຈຳນວນ ແຕ່ ໄປໃນບັນຊີຄົວເຮືອນພັດສິ້ນສຸດກ່ອນ ແມ່ນໃຫ້ກັບຄືນໄປເລີ້ມຕົ້ນໃໝ່ຈາກຕາຕະລາງບັນຊີອີກຄັ້ງໜຶ່ງ, ລະອຽດໃຫ້ເບິ່ງຕົວຢ່າງລຸ່ມນີ້ :

*ຕົວຢ່າງ: Q10=36.Q11=4. ຄົວເຮືອນທີ່ຖືກເລືອກທຳອິດແມ່ນຄົວເຮືອນທີ 36 . ທ່ານຕ້ອງໄດ້ກັບຄືນໄປຫາຕົ້ນຂອງຕາຕະລາງຂຶ້ນບັນຊີຄົວເຮືອນ; ໂດຍນັບແຕ່ເທິງລົງລຸ່ມ 1, 2, 3, 4. ເພາະສະນັ້ນຄົວເຮືອນຈະຖືກເລືອກຕໍ່ໄປແມ່ນຄົວເຮືອນທີ 4 . ຖ້າກໍລະນີຫາກຄົວເຮືອນທີ 4 ຖືກເລືອກແລ້ວແມ່ນໃຫ້ເລື່ອນໄປຄົວເຮືອນທີ 5 ຖັດໄປ.*

ຄົວເຮືອນທີ່ຖືກໝາຍວົງອ້ອມເອົາໃນຖັນ c1 ແມ່ນ ຄົວເຮືອນຕົວແທນກະສິກຳທີ່ຈະໄດ້ສຳພາດເອົາຂໍ້ມູນລະອຽດໂດຍການນຳໃຊ້ແບບສອບຖາມ F5.

ການເລືອກຕົວແທນແມ່ນສິ່ງທີ່ບໍ່ເປັນການຫຍຸ້ງຍາກ ແຕ່ຕ້ອງເຂົ້າໃຈຢ່າງລະອຽດ; ບໍ່ດັ່ງນັ້ນ ທ່ານຈະໄປສຳພາດບໍ່ຖືກຕ້ອງຕາມຄົວເຮືອນ ແລະ ການສຳຫລວດກໍ່ຈະບໍ່ໄດ້ຮັບຜົນ. ຖ້າຫາກວ່າທ່ານບໍ່ໝັ້ນໃຈກ່ຽວກັບການເລືອກຕົວແທນ ທ່ານຕ້ອງໄດ້ຕິດຕໍ່ນັກກວດກາຂອງທ່ານເພື່ອຊ່ວຍທ່ານ.

ຕົວຢ່າງ: ມີຈຳນວນຄົວເຮືອນທັງຫມົດ 64 ຄົວເຮືອນ,ໃນນັ້ນຄົວເຮືອນຄອບຄອງກະສິກຳ 33 ຄົວເຮືອນ ແລະ (ເບິ່ງຕົວຢ່າງການຂຶ້ນບັນຊີຄົວເຮືອນຂ້າງລຸ່ມ), ກ່ອນອື່ນໝົດແມ່ນຄິດໄລ່ ໄລຍະຫ່າງໂດຍອີງໃສ່ສູດຂ້າງເທິງນັ້ນ ເຮົາຈະໄດ້ໄລຍະຫ່າງດັ່ງລຸ່ມນີ້.

[redacted]

# 9. ການຈົດກ່າຍໃບສອບຖາມຄົວເຮືອນຕົວແທນ

## (ແບບສອບຖາມ F5)

**ທ່ານ ຈະຕ້ອງ ຈົດກ່າຍຂໍ້ມູນ ໃສ່ ແບບສອບຖາມຍາວ (Form 5) ຂອງ ແຕ່ລະ ຄົວເຮືອນຕົວແທນ ໃນບ້ານ**

### 9.1 ກ່ອນ ການເລີ້ມຕົ້ນ ສຳພາດຄົວ

ກ່ອນການເລີ້ມສຳພາດຄົວເຮືອນຕົວແທນ ນັກເດີນສຳຫຼວດຕ້ອງຂຽນຂໍ້ມູນເອກກະລັກໃສ່ເທິງແຈຂ້າງຂວາ ຂອງ ໜ້າປົກ ແບບສອບຖາມ F5 :

- ຈົດກ່າຍຊື່ ແຂວງ, ເມືອງ, ບ້ານ ຈາກໜ້າທຳອິດຂອງ F1 ໃສ່ Q.1 ຂອງ F5
- ຈົດກ່າຍລະຫັດ ແຂວງ, ເມືອງ, ບ້ານ ຈາກໜ້າທຳອິດຂອງ F1 ໃສ່ Q.1 ຂອງ F5
- ຈົດກ່າຍຊື່ ແລະ ເລກທີ ຄົວເຮືອນ ຈາກຕາຕະລາງຂຶ້ນບັນຊີຄົວເຮືອນ F1ໃສ່ Q.1 ຂອງ F5
- ຈົດກ່າຍຂໍ້ມູນຈາກ F4 ມາໃສ່ Q.15 ໃນ F5
- ຈົດກ່າຍຊື່ພືດລົ້ມລຸກ ທັງລະດູແລ້ງ ແລະ ລະດູຝົນຈາກ F4 ໃສ່ Q 22 ໃນ F5
- ຈົດກ່າຍຊື່ພືດຢືນຕົ້ນຈາກ F4 ໃສ່ Q 27 ໃນ F5
- ຈົດກ່າຍຈຳນວນງົວຈາກ F4 ໃສ່ Q 30 ໃນ F5
- ຈົດກ່າຍຈຳນວນຄວາຍຈາກ F4 ໃສ່ Q 38 ໃນ F5
- ຈົດກ່າຍຈຳນວນໝູຈາກ F4 ໃສ່ Q 45 ໃນ F5
- ຈົດກ່າຍຈຳນວນແບ້ຈາກ F4 ໃສ່ Q 51 ໃນ F5
- ຈົດກ່າຍຈຳນວນແກະຈາກ F4 ໃສ່ Q 56 ໃນ F5
- ຈົດກ່າຍຈຳນວນໄກ່ລາດຈາກ F4 ໃສ່ Q 61 ໃນ F5
- ຈົດກ່າຍຈຳນວນໄກ່ພັນຈາກ F4 ໃສ່ Q 62 ໃນ F5
- ຈົດກ່າຍຈຳນວນເປັດຈາກ F4 ໃສ່ Q 63 ໃນ F5
- ຈົດກ່າຍຈຳນວນງົວຈາກ F4 ໃສ່ Q 30 ໃນ F5
- ຈົດກ່າຍຂໍ້ມູນຈາກ F4 ມາໃສ່ Q100 ໃນ F5
- ຈົດກ່າຍຂໍ້ມູນຈາກ F4 ມາໃສ່ Q104 ໃນ F5

**<u>ຂໍ້ມູນລະຫັດເລົ່ານີ້ຕ້ອງໄດ້ຈົດກ່າຍກ່ອນຈະສຳພາດຄົວເຮືອນຕົວແທນ</u>**

ລະຫັດ ທີ່ຕັ້ງດ້ານພູມສາດ ແມ່ນ ມີຄວາມສຳຄັນ. ຖ້າຫາກ ວ່າ ເຮັດ ຜິດພາດ ຫຼື ທ່ານ ລືມ ບໍ່ໄດ້ ລະບຸຂໍ້ມູນ ລະອຽດ, ເລກລະຫັດ ຂອງຄົວເຮືອນ ບໍ່ສາມາດຮູ້ໄດ້ ແລະ ບໍ່ສາມາດນຳໃຊ້ແບບສອບຖາມນັ້ນໄດ້. **<u>ຕ້ອງເຊື່ອໝັ້ນວ່າ ລະຫັດດັ່ງກ່າວນັ້ນຂຽນຖືກຕ້ອງແລ້ວ.</u>**

### 9.2 ໂຄງປະກອບ ຂອງ ແບບສອບຖາມ F5

ແບບສອບຖາມໄດ້ແບ່ງອອກເປັນຫຼາຍພາກ:

- Q2-Q14 ຖາມກ່ຽວກັບ ທຸກຕອນດິນທຳການຜະລິດກະສິກຳຂອງຄົວເຮືອນ
- Q15-Q21 ຖາມກ່ຽວກັບ ການປູກເຂົ້າຂອງຄົວເຮືອນ
- Q22-Q26 ຖາມກ່ຽວກັບ ການນຳໃຊ້ຝຸ່ນປຸຍ ແລະ ຢາປາບສັດຕູພືດ ຂອງພືດແຕ່ລະຊະໜິດ
- Q25-Q26 ຖາມກ່ຽວກັບການປະເມີນຂອງຊາວກະສິກອນຕໍ່ເງື່ອນໄຂດ້ານກະສິກຳ
- Q27-Q29 ຖາມກ່ຽວກັບພືດຢືນຕົ້ນ
- Q30-Q66 ຖາມກ່ຽວກັບສັດລ້ຽງ
- Q67-Q68 ຖາມກ່ຽວກັບກົນຈັກກະສິກຳ
- Q69-Q80 ຖາມກ່ຽວກັບການບໍລິການທາງດ້ານກະສິກຳ ແລະ ພາກປະຕິບັດ
- Q81-Q91 ຖາມກ່ຽກັບຄຸນລັກສະນະຂອງປະຊາກອນ ແລະ ການດຳເນີນກິດຈະກຳວຽກງານຕ່າງໆຂອງສະມາຊິກຄົວເຮືອນແຕ່ລະຄົນ
- Q92-Q106 ຖາມກ່ຽວກັບການຄຸ້ມຄອງເຮັດຟາມ, ປ່າໄມ້ ແລະ ການປະມົງ

## 9.3 ຕອນດິນ

**ຄຳຖາມ 2:**

| | | | |
|---|---|---|---|
| **Q2** | ໃນລະດູຝົນປີ 2010 ແລະ ລະດູແລ້ງ 2010/11ຄົວເຮືອນຂອງທ່ານໄດ້ຄອບຄອງດິນທັງໝົດຈັກຕອນ?<br>(ດິນນາ, ດິນສວນ, ດິນປ່າໄມ້, ດິນໄຮ່ແຕ່ລະປະເພດ, ໜອງປາ ແລະ ດິນທົ່ງຫຍ້າ, ດິນປຸກສ້າງ ແລະ ດິນອື່ນໆ) | | ຕອນ |

ຈຸດປະສົງ ຄຳຖາມນີ້ ແມ່ນ ກວດສອບໃຫ້ຮູ້ຈຳນວນຕອນດິນທີ່ຄົວເຮືອນມີເທົ່າໃດ? ລວມທັງໝົດມີຈັກຕອນ ໃສ່ບ່ອນຫວ່າງ ເມື່ອໄດ້ສອບຖາມ. ລວມມີທຸກຕອນດິນທີ່ຄົວເຮືອນຄອບຄອງນຳໃຊ້, ລວມທັງດິນກະສິກຳ ແລະ ບໍ່ແມ່ນດິນກະສິກຳ ທີ່ໄດ້ກຳນົດໄວ້ໃນຂໍ້ 6.6.

**ຕອນດິນ** ໝາຍເຖິງ ຈຳນວນຜືນດິນໃດໜຶ່ງທີ່ມີຖານະຄອບຄອງດິນລັກສະນະດຽວເທົ່ານັ້ນ, ຊຶ່ງມີດິນຂອງຜູ້ອື່ນ, ນ້ຳ, ປ່າໄມ້, ເສັ້ນທາງ,ອື່ນໆ...ລ້ອມຮອບທີ່ດິນຜືນໜຶ່ງ ອາດປະກອບດ້ວຍທີ່ດິນ ຕອນດຽວ ຫຼື ຫຼາຍຕອນກໍໄດ້, ຕອນດິນປະກອບດ້ວຍໜຶ່ງ ຫຼື ຫຼາຍພື້ນທີ່ປູກພືດ ດ້ວຍຖານະການຄອບຄອງດິນມີຄວາມໝາຍວ່າຈະເປັນຂອງຕົນ ຫຼື ເຊົ່າກໍ່ຕາມ; ດ້ວຍເຫດນີ້, ສອງຜືນດິນຕິດຕໍ່ກັນນີ້ມີລັກສະນະຄອບຄອງແຕກຕ່າງກັນ ຂອງການຄອບຄອງນຳໃຊ້ໂດຍຄົວເຮືອນ ແມ່ນພິຈາລະນາວ່າເປັນ ສອງ ຕອນດິນ ຕົວຢ່າງ: ດິນຕົນເອງ ແລະ ດິນເຊົ່າ ຖືວ່າ ເປັນ ສອງ ຕອນດິນ. ໜຶ່ງຕອນດິນໃດໜຶ່ງອາດປູກພືດຫຼາຍຊະນິດ; ອາດມີການນຳໃຊ້ດິນແຕກຕ່າງກັນ, ເຊັ່ນດິນປູກພືດແລະດິນປ່າໄມ້.

**Q3-Q12 ຖາມກ່ຽວກັບແຕ່ລະຕອນດິນຂອງຈຳນວນຕອນດິນທີ່ມີໃນຄຳຖາມ Q2 ແຕ່ລະແຖວໃຫ້ຂຽນຊື່ແຕ່ລະປະເພດຕອນດິນ. ຖ້າມີຫຼາຍຕອນດິນ, ແຖວບໍ່ພໍໃນໃບສອບຖາມ; ໃຫ້ໝາຍຕິກກາ (✓) ໃສ່ແຖວຕ້ອງການໃຊ້ຕາຕະລາງສອບຖາມເພີ້ມອີກ ໃນຕາຕະລາງ F5Q3.**

**ຄຳຖາມ 4:**

ຈຸດປະສົງຂອງຄຳຖາມນີ້ ເພື່ອຊ່ວຍນັກເດີນສຳຫຼວດ ແລະ ຜູ້ຕອບລະບຸຊື່ແຕ່ລະຕອນດິນ ເອີ້ນວ່າດິນຫຍັງ. ໃຫ້ນຳໃຊ້ລາຍລະອຽດຕ່າງໆທີ່ຂຽນໄວ້ຊ່ວຍສັງເກດແຕ່ລະຕອນດິນ "ບ້ານນີ້", "ດິນໄຮ່", ແລະ " ດິນນາ" ອາດພຽງພໍແລ້ວ.

ຖ້າວ່າຕອນດິນດັ່ງກ່າວຢູ່ບ້ານດຽວກັນກັບບ່ອນຜູ້ສຳພາດແບບສອບຖາມຄົວເຮືອນ, ສະເໜີໃຫ້ຜູ້ຕອບພາໄປເບິ່ງຕອນດິນດັ່ງກ່າວດັ່ງທີ່ເທົ່າທີ່ຈະສາມາດເຮັດໄດ້. ມັນຊ່ວຍທ່ານໃຫ້ເຂົ້າໃຈຂໍ້ມູນລະອຽດກ່ຽວກັບຕອນດິນ.




**ຄຳຖາມ 5:**

ຈຸດປະສົງຂອງຄຳຖາມນີ້ ເພື່ອໃຫ້ເຂົ້າໃຈດີກ່ຽວກັບໄລຍະເວລາຂອງການບຸກເບີກດິນເມື່ອໃດ? ໃຫ້ຂຽນລະຫັດຕົວເລກໃສ່ຫ້ອງສີ່ລ່ຽມທີ່ຈັດໄວ້: 1 (ປີຜ່ານມາ); 2. (ແຕ່ 1 ປີຂຶ້ນໄປຫາ4 ປີ); 3. (ແຕ່ 4 ປີຂຶ້ນໄປ); 4. (ບໍ່ໄດ້ບຸກເບີກ)

ຖ້າສ່ວນຕ່າງໆຂອງຕອນດິນຫາກໄດ້ບຸກເບີກເວລາຕ່າງກັນ, ໃຫ້ລາຍງານເວລາສ່ວນໃຫຍ່ຂອງຕອນດິນທີ່ໄດ້ບຸກເບີກເມື່ອໃດ. ຫາກດິນໄດ້ບຸກເບີກຄືນພາຍຫຼັງທີ່ປ່ອຍປະບໍ່ປູກຫຼາຍປີຜ່ານມາໃຫ້ບັນທຶກເອົາໄລຍະເວລາ ສ່ວນໃຫຍ່ທີ່ໄດ້ບຸກເບີກດິນ




ດັ່ງກ່າວເມື່ອໃດຜ່ານມາ. ບໍ່ໃຫ້ປະຫ້ອງສີ່ລ່ຽມເປົ່າຫວ່າງໂດຍບໍ່ມີຄຳຕອບ ຖ້າຜູ້ຕອບຜູ້ຕອບບອກວ່າ ໄດ້ບຸກເບີກ "ຫຼາຍປີຜ່ານມາແລ້ວ" ນີ້ແມ່ນຄຳຕອບ ໄດ້ບຸກເບີກ " 4 ປີຂຶ້ນໄປ" ເປັນຄຳຖາມລະອຽດອ່ອນທີ່ຖາມຜູ້ຕອບເຊິ່ງມັນຕິດພັນກັບບັນຫາການຖາງປ່າເຮັດໄຮ່ເລື່ອນລອຍ.

**ຄຳຖາມ 6:**

ຄຳຖາມນີ້ຖາມກ່ຽວກັບທີ່ຕັ້ງຂອງຕອນດິນ ຢູ່ບ້ານຕົນເອງ ຫຼື ຢູ່ບ້ານອື່ນ. ຂຽນລະຫັດ "1" ຫຼື "2" ໃນຫ້ອງສີ່ລ່ຽມທີ່ຈັດໄວ້.

**ຄຳຖາມ 7:**

ຈຸດປະສົງຂອງຄຳຖາມນີ້ ແມ່ນຊ່ວຍໃຫ້ເຂົ້າໃຈຮູບແບບຂອງການຄອບຄອງດິນ. ໃຫ້ຂຽນຄຳຕອບທີ່ເໝາະສົມ ແລະ

ລະຫັດໃນຫ້ອງສີ່ລ່ຽມ: 1(ຂອງຕົນເອງ); 2(ເຊົ່າ); 3(ອື່ນໆ).

<u>ດິນຂອງຕົນເອງ:</u> ໝາຍເຖິງເປັນຂອງຕົນເອງໂດຍສົມບູນຫຼືຄອບຄອງເປັນຂອງຕົນເອງ.

ບາງ ຕົວຢ່າງ ຄອບຕອງເປັນຂອງຕົນເອງແມ່ນ: ນຳໃຊ້ດິນຕະຫຼອດໄປ ຫຼື ມີສັນຍາເປັນເວລາຍາວນານ; ນຳໃຊ້ດິນປັດສະຈາກ ການຢຸດສະງັກ ຫຼາຍປີ; ແລະ ດິນມອບໃຫ້ຄົວເຮືອນໂດຍລັດຖະບານພາຍໃຕ້ເງື່ອນໄຂບາງຢ່າງ ຈຸດປະສົງເຮັດກະສິກຳໃຫ້ຕົນເອງ. ຄົວເຮືອນມີດິນເປັນຂອງຕົນເອງ ອາດຈະມີ ຫຼື ອາດບໍ່ມີ ເອກະສານຢັ້ງຢືນເປັນຂອງຕົນເອງ.

| Q7 |
|---|
| ຮູບແບບ<br>ຂອງການ<br>ຄອບຄອງ |
| 1=ຂອງຕົນເອງ<br>2= ເຊົ່າ<br>3= ອື່ນໆ |
| ☐ |

<u>ເຊົ່າ:</u> ໝາຍເຖິງດິນທີ່ເຊົ່າຈາກຜູ້ອື່ນ (ປົກກະຕິມີກຳນົດເວລາ) ຈ່າຍເປັນເງິນ ຫຼື ເປັນວັດຖຸ. ຮູບແບບການຊຳລະຄ່າເຊົ່າໄດ້ຂຽນໄວ້ໃນຄຳແນະນຳ ຢູ່ Q8

<u>ດິນອື່ນ:</u> ລວມດິນທັງໝົດຍົກເວັ້ນດິນຂອງຕົນເອງ ຫຼື ເຊົ່າ.

ຕົວຢ່າງ: ຄອບຄອງດິນໂດຍບໍ່ໄດ້ຮັບອະນຸຍາດ, ດິນບໍ່ອະນຸຍາດໃຫ້ເພາະປູກ, ແລະ ຢືມດິນຈາກຜູ້ອື່ນດັ່ງນີ້ເປັນຕົ້ນ.

**ຄຳຖາມ 8:**

ຈຸດປະສົງຂອງຄຳຖາມນີ້ ເພື່ອຊ່ວຍເຂົ້າໃຈກ່ຽວກັບຮູບແບບການຊຳລະຄ່າເຊົ່າດິນຂອງບຸກຄົນ. ຖ້າມີຄຳຕອບໃນຄຳຖາມ Q7 ເຊີ່ງດິນດັ່ງກ່າວໄດ້ມີການເຊົ່າດິນ.

ໃຫ້ ຂຽນລະຫັດ ທີ່ເໝາະສົມໃນຫ້ອງສີ່ລ່ຽມ: 1(ເປັນເງິນສົດ); 2(ແບ່ງປັນຜົນຜະລິດ); 3(ແລກ ປ່ຽນແຮງງານ); 4(ອື່ນໆ).

| Q8 |
|---|
| Q7ມີຄຳຕອບ<br>ເປັນ2 ຮູບແບບ<br>ການສຳລະຄ່າ<br>ເຊົ່າຄືແນວໃດ? |
| 1= ເປັນເງິນສົດ<br>2= ແບ່ງປັນຜົນຜະລິດ<br>3= ແລກປ່ຽນແຮງງານ<br>4= ອື່ນໆ |
| ☐ |

**<u>ແບ່ງປັນຜົນຜະລິດ</u>**: ໝາຍວ່າ: ໄດ້ກຳນົດບໍລິມາດຜົນຜະລິດ ຫຼື ກຳນົດອັດຕາສ່ວນ ຜົນຜະລິດ ຕອບແທນແຮງງານ . ອີກຕົວຢ່າງ: **<u>ການແລກປ່ຽນແຮງງານ</u>** ໝາຍເຖິງ ການຕອບສະໜອງແຮງງານ ຊ່ວຍເຫຼືອສິ່ງກັນ ແລະກັນ ໄລຍະເວລາ ຊ່ວງຂອງລະດູການຜະລິດ.

**ຄຳຖາມ 9:**

ຈຸດປະສົງຂອງຄຳຖາມນີ້ ແມ່ນຢາກໄດ້ຂໍ້ມູນເນື້ອທີ່ ຂອງແຕ່ລະຕອນດິນ ແລະ ເປັນເຄື່ອງມືຂອງການຄິດໄລ່ ຂະໜາດ ຂອງ ການຄອບຄອງດິນກະສິກຳ. ຂະໜາດ ຂອງການຄອບຄອງ ແມ່ນ ບັນຫານຶ່ງທີ່ສຳຄັນຂອງລາຍການຂໍ້ມູນໃນການສຳຫຼວດສະຖິຕິ ກະສິກຳຄັ້ງນີ້. ໃຫ້ ອີງໃສ່ ຂໍ້ 5.8 ແລະ 5.9 ສຳລັບລາຍລະອຽດ ຂອງການຈົດບັນທຶກຂໍ້ມູນດ້ານເນື້ອທີ່.

| Q9 | |
|---|---|
| ເນື້ອທີ່ລວມຂອງແຕ່ລະຕອນດິນມີຫຼາຍປານໃດ? | |
| ຫົວໜ່ວຍທ້ອງຖິ່ນ | ເຮັກຕາ |
| | , |

ໃຫ້ກວດກາ ຕອນດິນ ເພື່ອຊ່ວຍ ທ່ານ ຄຳນວນເນື້ອທີ່ດິນຂອງຄົວເຮືອນໃຫ້ ຖືກຕ້ອງ . ຖ້າເປັນໄປໄດ້, ໃຫ້ກວດກາ ຕອນດິນ ດ້ວຍຕົນເອງໃຫ້ ຄັກແນ່ ວ່າ ຂໍ້ມູນທີ່ໄດ້ຮັບລາຍງານ ແມ່ນຖືກຕ້ອງ.

**ຄຳຖາມ 10:**

ຈຸດປະສົງ ຂອງ ຄຳຖາມ ນີ້ ແມ່ນໄດ້ກຳນົດ ວ່າ ມີເນື້ອທີ່ດິນຫຼາຍປານໃດທີ່ນຳໃຊ້ດິນ ເພື່ອຈຸດປະສົງ ຕ່າງ ໆ. ເຊັ່ນ ນຳໃຊ້ປູກພືດລົ້ມລຸກ ແລະ ປູກພືດຢືນຕົ້ນ. ຂໍ້ມູນປະເດເລົ່ານີ້ ຈະ ເປັນປະໂຫຍດຫຼາຍສຳລັບການສຶກສາຕົວຢ່າງການນຳໃຊ້ດິນ ຢູ່ ສ.ປ.ປ.ລາວ.

ໃຫ້ບັນທຶກຂໍ້ມູນ ເນື້ອທີ່ ຂອງ ແຕ່ລະການນຳໃຊ້ດິນ ໃນຫົວໜ່ວຍເປັນເຮັກຕາ (ຮ.ຕ). <u>ຜົນບວກຂອງເນື້ອທີ່ ການນຳໃຊ້ດິນແຕ່ລະອັນໃນຄຳຖາມ Q10 ຕ້ອງແມ່ນເນື້ອທີ່ດຽວກັນ ຂອງ ເນື້ອທີ່ຕອນດິນໃນຄຳຖາມ Q9.</u>

| Q10 | | | | | |
|---|---|---|---|---|---|
| ເນື້ອທີ່ຂອງດິນຕອນນີ້ ຕົ້ນຕໍແມ່ນໄດ້ນຳໃຊ້ຫຍັງ? | | | | | |
| ພືດລົ້ມລຸກ | | | | | |
| A<br>ປີຜ່ານມາໄດ້ນຳໃຊ້ປູກພືດເທົ່າໃດ?<br>(ຮຕ) | B<br>ປີຜ່ານມາບໍ່ໄດ້ນຳໃຊ້ປູກພືດເທົ່າໃດ?<br>(ຮຕ) | C<br>ປູກພືດຢືນຕົ້ນ<br>(ຮຕ) | D<br>ປູກຫຍ້າ<br>(ຮຕ) | E<br>ປູກໄມ້-ດິນປ່າໄມ້<br>(ຮຕ) | F<br>ອື່ນໆ<br>(ຮຕ) |
| , | , | , | , | , | , |

**ຂໍ້ສັງເກດ:** ສອງປະເພດຂໍ້ມູນດ້ານເນື້ອທີ່ ທີ່ໄດ້ເກັບກຳໃນການສຳຫຼວດສະຖິຕິກະສິກຳຂອງ ສ.ປ.ປ.ລາວ: <u>ເນື້ອທີ່ປູກພືດ</u> ແລະ <u>ເນື້ອທີ່ດິນ</u>. ສອງປະເພດຂໍ້ມູນເລົ່ານີ້ ແມ່ນມີຄວາມສຳຄັນໃນການຕີລາຄາ ການນຳໃຊ້ດິນປູກພືດແບບກະເສດສຸມ. ໃນປະໂຫຍກນີ້ ຂອງ ຄຳຖາມ ຈຸດສຳຄັນ ແມ່ນເລັ່ງໃສ່ ຖາມເນື້ອທີ່ດິນ. ຂະໜາດຂອງຕອນ ດິນເທົ່າກັບ 1 ເຮັກຕາ ນຳໃຊ້ປູກພືດລົ້ມລຸກ, ແຕ່ວ່າ ອາດເນື້ອທີ່ປູກພືດ 2 ເຮັກຕາ ໃນຕອນດິນດັ່ງກ່າວ.

ດິນປູກ<u>ພືດລົ້ມລຸກ</u> ແມ່ນດິນຊຶ່ງເອົາໄປນຳໃຊ້ປູກພືດລົ້ມລຸກ (ໃຫ້ເບິ່ງຂໍ້ 3.6). ເຮົາຄວນຂຽນລາຍງານຂໍ້ມູນໂດຍອີງໃສ່ ພືດລົ້ມລຸກໄດ້ປູກຕົວຈິງໃນດິນຕອນນີ້ ຫຼື ປະເປັນເຮື້ອຊົ່ວຄາວປີຜ່ານມາ. ໃຫ້ເບິ່ງໃນຫົວຂໍ້ 3.3 ສຳລັບນິຍາມຄຳວ່າ <u>ດິນປະເປັນເຮື້ອ</u>.

<u>ດິນປູກຫຍ້າ</u> ແມ່ນນຳໃຊ້ດິນ ສຳລັບປູກຫຍ້າ ລ້ຽງສັດ ຊຶ່ງລວມມີທັງທົ່ງຫຍ້າປູກ ແລະທົ່ງຫຍ້າທຳມະຊາດ.

<u>ດິນປ່າໄມ້</u>: ລວມມີ ປ່າທຳມະຊາດ ຫຼື ປ່າໄມ້ ປູກ ທີ່ຈະເປັນປ່າໃນຕໍ່ໜ້າ. ຄຸ່ມຄ່າຂອງດິນປ່າໄມ້ຈະໃຫ້ ຄຸ່ມຄ່າເປັນໄມ້ທ່ອນ, ໄມ້ແປຮູບ ແລະໄມ້ອື່ນໆ. ດິນປ່າໄມ້ ຈະລວມເອົາ ທັງສວນກ້າເບັ້ຽໄມ້ ແລະເນື້ອທີ່ໄມ້ປ່ອງ....

<u>ດິນອື່ນໆ</u> ລວມມີດິນໄຕ້ນ້ຳ; ດິນປຸກສ້າງ; ຖະໜົນຫົນທາງ; ສວນດອກໄມ້, ດິນເປົ່າຫວ່າງ, ແລະດິນບໍ່ສາມາດປູກພືດອື່ນໆ.

ດິນຕອນນຶ່ງ ອາດ ນຳໃຊ້ໄດ້ຫຼາຍປະໂຫຍດ. ຖ້າບາງສ່ວນໃນຕອນດິນ ນຳໃຊ້ ປູກພືດລົ້ມລຸກ ສ່ວນ ເຫຼືອອື່ນໆ , ນຳໃຊ້ປູກຫຍ້າ, ໃຫ້ບັນທຶກ ເນື້ອທີ່ຂອງພືດລົ້ມລຸກ ແລະ ເນື້ອທີ່ປູກຫຍ້າ ຕາມຂະໜາດ ຂອງ ແຕ່ລະ ສ່ວນໃນຕອນດິນ ນັ້ນ. ຖ້າສົມມຸດວ່າ, ເນື້ອທີ່ປູກພືດຍືນຕົ້ນ ແລະພືດລົ້ມລຸກ ປູກປົນກັນ ຈະກຳນົດ ການນຳໃຊ້ດິນອັນໃດເປັນຕົ້ນຕໍ. ຖ້າເປັນກໍລະນີນີ້ ໃຫ້ກຳນົດ ບົນພື້ນຖານ ພືດໃດທີ່ປູກຕົ້ນຕໍ ແລະກວມເອົາດິນສ່ວນໃຫຍ່. ຖ້າການນຳໃຊ້ດິນ ມີການປ່ຽນແປງເລື້ອຍໆ ໃນປີ, ໃຫ້ກຳນົດ ດິນ ບົນພື້ນຖານການນຳໃຊ້ດິນປະຈຸບັນ. ດິນໄຕ້ນ້ຳ ໃນໄລຍະລະດູຝົນ ແຕ່ໃນໄລຍະລະດູແລ້ງພັດນຳໃຊ້ດິນດັ່ງກ່າວ ປູກພືດລົ້ມລຸກ ໃຫ້ກຳນົດເປັນດິນ " ພືດລົ້ມລຸກ" .

**ຄຳຖາມ 11**:

ຄຳຖາມເລົ່ານີ້ ແມ່ນຢາກຮູ້ ເນື້ອທີ່ຂອງຕອນດິນ ທີ່ໄດ້ຮັບນ້ຳຊົນລະປະທານ. ເພາະວ່າ ຊົນລະປະທານ ແມ່ນປັດໄຈນຶ່ງທີ່ສຳຄັນຂອງການຍົກຜົນຜະລິດພືດ ແລະຂໍ້ມູນດັ່ງກ່າວຈະຊ່ວຍໃຫ້ເຮົາເຂົ້າໃຈ ບັນຫາສະພາບການຜະລິດດີຂື້ນ. ໃຫ້ ຂຽນ ລະຫັດ 1 ຫຼື 2 ຂອງແຕ່ລະ ສ່ວນຂອງ ຄຳຖາມ.

| Q11 | |
|---|---|
| ໃນປີຜ່ານມາດິນຕອນນີ້ໄດ້ຮັບນ້ຳຊົນລະປະທານຈາກໃສ? | |
| Q11a<br>ຊົນລະປະທານຂອງລັດ<br><br>1= ໄດ້ຮັບ<br>2= ບໍ່ໄດ້ຮັບ | Q11b<br>ແຫຼ່ງນ້ຳອື່ນໆ<br><br>1= ໄດ້ຮັບ<br>2= ບໍ່ໄດ້ຮັບ |
| | |

**ຄຳຖາມ 12:**

<u>ຮັບນ້ຳຊົນລະປະທານ</u> ໝາຍເຖິງການຈັດຫາ ແລະສະໜອງນ້ຳ ໃຫ້ດິນປູກພືດ, ບໍ່ໝາຍເຖິງນ້ຳຟ້ານ້ຳຝົນ. ກໍລະນີນ້ຳຖ້ວມ ຫຼືນ້ຳລົ້ນຝັງ ບໍ່ໃຫ້ຖືວ່າເປັນການຮັບນ້ຳຊົນລະປະທານ. ຊົນລະປະທານແມ່ນລວມທັງໝົດ ທີ່ນຳເອົາ ນ້ຳທຳມະຊາດເຂົ້າສູ່ການຜະລິດ ໂດຍບໍ່ໃຫ້ ເຂົ້າໃຈ ພຽງແຕ່ ແມ່ນ ໂຄງການຊົນລະປະທານຂອງລັດສ້າງໃຫ້ເທົ່ານັ້ນ.

| Q12 | |
|---|---|
| ໃນປີຜ່ານມາດິນຕອນນີ້ມີເນື້ອທີ່ຮັບນ້ຳທັງໝົດຫຼາຍປານໃດ? | |
| ຫົວໜ່ວຍທ້ອງຖິ່ນ | ເຮັກຕາ |
| | , |
| | , |

ມັນລວມທັງນ້ຳ ຈາກ ແມ່ນ້ຳລຳເຊ, ອ່າງເກັບນ້ຳ, ນ້ຳສ້າງ, ນ້ຳບາດານ ຮັບໃຊ້ເຮັດສວນຜັກ ກໍໃຫ້ຖືວ່າ ເປັນການຮັບນ້ຳຊົນລະປະທານ. ໃຫ້ ຂຽນ ລະຫັດ “1” ແມ່ນ ໄດ້ຮັບ “ນ້ຳຈາກໂຄງການຊົນລະປະທານຂອງລັດ”. ຖ້າໄດ້

ຮັບ ນ້ຳ ຊົນລະປະທານ ນຳໃຊ້ໃນຕອນດິນດັ່ງກ່າວນີ້; ໃຫ້ ຂຽນ “1” ນຳໃຊ້ ນ້ຳ ຈາກແຫຼ່ງນ້ຳແຫ່ງ ຕ່າງ ໆ ຊຶ່ງບໍ່ແມ່ນ ໂຄງການຊົນລະປະທານຂອງລັດສະໜອງໃຫ້. ຖ້າ ມີການໃຊ້ນ້ຳຈາກແຫຼ່ງນ້ຳອື່ນໆ. ໄລຍະເວລາອ້າງອີງ ສຳລັບ ຄຳຖາມນີ້ ແມ່ນ ຊ່ວງໄລຍະ ລະດູຝົນປີ 2010 ແລະ ລະດູແລ້ງ 2010/11.

### ຄຳຖາມ 13:

ຈຸດປະສົງຂອງຄຳຖາມນີ້ ແມ່ນຖາມກ່ຽວກັບ ດິນກະສິກຳ ຂອງຄົວເຮືອນ ຄອບຄອງ ຍັງມີ ລະເບີດ ຫຼື ບໍ່ ແລະ ສິ່ງສຳຄັນເພື່ອຊ່ວຍລັດຖະບານ ບັນລຸ ໂຄງການ ທຳລາຍລະເບີດບໍ່ທັນແຕກ. ໃຫ້ໝາຍ ຕີນ ກາ ໃສ່ ຫ້ອງ ສີ່ຫຼ່ຽມ “1” ຫຼື “2” ຕາມນັ້ນ.




ໃຫ້ ພິຈາລະນາ ສະເພາະ ດິນກະສິກຳ ທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ທີ່ໄດ້ກຳນົດໃນ ຂໍ້ 3.3. ລະເບີດບໍ່ທັນແຕກ (UXO) ມີຜົນກະທົບຕໍ່ດິນກະສິກຳ ລວມມີ ປະເພດດິນ ທີ່ຄົວເຮືອນ ອາດຈະ ບໍ່ໄດ້ ນຳໃຊ້ປູກຝັງ ດິນນານແລ້ວ ເພາະວ່າມີລະເບີດບໍ່ທັນແຕກຕົກຄ້າງ ແລະ ອາດຈະໄດ້ບຸກເບີກ ດິນແລ້ວ ເຖິງແມ່ນວ່າໄດ້ຮັບຜົນກະທົບ ແລ້ວຈາກ ລະເບີດ ບໍ່ທັນແຕກຜ່ານມາກໍ່ຕາມ. ມັນລວມເອົາ ດິນ ຊຶ່ງ ໂຄງການ UXO ໄດ້ ພົບເຫັນ ແລະ ດິນ ຊຶ່ງຄົວເຮືອນມີເຫດຜົນດີ ທີ່ ສົງໃສວ່າ ມີລະເບີດຕົກຄ້າງ ຢູ່.

ໂຄງການເກັບກູ້ລະເບີດ (UXO) ອີງໃສ່ ຕົ້ນຕໍ ກຸ່ມປະເພດ ອາວຸດ ລູກເບີດທຳລາຍ “Bombies” ແຕ່ລວມ ທັງ ອາວຸດຍຸດໂທປະກອນຕ່າງໆ ທີ່ຍັງບໍ່ທັນ ລະເບີດ.

### ຄຳຖາມ 14:

ຈຸດປະສົງຂອງຄຳຖາມນີ້ ແມ່ນຖາມວ່າ ຄົວເຮືອນໃດ ຍັງມີການເຮັດໄຮ່ປູກເຂົ້າຢູ່. ໃຫ້ໝາຍ ຕີນການໃສ່ ຫ້ອງສີ່ຫຼ່ຽມ “1” ຖ້າເຮັດໄຮ່ເລື່ອນລອຍ, “2” ຖ້າ ເຮັດໄຮ່ໝູນວຽນ, ແລະ “3” ຖ້າບໍ່ໄດ້ເຮັດ ທັງສອງ ປະເພດ.ບາງທີ່ອາດມີຄົວເຮືອນເຮັດທັງສອງປະ ເພດ ໄຮ່ ຄື ເລື່ອນລອຍ ແລະ ໝູນວຽນ, ໃນນີ້ ສາມາດ ໝາຍຕີນກາ ໃສ່ ທັງ ສອງ ຫ້ອງ “1” ແລະ ”2” ໄດ້.




**<u>ໄຮ່ເລື່ອນລອຍ:</u>** ຫມາຍເຖິງພື້ນທີ່ທຳການຜະລິດກະສິກຳ ຊຶ່ງມີການ ເຄື່ອນຍ້າຍໄປເລື້ອຍໆ ແບບເລື່ອນ ລອຍ ຫລື ແບບຊະຊາຍ ເປັນ ແຕ່ ລະປີ ໂດຍບໍ່ເລືອກຂອບເຂດພື້ນທີ່ ຂອງແຕ່ລະປະເພດທີ່ດິນ ອັນໄດ້ສ້າງ ຜົນກະທົບດ້ານ ລົບ ຕໍ່ ສິ່ງ ແວດລ້ອມທຳມະຊາດ ໃນແຕ່ລະປີ. .**<u>ໄຮ່ໝູນວຽນ:</u>** ຫມາຍເຖິງພື້ນທີ່ ທຳການ ຜະລິດກະສິກຳ ຊຶ່ງສ່ວນໃຫຍ່ຍັງມີ ການຖາງ, ການຈູດ ແລະ ການຮື້ເພື່ອ ປູກເຂົ້າ, ປູກພືດ ແລະ ຕົ້ນໄມ້ອື່ນໆ, ໂດຍດຳເນີນການຜະລິດຕາມຮອບວຽນ ໃນກຳນົດເວລາໃດຫນຶ່ງ ຊຶ່ງ ສ່ວນໃຫຍ່ແມ່ນ 3-5 ປີ ໃນ ຂອບເຂດ ຈຳກັດ

ແລ້ວກັບຄືນມາທຳການຜະລິດ ຢູ່ດິນຕອນ ເກົ່າ ຕາມການກຳນົດ ແລະ ຈັດສັນ ພາຍໃຕ້ການ ຕົກລົງເຫັນດີ ແລະ ເປັນເອກະພາບ ຂອງອົງການປົກຄອງທ້ອງຖິ່ນ, ພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນໃນທ້ອງຖິ່ນເອງ.

## 9.4 ການປູກເຂົ້າ

| |
|---|
| ພາກສ່ວນນີ້ຂອງຄຳຖາມ ແມ່ນ ອີງໃສ່ ຂໍ້ມູນກ່ຽວກັບການປູກເຂົ້າ, ຊຶ່ງໄດ້ລາຍງານໃນແບບສອບຖາມ ຟອມ 4. ຄຳຖາມ Q15 ອີງໃສ່ ຄົວເຮືອນໄດ້ປູກເຂົ້າ ແລະ ໄດ້ ສອບຖາມແລ້ວ ຄົວເຮືອນທີ່ປູກເຂົ້າ ໃນ ຟອມ 4. |

### ຄຳຖາມ 15

ຖ້າ ໄດ້ປູກເຂົ້າໃຫ້ໝາຍຕົນການໃສ່ ຫ້ອງສີ່ຫຼ່ຽມ ຂອງ ລະຫັດ "1" , ໄປຫາຄຳຖາມ Q16-Q20, ບໍ່ດັ່ງນັ້ນ, ຂ້າມໄປຄຳຖາມ 21.

| | | | | | |
|---|---|---|---|---|---|
| Q15 | *<u>ຂໍ້ສັງເກດ:</u> ກວດເບິ່ງຄືນຄຳຖາມQ11 ແລະ ຄຳຖາມ Q15 ຢູ່ໃນແບບຟອມ F4 ຢູ່ໃນຖັນລາຍຊື່ພືດແມ່ນໄດ້ປູກເຂົ້າບໍ່?* | ***ເລືອກໄດ້ນຶ່ງຄຳຕອບ(ໝາຍ√)*** | ໄດ້ | 1 ➡ | *ສືບຕໍ່ໄປຫາຄຳຖາມQ16* |
| | | | ບໍ່ໄດ້ | 2 ➡ | *ໄປຫາຄຳຖາມQ22* |

### ຄຳຖາມ 16

ໃນຄຳຖາມນີ້, ທ່ານ ຈະໄດ້ ຖາມ ຜູ້ຖືກສຳພາດ ໃຫ້ ລາຍງານ ກ່ຽວກັບ ປະເພດເຂົ້າທີ່ໄດ້ປູກ ໃນ ລະດູຝົນ 2010 ຫຼື ລະດູແລ້ງ ສົກປີ 2010/11; ໂດຍສະເພາະ ໃນ:

- ລະດູການ : ລະດູຝົນ ຫຼື ແລ້ງ
- ປະເພດດິນ : ນາປີ ຫຼື ໄຮ່
- ແນວພັນເຂົ້າ : ພັນພື້ນເມືອງ ຫຼື ພັນປັບປຸງ
- ຊະໜິດເຂົ້າທີ່ປູກ : ເຂົ້າໜຽວ ຫຼື ເຂົ້າຈ້າວ
- ຊະໜິດແນວພັນ : ເຂົ້າດໍ, ເຂົ້າກາງ ຫຼື ເຂົ້າປີ/ເຂົ້າງັນ

| Q16 ໃນລະດູຝົນ ປີ 2010 ແລະ ລະດູແລ້ງສົກປີ 2010/11 ຄົວເຮືອນທ່ານໄດ້ປູກເຂົ້າປະເພດດັ່ງລຸ່ມນີ້ບໍ່? | | | | | | | |
|---|---|---|---|---|---|---|---|
| | | ນາປີ (2010) | | ໄຮ່ (2010) | | ນາແຊງ (2010/2011) | |
| | | ພັນພື້ນເມືອງ(√) | ພັນປັບປຸງ(√) | ພັນພື້ນເມືອງ(√) | ພັນປັບປຸງ(√) | ພັນພື້ນເມືອງ(√) | ພັນປັບປຸງ(√) |
| 1. ເຂົ້າໜຽວ | 1.1 ເຂົ້າດໍ | 11 | 12 | 13 | 14 | 15 | 16 |
| | 1.2 ເຂົ້າກາງ | 21 | 22 | 23 | 24 | 25 | 26 |
| | 1.3ເຂົ້າງັນ(ເຂົ້າປີ) | 31 | 32 | 33 | 34 | 35 | 36 |
| 2. ເຂົ້າຈ້າວ | | 41 | 42 | 43 | 44 | 45 | 46 |

ໃຫ້ໝາຍຕົນ ໃສ່ ຫ້ອງສີ່ຫຼ່ຽມ ໄດ້ ໜຶ່ງຫ້ອງ ຫຼື ຫຼາຍ ກວ່າ ນີ້. . ໝາຍເຫດ: ແຕ່ລະ ຫ້ອງສີ່ຫຼ່ຽມ ມີລະຫັດ

ກຳນົດ ຂອງ ມັນໄວ້ແລ້ວ. ນີ້ ມີຄວາມຕ້ອງການ ສຳລັບ ຄຳຖາມ Q17-Q20.

ແນວພັນປັບປຸງ ແມ່ນບັນດາແນວພັນທີ່ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ ຮັບຮອງວ່າ ແມ່ນແນວພັນທີ່ໃຫ້ຜະລິດຕະພາບສູງ ຫຼື ບັນຊາວກະສິກອນ ໄດ້ນຳເຂົ້າມາ ຈາກ ປະເທດ ເພື່ອນບ້ານ ເຊັ່ນ ໄທ, ຫວຽດນາມ ແລະ ອື່ນໆ. . ຊຶ່ງມີຄວາມເຊື່ອຖື ເປັນແນວພັນໃຫ້ ຜະລິດຕພາບສູງ. ໃຫ້ ບັນທຶກ ເປັນ ແນວພັນປັບປຸງ ຖ້າ ຊາວນາ ນຳໃຊ້ແນວພັນແນວພັນຂອງຕົນເອງ ຈາກ ໜຶ່ງໃນແນວພັນທີ່ກ່າວໄປນັ້ນ.

ຊະນິດອາຍຸຂອງເຂົ້າທີ່ປູກ <u>**"ເຂົ້າດໍ"**</u> ຊຶ່ງມີອາຍຸ ປະມານ 3 ເດືອນກ່ວາ, <u>**ເຂົ້າກາງ**</u> ມີອາຍຸ 4 ເດືອນ ກ່ວາ ແລະ **ເຂົ້າປີ**(ງັນ) ມີອາຍຸ 5 ເດືອນກ່ວາ. ລະຍະເວລາທີ່ກຳນົດນີ້ ແມ່ນຊ່ວງລະຍະເວລາຂອງການຈະເລີນເຕີບໂຕ, ບໍ່ແມ່ນການກຳນົດເວລາຂອງການປູກເຂົ້າ.

> ໃນຄຳຖາມ Q16, ທ່ານ ໄດ້ ຈຳແນກຊະໜິດເຂົ້າຕ່າງໆທີ່ປູກ ໂດຍຄົວເຮືອນ. ໃນ ຄຳຖາມ Q17- Q20, ທ່ານຍັງຈະໄດ້ສອບຖາມແຕ່ລະ ປະເພດຂອງເຂົ້າອີກ. ນຳໃຊ້ ໜຶ່ງແຖວສຳລັບແຕ່ລະປະເພດຂອງແນວພັນເຂົ້າທີ່ປູກໃນຄຳຖາມ Q16. ໃຫ້ສະແດງແນວພັນເຂົ້າ ຕາມ ລະຫັດ ຂອງ ຊະໜິດເຂົ້າ ຈາກຄຳຖາມ Q16.

## ຄຳຖາມ 17-21

| *ລະຫັດເຂົ້າ* | Q17 | Q18 | Q19 | | Q20 | Q21 |
|---|---|---|---|---|---|---|
| *(ຈາກຄຳຖາມQ16)* | ຊື່ແນວພັນເຂົ້າທີ່ທ່ານປູກ ແມ່ນຫຍັງ? | ACO | ມີເນື້ອທີ່ປູກຫຼາຍປານໃດ? | | ເນື້ອທີ່ໄດ້ຮັບນ້ຳຊົນລະປະທານທັງໝົດມີເທົ່າໃດ? (ຮຕ) | ຜົນຜະລິດຫຼາຍປານໃດ? (ໂຕນ) |
| | | | ຫົວໜ່ວຍທ້ອງຖິ່ນ | ເຮັກຕາ | | |
| \| | | \| \| | | , | , | |
| \| | | \| \| | | , | , | |

<u>ຄຳຖາມ 17</u>: ໃຫ້ບັນທຶກ ຊື່ແນວພັນເຂົ້າທີ່ ທ່ານ ປູກ ຖ້າ ຮູ້.

<u>ຄຳຖາມ 18</u> ນີ້ ແມ່ນສຳລັບຫ້ອງການສຳຫຼວດ (ACO) ຢ່າງດຽວ. ຫ້າມບໍ່ໃຫ້ ຂຽນໃສ່ ຫ້ອງສີ່ຫຼ່ຽມ ດັ່ງກ່າວ.

<u>ໃນຄຳຖາມ 19</u>, ໃຫ້ບັນທຶກ ຂໍ້ມູນດ້ານເນື້ອທີ່ ແຕ່ລະປະເພດເຂົ້າທີ່ປູກ ໃຫ້ ຖັນ ຂອງ ຫົວໜ່ວຍທ້ອງຖິ່ນ ຫຼື ເຮັກຕາ, ນຳໃຊ້ວິທີການ ທີ່ໄດ້ ລະບຸໄວ້ ຫົວບົດ 5.8. ໝາຍເຫດ ເນື້ອທີ່ ອີງໃສ່ ເນື້ອທີ່ ປູກ, ບໍ່ໃຫ້ ຖາມ ເນື້ອທີ່ເກັບກ່ຽວ.

<u>ໃນຄຳຖາມ 20</u>, ໃຫ້ບັນທຶກ ເນື້ອທີ່ ຮັບນ້ຳຊົນລະປະທານ ໃຫ້ ຫ້ອງຫົວໜ່ວຍ ເຮັກຕາ. ໃຫ້ ອີງໃສ່ ຄຳແນະ ນຳ ສຳລັບຄຳຖາມ Q11 ເພື່ອທຳຄວາມເຂົ້າໃຈລະອຽດ ກ່ຽວກັບລາຍງານ <u>**ຊົນລະປະທານ**</u> ແມ່ນ.

<u>ໃນຄຳຖາມ 21</u>, ໃຫ້ບັນທຶກ ຜົນຜະລິດ ແຕ່ລະ ປະເພດເຂົ້າທີ່ ປູກ ຊ່ວງປີລະດູການ ໃນ ຫົວໜ່ວຍ ໂຕນ. ຜົນຜະລິດເຂົ້າ ອີງໃສ່ ປະລິມານເຂົ້າຕົວຈິງ, ພາຍຫຼັງທີ່ ໄດ້ອົບແຫ້ງ ເພື່ອຂາຍ ແລະ ຊົມໃຊ້, ແລະ ຫຼັງຈາກ ຫັກລົບຜົນເສຍຫາຍຫຼັງເກັບກ່ຽວ.

## 9.5 ນຳໃຊ້ຝຸ່ນ ແລະ ປຸຍເຄມີ

ພາກສ່ວນນີ້ ຂອງ ຄຳຖາມ ແມ່ນກ່ຽວກັບ ການນຳໃຊ້ ຝຸ່ນ ແລະ ປຸຍເຄມີ ໃນແຕ່ລະພືດລົ້ມລຸກທີ່ໄດ້ລາຍງານ ໃນ ແບບ ຟອມ 4. ຄຳຖາມ 21 (Q21) ໃຫ້ລຽງບັນຊີລາຍຊື່ ພືດລົ້ມລຸກ ທັງໝົດທີ່ປູກ ໂດຍ ຄົວເຮືອນ ແລະ ຕ້ອງຈົດກ່າຍໄວ້ ກ່ອນ ເລີ້ມສຳພາດ ດ້ວຍໄລຍະເວລາອ້າງອີງ ໃນ ແບບ ແບບ ຟອມ 4. ໃຫ້ນຳໃຊ້

### ຄຳຖາມ 22-24

| Q22 | | Q23 | | | | Q24 | |
|---|---|---|---|---|---|---|---|
| ລາຍຊື່ພືດລົ້ມລຸກທີ່ປູກໃນ 12 ເດືອນຜ່ານມາ (ລະດູຝົນປີ 2010 ແລະ ລະດູແລ້ງ 2010/2011) ມີຫຍັງແດ່? | ACO | ທ່ານໄດ້ນຳໃຊ້ຝຸ່ນ-ປຸຍເຄມີເຂົ້າໃນ ການປູກພືດບໍ່? | | | | ທ່ານໄດ້ນຳໃຊ້ຢາເຄມີປາບສັດຕູພືດບໍ່? ( √ ) | |
| | | ຝຸ່ນ-ປຸຍຊີວະພາບ ( v ) | | ປຸຍເຄມີ ( v ) | | | |
| | | ໄດ້ໃຊ້ | ບໍ່ໄດ້ໃຊ້ | ໄດ້ໃຊ້ | ບໍ່ໄດ້ໃຊ້ | ໄດ້ໃຊ້ | ບໍ່ໄດ້ໃຊ້ |
| | ☐☐☐ | ☐ | ☐ | ☐ | ☐ | ☐ | ☐ |
| | ☐☐☐ | ☐ | ☐ | ☐ | ☐ | ☐ | ☐ |

**<u>ຄຳຖາມ 22</u>** ແມ່ນໃຫ້ກ່າຍພືດລົ້ມລຸກຈາກ ແບບຟອມ 4 ກ່ອນ ສຳພາດຄົວເຮືອນ. ລວມມີ ທັງພືດລະດູຝົນ ແລະ ລະດູແລ້ງ. ໃຫ້ ປະ ຫ້ອງສີ່ຫຼ່ຽມ ສຳລັບ ACO (ຫ້ອງການສຳຫຼວດສະຖິຕິກະສິກຳ) ຈະເປັນຈົດກ່າຍເຂົ້າ.

**<u>ຄຳຖາມ 23 ນີ້</u>** ແມ່ນ ຖາມ ກ່ຽວກັບ ການນຳໃຊ້ ຝຸ່ນ-ປຸຍ ໃນຊ່ວງລະດູຝົນ 2010 ແລະ ລະດູແລ້ງ 2010/11. ຄຳຕອບ ໄດ້ໃຊ້ ຫຼື ບໍ່ໄດ້ໃຊ້ ແຕ່ລະ ຂອງ ສອງຊະໜິດຝຸ່ນ-ປຸຍ: ຝຸ່ນ-ປຸຍຊີວະພາບ ແລະ ປຸຍເຄມີ.

ຈຸດປະສົງຂອງການສຳຫຼວດສະຖິຕິກະສິກຳທົ່ວປະເທດ, ປຸຍ ມີ ຊະໜິດ ເປັນເຄມີ ຫຼື ເປັນ ຊີວະພາບ, ທຳມະຊາດ ຫຼື ຜ່ານການປຸງແຕ່ງ, ຊຶ່ງນຳໃຊ້ເປັນທາດອາຫານຫຼໍ່ລ້ຽງພືດ. ຄຳວ່າ “ ປຸຍ “ ໂດຍປົກກະຕິ ນຳໃຊ້ ທາດຫຼໍ່ລ້ຽງ ຕົ້ນພືດ ຊຶ່ງບັນຈຸ ຢ່າງຕ່ຳ 5 ເປີເຊັນ ຂອງ ສາມທາດອາຫານບຳລຸງພື້ນຖານ ($N_2$ $P_2O_5$ ແລະ $K_2O$), ແຕ່ວ່າ ໃນການສຳຫຼວດສະຖິຕິກະສິກຳທົ່ວປະເທດ ຈະລວມເອົາ ຜະລິດຕະພັນ ເຊັ່ນ ປຸຍ ທຳມະຊາດ ຊຶ່ງອາດລວມມີ ຕ່ຳກວ່າ 5 ເປີເຊັນ ຂອງ ສາມທາດປະສົມຫຼໍ່ລ້ຽງຕົ້ນພືດດັ່ງກ່າວ. ສອງປະເພດ ຂອງ ປຸຍ-ຝຸ່ນ ນຳໃຊ້ ສຳລັບ ການປູກພືດ.

ປຸຍເຄມີ ແມ່ນ ໄດ້ມາຈາກວັດຖຸອະນົງຄະທາດ (Inorganic) ປຸງແຕ່ງຜ່ານຂະບວນການຂັ້ນຕອນທາງດ້ານອຸດສະຫະກຳການຜະລິດດັ່ງກ່າວເພີ້ມຄຸນຄ່າທາງດ້ານທາດບຳລຸງ, ບົດສ່ວນປະກອບລະອຽດງ່າຍດ່າຍ ຫຼື ປ່ຽນຮູບທາດເຄມີຂອງວັດຖຸໜຶ່ງ ຫຼື ຫຼາຍວັດຖຸເຂົ້າດ້ວຍກັນ. ປຸຍແຮ່ທາດແມ່ນປຸຍເຄມີ “ປຸຍທຽມ” ແລະ ປຸຍ“ອະນົງຄະທາດ”

ປຸຍອິນຊີແມ່ນປຸຍທີ່ຜະລິດຈາກ ຕົ້ນພືດຫຼື ມູນສັດ ແລະ/ຫຼື ບໍ່ໄດ້ປຸງແຕ່ງວັດຖຸແຮ່ທາດ (ເຊັ່ນ ປູນຂາວ, ທາດຫີນ ຫຼື ພົດຝັດສ. ອັນນີ້ລວມມີຝຸ່ນຄອກ ແລະ ສ່ວນປະສົມຂອງສານອິນຊີສຳລັບເປັນປຸຍ. ປຸຍຊີວະພາບ ຜະລິດຕະພັນບັນຈຸ ສິ່ງມີຊີວິດ ຫຼື ຈຸລະອິນຊີ ເຊັ່ນເຊື້ອແບກເຕເຣຍ (ເຊື້ອໂລກ) ແລະ ເຊື້ອລາ (ເຊັ່ນເຫດ) ໄດ້ລວມເຂົ້າໃນປຸຍອິນຊີດັ່ງກ່າວນີ້.

**<u>ຄຳຖາມ 24</u>**

ຖາມກ່ຽວກັບການນຳໃຊ້ເຄມີກະສິກຳ ຊ່ວງໄລຍະລະດູຝົນປີ 2010 ແລະ ລະດູແລ້ງສົກປີ 2010/11 ໃຫ້ຕອບ “ໄດ້ໃຊ້” ຫຼື “ບໍ່ໄດ້ໃຊ້”.

ເຄມີກະສິກຳແມ່ນ ວັດຖຸເພື່ອຫຼຸດຜ່ອນ, ຄວບຄຸມ ຫຼື ຈຳກັດສັດຕູພືດ ໃນພືດ ແລະ ສັດ. ສ່ວນໃຫຍ່ມັນແມ່ນຜະລິດເຄມີສັງເຄາະໃນຮູບເຂັ້ມນັ້ນ. ເຄມີກະສິກຳປະກອບມີຢາປາບສັດຕູພືດ, ຢາຂ້າແມງໄມ້(ເປັນສານເພື່ອຂ້າ ຫຼື ຂັບໄລ່ແມງໄມ້), ຢາຂ້າຫຍ້າ(ເປັນສານເພື່ອທຳລາຍ ຫຼື ຍັບຍັ້ງການຈະເລີນເຕີບໂຕຂອງເຊື້ອລາ) ແລະ ຢາຂ້າໜູ(ເປັນສານເພື່ອຂ້າ ຫຼື ຂັບໄລ່ ແລະ ຄວບຄຸມສັດປະເພດປະເພດມີແຂ້ວ

**<u>ຄຳຖາມ 25-26</u>**

ຈຸດປະສົງຂອງຄຳຖາມນີ້ແມ່ນຖາມຊາວກະສິກອນກ່ຽວກັບເງື່ອນໄຂຂອງການຜະລິດກະສິກຳ ທີ່ມີການປ່ຽນແປງໃນຊ່ວງ 10 ປີຜ່ານມາ.

| Q25 ເງື່ອນໄຂການຜະລິດກະສິກຳໃນ 12 ເດືອນຜ່ານມາ ທຽບໃສ່ 10 ປີຜ່ານມາເປັນຄືແນວໃດ? | | | |
|---|---|---|---|
| | ດີກວ່າ | ☐ | 1 |
| *ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)* | ເທົ່າເດີມ | ☐ | 2 |
| | ຫຼຸດລົງ | ☐ | 3 |
| | ບໍ່ຮູ້ | ☐ | 4 |

| Q26 ເງື່ອນໄຂການຜະລິດກະສິກຳ 3 ປີກ່ອນສົມທຽບໃສ່ 10 ປີຜ່ານມາເປັນຄືແນວໃດ? | | | |
|---|---|---|---|
| | ດີກວ່າ | ☐ | 1 |
| *ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)* | ເທົ່າເດີມ | ☐ | 2 |
| | ຫຼຸດລົງ | ☐ | 3 |
| | ບໍ່ຮູ້ | ☐ | 4 |

- **ຄຳຖາມ25** ຖາມເພື່ອສົມທຽບລະດູການຜະລິດສົກປີ 2010/11 ຜ່ານມາ 12 ເດືອນ ທຽບໃສ່ 10 ປີ ຫຼັງຜ່ານມາຄືແນວໃດ.

- **ຄຳຖາມ26** ຖາມເພື່ອສົມທຽບເງື່ອນໄຂການຜະລິດ 3 ປີ ກ່ອນຜ່ານມາທຽບໃສ່ 10 ປີ ຜ່ານມາເປັນແນວໃດ.

ທັງ ສອງຄຳຖາມໃຫ້ໝາຍຕົນກາໃສ່ **ໜຶ່ງ** ຫ້ອງສີ່ລ່ຽມອີງຕາມຄຳຕອບຂອງຜູ້ຕອບຄິດວ່າເງື່ອນໄຂດັ່ງກ່າວ ດີກວ່າ, ເທົ່າເດີມ ຫຼື ຫຼຸດລົງ, ຫຼື ລາວບໍ່ຮູ້.

ເງື່ອນໄຂຂອງການຜະລິດກະສິກຳ ໝາຍເຖິງມີອັນໃດອັນໜຶ່ງມີຜົນກະທົບຕໍ່ການຜະລິດກະສິກຳ ເຊັ່ນ ດິນຟ້າອາກາດ, ໄພທຳມະຊາດ, ສັດຕູພືດ ແລະ ເງື່ອນໄຂຂອງດິນປູກ. ຄຳຖາມນີ້ອີງໃສ່ຜົນຜະລິດພືດຜ່ານມາ. ເງື່ອນໄຂການຜະລິດກະສິກຳອາດມີຜົນຮ້າຍແຮງ, ເຖິງແມ່ນວ່າການຜະລິດພືດໄດ້ດີຂຶ້ນ ຫຼື ຫຼຸດລົງ: ຜະລິດຕະພາບອາດດີຂຶ້ນເນື່ອງຈາກໄດ້ນຳໃຊ້ແນວພັນທີ່ດີ ຫຼື ນຳໃຊ້ເຕັກນິກການຜະລິດທີ່ດີ ເຖິງວ່າຜົນຕົກໜ້ອຍກໍ່ຕາມ ຫຼື ດິນອຸດົມສົມບູນໄປດ້ວຍທາດບຳລຸງພືດ ຄຳຖາມຍັງອີງໃສ່ເງື່ອນໄຂການລ້ຽງສັດອີກດ້ວຍ. ດ້ວຍເຫດນີ້ ເງື່ອນໄຂການລ້ຽງສັດອາດບໍ່ໄດ້ (ຫຼຸດລົງ) ຖ້າ, ຕົວຢ່າງ: ຄຸນະພາບຂອງທົ່ງຫຍ້າຫຼຸດລົງ ຍ້ອນມີຝົນຕົກໜ້ອຍ.

## 9.6 ພືດຢືນຕົ້ນ

ພາກສ່ວນໜຶ່ງຂອງໃບສອບຖາມ ແມ່ນຖາມຈຳນວນຕົ້ນໄມ້ຂອງພືດຢືນຕົ້ນແຕ່ລະຊະນິດພືດຢືນຕົ້ນລາຍງານໃນແບບຟອມ 4. Q27 ໃຫ້ລຽງບັນຊີລາຍຊື່ພືດຢືນຕົ້ນລາຍໄວ້ໃນຟອມ 4.

| Q27 | | Q28 | | Q29 | |
|---|---|---|---|---|---|
| *ໃຫ້ຈົດກ່າຍລາຍຊື່ພືດຢືນຕົ້ນຢູ່ໃນຄຳຖາມທີ Q19 ຂອງຟອມສອບຖາມ F4* | | ການປູກແບບກະແຈກກະຈາຍ | | ປູກເປັນລະບຽບ, ເປັນສວນ | |
| | | (Q28a) ຈຳນວນ ຕົ້ນໄມ້ທັງໝົດ | (Q28b) ຈຳນວນຕົ້ນໄມ້ ທີ່ໃຫ້ຜົນຜະລິດ | (Q29a) ຈຳນວນ ຕົ້ນໄມ້ທັງໝົດ | (Q29b) ຈຳນວນຕົ້ນໄມ້ ທີ່ໃຫ້ຜົນຜະລິດ |
| ຊື່ພືດຢືນຕົ້ນແຕ່ລະຊະນິດ | ACO | | | | |
| | | | | | |

### ຄຳຖາມ 27-29

ຄຳຖາມ27 ແມ່ນໃຫ້ກ່າຍຈາກແບບຟອມ 4 ປະຫ້ອງສີ່ລ່ຽມໃຫ້ ACO ເປັນຜູ້ປະກອບຂໍ້ມູນໃສ່ເອງ.

ຄຳຖາມ 28-29 ເລົ່ານີ້ ຖາມກ່ຽວຈຳນວນຕົ້ນໄມ້ທັງໝົດ ແລະ ໃນຈຳນວນທີ່ໃຫ້ຜົນຜະລິດ ໃນເງື່ອນໄຂ ຂອງສະພາບການປູກເປັນສວນ ຫຼື ປູກກະແຈກກະຈາຍ. ໃຫ້ເບິ່ງພາກນິຍາມກ່ຽວກັບພືດຢືນຕົ້ນ ແລະ ນິຍາມກ່ຽວກັບ ການປູກເປັນສວຍ ຫຼື ປູກກະແຈກກະຈາຍບໍ່ເປັນລະບຽບ.

ພືດຢືນຕົ້ນທີ່ໃຫ້ຜົນຜະລິດ ອີງໃສ່ພືດຢືນຕົ້ນໃຫ້ຜົນຜະລິດ ເປັນໝາກແລ້ວ ຫຼື ມີຜົນຜະລິດງອກງາມໃຫ້ຜົນ ຜະລິດພືດແມ່ນຊ່ວງໄລຍະເດີນສຳຫຼວດໃຫ້ຜົນຜະລິດ. ພືດ ແມ່ນຊ່ວງໄລຍະເດີນສຳຫຼວດກໍ່ຄືຊ່ວງອາຍຸໃຫ້ ຜົນ ຜະລິດ ຖ້າຫາກວ່າຍ້ອນສະພາບອາກາດ ຫຼື ເຫດຜົນອື່ນຕົ້ນໄມ້ເລົ່ານັ້ນຍັງບໍ່ເປັນໝາກດີ ໃນລະດູການສ່ວນໃຫຍ່ທີ່ ຜ່ານມາ ຕົນໄມ້ອາຍຸແກ່ ຫຼື ຕົ້ນໄມ້ ຊ່ວງອາຍຸໃຫ້ຜົນຜະລິດ, ແຕ່ວ່າບໍ່ໃຫ້ຜົນຜະລິດຕະຫຼອດ, ກໍລະນີນີ້ ຖືວ່າບໍ່ໃຫ້ຜົນ ຜະລິດ.

## 9.7 ສັດລ້ຽງ

ຈຸດປະສົງຂອງຄຳຖາມນີ້ ແມ່ນພາກສ່ວນໜຶ່ງຂອງໃບສອບຖາມເພື່ອຊອກຮູ້ປະເພດສັດ ແລະ ຄຸນລັກສະນະ ຂອງມັນ. ອັນນີ້ຊ່ວຍໃຫ້ເຂົ້າໃຈໂຄງສ້າງຂອງຝູງສັດ ແລະ ສາຍພົວພັນລະຫວ່າງດິນ ແລະ ສັດລ້ຽງ.

ໃນແບບສອບຖາມຟອມ 4 ຄົວເຮືອນໄດ້ຖືກຖາມ ເພື່ອລາຍງານຈຳນວນສັດລ້ຽງແຕ່ລະປະເພດ. ໃນແບບສອບຖາມ ຟອມ 5 ມີຂໍ້ມູນລາຍລະອຽດ ເພື່ອເກັບກຳຄຸນລັກສະນະຂອງສັດແຕ່ລະປະເພດ. ໂຄງສ້າງຂອງພາກສ່ວນໃບສອບ ຖາມແມ່ນງ່າຍດາຍເພື່ອຕິດຕາມ: ທຳອິດ, ງົວໃຫ້ລາຍງານຕາມຄຳຖາມ (Q30-Q37), ຕໍ່ຈາກນັ້ນ, ສັດລ້ຽງປະເພດ ອື່ນໆຕາມລຳດັບ.ໂຄງສ້າງຂອງຄຳຖາມ ແຕ່ລະສັດລ້ຽງຄ້າຍຄືກັນ.

ກ່ອນເລີ້ມຕົ້ນສຳພາດ, ທ່ານຄວນຈົດກ່າຍຂໍ້ມູນສັດລ້ຽງ ຈາກໃບສອບຖາມຟອມ 4 ດັ່ງທີ່ໄດ້ອະທິບາຍໄປແລ້ວໃນຂໍ້ 7.2.

| Q30 ໃຫ້ຈົດກ່າຍຈຳນວນງົວທັງໝົດໂດຍກົງຈາກຄຳຖາມ Q22 ຢູ່ໃນໃບສອບຖາມ F4 | | | | ໂຕ |
|---|---|---|---|---|
| ປະເພດງົວ | ອາຍຸ | ໃນນັ້ນມີງົວ....: | Q31 ໂຕຜູ້ຈັກໂຕ? | Q32 ໂຕແມ່ຈັກໂຕ? |
| | | | ໂຕ | ໂຕ |
| Q33 ພັນພື້ນເມືອງຈັກໂຕ? | 1. | 2 ປີຂຶ້ນໄປ | ໂຕ | ໂຕ |
| | 2. | 1-2ປີ | ໂຕ | ໂຕ |
| | 3. | ຕໍ່າກວ່າ 1 ປີ | ໂຕ | ໂຕ |
| Q34 ພັນປະສົມ ຈັກໂຕ? | 1. | 2 ປີຂຶ້ນໄປ | ໂຕ | ໂຕ |
| | 2. | 1-2ປີ | ໂຕ | ໂຕ |
| | 3. | ຕໍ່າກວ່າ 1 ປີ | ໂຕ | ໂຕ |

**ຄຳຖາມ 30-34:**

**<u>ຄຳຖາມ 30</u>** ໃຫ້ກ່າຍຈາກແບບຟອມ 4 ກ່ອນສຳພາດ

**<u>ໃນຄຳຖາມ 31-34</u>** ເລົ່ານີ້ ທ່ານຄວນສອບຖາມກ່ຽວກັບຈຳນວນງົວແບ່ງຕາມອາຍຸ, ເພດ ແລະ ແນວພັນ (ພັນພື້ນ ເມືອງ, ພັນປະສົມ).

ພຽງຖາມຄຳຖາມນີ້ ຖ້າງົວມີໃນຄຳຖາມ Q30; ຖ້າບໍ່ມີງົວໃຫ້ເຕັ້ນໄປຄຳຖາມ Q38 ກຸ່ມອາຍຸສັດ

- ແຕ່ 2 ປີຂຶ້ນໄປ
- 1-2 ປີ, ແຕ່ 1ປີ ຫຼື ຫຼາຍກວ່າແຕ່ຕ່ຳກວ່າ 2 ປີ
- ອາຍຸຕ່ຳກວ່າ 1 ປີ

ໃຫ້ກວດເບິ່ງຈຳນວນສັດລ້ຽງໃນແຕ່ລະປະເພດ ອາຍຸ/ເພດ/ແນວພັນຖ້າບວກລວມກັນແລ້ວ ຕ້ອງ ເທົ່າກັບ ຈຳນວນ ສັດລ້ຽງລວມ. ຖ້າບໍ່ດັ່ງນັ້ນ, ຄວາມຜິດພາດອາດໜຶ່ງໃນສອງເຫດຜົນ:

- ຈຳນວນງົວທັງໝົດໃນແບບຟອມ 4 ອາດຈົດກ່າຍບໍ່ຖືກ. ຖ້າບໍ່ດັ່ງນັ້ນ, ແປງຄືນຈຳນວນດັ່ງກ່າວໃນ Q30 ບໍ່ຄວນແປງໃນແບບຟອມ 4
- ຈຳນວນງົວລວມຖືກຕ້ອງແຕ່ຈຳນວນງົວໃນແຕ່ລະປະເພດກຸ່ມອາຍຸ/ເພດ/ກຸ່ມແນວພັນຕ່າງໆ ອາດ ບໍ່ຖືກຕ້ອງຈຳນວນໃນ Q31-Q34 ບວກຕາມລຳດັບລາຍລະອຽດ ກ່ຽວກັບການລ້ຽງງົວໝາຍເຖິງ, ໃຫ້ ອີງໃສ່ ຂໍ້ 3.8

ລາຍງານຈຳນວນສັດລ້ຽງໃນມື້ເດີນສຳຫຼວດ.

**<u>ງົວພັນປະສົມແມ່ນງົວພັນ</u>**...ແມ່ນງົວພັນທີ່ນຳເຂົ້າມາຈາກ ຕ່າງປະເທດ ຫຼື ແມ່ນງົວພັນທີ່ ເກີດ ຈາກ ພໍ່ແມ່ ພັນແທ້ ໃນປະເທດ ເຊັ່ນ ງົວພັນປັບປຸງໂດຍມີສາຍເລືອດປະສົມຕັ້ງແຕ່ 2 ສາຍພັນ ຂຶ້ນໄປ ຕົວຢ່າງ: ງົວພັນປະສົມ ຣາມັນ-ພື້ນເມືອງ. . . .

**ຄຳຖາມ 35:**

ຄຳຖາມນີ້ແມ່ນຖາມກ່ຽວກັບຈຸດປະສົງຂອງການລ້ຽງງົວ.ມັນອາດມີ 1 ຫຼື ຫຼາຍຈຸດປະສົງ, ສະນັ້ນ ໝາຍຕິກກາ ໃສ່ ຫ້ອງສີ່ລ່ຽມ 1 ຫຼື ຫຼາຍຄັ້ງ.

ຄຳຖາມ ແມ່ນ ອີງໃສ່ ສະເພາະ ງົວ ທີ່ລາຍງານ ໃນ ຄຳຖາມທີ່ບອກເຫດຜົນ ຂອງຄົວເຮືອນລ້ຽງງົວທີ່ໄດ້ ລະບຸ ໄວ້ ໃນ ຄຳຖາມ Q30-Q34;




ແມ່ນຄຳຖາມທີ່ບອກເຫດຜົນຂອງຄົວເຮືອນລ້ຽງງົວທີ່ໄດ້ລະບຸໃນຄຳຖາມ Q30-Q34 ສັດລ້ຽງໂຕດຽວ ອາດນຳໃຊ້ 2 ຈຸດປະສົງ; ຖ້າດັ່ງນັ້ນ, ໃຫ້ໝາຍຕິກກາໃສ່ 2 ຫ້ອງ ສີ່ລ່ຽມຂອງຄຳຕອບ.

<u>ສັດລາກແກ່:</u> ແມ່ນບັນດາສັດນຳໃຊ້ຊ່ວຍເຂົ້າໃນການຜະລິດກະສິກຳງົວລາກແກ່ ນຳໃຊ້ສະເພາະກຽມດິນ ຫຼື

ຂົນສົ່ງຜະລິດຕະພັນກະສິກຳ, ແຕ່ອາດນຳໃຊ້ເພື່ອກິດຈະກຳກະສິກຳອື່ນ ເຊັ່ນ: ການຟາດ/ນວດເຂົ້າ ແລະ ຂົນສົ່ງນ້ຳ.່ວມເອົາພຽງນຳໃຊ້ສັດລາກແກ່ ຈຸດປະສົງກະສິກຳເລົ່ານັ້ນ.

**ຄຳຖາມ 36:**

ຄຳຖາມນີ້ແມ່ນຖາມກ່ຽວກັບຈຳນວນງົວທີ່ລ້ຽງເພື່ອໃຫ້ນົມ. ຄຳຖາມອີງໃສ່ສະເພາະຈຳນວນງົວລາຍ ງານໃນຄຳຖາມ Q30-Q34; ນັ້ນແມ່ນມີງົວເທົ່າໃດທີ່ລ້ຽງເພື່ອໃຫ້ນ້ຳນົມງົວ. ໝາຍເຫດ ມີຄວາມ ໝາຍຕ່າງໆຈາກແນວຄວາມໃນຄຳຖາມ Q35. ໃນຄຳຖາມ Q36b ຖາມ ວ່າ ງົວ ທີ່ໃຫ້ນົມປະຈຸປັນມີຈັກໂຕງົວແມ່ລ້ຽງ ເພື່ອຈຸດປະສົງເອົາ ນ້ຳນົມ

| | | | | |
|---|---|---|---|---|
| Q36 | ປະຈຸບັນງົວທີ່ໃຫ້ນົມ ແລະນຳໃຊ້ລາກແກ່ມີຫຼາຍປານໃດ? | | | |
| | Q36a | ງົວໃຫ້ນົມມີຈັກໂຕ? | | ໂຕ |
| | Q36b | ງົວໃຊ້ລາກແກ່ມີຈັກໂຕ? | | ໂຕ |

ແຕ່ບໍ່ແມ່ນງົວທີ່ໃຫ້ນ້ຳນົມເວລາເດີນສຳຫຼວດເກັບກຳຂໍ້ມູນ; ສະນັ້ນ, ບໍ່ຄວນຈົດນັບໃສ່ຄຳຖາມ Q36a.
ຄຳຖາມ Q36b: ຄຳຖາມນີ້ຖາມກ່ຽວກັບຈຳນວນງົວທີ່ເໝາະສົມນຳໃຊ້ ຈຸດປະສົງ ເປັນແຮງງານສັດ ລາກແກ່. ຄຳຖາມ ແມ່ນອີງໃສ່ຈຳນວນງົວທີ່ລາຍງານໃນ Q30-Q34; ປະຈຸບັນມີງົວຈຳນວນຈັກໂຕນຳ ໃຊ້ເປັນສັດລາກແກ່.

**ຄຳຖາມ 37:**

ໝາຍຕົນກາ "ໄດ້ຮັບ" ຫຼື "ບໍ່ໄດ້ຮັບ" ໃສ່ຫ້ອງສີ່ລ່ຽມສອດຄອງກັນວ່າຄົວເຮືອນດັ່ງກ່າວ ໄດ້ສັກຢາວັກຊີນ/ຢາປ້ອງກັນຫຼືບໍ່ ໃນໄລຍະ 12 ເດືອນຜ່ານມາ.

<u>ສັກວັກຊີນ</u>:

ໝາຍເຖິງການດູແລສັດລ້ຽງດ້ວຍການຄວບຄຸມ ຫຼື ຈຳກັດພະຍາດ. ຈຸດປະສົງຄຳຖາມນີ້ ເພື່ອຢາກ ຮູ້ວ່າຄົວເຮືອນໄດ້ເຂົ້າເຖິງການບໍລິການສັກຢາປ້ອງກັນ ພະຍາດ ແລະ ສະນັ້ນ "ໄດ້ຮັບ"

| | | | |
|---|---|---|---|
| Q37 | ໃນ12ເດືອນຜ່ານມາງົວຂອງທ່ານໄດ້ຮັບການສັກຢາວັກຊີນບໍ່? | | |
| | *ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)* | ໄດ້ຮັບ | 1 |
| | | ບໍ່ໄດ້ຮັບ | 2 |

ໃຫ້ໝາຍໃສ່, ເຖິງແມ່ນວ່າຄົວເຮືອນໄດ້ສັກຢາໃຫ້ງົວບາງຈຳນວນເທົ່ານັ້ນ. ສະແດງວ່າງົວ ທີ່ໄດ້ຮັບການສັກຢາວັກຊີນ ຖ້າການສັກຢາວັກຊີນຜ່ານມາແລ້ວ ໃນ 12 ເດືອນ ຜ່ານມາ ເຖິງວ່າຂໍ້ມູນຍັງບໍ່ທັນສະພາບການໃໝ່ກໍ່ຕາມ.

**ຄຳຖາມ 38-44: (ຄວາຍ)**

ຄຳຖາມເລົ່ານີ້ ອີງໃສ່ຄວາຍທີ່ລ້ຽງໂດຍຄົວເຮືອນ ຄຳຖາມຄ້າຍຄືກັບການຖາມງົວໃນຄຳຖາມ Q30-Q37

<u>ໝາຍເຫດ:</u> ອາຍຸ 1 ປີ ຫຼື ຕ່ຳກວ່າ 2 ປີ (1-2 ປີ)

ໝາຍເຖິງອາຍຸຄວາຍແຕ່ 1 ປີ ຫາ ຕ່ຳກວ່າ 2 ປີ

"2-3ປີ " ໝາຍເຖິງອາຍຸ 2ປີ ຫຼື ຫາຕ່ຳກວ່າ 3 ປີ

### ຄຳຖາມ 45-50: (ໝູ)

ຄຳຖາມເລົ່ານີ້ອີງໃສ່ຈຳນວນໝູທີ່ລ້ຽງໂດຍຄົວເຮືອນ. ຄຳຖາມຄ້າຍຄືກັນກັບ ຈຳນວນງົວໃນຄຳຖາມ Q30- Q37 ຂ້າງເທິງ.

ໝາຍເຫດຕໍ່ໄປນີ້:

- ໝູແບ່ງອາຍຸອອກເປັນ 3 ກຸ່ມອາຍຸ. ໝາຍເຫດ “3-9 ເດືອນ” ໝາຍເຖິງອາຍຸ 3 ເດືອນ ຫຼື ຫຼາຍກວ່າ ແຕ່ ຕ່ຳກວ່າ 9 ເດືອນ.
- ລາຍການກ່ຽວກັບແນວພັນສັດ, ນຳໃຊ້ຕົ້ນຕໍເພື່ອລ້ຽງເປັນງົວນົມ ແລະ ສັດລາກແກ່ແຕ່ໝູຈະບໍ່ຖາມແນວພັນ.

### ຄຳຖາມ 51-55: (ແບ້)

ຄຳຖາມເລົ່ານີ້ ອີງໃສ່ຈຳນວນແບ້ທີ່ລ້ຽງໂດຍຄົວເຮືອນ. ຄຳຖາມແມ່ນຄ້າຍຄືກັບງົວໃນຄຳຖາມ Q30-Q37 ຂ້າງເທິງໝາຍເຫດລຸ່ມນີ້:

- ແບ້ ແບ່ງອອກເປັນ 3 ກຸ່ມອາຍຸ. ໝາຍເຫດ “3-9 ເດືອນ” ໝາຍເຖິງ ມີອາຍຸ 3 ເດືອນ ຫຼື ຫຼາຍກວ່າ ແຕ່ຕ່ຳກວ່າ 9 ເດືອນ.
- ລາຍການກ່ຽວກັບແນວພັນ, ລ້ຽງເອົານົມ ແລະ ສັດລາກແກ່ແມ່ນບໍ່ໄດ້ຖາມເລີຍ.

### ຄຳຖາມ 56-60: (ແກະ)

ຄຳຖາມເລົ່ານີ້ອີງໃສ່ ຈຳນວນແກະທີ່ລ້ຽງໂດຍຄົວເຮືອນ. ຄຳຖາມແມ່ນອັນດຽວກັນກັບຖາມແບ້ເຊັ່ນຢູ່ ຄຳ ຖາມ Q51-Q55 ຂ້າງເທິງ

### ຄຳຖາມ 61-63:

| | | | | | | | | |
|---|---|---|---|---|---|---|---|---|
| Q61 | ໃຫ້ກ່າຍຈຳນວນໄກ່ລາດຈາກຄຳຖາມ Q22 ຢູ່ໃບສອບຖາມ F4 | | ໂຕ | ໃນນັ້ນ: | ➡ | 1. ໄກ່ນ້ອຍ | | ໂຕ |
| | | | | | | 2. ໄກ່ແມ່ໄຂ່ | | ໂຕ |
| | | | | | | 3. ໄກ່ໃຫຍ່ອື່ນ | | ໂຕ |
| Q62 | ໃຫ້ກ່າຍຈຳນວນໄກ່ພັນຈາກຄຳຖາມ Q22 ຢູ່ໃບສອບຖາມ F4 | | ໂຕ | ໃນນັ້ນ: | ➡ | 1. ໄກ່ພັນຊີ້ນ | | ໂຕ |
| | | | | | | 2. ໄກ່ພັນໄຂ່ | | ໂຕ |
| Q63 | ໃຫ້ກ່າຍຈຳນວນເປັດຈາກຄຳຖາມ Q22 ຢູ່ໃບສອບຖາມ F4 | | ໂຕ | ໃນນັ້ນ: | ➡ | 1. ເປັດລາດ | | ໂຕ |
| | | | | | | 2. ເປັດເທດ | | ໂຕ |

ຄຳຖາມເລົ່ານີ້ ກວມເອົາສັດປີກ 3 ປະເພດ: ໄກ່ລາດໃນຄຳຖາມ Q61-Q62; ໄກ່ພັນໃນຄຳຖາມ Q60; ແລະ ເປັດໃນຄຳຖາມ Q64ໃນນີ້ຈຳນວນສັດປີກຂອງ 3 ປະເພດ ສັດປີກ ກ່າຍຈາກ ແບບຟອມ 4 ກ່ອນເລີ້ມສຳພາດ (ໃຫ້ເບິ່ງ ຂໍ້ 7.2) ໄດ້ແຍກສັດປີກອອກເປັນກຸ່ມລຸ່ມນີ້:

- Q61: ໄກ່ລາດ - ຈຳນວນໄກ່ນ້ອຍ, ໄກ່ແມ່ໄຂ່ ແລະ ໄກ່ໃຫຍ່ອື່ນໆ
- Q62: ໄກ່ພັນ - ຈຳນວນໄກ່ພັນຊີ້ນ ແລະ ໄກ່ພັນໄຂ່
- Q63: ເປັດ - ຈຳນວນເປັດລາດ ແລະ ຈຳນວນເປັດເທດ.

**ຄຳຖາມ 64:**

ຄຳຖາມນີ້ຖາມກ່ຽວກັບ ການສັກຢາປ້ອງກັນ ໃຫ້ສັດປີກຊ່ວງໄລຍະ 12 ເດືອນຜ່ານມາ. ອີງໃສ່ຄຳຖາມ Q31-Q34 ລາຍລະອຽດກ່ຽວກັບ ຄວາມໝາຍ ສັກຢາວັກຊີນ. ໝາຍຕິບກາ "ໄດ້ຮັບ" ຖ້າມີ ສັດ ປີກໃດໜຶ່ງ ໄດ້ຮັບການສັກຢາວັກຊີນໃນຊ່ວງໄລ ຍະອ້າງອີງ.

| Q64 ໃນ12ເດືອນຜ່ານມາສັດປີກຂອງທ່ານໄດ້ຮັບການສັກຢາວັກຊີນບໍ່? | | | |
|---|---|---|---|
| ເລືອກໄດ້ນຶ່ງຄຳຕອບ(ໝາຍ√) | ໄດ້ຮັບ | ☐ | 1 |
| | ບໍ່ໄດ້ຮັບ | ☐ | 2 |

**ຄຳຖາມ 65**

ຄຳຖາມນີ້ຖາມກ່ຽວກັບກິດຈະກຳນຳໃຊ້ສັດລາກແກ່ປະເພດໃດຄຳຖາມນີ້ຕ້ອງກັບຄືນ ກ່ຽວຂ້ອງກັບຄຳຖາມ Q43b (ຄວາຍ) ໝາຍຕິບກາໃສ່ຫ້ອງສີ່ລ່ຽມໜຶ່ງ ຫຼື ພາຍຫຼັງຂອງແຕ່ລະປະເພດສັດລາກແກ່.

| Q65 ການນຳໃຊ້ສັດລາກແກ່ເຂົ້າໃນກິດຈະກຳກຳສິກຳມີຫຍັງແດ່? | | | ກະກຽມດິນ | ຂົນສົ່ງ | ອື່ນໆ |
|---|---|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ(ໝາຍ√) | ຖ້າຫາກມີສັດລາກແກ່ຢູ່ໃນຄຳຖາມ **Q36b, Q43b** ໃຫ້ໝາຍ√ ລະບຸການນຳໃຊ້ສັດແຕ່ລະກິດຈະກຳ ➡ | **1.** ງົວ | ☐ **11** | ☐ **12** | ☐ **13** |
| | | **2.** ຄວາຍ | ☐ **21** | ☐ **22** | ☐ **23** |
| | | **3.** ມ້າ | ☐ **31** | ☐ **32** | ☐ **33** |
| | | **4.** ສັດອື່ນໆ | ☐ **41** | ☐ **42** | ☐ **43** |

**ຄຳຖາມ 66:**

ຄຳຖາມນີ້ຖາມກ່ຽວກັບປະເທດ ອາຫານສັດລ້ຽງ ທີ່ ຄົວເຮືອນ ນຳໃຊ້ໄລຍະ 12 ເດືອນ ຜ່ານມາ ໝາຍ ຕິບກາ ໜຶ່ງ ຫຼື ຫຼາຍກວ່າໜຶ່ງຫ້ອງ. ອາດ ມີຫຼາຍ ປະເພດອາຫານ ທີ່ນຳໃຊ້ຊ່ວງໄລຍະອ້າງ ອີງຜ່ານມາ; ຕົວຢ່າງ: ສັດກິນຫຍ້າ ໃນ ລະດູຮ້ອນ ແຕ່ຕ້ອງການ ອາຫານ ສັດ ເພື່ອ ໃນລະດູໜາວ.

| Q66 ມີອາຫານປະເພດໃດແດ່ທີ່ທ່ານໃຊ້ລ້ຽງສັດ? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ(ໝາຍ√) | ຫຍ້າທຳມະຊາດ | ☐ | 1 |
| | ຫຍ້າປູກ (ຫຍ້າພັນ) | ☐ | 2 |
| | ຮຳ ແລະ ກາກພືດ | ☐ | 3 |
| | ເຂົ້າ-ເຂົ້າເປືອກ | ☐ | 4 |
| | ເຟືອງ, ຫຍ້າແຫ້ງ. | ☐ | 5 |
| | ຫົວອາຫານສຳເລັດຮູບ | ☐ | 6 |
| | ເຜືອກມັນ | ☐ | 7 |
| | ອື່ນໆ | ☐ | 8 |

## 9.8 ກົນຈັກກະສິກຳ (ຄຳຖາມ 67-68)

**Q67 ແລະ Q68 ແມ່ນຖາມກ່ຽວກັບ ກົນຈັກກະສິກຳ. ມັນມີ ສອງຄວາມໝາຍ ກ່ຽວກັບ ກົນຈັກ ກະສິກຳ. Q67 ຖາມກ່ຽວກັບ ຄົວເຮືອນໄດ້ນຳໃຊ້ກົນຈັກ ໃນ ຊ່ວງໄລຍະ 12 ເດືອນຜ່ານມາ. Q68 ຖາມ ກ່ຽວກັບ ກົນຈັກ ທີ່ມີ ເປັນ ເຈົ້າຄອງ ໂດຍຄົວເຮືອນ.**

**ຄຳຖາມ 67:**

ໃຫ້ໝາຍ ຕີນກາ ໃສ່ “ໄດ້ນຳໃຊ້” ຫຼື ”ບໍ່ໄດ້ນຳໃຊ້” ໃນແຕ່ລະລາຍການ ກົນຈັກກະສິກຳ ທີ່ ຄົວເຮືອນ ໄດ້ ນຳໃຊ້ ຫຼື ບໍ່ ໄດ້ນຳໃຊ້ ເພື່ອ ຈຸດປະສົງທາງດ້ານກະສິກຳ ໃນ ຊ່ວງ 12 ເດືອນຜ່ານມາ; ຊຶ່ງແມ່ນ ລະດູຝົນ ປີ 2010 ແລະ ລະດູແລ້ງ 2010/11.

ກົນຈັກກະສິກຳ ໝາຍເຖິງ ເຄື່ອງມື ທີ່ມີແຮງຊຸກດັນ ໂດຍ ໄຟຟ້າ, ນ້ຳມັນ, ໝໍ້ໄຟ, ລົມ ຫຼື ນ້ຳ, ຫຼື ອຸປະກອນ ນຳໃຊ້ ກັບ ເຄື່ອງປະດິດຂຶ້ນອື່ນໆ (ເຊັ່ນ ຈານຄາດລົດໄຖ. . .). ມັນຈະບໍ່ລວມເອົາອຸປະກອນ ນຳໃຊ້ ດ້ວຍມື ຫຼື ແຮງງານສັດ ເຊັ່ນ ນຳໃຊ້ສັດກຽມດິນ ແລະ ສີດຢາຂ້າແມງໄມ້ດ້ວຍມື. ລວມທັງກົນຈັກນຳໃຊ້ພຽງສ່ວນນຶ່ງ ສຳລັບຈຸດປະສົງວຽກງານກະສິກຳ (ເຄື່ອປັ່ນໄຟ). ບໍ່ລວມເອົາ ປະເພດ ກົນຈັກ ນຳໃຊ້ ທັງໝົດ ບໍ່ ແມ່ນ ຈຸດປະສົງໃນວຽກງານກະສິກຳ. ບໍ່ລວມເອົາກົນຈັກ ໃນສະພາບທີ່ ເປເພໃຊ້ບໍ່ໄດ້.

ກົນຈັກນຳໃຊ້ໂດຍຄົວເຮືອນ ບາງກໍລະນີ ບໍ່ແມ່ນ ເປັນຂອງຕົນເອງຂອງຄົວເຮືອນ ຫຼື ອາດຈະຢືມ ຫຼື ເຊົ່າ ຈາກຜູ້ອື່ນ. ໃຫ້ ບັນທຶກ ໃນ ຄຳຖາມ Q67 ກົນຈັກທັງໝົດ ທີ່ນຳໃຊ້ ໃນ 12 ເດືອນ ຜ່ານມາ, ບໍ່ຄຳນຶ່ງເຖິງວ່າ ເປັນຂອງຕົນເອງ ຫຼື ບໍ່ກໍ່ຕາມ. 12 ເດືອນ ຜ່ານມາ ໝາຍເຖິງ ລະດູຝົນ 2010 ແລະ ລະດູແລ້ງ 2010/11, ຖ້າ ມີ ລາຍງານຂອງກົນຈັກກະສິກຳບໍ່ໄດ້ ຂຽນໄວ້, ກະລຸນາ ລະບຸຊຽນຊື່ ແຈ້ງໃສ່ ຖັນ ທີ່ ກ່ຽວຂ້ອງ.

**ຄຳຖາມ 68:**

ໃຫ້ໝາຍຕີນກາ “ຂອງຕົນເອງ” ຫຼື ” ບໍ່ແມ່ນຂອງຕົນເອງ” ໃນ ແຕ່ລະລາຍການກົນຈັກ ກະສິກຳ ອີງຕາມ ເຄື່ອງກົນຈັກນັ້ນ ເປັນຂອງຕົນເອງ. ໃຫ້ ອີງໃສ່ ຄຳແນະນຳ ສຳລັບ ຄຳຖາມ 67 ສຳລັບ ນິຍາມ ກົນຈັກ ກະສິກຳ. ໃຫ້ ລາຍງານ ການເປັນເຈົ້າຂອງ ອີງໃສ່ ໃນ **<u>ມື້ ເດີນສຳຫຼວດ</u>**.

Q68 ອີງຕາມຄວາມເປັນເຈົ້າຂອງ, ຢ່າງໃດກໍ່ຕາມ ຄົວເຮືອນໄດ້ນຳໃຊ້ກົນຈັກຂອງຕົນເອງ; ດ້ວຍເຫດນີ້, “ບໍ່ໄດ້ນຳໃຊ້” ໃຫ້ໝາຍຕີນກາ ໃນ ຄຳຖາມ Q67 ແລະ “ເປັນຂອງຕົນເອງ” ໃຫ້ ໝາຍຕີນກາ ໃນ ຄຳຖາມ Q68. ໃຫ້ ລວມເອົາພຽງ ສະເພາະກົນຈັກກະສິກຳ ທີ່ ໃນສະພາບເງື່ອນໄຂນຳໃຊ້ໄດ້. ຖ້າຄົວເຮືອນ ໄດ້ນຳໃຊ້ ຫຼາຍລາຍການກົນຈັກກະສິກຳ, ແຕ່ໃນນັ້ນ ອາດມີພຽງບາງສ່ວນ ເປັນ ຂອງ ຕົນເອງ, ໃຫ້ ໝາຍ ຕີນກາ “ເປັນຂອງຕົນເອງ” ໃນ ຄຳຖາມ Q68.

## 9.9. ການບໍລິການ ແລະ ການປະຕິບັດດ້ານການກະສິກຳ

**ຄຳຖາມ 69-71:**

ໃຫ້ຫມາຍ “ √ “ ຢູ່ໃນກ່ອງ “ ໄດ້ຂາຍ ” ຫລື “ ບໍ່ໄດ້ຂາຍ ” ໃນແຕ່ລະຄຳຖາມ ຕາມແຕ່ລະກໍລະນີຂອງຄົວເຮືອນທີ່ໄດ້ຂາຍ ຜົນຜະລິດຂອງເຈົາເຈົ້າ ໃນໄນລະປີ 2010/2011

- Q69 ຂາຍຜົນຜະລິດເຂົ້າ
- Q70 ຂາຍຜົນຜະລິດພືດ
- Q 71 ຂາຍສັດລ້ຽງ

<u>ການຂາຍ</u> ຫມາຍຄວາມວ່າການຂາຍເພື່ອແລກເອົາເງິນສົດ. ການຂາຍເພື່ອແລກປ່ຽນເອົາສິນຄ້າ ຫລື ວັດຖຸສິ່ງ ຂອງ ໃດ ຫນຶ່ງ ບໍ່ຖືວ່າແມ່ນການຂາຍ. ການຂາຍຜະລິດຕະພັນ ກະສິກຳ ແມ່ນມີຫລາຍຮູບແບບ: ຂາຍແບບຜູກພັນ ສັນຍາ, ຂາຍຍົກໃຫ້ພໍ່ຄ້າ ຫລື ຂາຍໃຫ້ພໍ່ຄ້າຄົນກາງ, ຂາຍ ໄ... ໃຫ້ໂ... ານປຸງແຕ່ງອາຫານ ຫລືຂາຍ ໃຫ້ຜູ້ອື່ນ ໃ... ໄ... ຢູ່ຕະຫຼາດ.

| | | | | |
|---|---|---|---|---|
| **Q69** | ໃນ 12 ເດືອນຜ່ານມາທ່ານໄດ້ຂາຍຜົນຜະລິດເຂົ້າບໍ່? | | | |
| | ເລືອກໄດ້ນຶ່ງຄຳຕອບ(ໝາຍ√) | <u>ໄດ້ຂາຍ</u> | ☐ | **1** |
| | | <u>ບໍ່ໄດ້ຂາຍ</u> | ☐ | **2** |
| **Q70** | ໃນ12ເດືອນຜ່ານມາທ່ານໄດ້ຂາຍຜົນຜະລິດພືດໃດນຶ່ງບໍ່? | | | |
| | ເລືອກໄດ້ນຶ່ງຄຳຕອບ(ໝາຍ√) | <u>ໄດ້ຂາຍ</u> | ☐ | **1** |
| | | <u>ບໍ່ໄດ້ຂາຍ</u> | ☐ | **2** |
| **Q71** | ໃນ 12 ເດືອນຜ່ານມາທ່ານໄດ້ຂາຍສັດລ້ຽງບໍ່? | | | |
| | ເລືອກໄດ້ນຶ່ງຄຳຕອບ(ໝາຍ√) | <u>ໄດ້ຂາຍ</u> | ☐ | **1** |
| | | <u>ບໍ່ໄດ້ຂາຍ</u> | ☐ | **2** |

**ຄຳຖາມ 72:**

ໃຫ້ໝາຍຕືນກາຢູ່ໃນບອກ "ໄດ້ຮັບ" ຫລື "ບໍ່ໄດ້ຮັບ" ຕາມແຕ່ລະກໍລະນີຂອງຄົວເຮືອນທີ່ໄດ້ຮັບໃບຢັ້ນການຜະລິດປອດສານສານພິດ. ໃຫ້ໝາຍ " √ " ຢູ່ກ່ອງ " ໄດ້ຮັບ " ຖ້າຄົວເຮືອນໄດ້ຮັບໃບຢັ້ງຢືນຈາກລັດຖະບານ, ໝາຍໄດ້ ໜຶ່ງຄຳຕອບ.

| Q72 | ປະຈຸບັນທ່ານໄດ້ຮັບໃບຢັ້ງຢືນການຜະລິດປອດສານພິດບໍ່? | | |
|---|---|---|---|
| | ເລືອກໄດ້ນຶ່ງຄຳຕອບ(ໝາຍ√) | ໄດ້ຮັບ | 1 |
| | | ບໍ່ໄດ້ຮັບ | 2 |

**ຄຳຖາມ 73:**

ຄຳຖາມນີ້ ໄດ້ຖາມກ່ຽວກັບໃນປັດຈຸບັນຄົວເຮືອນຍັງມີໜີ້ສິນ ກັບສະຖາບັນການເງິນໃດນຶ່ງ ທີ່ໄດ້ກູ້ຢືມເພື່ອ ໃຊ້ເຂົ້າໃນການຜະລິດກະສິກຳ. ໃຫ້ໝາຍ "√ " ຢູ່ໃນກ່ອງ ໃຫ້ສອດຄ່ອງກັບ ແຫລ່ງສະຖາບັນການເງິນ ທີ່ຄົວເຮືອນໄດ້ກູ້ຢືມມາ ໃນຄຳຖາມນີ້.

| Q73 | ປະຈຸບັນທ່ານຍັງມີໜີ້ສິນກັບສະຖາບັນການເງິນໃດນຶ່ງທີ່ໄດ້ກູ້ຢືມເພື່ອໃຊ້ເຂົ້າໃນການຜະລິດກະສິກຳບໍ່? | | |
|---|---|---|---|
| | ເລືອກໄດ້ຫຼາຍຄຳຕອບ (ໝາຍ√) | ທະນາຄານທຸລະກິດຂອງລັດ | 1 |
| | | ທະນາຄານທຸລະກິດຕ່າງປະເທດ | 2 |
| | | ທະນາຄານທຸລະກິດເອກກະຊົນ | 3 |
| | | ສະຖາບັນການເງິນຈຸລະພາກ | 4 |
| | | ກອງທຶນພັດທະນາບ້ານ | 5 |
| | | ແຫຼ່ງອື່ນໆ | 8 |
| | | ບໍ່ມີ | 9 ➡ *ໄປຫາຄຳຖາມQ76* |

<u>ສິນເຊື່ອສຳລັບການກຳສິກຳ</u> ແມ່ນການກູ້ຢືມເງິນ ເພື່ອຈຸດປະສົງມານຳໃຊ້ເຂົ້າໃນການຜະລິດ ເພື່ອດຳເນີນກິດຈະກຳ ການປູກພືດ, ການລ້ຽງສັດ, ການລ້ຽງສັດນ້ຳໃດໜຶ່ງ. ການກູ້ຢມືເງິນດັ່ງກ່າວ ແມ່ນລວມທັງສິນ ເຊື່ອ ຫລື ເງິນ ທີ່ຢືມມາຊື້ ແນວພັນ ຫລື ສັດລ້ຽງ, ຢືມມາເພື່ອກໍ່ສ້າງຄອກສັດ ຫລື ຟາມ ຫລື ຢືມມາເພື່ອຊື້ເຄື່ອງກົນຈັກກະສິກຳ. ສຳລັບສິນການກູ້ຢືມເງິນມາທີ່ບໍ່ກ່ຽວຂ້ອງກັບກິດຈະກຳການກະສິກຳ ເຊັ່ນ ປຸກສ້າງເຮືອນຢູ່, ຢືມມາເພື່ອທຸລະກິດຕ່າງໆຂອງຄົວເຮືອນ ຫລື ກູ້ຢືມ ເພື່ອມາໃຊ້ຈ່າຍເຂົ້າໃນການຊົມໃຊ້ຂອງຄົວເຮືອນ ແມ່ນບໍ່ລວມເຂົ້າໃນການສິນເຊື່ອສຳລັບການກຳສິກຳ ຄຳຖາມ 74

<u>ໜີ້ສິນຍັງຄ້າງ</u> ແມ່ນຄົວເຮືອນໄດ້ມີໜີ້ຢູ່ ໃນໄລຍະເວລາຂອງການເນີນສຳຫລວດກະສິກຳນີ້, ໝາຍຄວາມວ່າຄົວເຮືອນ ຍັງບໍ່ທັນໄດ້ຊຳລະເງິນທີ່ໄດ້ກູ້ຢືມມາ ຫລື ມີໜີ້ຄ້າງຢູ່. ຖ້າຄົວເຮືອນໄດ້ກູ້ຢືມເງິນມາໃນ 12 ເດືອນຜ່ານມາ ແລະໄດ້ຈ່າຍຄືນໝົດແລ້ວ ແມ່ນບໍ່ມີໜີ້ຄ້າງ ສະນັ້ນ ໃຫ້ ໝາຍ " √ " ຢູ່ໃນຫ້ອງ ຄຳຕອບ " ບໍ່ມີ ". ຄົວເຮືອນອາດມີການກູ້ຢືມຈາກຫລາຍແຫລ່ງສາມາດມີຫລາຍຄຳຕອບ ແລະການກູ້ຢືມນີ້ແມ່ນລວມເອົາທຸກໆການກູ້ຂອງສະມາຊິກຄົວເຮືອນທັງໝົດ.

<u>ການກູ້ຢືມ ຫລື ສິນເຊື່ອ</u> ແມ່ນລວມທັງການຢືມເງິນສົດມາໂດຍກົງ, ສິນເຊື່ອໃນຮູບແບບຊື້ວັດຖຸສິ່ງຂອງ ຫລື ການໃຫ້ການບໍລິການດ້ານກະສິກຳ. <u>ການກູ້ຢືມເງິນ</u> ອາດຢືມຈາກສະຖາບັນການເງິນ, ຈາກການຈັດຕັ້ງໃດໜຶ່ງ ຫລື ຢືມຈາກບຸກຄົນໃດໜຶ່ງເພື່ອເພື່ອຈຸດປະສົງສະເພາະ ເຊັ່ນມາຊື້ລົດໄຖນາ. <u>ການຊື້ວັດຖຸສິ່ງ ຂອງ ແລະການບໍລິການດ້ວຍຮູບແບບສິນເຊື່ອ</u> ແມ່ນອີງໃສ່ການຕົກລົງ ຫລືສັນຍາຊື້ຂາຍກັນ ແຕ່ການຊຳລະແມ່ນເກີດຂຶ້ນຕາມຫລັງ ການຊື້ ແລະການໃຫ້ບໍລິການ ເຊັ່ນຕົວຢ່າງ ເອົາປຸຍມາໃຊ້ກ່ອນ ແຕ່ຈະຈ່າຍເງິນຫລັງຈາກເກັບກ່ຽວຜົນຜະລິດ.

*ຖ້າຄົວເຮືອນບໍ່ມີ ໜີ້ສິນຍັງຄ້າງ ໃຫ້ຂ້າມໄປຄາມຖາມ Q74 ແລະ Q75*

**ຄຳຖາມ 74:**

ໃນຄຳຖາມນີ້ ໄດ້ຖາມເຖິງຄົວເຮືອນ ໄດ້ນຳໃຊ້ເງິນກູ້ດັ່ງກ່າວເພື່ອຈຸດປະສົງຫຍັງແດ່? ຄົວເຮືອນອາດນຳໃຊ້ເງິນກູ້ຢືມກ້ອນດຽວເຂົ້າໃນຫລາຍຈຸດປະສົງ. ສາມາມາດເລືອກໄດ້ຫລາຍຄຳຕອບ.

| Q74 ທ່ານນຳໃຊ້ເງິນກູ້ດັ່ງກ່າວເພື່ອຈຸດປະສົງຫຍັງແດ່? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ (ພາຍປ) | ຊື້ປັດໃຈການຜະລິດເພື່ອປູກພືດ | ☐ | 1 |
| | ຊື້ປັດໃຈການຜະລິດເພື່ອ ລ້ຽງສັດ | ☐ | 2 |
| | ຊື້ອຸປະກອນເຄື່ອງມືການຜະລິດກະສິກຳ. | ☐ | 3 |
| | ຊື້ສັດລ້ຽງ | ☐ | 4 |
| | ກໍ່ສ້າງຄອກສັດ-ອາຄານເພື່ອການຜະລິດ | ☐ | 5 |
| | ຊື້ທີ່ດິນທຳການຜະລິດ. | ☐ | 6 |
| | ອື່ນໆໃຫ້ລະບຸ........................................... | ☐ | 7 |

**ຄຳຖາມ 75:**

ໃນຄຳຖາມນີ້ ໄດ້ຖາມເຖິງຄົວເຮືອນ ໄດ້ມີສິ່ງຄ້ຳປະກັນໃດໜຶ່ງ ເພື່ອໄປກູ້ຢືມເງິນ.

<u>ການຄ້ຳປະກັນ</u> ແມ່ນການເອົາຊັບສິນບັດໃດໜຶ່ງຂອງຄົວເຮືອນໄປມັດຈຳໄວ້ເພື່ອ ກູ້ຢືມເງິນມາ, ໝາຍວ່າຖ້າຜູ້ກູ້ຢືມຫາກຜິດກັບສັນຍາ ຜູ້ໃຫ້ກູ້ ສາມາດຂາຍສິ່ງມັດຈຳໄວ້ນັ້ນເພື່ອແທນເງິນທີ່ຄົວເຮືອນໄດ້ໃຫ້ກູ້ໄປ. ສິ່ງຄ້ຳປະກັນນີ້ ສາມາດເປັນທີ່ດິນ ຫລືຊັບສິນອື່ນໆຂອງຄົວເຮືອນ. ຕົວຢ່າງ ຖ້າຄົວເຮືອນຊື້ເຄື່ອງກົນຈັກກະສິກຳ, ມູນຄ່າທີ່ຊື້ເຄື່ອງ ດັ່ງກ່າວກໍສາມາດ ຖືເອົາເປັນສິ່ງຄ້ຳປະກັນໄດ້. ການຄ້ຳປະກັນ ແມ່ນລວມທັງການຊື້ວັດຖຸສິ່ງຂອງ ແລະການບໍລິການ

| Q75 ທ່ານໄດ້ເອົາຫຍັງເປັນສິ່ງຄ້ຳປະກັນເງິນກູ້? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ (ພາຍປ) | ທີ່ດິນຂອງຕົນເອງ | ☐ | 1 |
| | ຊັບສິນບັດ(ເຮືອນ, ພາຫະນະ...) | ☐ | 2 |
| | ສິ່ງຄ້ຳປະກັນອື່ນໆ | ☐ | 3 |
| | ບໍ່ມີ | ☐ | 4 |

ອີງຕາມການຕົກລົງໃນຮູບແບບຈ່າຍນຳຫລັງພາຍຫລັງເກັບກ່ຽວ. ຫລືບາງຄັ້ງການກູ້ຢືມ ກໍ່ບໍ່ໄດ້ມີການຄ້ຳປະກັນເລີຍ.

**ຄຳຖາມ 76:**

ໃນຄຳຖາມນີ້ ໄດ້ຖາມເຖິງ ຄົວເຮືອນໄດ້ຮັບຂໍ້ມູນຂ່າວສານດ້ານກະສິກຳ(ປູກຝັງ, ລ້ຽງສັດ) ມາຈາກໃສແດ່.

<u>ແຫລ່ງຂໍ້ມູນຂ່າວສານດ້ານກະສິກຳ</u> ແມ່ນອີງຕາມແຫລ່ງຂໍ້ມູນທີ່ຄົວເຮືອນໄດ້ຮັບ ເພື່ອຊ່ວຍໃນການບໍລິຫານຈັດການກ່ຽວກັບກິດຈະກຳການກະສິກຳ. ຂໍ້ມູນຂ່າວສານນີ້ ແມ່ນລວມທັງ ຂໍ້ມູນກ່ຽວກັບສະພາບດິນຟ້າອາກາດ, ການຄັດເລືອກແນວພັນ, ບົດຮຽນໃໝ່ໃນການຜະລິດກະສິກຳ, ເຄື່ອງກົນຈັກ, ການບໍລິການສິນເຊື່ອ, ແມງໄມ້ ແລະສັດຕູພືດ, ແນວພັນໃໝ່ທີ່ລັດຖະບານສົ່ງເສີມອື່ນໆ. ການຖາມແຫລ່ງຂໍ້ມູນນີ້ ແມ່ນໃຫ້ອີງໃສ່ໄລຍະໃນຊ່ວງເວລາການຜະລິດ ທີ່ເກັບກຳຂອງການສຳຫລວດ ຄື 2010/2011. ຄົວເຮືອນສາມາດເລືອກຫລາຍຄຳຕອບ.

| Q76 ຜ່ານມາຄົວເຮືອນຂອງທ່ານໄດ້ຮັບຂໍ້ມູນຂ່າວສານດ້ານກະສິກຳ(ປູກຝັງ, ລ້ຽງສັດ)ມາຈາກໃສແດ່? | | | |
|---|---|---|---|
| ເລືອກໄດ້ຫຼາຍຄຳຕອບ (ພາຍປ) | ໂຄງການ/ອົງການຈັດຕັ້ງລັດ | ☐ | 1 |
| | ສູນບໍລິການສົ່ງເສີມກະສິກຳ | ☐ | 2 |
| | ວິທະຍຸ/ໂທລະໂຄ່ງ | ☐ | 3 |
| | ໂທລະທັດ | ☐ | 8 |
| | ຈາກສິ່ງພິມ | ☐ | 9 |
| | ພໍ່ຄ້າ | ☐ | 10 |
| | ຊາວກະສິກອນ | ☐ | 11 |
| | ອື່ນໆ | ☐ | 12 |

Q76 ແມ່ນຄຳຖາມທີ່ຄົວເຮືອນປະເມີນເອງ ວ່າແຫລ່ງຂໍ້ມູນຂ່າວສານໃດສຳຄັນທີ່ສຸດສຳລັບການປູກຝັງຂອງ ຄົວເຮືອນ. ຄຳຖາມນີ້ແມ່ນໃຫ້ຕອບຕາມຄວາມຄິດຂອງຄົວເຮືອນ ເຖິງວ່າຈະມີຫລືບໍ່ມີໃຫ້ບໍລິການກໍຕາມ. ເຖິງແມ່ນວ່າຂໍ້ມູນຂ່າວສານໄດ້ອອກທາງວິທະຍຸ ແຕ່ຖ້າຄົວເຮືອນເຫັນສ່າບໍ່ເປັນປະໂຫຍດກໍບໍ່ໃຫ້ໝາຍໃສ່ ໃນຄຳຕອບນີ້.

**ຄຳຖາມ 77:**

ໃນຄຳຖາມນີ້ ໄດ້ຖາມເຖິງ ໃນ 12 ເດືອນຜ່ານມາຄົວເຮືອນ ໄດ້ຮັບການແນະນຳທາງດ້ານວິຊາການ ຈາກ ພະນັກງານສົ່ງເສີມກ່ຽວກັບການປູກຝັງ, ວິທີການປ້ອງກັນພືດ, ການລ້ຽງສັດ ແລະ ສັກຢາກັນພະ ຍາດ ໃນຊ່ວງໄລຍະເວລາຂອງການສຳຫຼວດ. ໝາຍ ຄວາມວ່ານັກວິຊາການລົງມາຫາບ້ານ ຫຼື ຄົວເຮືອນເພື່ອໃຫ້ຄຳແນະນຳໃດໜຶ່ງກ່ຽວ ກັບການກະສິກຳ,ການປົກປ້ອງພືດ ແລະການນຳໃຊ້ພັນປັບປຸງແລະການແນະ ນຳກ່ຽວກັບສຸຂະພາບຂອງສັດ.

| | | |
|---|---|---|
| **Q77** ໃນ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ຮັບການແນະນຳທາງດ້ານວິຊາການຈາກພະນັກງານສົ່ງເສີມກ່ຽວກັບການປູກຝັງ, ວິທີການປ້ອງກັນພືດ, ການລ້ຽງສັດ ແລະ ສັກຢາກັນພະຍາດບໍ່? | | |
| ເລືອກໄດ້ໜຶ່ງຄຳຕອບ(ໝາຍ√) | ໄດ້ຮັບ | 1 |
| | ບໍ່ໄດ້ຮັບ | 2 |

**ຄຳຖາມ 78-Q79:**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອກວດກາການນຳໃຊ້ແຮງງານຈາກຂ້າງນອກ ແລະ ວິທີການນຳໃຊ້ແຮງງານດັ່ງກ່າວ ໃຫ້ໝາຍ " √ "ໃສ່ໃນກ່ອງຂອງ Q79 ແລະໃຫ້ໄປຕາມຄຳແນະນຳ:ໃຫ້ຖາມ Q80 ຖ້າມີການນຳໃຊ້ແຮງງານຈາກຂ້າງນອກ; ຖ້າບໍ່ມີການນຳໃຊ້ແຮງງານຈາກຂ້າງນອກໃຫ້ຂ້າມໄປຄຳຖາມ Q82. ໃຫ້ຈົດກ່າຍການນຳໃຊ້ແຮງງານຈາກ12 ເດືອນຜ່ານມາ.

ໃນຄຳຖາມ Q80 ມີຢູ່4ພາກ:ໃຫ້ຖາມແຕ່ລະປະເພດແຍກກັນແລະໝາຍໃນກ່ອງໃຫ້ຖືກຕ້ອງ.ຄົວເຮືອນໜຶ່ງອາດມີການຈ່າຍແຮງງານດ້ວຍຫຼາຍຮູບແບບແຕກຕ່າງກັນ; ສະນັ້ນສາມາດເລືອກໄດ້ຫຼາຍຄຳຕອບແຕ່ຢ່າງໜ້ອຍຕ້ອງມີໜຶ່ງຄຳຕອບ.

| | | | |
|---|---|---|---|
| **Q78** ໃນ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳໃຊ້ແຮງງານຂ້າງນອກບໍ່? | | | ເລືອກໄດ້ໜຶ່ງຄຳຕອບ(ໝາຍ√) |
| | ໄດ້ນຳໃຊ້ | 1 | |
| | ບໍ່ໄດ້ນຳໃຊ້ | 2 | ➡ ໄປຫາຄຳຖາມQ81 |
| **Q79** ຮູບແບບການຈ່າຍຄ່າແຮງງານຄືແນວໃດ? | | | |
| ເລືອກໄດ້ຫຼາຍຄຳຕອບ (ໝາຍ√) | ຈ່າຍເປັນເງິນສົດ | 1 | |
| | ຈ່າຍເປັນຜົນຜະລິດ | 2 | |
| | ແລກປ່ຽນແຮງງານ | 3 | |
| | ອື່ນໆ | 4 | |

<u>ແຮງງານນອກສຳລັບການກະສິກຳ</u> ແມ່ນການວ່າຈ້າງແຮງງານທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນຕົນ ເພື່ອເຮັດວຽກກະ ສິກຳ; ແຮງງານດັ່ງກ່າວລວມທັງແຮງງານທີ່ມີຄ່າຈ້າງແລະບໍ່ມີຄ່າຈ້າງ.ແຮງງານນອກລວມມີແຮງງານທີ່ຖາວອນ,ແຮງງານຕາມລະດູການ ແລະແຮງງານທີ່ເຮັດວຽກບາງເວລາ. ແຮງງານທີ່ໄດ້ຮັບຄ່າຈ້າງປົກກະຕິຈະຈ່າຍເປັນເງິນສົດ,ຫຼືໃນຮູບແບບການສະໜອງອາຫານ ຫຼືຜະລິດຕະພັນກະສິກຳອື່ນໆຫຼືດ້ວຍຮູບການອື່ນໆ. ການແລກປ່ຽນແຮງງານເຊິ່ງກັນ ແລະ ກັນ ກໍຖືວ່າເປັນການຈ້າງງານເຊັ່ນກັນ ເຮົາຈະຕ້ອງແຍກຄວາມແຕກຕ່າງລະຫວ່າງການວ່າຈ້າງແຮງງານສຳລັບເຮັດວຽກຂອງການຄອບຄອງກະສິກຳ ແລະແຮງງານຕາມ

ສັນຍາ ເພື່ອສະໜອງການບໍລິການດ້ານກະສິກຳ. ການວ່າຈ້າງແຮງງານນີ້ ແມ່ນບໍ່ໄດ້ລວມເອົາວຽກຕາມສັນຍາ.

<u>ການແລກປ່ຽນແຮງງານ</u> ແມ່ນລວມທັງການແລກປ່ຽນແຮງານ ແລະໃຊ້ແຮງງານຮ່ວມກັນ ແລະວິທີໜຶ່ງອີກ ກໍຄື ພີ່ນ້ອງ ແລະໝູ່ເພື່ອນຊ່ວຍເຫລືອກັນໂດຍບໍ່ໄດ້ຈ່າຍຄ່າແຮງງານ.

ການເຮັດວຽກກະສິກຳ ແມ່ນກວມເອົາພຽງແຕ່ວຽກປູກ ແລະການເກັບກ່ຽວພືດ, ການເບິ່ງແຍງດູແລສັດລ້ຽງແລະການຂົນສົ່ງຜະລິດຕະພັນກະສິກຳ. ບໍ່ໃຫ້ລວມເອົາການວ່າຈ້າງແຮງງານທີ່ບໍ່ກ່ຽວຂ້ອງກັບວຽກກະສິກຳເຊັ່ນວ່າຈ້າງເປັນແມ່ບ້ານ.

ທຸກໆແຮງງານທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນທີ່ເຮັດວຽກກ່ຽວກັບກະສິກຳ ແມ່ນຖືວ່າການວ່າຈ້າງແຮງງານນອກ.

**ຄຳຖາມ 80:**

| **Q80** ເດືອນໃດທີ່ທ່ານໄດ້ໃຊ້ແຮງງານຂ້າງນອກ? | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| <u>**Q80a. ໃຊ້ແຮງງານເຂົ້າໃນການຜະລິດເຂົ້າ**</u> | | | | | | | | | (ໝາຍ√) | | |
| ເດືອນ/ ປີ 2010 | | | | | | | | | ເດືອນ/ປີ 2011 | | |
| 4 | 5 | 6 | 7 | 8 | 9 | 10 | 11 | 12 | 1 | 2 | 3 |
| | | | | | | | | | | | |

| <u>**Q80b. ໃຊ້ແຮງງານເຂົ້າໃນການຜະລິດພືດ**</u> | | | | | | | | | (ໝາຍ√) | | |
|---|---|---|---|---|---|---|---|---|---|---|---|
| ເດືອນ/ ປີ 2010 | | | | | | | | | ເດືອນ/ປີ 2011 | | |
| 4 | 5 | 6 | 7 | 8 | 9 | 10 | 11 | 12 | 1 | 2 | 3 |
| | | | | | | | | | | | |

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອກວດກາຄວາມຕ້ອງການແຮງງານຕາມລະດູການ. ແຮງງານກະສິກຳສຳລັບການປູກເຂົ້າ ແລະ ກິດຈະກຳການກະສິກຳອື່ນໆແມ່ນໄດ້ແຍກຖາມສະເພາະ. ໃຫ້ໝາຍຄວາມຕ້ອງ ການຂອງແຮງງານໃຫ້ຖືກ ຕ້ອງໃນແຕ່ລະກ່ອງຕາມປະຕິທິນທີ່ໄດ້ກຳນົດ. ຖ້າຄຳຕອບຫາກມີຄວາມແຕກຕ່າງໃຫ້ອີງໃສ່ຕາຕະລາງ ໃນເອກະສານຊ້ອນທ້າຍ3. ໝາຍໄດ້ໜຶ່ງຫຼືຫຼາຍຄຳຕອບ.ໃຫ້ໝາຍ "√ " ໃນເດືອນທີ່ມີການໃຊ້ແຮງງານຂ້າງນອກ

## 9.10 ຄຸນລັກສະນະຂອງສະມາຊິກໃນຄົວເຮືອນ (Q81-Q91)

ໃນQ81-Q91, ແມ່ນເກັບກຳຂໍ້ມູນຂອງແຕ່ລະສະມາຊິກຄົວເຮືອນ. ໃຫ້ບັນທຶກລາຍລະອຽດຂອງບຸກຄົນໃນແຕ່ລະແຖວຕ່າງກັນ. ເລີ່ມຈາກຫົວໜ້າຄອບຄົວໄລ່ລົງໄປຈົນຮອດສະມາຊິກທຸກຄົນໃນຄອບຄົວ.

**ຄຳຖາມ 81-82:**

ຈຸດປະສົງຂອງຄຳຖາມນີ້ແມ່ນເພື່ອກຳນົດສະມາຊິກໃນຄອບຄົວ. ຖາມຜູ້ໃຫ້ຄຳຕອບຈົດບັນຊີຂອງສະມາຊິກຄົວເຮືອນທັງໝົດ. ປົກກະຕິຜູ້ໃຫ້ສຳພາດຈະລາຍງານສາຍພົວພັນຕໍ່ຫົວໜ້າຄອບຄົວໃນເວລາດຽວກັນ; ຖ້າເຂົາບໍ່ລາຍງານນັກເດີນສຳຫຼວດຕ້ອງຖາມຄຳຖາມດັ່ງກ່າວ. ໃຫ້ຂຽນຊື່ໃນ Q81ແລະລະຫັດຂອງສາຍພົວພັນໃນ Q82. ່ະຫັດຂອງສາຍພົວພັນໄດ້ສະໜອງໃຫ້ຕ່າງຫາກ.....ສຳລັບເດັກທີ່ບໍ່ທັນມີຊື່ໃຫ້ຂຽນວ່າລູກຂອງ... (ຊື່ພໍ່ ຫຼື ຊື່ແມ່)

ຖ້າບໍ່ມີເນື້ອທີ່ໃຫ້ຂຽນພຽງພໍໃຫ້ນຳໃຊ້ແບບຟອມ 5-Q81. ໃຫ້ໝາຍ "√ "ໃສ່ໃນຫ້ອງສີ່ລ່ຽມຢູ່ເບື້ອງລຸ່ມຂອງໜ້າເຈ້ຍເພື່ອບອກໃຫ້ຮູ້ວ່າຍັງມີລາຍຊື່ຕໍ່ໃນຫນ້າຕໍ່ໄປ.

ນິຍາມຂອງຄົວເຮືອນ ໃຫ້ເບິ່ງຂໍ້ 3.1. ຄົວເຮືອນແມ່ນໝາຍເຖິງສະມາຊິກຄົວເຮືອນທີ່ຢູ່ຮ່ວມກັນ ແລະກິນຢູ່ຮ່ວມກັນ ແລະນຳໃຊ້ສິ່ງທີ່ຈຳເປັນຮ່ວມກັນ ເຊິ່ງລວມທັງບຸກຄົນທີ່ເຮັດວຽກກະສິກຳໃຫ້ຄົວເຮືອນ. ແຕ່ບາງຄັ້ງກໍບໍ່ໄດ້ປັບປຸງທັນການ. ບາງຄັ້ງອາດບໍ່ສາມາດສົມທຽບໄດ້ກັບນິຍາມ ຂອງຄົວເຮືອນ.

| Q81 | Q82 |
|---|---|
| ມີໃຜແດ່ເປັນສະມາຊິກຄົວເຮືອນຂອງທ່ານ?<br>ເລີ້ມຈາກຫົວໜ້າຄົວເຮືອນ | ມີສາຍພົວພັນແນວໃດກັບຫົວໜ້າຄົວເຮືອນ?<br>1= ຫົວໜ້າຄົວເຮືອນ<br>2= ຜົວ/ເມັຍ<br>3= ລູກຊາຍ/ລູກສາວ<br>4= ພໍ່-ແມ່<br>5= ລູກເຂີຍ/ລູກໄພ, ພີ່ນ້ອງ<br>6= ອື່ນໆ |
| 01 | ☐ |
| 02 | ☐ |

ຖ້າຫາກບໍ່ແນ່ໃຈວ່າຄວນຈະລວມໃຜແດ່ເຂົ້າເປັນສະມາຊິກຄົວເຮືອນໃຫ້ໃຊ້ ນິຍາມການຢູ່ເປັນປະຈຳ ໃນ 6 ເດືອນຜ່ານມາ. ບຸກຄົນເຫລົ່ານັ້ນປະກອບມີ:

- ຖ້າຫາກບຸກຄົນໃດຫນຶ່ງຫາກ ຢູ່ເປັນປະຈຳກັບຄົວເຮືອນ ໃນ 6 ເດືອນຂຶ້ນໄປ ເຊິ່ງບັງເອີນໃນເວລາສຳຫລວດພັດບໍ່ຢູ່ *ຜູ້ນັ້ນຖືວ່າເປັນສະມາຊິກຄົວເຮືອນ*
- ຖ້າຫາກບຸກຄົນໃດຫນຶ່ງຫາກ ບໍ່ຢູ່ເປັນປະຈຳກັບຄົວເຮືອນ ໃນ 6 ເດືອນຂຶ້ນໄປ ເຊິ່ງບັງເອີນໃນເວລາສຳຫລວດພັດກັບມາ *ຜູ້ນັ້ນຖືວ່າບໍ່ເປັນສະມາຊິກຄົວເຮືອນ*
- ຖ້າຫາກບຸກຄົນໃດຫນຶ່ງຫາກ ໄປເຮັດວຽກຢູ່ບ່ອນອື່ນໃນອາທິດຜ່ານມາ ແລະກັບມາເຮືອນໃນທ້າຍອາທິດ *ຜູ້ນັ້ນຖືວ່າບໍ່ເປັນສະມາຊິກຄົວເຮືອນ*

ຫົວຫນ້າຄົວເຮືອນແມ່ນ ຜູ້ທີ່ໄດ້ຖືກຮັບຮູ້ໂດຍສະມາຊິກຄົວເຮືອນ. ຜູ້ທີ່ບໍ່ມີສາຍພົວພັນ ຈະຕ້ອງຈົດກ່າຍເປັນ " ອື່ນໆ ".

ພາຍຫລັງທີ່ໄດ້ຈົດກ່າຍລາຍຊື່ສະມາຊິກຄົວເຮືອນທັງຫມົດ ແລະສາຍພົວພັນແລ້ວ ໃຫ້ອ່ານຄືນໃຫ້ຜູ້ໃຫ້ຄຳຕອບເພື່ອກວດຄືນຄວາມຄົບຖ້ວນ ແລະຖືກຕ້ອງ. ຢືນຢັນຄືນ ເພື່ອແນ່ໃຈ ຖ້າເຊື່ອວ່າມີໃຜໄດ້ຍົກຍ້າຍອອກໄປ.

**ຖ້າຜ່ານບັນທຶກສະມາຊິກຄົວເຮືອນຫມົດທຸກຄົນແລ້ວ ໃນ ຄຳຖາມ Q81-Q82, ໃຫ້ຖາມເທື່ອລະຄົນ ໃນ ຄຳຖາມ Q83 - Q93.**

**ຄຳຖາມ 83:**

ຈຸດປະສົງຂອງຄຳຖາມນີ້ແມ່ນເພື່ອຊ່ວຍໃນການສຶກສາ ການປະກອບສ່ວນຂອງ ແມ່ຍິງ ແລະຜູ້ຊາຍ ໃນວຽກກະສິກຳ. ໃຫ້ ໝາຍໃນກ່ອງ “1” ຫລື “ 2” ສຳລັບຍິງຊາຍ. ຖ້າຜົນກ່ຽວມີໜ້າໃນເວລາສຳພາດ ນັກເດີນສຳລຫລວດ ສາມາດຕອບດ້ວຍການສັງເກດການ ວ່າຜູ້ນັ້ນແມ່ນຍິງ ຫລື ຊາຍ. ຫ້າມບໍ່ໃຫ້ເດົາເພດຈາດຊື່ ເພາະແມ່ຍິງ ແລະຜູ້ຊາຍອາດມີຊື່ຄືກັນ.




**ຄຳຖາມ 84:**

ຈຸດປະສົງຂອງຄຳຖາມນີ້ແມ່ນເພື່ອຊ່ວຍໃນການສຶກສາ ການປະກອບສ່ວນຂອງຄົນໜຸ່ມ ແລະຄົນແກ່ໃນວຽກກະສິກຳ. ໃຫ້ຂຽນຄຳຕອບໃນຊ່ອງອາຍຸຂຽນອາຍຸເຕັມ. ໃຫ້ຂຽນ “0” ຖ້າຫາກເດັກອາຍຸຕ່ຳກສ່າ 1ປີ. ຖ້າບໍ່ ອາຍຸ ນັກເດີນສຳຫລວດຕ້ອງໄດ້ສອບຖາມເພື່ອພິສູດ ຢັ້ງຢືນ. ບາງຄັ້ງອາດຈະຈື່ວ່າລາວເກີດ ໃກ້ກັບເວລາມີເຫດການໃດໜຶ່ງ ທີ່ເຮົາສາມາດຄາດຄະເນອາຍຸຂອງຄົນຜູ້ນັ້ນໄດ້. ບາງຄັ້ງຄົນຜູ້ນັ້ນອາດ ຈື່ປີເກີດ ຂອງຜູ້ກ່ຽວຕາມປີລາວ ຫລື ສາມາດບອກປີເກີດຕາມປີ ປະຕິທິນເພື່ອເປັນບ່ອນອີງ ໃນການຄາດຄະເນອາຍຸໄດ້ ມີໃຫ້ໃນ ເອກະສານຊ້ອນທ້າຍ 4.




| |
|---|
| ໃນຄຳຖາມ Q85 - Q91 ແມ່ນຖາມສະເພາະແຕ່ບຸກຄົນທີ່ອາຍຸ 10 ປີ ຂຶ້ນໄປ, ຖາມກ່ຽວກັບກິດຈະກຳທີ່ໄດ້ເຮັດຂອງເຂົາເຈົ້າ. |

**ຄຳຖາມ 85:**

**ວິທີຈົດກ່າຍຄຳຕອບສຳລັບຄຳຖາມມີດັ່ງນີ້:**

ສຳລັບຜູ້ທີ່ມີອາຍຸ 10 ປີຂຶ້ນໄປ ແມ່ນໃຫ້ຖາມກ່ຽວກັບ ອາຊີບຕົ້ນຕໍ ຂອງເຂົາເຈົ້າ ແລະ ໃຫ້ຈົດກ່າຍຄຳຕອບໃຫ້ຖືກຕ້ອງ ໂດຍອີງຕາມລະຫັດຂອງອາຊີບທີ່ມີໄວ້ໃຫ້ຢູ່ທາງຫລັງໜ້າປົກ ຂອງແຕ່ລະໃບສອບຖາມ ຊຶ່ງລະຫັດດັ່ງກ່າວແມ່ນມີແຕ່ 1-5 ແລະ ນິຍາມຂອງແຕ່ລະອາຊີບແມ່ນ ມີດັ່ງນີ້:



*1. ລູກຈ້າງ: ໝາຍເຖິງຜູ້ອອກແຮງງານໃຫ້ລັດ, ຜູ້ອອກແຮງງານໃຫ້ລັດວິສາຫະກິດ, ຜູ້ອອກແຮງງານໃຫ້ລັດ-ເອກະຊົນ, ຜູ້ອອກແຮງງານໃຫ້ເອກະຊົນ ເຊັ່ນ:ລາຍລະອຽດແມ່ນດັ່ງລຸ່ມນີ້.*

- ***ຜູ້ອອກແຮງງານໃຫ້ລັດ***: ຫມາຍເຖິງຜູ້ທີ່ເຮັດວຽກໃນພາກສ່ວນຂອງລັດຖະບານ ແລະ ແມ່ນລັດເປັນຜູ້ເບີກຈ່າຍເງິນເດືອນໃຫ້ ຕົວຢ່າງ: ພະນັກງານເມືອງ, ພະນັກງານຄູສອນ, ທະຫານ, ຕຳຫລວດ, ທ່ານຫມໍ.. .. ..
- ***ຜູ້ອອກແຮງງານໃຫ້ລັດວິສາຫະກິດ***: ຫມາຍເຖິງ ຜູ້ທີ່ເຮັດວຽກ ແລະ ໄດ້ຮັບເງິນເດືອນ ຢູ່ໃນບັນດາຫົວໜ່ວຍທຸລະກິດຂອງລັດ ຕົວຢ່າງ: ພະນັກງານຂອງ ບໍລິສັດການບິນລາວ, ບໍລິສັດໄຟຟ້າລາວ, ບໍລິສັດໄປສະນີລາວ, ບໍລິສັດນ້ຳປະປາລາວ ...
- ***ຜູ້ອອກແຮງງານໃຫ້ລັດ-ເອກະຊົນ***: ຫມາຍເຖິງ ຜູ້ອອກແຮງງານທີ່ເຮັດວຽກນຳ ບັນດາຫົວຫນ່ວຍທຸລະກິດປະສົມລະຫວ່າງລັດ ແລະເອກະຊົນ. ຕົວຢ່າງ: ພະນັກງານລັດວິສາຫະກິດປະສົມລາວທຸລະຄົມ...
- ***ຜູ້ອອກແຮງງານໃຫ້ເອກະຊົນ***: ຫມາຍເຖິງ ຜູ້ທີ່ເຮັດວຽກໃຫ້ຜູ້ໃຊ້ແຮງງານ (ນາຍຈ້າງ) ແລະ ໄດ້ຮັບຄ່າແຮງງານເປັນເງິນເດືອນ,ບຳເນັດ,ເບ້ຍນີ້ ຫລືໄດ້ຮັບຄ່າແຮງງານຕາມ ວຽກທີ່ມີເປັນບາງຄັ້ງຄາວ ຫລືວັດຖຸຕ່າງໆ ຈາກຜູ້ໃຊ້ແຮງງານ ຕົວຢ່າງ: ພະນັກງານຂອງໂຮງງານຕັດຫຍິບ, ຊ່າງເສີມສວຍ ..

*2. ນາຍຈ້າງ: ໝາຍເຖິງຜູ້ໃຊ້ແຮງງານ ເຊັ່ນ:ລາຍລະອຽດແມ່ນດັ່ງລຸ່ມນີ້.*

- ***ຜູ້ໃຊ້ແຮງງານ:*** ຫມາຍເຖິງ ບຸກຄົນທີ່ດຳເນີນການທຸລະກິດຂອງຕົນເອງ ຫລືວິຊາຊີບໃດຫນຶ່ງທີ່ບຂຶ້ນກັບໃຜ ແລະ ໄດ້ວ່າຈ້າງຜູ້ອອກແຮງງານໃຫ້ ເປັນຈຳນວນຫນຶ່ງຄົນຂຶ້ນໄປ. ຕົວຢ່າງ: ຜູ້ຂາຍເຄື່ອງແຫ້ງ, ຂາຍເຄື່ອງກໍ່ສ້າງ, ເຈົ້າຂອງຮ້ານເສີມສວຍ, ເຈົ້າຂອງຮ້ານກິນດື່ມ,.. ..

*3. ທຸລະກິດຂອງຕົນເອງ: ໝາຍເຖິງຜູ້ເຮັດວຽກໃຫ້ຕົນເອງ ເຊັ່ນ:ລາຍລະອຽດແມ່ນດັ່ງລຸ່ມນີ້.*

- ***ເຮັດວຽກໃຫ້ຕົນເອງ:*** ຫມາຍເຖິງ ຜູ້ທີ່ເຮັດວຽກທຸລະກິດການຜະລິດຂອງຕົນເອງ ສຳລັບການຊົມໃຊ້ຂອງຕົນເອງ ຫລື ເພື່ອຜົນກຳໄລ ແຕ່ບໍ່ໄດ້ວ່າຈ້າງຜູ້ອອກແຮງງານເຮັດວຽກໃຫ້ຕົນ. ຕົວຢ່າງ: ຊາວນາ, ພໍ່ຄ້ານ້ອຍ, ຊ່າງໄມ້, ຊ່າງຕໍ່າຫູກ, ຈັກສານ.. .. ..

*4. ເຮັດວຽກບໍ່ມີຄ່າຈ້າງ: ໝາຍເຖິງຜູ້ທີ່ເຮັດວຽກໃຫ້ຄອບຄົວໂດຍບໍ່ໄດ້ຄ່າຈ້າງ ເຊັ່ນ:ລາຍລະອຽດແມ່ນດັ່ງລຸ່ມນີ້.*

- ***ຜູ້ທີ່ເຮັດວຽກໃຫ້ຄອບຄົວໂດຍບໍ່ໄດ້ຄ່າຈ້າງ:*** ຫມາຍເຖິງ ບັນດາສະມາຊິກຂອງຄົວເຮືອນ ທີ່ເຮັດວຽກຊ່ວຍທຸລະກິດ, ການກະສິກຳ ຫລື ກິດຈະກຳໃດຫນຶ່ງ ຂອງຄອບຄົວ ໂດຍບໍ່ໄດ້ຮັບຄ່າຈ້າງຫລື ຜົນຕອບແທນ.

*5. ອື່ນໆ: ໝາຍເຖິງຜູ້ຫວ່າງງານ, ນັກຮຽນ, ພໍ່ເຮືອນ/ແມ່ເຮືອນ, ເບັຍບຳນານ/ປ່ອຍເຖົ້າແກ່, ນັກໂທດ, ນັກບວດ, ນາຍບ້ານ , ບຸກຄົນທີ່ເປັນໂລກຈິດ, ບັນດາຄົນລາວທີ່ເຮັດວຽກຕາມສະຖານ ທູດ ແລະ ອົງການຈັດຕັ້ງສາກົນ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ. ເຊັ່ນ:ລາຍລະອຽດແມ່ນດັ່ງລຸ່ມນີ້.*

- ***ຜູ້ຫວ່າງງານ:*** (ຫລືຜູ້ທີ່ກຳລັງຊອກຫາວຽກເຮັດ) ຫມາຍເຖິງ ບຸກຄົນທີ່ບໍ່ມີວຽກເຮັດ, ສາມາດເຮັດວຽກໄດ້ ແຕ່ບໍ່ມີວຽກເຮັດ, ຫລືກຳລັງຊອກຫາວຽກເຮັດ.

- ***ນັກຮຽນ***: ຫມາຍເຖິງ ບຸກຄົນທີ່ເຂົ້າຮຽນປົກກະຕິ ຢູ່ໃນໂຮງຮຽນ, ສະຖາບັນການສຶກສາພາກລັດ ຫລື ເອກະຊົນ. ລາວຈະຕ້ອງເປັນນັກຮຽນທີ່ຮຽນເຕັມເວລາຂອງມື້ຫນຶ່ງ ຫລື ອາດສ່ວນໃດຫນຶ່ງ ຂອງມື້ ແລະ ປົກກະຕິແລ້ວແມ່ນບໍ່ໄດ້ປະກອບສ່ວນເຂົ້າໃນກິດຈະກຳວຽກງານເສດຖະກິດ,ເຊັ່ນວ່າ: ການເຮັດວຽກງານ ຫລື ການ ເປັນພະນັກງານສັງກັດຢູ່ບ່ອນໃດຫນຶ່ງ.
- ***ພໍ່ເຮືອນ/ແມ່ເຮືອນ***: ຫມາຍເຖິງ ຜູ້ເຮັດວຽກ, ອາດນັບທັງແມ່ຍິງ ແລະ ຜູ້ຊາຍ ທີ່ເຮັດວຽກບ້ານ ການເຮືອນໃນຄົວເຮືອນຂອງຕົນເອງ ແລະ ບໍ່ໄດ້ເຮັດເພື່ອຄ່າຈ້າງຫລືກຳໄລ ຖ້າຫາກບຸກຄົນເຮັດ ວຽກໃນທຸລະກິດຂອງຄົວ ເຮືອນລາວຈະຕ້ອງຖືກຈົດກ່າຍເປັນປະເພດເຮັດວຽກໃຫ້ຕົນເອງ ຫລືເຮັດວຽກໃຫ້ຄົວເຮືອນໂດຍບໍ່ມີຄ່າຈ້າງ ສ່ວນຜູ້ທີ່ເຮັດວຽກບ້ານການເຮືອນ ເພື່ອຄ່າຈ້າງ ບໍ່ໃຫ້ຈົດເຂົ້າໃນ ປະເພດນີ້ ໃຫ້ຈັດຢູ່ໃນປະເພດ ຜູ້ອອກແຮງງານໃນພາກເອກະຊົນ.
- ***ເບັຍບຳນານ/ປ່ວຍ/ເຖົ້າແກ່***: ຫມາຍເຖິງຜູ້ທີ່ບອກວ່າໃນ 12 ເດືອນຜ່ານມາ ລາວບໍ່ໄດ້ເຮັດວຽກກິດຈະກຳເສດຖະກິດຫຍັງຫມົດ ຍ້ອນວ່າລາວໄດ້ບຳນານແລ້ວ ຫລື ເນື່ອງຈາກວ່າລາວເຖົ້າແກ່, ເຈັບເປັນ ຫລື ສະມັກໃຈພັກຜ່ອນຈາກວຽກງານ.

**ຄຳຖາມ 86:**

ຄຳຖາມນີ້ໄດ້ຖາມກ່ຽວກັບອາຊີບຂອງບຸກຄົນທີ່ດຳເນີນກິດຈະກຳໃນ12ເດືອນຜ່ານມາທີ່ກຳນົດໃນຄຳຖາມ Q85. ມີ5ຄຳຕອບໃຫ້ເລືອກດັ່ງນີ້: ປູກຝັງ(ລະຫັດ 1), ປະມົງ(ລະຫັດ2), ລ້ຽງສັດ (ລະຫັດ 3), ກະສິກຳປະສົມ(ລະຫັດ 4) ແລະອື່ນໆ(ລະຫັດ 5).

ອາຊີບຂອງຄົນຜູ້ຫນຶ່ງແມ່ນປະເພດຂອງວຽກ, ທັກສະຫຼືຄວາມສາມາດທີ່ບຸກຄົນນັ້ນຈັດຕັ້ງປະຕິບັດໃນວຽກຂອງລາວເຊັ່ນຕົວຢ່າງ

- ຄົນຂັບລົດ(ລະຫັດ5)
- ການບັນຊີ(ລະຫັດ5)
- ຊາວກະສິກອນ(ປູກພືດ)ໃນດິນຂອງຕົນເອງຫຼືຮັບຈ້າງເປັນຊາວນາ ແມ່ນລະຫັດ 1

ອາຊີບຈະບໍ່ຄືກັບຂະແໜງການທີ່ຄົນຜູ້ນັ້ນ ເຮັດວຽກຢູ່ ຕົວຢ່າງ: ນັກບັນຊີເຮັດວຽກໃຫ້ສະຫະກອນຂອງລັດຖະບານໃນນາມເປັນຜູ້ຂັບລົດແມ່ນລະຫັດ5 ບໍ່ໃຫ້ໃສ່ເປັນຊາວນາ(ລະຫັດ1).

| Q86 |
|---|
| ວຽກຕົ້ນຕໍໃນ12 ເດືອນ ຜ່ານມາ ແຕ່ລະຄົນເຮັດຫຍັງ? |
| 1= ປູກຝັງ<br>2=ການປະມົງ<br>3=ລ້ຽງສັດ<br>4= ກະສິກຳປະສົມ<br>5=ອື່ນໆ |
| |

**ຄຳຖາມ 87:**

ໃນຄຳຖາມ Q85 ແລະ Q86 ແມ່ນກ່ຽວກັບກິດຈະກຳຕົ້ນຕໍທາງດ້ານ ເສດຖະກິດຂອງບຸກຄົນໃນ 12 ເດືອນຜ່ານມາ. ໃນ Q87 ແມ່ນກ່ຽວກັບກິດຈະກຳສຳຮອງດ້ານເສດຖະກິດໃນ12ເດືອນຜ່ານມາ. ຄຳຕອບທີ່ມີໃຫ້ເລືອກມີດັ່ງນີ້: ຮັບຈ້າງວຽກກະສິກຳ

(ລະ ຫັດ1), ຮັບຈ້າງວຽກອື່ນ(ລະຫັດ2), ເຮັດທຸລະກິດໃຫ້ ຄ/ຮ ອື່ນ (ລະຫັດ3), ເຮັດວຽກອື່ນບໍ່ແມ່ນກະສິກຳ (ລະ ຫັດ4), ບໍ່ໄດ້ເຮັດວຽກ (ລະຫັດ9). ໃຫ້ຂຽນລະຫັດທີ່ຖືກຕ້ອງໃສ່ໃນກ່ອງ.

<u>ກິດຈະກຳສຳຮອງ</u> ແມ່ນວຽກທີ່ສຳຄັນສຳຮອງ ທີ່ບຸກຄົນນັ້ນຈັດຕັ້ງປະຕິບັດໃນປີທີ່ກ່ຽວຂ້ອງຂອງການສຳຫລວດ. ບາງຕົວຢ່າງເພື່ອຊ່ວຍດັ່ງລຸ່ມນີ້:

- ຄົນຜູ້ຫນຶ່ງປົກະຕິແມ່ນເປັນພະນັກງານລັດ ແຕ່ກໍດຳເນີນກິດຈະກຳການກະສິກຳ: Q81 = 1 ; Q86=5 ; Q87=3.
- ຄົນຜູ້ຫນຶ່ງປົກະຕິແມ່ນມີອາຊີບເປັນຊາວນາ (ປູກພືດໃຫ້ກິນເອງ) ແຕ່ກໍໄດ້ເຮັດວຽກກິດຈະກຳກໍ່ສ້າງ: Q81 = 3 ; Q86=1 ; Q87=3.

| Q87 |
|---|
| **ກິດຈະກຳສຳຮອງໃນ 12 ເດືອນຜ່ານມາຂອງສະມາຊິກຄົວເຮືອນແມ່ນຫຍັງ?** |
| 1=ຮັບຈ້າງວຽກກະສິກຳ<br>2=ຮັບຈ້າງວຽກອື່ນໆ<br>3=ເຮັດວຽກ ກ.ກໃຫ້ກິນເອງ<br>4=ເຮັດວຽກອື່ນບໍ່ແມ່ນ ກ.ກ<br>9=ບໍ່ໄດ້ເຮັດ |
| ☐ |

- ຄົນຜູ້ຫນຶ່ງປົກະຕິແມ່ນມີອາຊີບເປັນຊາວາ (ປູກພືດໃຫ້ກິນເອງ) ແຕ່ກໍໄດ້ເຮັດວຽກຮັບຈ້າງກະສິກຳ: Q81 = 3; Q86=1; Q87=1.
- ຄົນຜູ້ຫນຶ່ງປົກະຕິແມ່ນມີອາຊີບເປັນຊາວາ (ປູກພືດໃຫ້ກິນເອງ) ແຕ່ກໍບໍ່ໄດ້ເຮັດວຽກເພີ່ມ: Q81 = 3; Q86=1; Q87=9.

ກິດຈະກຳສຳຮອງຂອງບຸກຄົນໃດຫນຶ່ງຕ້ອງແຕກຕ່າງກັບກິດຈະກຳຕົ້ນຕໍ ທີ່ພົວກ່ຽວປະຕິບັດຢູ່.

**ຄຳຖາມ 88-89**

ຈຸດປະສົງຂອງຄຳຖາມນີ້ແມ່ນເພື່ອ ການພົວພັນກິດຈະກຳປູກພືດ ທີ່ບຸກຄົນໃດຫນຶ່ງປະຕິບັດຢູ່ ກັບການກສິກະຂອງຄົວເຮືອນ. ນີ້ແມ່ນການສຶກສາທີ່ສຳຄັນເພື່ອຮູ້ໄດ້ຄວາມຕ້ອງການຂອງແຮງງານ ແລະກາລະໂອກາດຂອງຊາວກະສິກອນ ໃນການຊອກຫາວຽກອື່ນເພີ່ມ. ໃຫ້ຖາມແຕ່ສະເພາະຄົວເຮືອນທີ່ມີຄຳຕອບວ່າ ທີ່ຕອນດິນໃນ ຄຳຖາມ Q4.

ຄຳຖາມ 8 ໃຫ້ຖາມກ່ຽວກັບສະມາຊິກຂອງ ຄົວເຮືອນທີ່ໄດ້ເຮັດການຜະລິດພືດ ໃນ 12 ເດືອນຜ່ານມາ. ໃສ່ລະຫັດ “1” ຫລື “2” ໃຫ້ຖືກຕ້ອງ.

| Q88 | Q89 |
|---|---|
| **ຖ້າມີຕອນດິນໃດນຶ່ງໃນຄຳຖາມ Q4** | |
| **ໃນ 12 ເດືອນຜ່ານມາແຕ່ລະຄົນໄດ້ເຮັດ ວຽກປູກຝັງໃດນຶ່ງບໍ່?** | **ໃນ 12 ເດືອນຜ່ານມາໄດ້ເຮັດວຽກປູກຝັງຈັກເດືອນ?** |
| 1= ໄດ້<br>2= ບໍ່ໄດ້ ຂ້າມໄປ**Q91** | 1= ຕ່ຳກວ່າ 3 ເດືອນ<br>2= 3-6 ເດືອນ<br>3= 6-9 ເດືອນ<br>4= 9-12 ເດືອນ |
| ☐ | ☐ |

- ຖ້າ ແມ່ນລະຫັດ ‘’1’’ ໃຫ້ບັນທຶກປະລິມານການເຮັດວຽກໃນ 12 ເດືອນຜ່ານມາ ໃຫ້ຖືກຕ້ອງ ຄື: ຫມາຍລະຫັດ 1 ( 1-3 ເດືອນ), 2 ( 3-6 ເດືອນ), 3 ( 6-9 ເດືອນ), 4(9-12 ເດືອນ). ( ຂໍຄວນເອົາໃຈໃສ່: 3 ເດືອນ ຫມາຍຄວາມວ່າ 3ເດືອນຂຶ້ນໄປ ແຕ່ ຫນ້ອຍກວ່າ 6 ເດືອນ)

- ຖ້າ ແມ່ນລະຫັດ ‘’1’’ ໃນ Q89 ແມ່ນບໍ່ໃຫ້ຖາມ ຄຳຖາມ Q90.

Q88 ແລະ Q89 ແມ່ນກ່ຽວຂ້ອງກັບວຽກຂອງຜົນຄອບຄອງ ທີ່ພົວພັນເຖິງການປູກພືດ. ວຽກດັ່ງກ່າວລວມມີ ວຽກກຽມດິນປູກ, ກຽມໜານຕົກກ້າ, ປັກດຳ, ເສັຍຫຍ້າ, ໃສ່ປຸ໋ຍ-ຝຸ່ນ, ສີດຢາປາບສັດຕູພືດ, ເກັບກ່ຽວ, ຟາດເຂົ້າ, ຂົນສົ່ງແຕ່ສະທີ່ການຜະລິດ ແລະຕະຫລາດ. ບໍ່ລວມເອົາກິດຈະກຳກ່ຽວກັບການລ້ຽງສັດ (ມີ ໃນຄຳຖາມ Q91 ແລ້ວ) ແລະບໍ່ລວມເອົາກິດຈະກຳຄົວເຮືອນ ຫລື ວຽກທີ່ພົວພັນໂດຍກົງກັບ ວຽກກະສິກຳ ເຊັ່ນ ການກະກຽມອາຫານສຳ ລັບຄົນງານ.

ວຽກທີ່ກ່ຽວພັນກັບການປູກພືດ ແມ່ນ ວຽກຕາມລະດູການ ແລະຈະມີເລື້ອຍໄລຍະເວລາທີ່ປູກ ແລະເກັບກ່ຽວ. ບາງຄົນກໍອາດເຮັດວຽກເຕັມເວລາ ໃນຊ່ວງເວລານັ້ນ, ບາງຄົນກຸອປັນພຽງຜູ້ຊ່ວຍໃນເວລາຕ້ອງການ. ສະນັ້ນຈຳນວນ ເດືອນທີ່ເຮັດວຽກໃນຄຳຖາມ Q89 ແມ່ນລວມຈຳນວນເດືອນ ທີ່ບຸກຄົນນັ້ນ ໄດ້ເຮັດວຽກກ່ຽວກັບການປູກພືດ ໃນປີ ຜ່ານມາ ບໍ່ກຳນົດຈຳນວນວັນ ແລະຊົ່ວໂມງເຮັດວຽກ.

**ຄຳຖາມ 90:**

ໃນ ຄຳຖາມ 90 ໄດ້ຖາມສະເພາະແຕ່ ກິດຈະກຳການປູກເຂົ້າ ທີ່ສະມາຊິກຄົວເຮືອນໄດ້ດຳເນີນໃນປີ ຊ່ວງເດືອນເກັບກຳຂອງການສຳຫລວດ. ໃນຄຳຖາມນີ້ ແມ່ນສຳຄັນສຳຫລັບສຶກສາ ເບິ່ງການຈັດແບ່ງແຮງງານ ຂອງຄົວເຮືອນ ແລະບົດບາດຂອງແມ່ຍິງ ແລະ ຜູ້ຊາຍ ໃນກິດຈະກຳການຜະລິດກະສິກຳ.

ຄຳຖາມນີ້ຖາມສະເພາະແຕ່ຄົວເຮືອນທີ່ໄດ້ລາຍງານວ່າໄດ້ປູກເຂົ້າໃນຄຳຖາມ q15. ໝາຍ “ √ “ ໃສ່ໃນກ່ອງ.

| Q90 | | | | | | | | | |
|---|---|---|---|---|---|---|---|---|---|
| ໃນ 12 ເດືອນຜ່ານມາມີໃຜແດ່ໄດ້ເຮັດກິດຈະກຳປູກເຂົ້າ (ຖ້າ Q15 ເທົ່າກັບ 1)<br>**ເລືອກໄດ້ຫຼາຍຄຳຕອບ (ໝາຍ√)** | | | | | | | | | |
| 1. ກຽມດິນປູກ | 2. ກຽມໜານຕົກກ້າ | 3. ປັກດຳ | 4. ເສັຍຫຍ້າ | 5. ໃສ່ປຸ໋ຍ-ຝຸ່ນ | 6. ສີດຢາປາບສັດຕູພືດ | 7. ໃຫ້ນ້ຳ | 8. ເກັບກ່ຽວ | 9. ຟາດເຂົ້າ | 10. ຂົນສົ່ງ |

**ຄຳຖາມ 91:**

ໃນ Q88-Q90 ໃຫ້ຖາມສະເພາະກ່ຽວກັບການປູກພືດ. ຈຸດປະສົງຂອງຄຳຖາມນີ້ແມ່ນ ເພື່ອຊອກຫາກິດຈະກຳທີ່ພົວພັນກັບ ການລ້ຽງສັດຂອງສະມາຊິກຄົວ ເຮືອນ. ຄຳຖາມນີ້ໃຫ້ຖາມເຖິງກິດຈະກຳ ທີ່ໄດ້ເຮັດໃນ ອາທິດ ໜຶ່ງຜ່ານມາ ເຊິ່ງຕ່າງຈາກການປູກພືດ ແມ່ນ ຖາມໃນ 12 ເດືອນ ຜ່ານມາ ໃນ Q88-Q89. ເນື່ອງຈາກວ່າເປັນກິດຈະກຳຕາມລະດູການ.

ໃຫ້ບັນທຶກເວລາສະເລັ່ຍຕໍ່ມື້ ທີ່ໃຊ້ສຳລັບກິດຈະກຳເບິ່ງແຍງ ແລະ ດູແລສັດ ໃນ 1 ອາທິດຜ່ານມາ. ຈົດກ່າຍລະຫັດໃຫ້ຖືກຕ້ອງໃສ່ໃນກ່ອງ: 1(ຕ່ຳກວ່າ1 ຊົ່ວໂມງ/ມື້), 2(ລະຫວ່າງ1-5ຊົ່ວໂມງ/ມື້), 3 (ຫຼາຍ ກວ່າ 5 ຊົ່ວໂມງ/ມື້), 9 (ບໍ່ໄດ້ລ້ຽງ).

ກິດຈະກຳການລ້ຽງສັດ ແມ່ນກິດຈະກຳກ່ຽວ ຂ້ອງ ເຊັ່ນ: ໃຫ້ອາຫານ, ເອົານົມ, ເກັບໄຂ່, ລ້ຽງ ຫລື ເບິ່ງແຍງເວລາສັດໄປກິນຫຍ້າ, ຂ້າສັດ, ຂົນສົ່ງສັດ ໄປຕະຫລາດ. ການກະກຽມດິນໂດຍໃຊ້ແຮງງານສັດ ແມ່ນບໍ່ໄດ້ ຈັດເຂົ້າໃນນີ້, ຈັດເຂົ້າໃນກິດຈະກຳການ ປູກພືດ.

<u>ຈຳນວນຊົ່ວໂມງຕໍ່ວັນ</u> ແມ່ນສະເລັ່ຍເວລາ ຂອງບຸກຄົນທີ່ໃຊ້ໃນ 1 ວັນ ສຳລັບກິດຈະກຳລ້ຽງສັດ ໃນ 1 ອາທິດຜ່ານມາ. ການຈົດກ່າຍຄຳຕອບ ແມ່ນໃຫ້ຕອບພຽງແຕ່ ໃນ 4 ກຸ່ມ ເທົ່ານັ້ນ. ສະນັ້ນຕ້ອງ ໄດ້ມີການຄຳນວນຈຳນວນສະເລັ່ຍຕໍ່ມື້ໃຫ້ຊັດເຈນ ກ່ອນບັນທກລົງ.

| Q91 |
|---|
| **ສະເລັ່ຍໜຶ່ງອາທິດໃຊ້ເວລາດູແລ ແລະ ລ້ຽງສັດຈັກຊົ່ວໂມງ/ມື້** |
| 1=ບໍ່ໄດ້ລ້ຽງ<br>2=ຕ່ຳກວ່າ 1 ຊົ່ວໂມງ/ມື້<br>3=ລະຫວ່າງ1-5ຊົ່ວໂມງ/ມື້<br>4=ຫຼາຍກວ່າ 5 ຊົ່ວໂມງ/ມື້ |
| ☐ |

ຕົວຢ່າງ: ຖ້າຫາກວຽກການເກັບໄຂ່ຫາກໃຊ້ເວລາ 1 ຊົ່ວໂມງໃນແຕ່ລະວັນ ແລະ ເກັບປ່ຽນກັນ 3 ຄົນ, ແຕ່ລະຄົນກໍຕ້ອງຖືກຈົດກ່າຍ ເຮັດກິດຈະກຳນີ້ຕ່ຳກວ່າ 1 ຊົ່ວໂມງ ຕໍ່ ມື້.

## 9.1 ອື່ນໆ (ຄຳຖາມ 92-106)

### ຄຳຖາມ 92

ຈຸດປະສົງຂອງຄຳຖາມນີ້ເພື່ອກຳນົດຄົວເຮືອນຄອບຄອງກະສິກຳ. <u>ຄົວເຮືອນຄອບຄອງກະສິກຳ</u>ແມ່ນຄົນໜຶ່ງຫຼືຫຼາຍຄົນໃນຄົວເຮືອນທີ່ເປັນຜູ້ຕັດສິນບັນຫາຕົ້ນຕໍກ່ຽວກັບການນຳໃຊ້ ແຫລ່ງຊັບພະຍາກອນ ແລະການກວດກາຄຸ້ມຄອງການຜະລິດກະສິກຳ. ມີຄວາມຮັບຜິດຊອບໃນດ້ານເທັກນິກແລະເສດຖະກິດສຳລັບການຄອບຄອງກະສິກຳ ແລະເປັນຜູ້ຮັບຜິດຊອບໂດຍກົງທັງໝົດຫຼືແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງແຕ່ລະວັນໃຫ້ແກ່ຜູຖືກວ່າຈ້າງມາ.

| | | |
|---|---|---|
| **Q92** ຄົວເຮືອນຂອງທ່ານແມ່ນໃຜເປັນຜູ້ຕັດສິນຕົ້ນຕໍກ່ຽວກັບວຽກງານການປູກພືດ ແລະ ລ້ຽງສັດ?<br>(ໃນກໍລະນີຕັດສິນໃຈຮ່ວມກັນໃຫ້ຂຽນລະຫັດ ຂອງທັງ 2 ຄົນ) | | |
| **ຂຽນເລກທີບຸກຄົນຢູ່ Q81** | ➡ | ☐☐ ☐☐ |

ໃຫ້ຂຽນລະຫັດຂອງບຸກຄົນຈາກຄຳຖາມ Q82. ລະຫັດບຸກຄົນແມ່ນໃຫ້ຈົດກ່າຍມາຈາກຊ່ອງທີໜຶ່ງຂອງຄຳຖາມ Q82.ຕົວຢ່າງຫົວໜ້າຄົວເຮືອນແມ່ນໝາຍເລກ"01"

- ຖ້າວ່າມີຄົນດຽວໃນຄົວເຮືອນທີ່ເປັນຜູ້ຕັດສິນບັນຫາໃຫ້ຂຽນລະຫັດຄົນນັ້ນໃສ່ໃນກ່ອງທີໜຶ່ງແລະປະຫວ່າງໃນກ່ອງທີສອງ

- ຖ້າຫາກມີການຕັດສິນໃຈຮ່ວມກັນຫຼາຍຄົນໃຫ້ຂຽນລະຫັດຄົນທີ່ຕັດສິນໃຈຫຼາຍກວ່າໝູ່ ລົງໃນທັງສອງກ່ອງ

ເພື່ອຮັບປະກັນວ່າບຸກຄົນທີ່ຂຽນ ໃນQ93 ແມ່ນບຸກຄົນທີ່ເປັນຜູ້ຕັດສິນບັນຫາຕົ້ນຕໍສຳລັບກິດຈະກຳ ໃນການປູກຝັງ ແລະ ລ້ຽງສັດໃນຄົວເຮືອນ. ໂດຍປົກກະຕິແລ້ວຈະແມ່ນຫົວໜ້າຄົວເຮືອນແຕ່ບາງຄັ້ງ ຫົວໜ້າຄົວເຮືອນອາດອາຍຸສູງເກີນໄປທີ່ຈະມີບົດບາດໃນການບໍລິຫານກິດຈະກຳດັ່ງກ່າວ.ບາງຄັ້ງອາດຈະແມ່ນແມ່ຍິງເປັນຜູ້ຕັດສິນບັນຫາຕົ້ນຕໍ ແລະບາງຄັ້ງກໍອາດຈະແມ່ນລູກຊາຍກົກເປັນຫົວໜ້າຄົວເຮືອນ. ບົດບາດຂອງແມ່ຍິງໃນກະສິກຳ ແລະບັນຫາທີ່ເຂົາເຈົ້າປະເຊີນຢູ່ແມ່ນບັນຫາທີ່ສຳຄັນຂອງການສຳຫຼວດ. ສະນັ້ນຄວນລະມັດລະວັງໃນການລາຍງານຂໍ້ມູນໃຫ້ຖືກຕ້ອງ.

ນິຍາມຂອງການຄອບຄອງກະສິກຳຈະພົບກັບຄວາມຫຍຸ້ງຍາກເລື້ອຍໆຍ້ອນວ່າຂະບວນການຂອງການຕັດສິນບັນຫາ. ປົກກະຕິແລ້ວການຄອບຄອງແມ່ນການບໍລິຫານຮ່ວມກັນຂອງສະມາຊິກຄົວເຮືອນເຊັ່ນ:ຜົວແລະເມັຍ. ຖ້າຫາກໃຜຜູ້ໜຶ່ງເປັນຜູ້ຕັດສິນຕົ້ນຕໍຈະຖືວ່າລາວຜູ້ນັ້ນເປັນຜູ້ຄອບຄອງ. ຖ້າວ່າມີໜຶ່ງຫຼືຫຼາຍຄົນຕັດສິນໃຈຮ່ວມກັນຈະຖືວ່າ ແຕ່ລະຄົນເປັນຜູ້ຄຸ້ມຄອງຮ່ວມກັນ.

ການຄອບຄອງກະສິກຳ ແມ່ນສາມາດດຳເນີນກິດຈະກຳອື່ນໄປພ້ອມກັນ ນອກຈາກເປັນຜູ້ຄອບຄອງເຊັ່ນ: ຊາວນາອາດບໍ່ແມ່ນອາຊີບຕົ້ນຕໍຂອງເຂົາເຈົ້າ.ສະນັ້ນໃນນີ້ຈະຕ້ອງມີການແຍກຈະແຈ້ງລະຫວ່າງຜູ້ຄອບຄອງກະສິກຳ ແລະເປັນຜູ້ບໍລິຫານ; ຜູ້ວ່າຈ້າງໃຫ້ເປັນຜູ້ບໍລິຫານແມ່ນຜູ້ໄດ້ຮັບເງິນເດືອນໃຫ້ມາບໍລິຫານແທນຜູ້ຄອບຄອງກະສິກຳ.

| ການນຳໃຊ້ຊັບພະຍາກອນປ່າໄມ້ທີ່ເປັນດິນປ່າໄມ້ຂອງຄົວເຮືອນຕົນເອງ(Q93-Q96)ແລະດິນປ່າໄມ້ຂອງຄົນອື່ນ(Q97-Q99) |
|---|

**ຄຳຖາມ 93:**

ຄຳຖາມນີ້ໄດ້ຖາມຄົວເຮືອນວ່າມີດິນປ່າໄມ້ແລະດິນອື່ນໆເປັນຂອງຕົນເອງບໍ?.ໃຫ້ໝາຍ ✓ ໃສ່ບ່ອນ "ແມ່ນ" ຫຼື " ບໍ່ແມ່ນ ", ຖ້າຄຳຕອບວ່າມີໃຫ້ຖາມຕໍ່ໄປໃຫ້ຖາມກ່ຽວກັບດິນປ່າໄມ້ເຫຼົ່ານີ້ໃນQ93-Q96; ຖ້າບໍ່ມີໃຫ້ຂ້າມຄຳຖາມນີ້ໄປໄລຍະເວລາ ຂອງການເກັບກຳແມ່ນມື້ສຳຫຼວດ.

**Q93** ທ່ານມີດິນປ່າໄມ້ເປັນຂອງຕົນເອງບໍ່?

ເລືອກໄດ້ໜຶ່ງຄຳຕອບ(ໝາຍ)

ມີ ☐ 1

ບໍ່ມີ ☐ 2 ➡ *ໄປຫາຄຳຖາມQ97*

ປ່າໄມ້ ແລະດິນປ່າໄມ້ອື່ນໆ ແມ່ນດິນທີ່ມີຕົ້ນໄມ້ປົກຫຸ້ມແລະດິນອື່ນໆໃຫ້ເບິ່ງພາກທີ 6.3 ສຳລັບນິຍາມຂອງດິນປ່າໄມ້ແລະດິນອື່ນໆ.ໃນພາກປະຕິບັດຕົວຈິງ ປ່າໄມ້ ແລະດິນປ່າໄມ້ອື່ນໆ ແມ່ນຄົວເຮືອນຈະເປັນຜູ້ກຳນົດວ່າຈະເປັນດິນປູກຕົ້ນໄມ້. ດິນດັ່ງກ່າວແມ່ນອາດເປັນດິນປູກເພື່ອເສດຖະກິດ ແລະປົກປ້ອງສິ່ງແວດລ້ອມ ແລະຈຸດປະສົງອື່ນ. ດິນປ່າໄມ້ລວມທັງປ່າທຳມະຊາດ ແລະປ່າປູກ.

Q93 ແມ່ນເວົ້າສະເພາະປ່າໄມ້ແລະດິນປ່າໄມ້ທີ່ເປັນກຳມະສິດຂອງຄົວເຮືອນ, ບໍ່ໃຫ້ລວມເອົາດິນປ່າໄມ້ທີ່ເປັນຂອງຄົນອື່ນທີ່ມີຢູ່ໃນຄຳຖາມ Q97-Q99.

ຄຳຖາມ 94-96:

ຄຳຖາມນີ້ແມ່ນຖາມສະເພາະສຳລັບຄົວເຮືອນທີ່ມີປ່າໄມ້ແລະດິນປ່າໄມ້ໃນຄຳຖາມQ93ແລະຖາມກ່ຽວກັບປ່າ

ໄມ້ແລະດິນປ່າໄມ້ທີ່ມີການຂຸດຄົ້ນດ້ວຍວິທີໃດກໍຕາມ.

ໃນQ94 ໃຫ້ຖາມວ່າຄົວເຮືອນໄດ້ມີການຂຸດຄົ້ນປ່າໄມ້ ແລະ ໄມ້ປູກໃນເວລາກຳນົດຂອງການສຳຫຼວດ.ໃຫ້ໝາຍ ✓ ໃສ່ໃນກ່ອງ"ໄດ້"ຫຼື"ບໍ່ໄດ້". ຖ້າມີຄຳຕອບວ່າໄດ້ໃຫ້ສືບຕໍ່ຖາມກ່ຽວກັບຜົນການຜະລິດ ໃນ Q95 ແລະຫາກໄດ້ຂາຍຜົນຜະລິດນັ້ນໃຫ້ຖາມ Q96.

ການຂຸດຄົ້ນປ່າໄມ້ ແມ່ນການເອົາຜະລິດຕະ ພັນມາຈາກປ່າໄມ້ ແລະ ດິນປ່າໄມ້ອື່ນໆຜະລິດຕະພັນປ່າໄມ້ລວມມີໄມ້ທ່ອນ, ໄມ້ຟືນ, ໄມ້ປ່ອງແລະຜະລິດຕະພັນສຳລັບອາຫານເຊັ່ນ ເຫັດ, ໝາກໄມ້ ແລະ ພືດຜັກ. ການຂຸດຄົ້ນດັ່ງກ່າວອາດແມ່ນຈຸດປະສົງການຊົມໃຊ້ໃນຄົວເຮືອນຫຼືຂາຍ. Q96 ຖາມກ່ຽວກັບຜະລິດຕະພັນເຄື່ອງປ່າຂອງດົງໄດ້ຂາຍໃນປີ. ຂາຍໝາຍຄວາມວ່າ ຂາຍເພື່ອເອົາເງິນ.

**Q94** ປີຜ່ານມາທ່ານໄດ້ປະໂຫຍດຈາກດິນປ່າໄມ້ຂອງທ່ານບໍ່?

ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)

| | | |
|---|---|---|
| ໄດ້ | ☐ | 1 |
| ບໍ່ໄດ້ | ☐ | 2 → *ໄປຫາຄຳຖາມQ97* |

**Q95** ໃນປີຜ່ານມາມີຜົນຜະລິດເຄື່ອງປ່າຊະນິດໃດແດ່ທີ່ທ່ານໄດ້ເກັບກູ້ຈາກດິນປ່າໄມ້ທີ່ຕົນຄອບຄອງ?

ເລືອກໄດ້ຫຼາຍຄຳຕອບ(ໝາຍ✓)

| | | |
|---|---|---|
| ໄມ້ທ່ອນ | ☐ | 1 |
| ໄມ້ຟືນ | ☐ | 2 |
| ໄມ້ປ່ອງ | ☐ | 3 |
| ເຫັດປ່າ | ☐ | 4 |
| ໝາກໄມ້ ແລະ ພືດຜັກ | ☐ | 5 |
| ອາຫານ ແລະ ອື່ນໆ. | ☐ | 6 |

**Q96** ປີຜ່ານມາທ່ານໄດ້ຂາຍຜົນຜະລິດຈາກດິນປ່າໄມ້ທີ່ຕົນຄອບຄອງບໍ່?

ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)

| | | |
|---|---|---|
| ໄດ້ຂາຍ | ☐ | 1 |
| ບໍ່ໄດ້ຂາຍ | ☐ | 2 |

**ຄຳຖາມ 97-99:**

ຄຳຖາມນີ້ໄດ້ຖາມກ່ຽວກັບ ຄົວເຮືອນທີ່ຂຸດຄົ້ນປ່າໄມ້ທີ່ບໍ່ແມ່ນຢູ່ໃນການຄອບຄອງຂອງຕົນ. Q97ຖາມຄົວເຮືອນທີ່ໄດ້ທຳການຂຸດຄົ້ນປ່າໄມ້. ໝາຍ✓ ໃສ່ໃນກ່ອງ"ໄດ້"ຫຼື"ບໍ່ໄດ້"ສຳລັບQ97.ຖ້າມີຄຳຕອບວ່າແມ່ນໃຫ້ສືບຕໍ່ຖາມກ່ຽວກັບຜະລິດຕະພັນປ່າໄມ້ທີ່ໄດ້ມາ ແລະ ຂາຍໃນQ98-Q99. ຖ້າວ່າມີຄຳຕອບວ່າບໍ່ໄດ້ໃຫ້ຂ້າມຄຳຖາມນີ້ໄປການຖາມແມ່ນໃຫ້ອີງໃສ່ໄລຍະເວລາໃນການສຳຫຼວດ.ຄຳຖາມເຫຼົ່ານີ້ແມ່ນຕໍ່ເນື່ອງກັບຄຳຖາມQ94-Q96, ແຕ່ໃຫ້ຖາມກ່ຽວກັບປ່າໄມ້ທີ່ບໍ່ແມ່ນຂອງຄົວເຮືອນ.

**Q97** ປີຜ່ານມາທ່ານໄດ້ເຂົ້າໄປຫາຜົນຜະລິດຈາກດິນປ່າໄມ້ບ່ອນອື່ນບໍ່?

ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)

| | | |
|---|---|---|
| ໄດ້ | ☐ | 1 |
| ບໍ່ໄດ້ | ☐ | 2 → *ໄປຫາຄຳຖາມ Q100* |

**Q98** ໃນປີຜ່ານມາມີຜົນຜະລິດເຄື່ອງປ່າຊະນິດໃດແດ່ທີ່ທ່ານໄດ້ເກັບກູ້ໄດ້ຈາກດິນປ່າໄມ້ບ່ອນອື່ນບໍ່?

ເລືອກໄດ້ຫຼາຍຄຳຕອບ(ໝາຍ✓)

| | | |
|---|---|---|
| ໄມ້ທ່ອນ | ☐ | 1 |
| ໄມ້ຟືນ | ☐ | 2 |
| ໄມ້ປ່ອງ | ☐ | 3 |
| ເຫັດປ່າ | ☐ | 4 |
| ໝາກໄມ້ ແລະ ພືດຜັກ | ☐ | 5 |
| ອາຫານ ແລະ ອື່ນໆ. | ☐ | 6 |

**Q99** ທ່ານໄດ້ຂາຍຜົນຜະລິດທີ່ເກັບກູ້ໄດ້ມາຈາກດິນປ່າໄມ້ບ່ອນອື່ນບໍ່?

ເລືອກໄດ້ນຶ່ງຄຳຕອບ(ໝາຍ✓)

| | | |
|---|---|---|
| ໄດ້ຂາຍ | ☐ | 1 |
| ບໍ່ໄດ້ຂາຍ | ☐ | 2 |

ພາກສຸດທ້າຍຂອງໃບສອບຖາມນີ້ ແມ່ນກ່ຽວກັບການປະມົງ. ໃນພາກນີ້ປະກອບມີສອງພາກຄື:ການລ້ຽງສັດນ້ຳ (Q100-Q103) ແລະ ການຫາປາ (Q104-Q106) .ຄຳຖາມກ່ຽວກັບຄົວເຮືອນໄດ້ລ້ຽງສັດນ້ຳ ແລະ ຫາປາທີ່ໄດ້ເກັບກຳໃນແບບຟອມ4ແລະໃນຄຳຕອບນີ້ແມ່ນ ໃຫ້ຈົດກ່າຍຄຳຕອບເຂົ້າໃນຄຳຖາມ Q100 ແລະ Q104 ກ່ອນຈະຖາມຕໍ່ໄປ. ໃຫ້ເວົ້າແຈ້ງກ່ຽວກັບຄວາມແຕກຕ່າງກ່ຽວກັບການລ້ຽງສັດນ້ຳ ແລະການຫາປາ. ການລ້ຽງສັດນ້ຳແມ່ນການລ້ຽງສັດນ້ຳປະເພດຕ່າງໆ ແລະ ການຫາປາແມ່ນການໄປຫາສັດນ້ຳຕ່າງໆຢູ່ຕາມແຫຼ່ງນ້ຳທຳມະຊາດ.

**ຄຳຖາມ 100:**

ໃນຄຳຖາມນີ້ຈະຕ້ອງສະແດງໃຫ້ເຫັນວ່າ ຄົວເຮືອນມີການລ້ຽງສັດນ້ຳຫຼືບໍ? ຖ້າບໍ່ໄດ້ລ້ຽງໃຫ້ຂ້າມຄຳຖາມ Q101 - Q103. ສຳລັບນິຍາມການລ້ຽງສັດນ້ຳໃຫ້ເບິ່ງໃນຂໍ້ 6.4.

| Q100 | *<u>ຂໍ້ສັງເກດ:</u> ກວດເບິ່ງຄືນຄຳຖາມ* <br> *Q5 ຢູ່ໃນໃບສອບຖາມທຸກຄົວເຮືອນ (F4) ໄດ້ລ້ຽງສັດນ້ຳບໍ່?* | | |
|---|---|---|---|
| ***ເລືອກໄດ້ໜຶ່ງ ຄຳຕອບ (ໝາຍ)*** | <u>ໄດ້ລ້ຽງ</u> | 1 | |
| | <u>ບໍ່ໄດ້ລ້ຽງ</u> | 2 | ➡ *ໄປຫາຄຳຖາມQ104* |

**ຄຳຖາມQ101:**

ແມ່ນຖາມກ່ຽວກັບເງື່ອນໄຂການລ້ຽງສັດນ້ຳຂອງຄົວເຮືອນນຳໃຊ້.

**Q101 ທ່ານໄດ້ລ້ຽງສັດນ້ຳຢູ່ໃສແດ່?**

***ເລືອກໄດ້ຫຼາຍ ຄຳຕອບ (ໝາຍ)***

| | |
|---|---|
| <u>ລ້ຽງໃນນາເຂົ້າ</u> | 1 |
| <u>ລ້ຽງໃນໜອງສະ</u> | 2 |
| <u>ລ້ຽງໃນກະຊັງ</u> | 3 |
| <u>ລ້ຽງປາໃນອ່າງ/ຖັງ</u> | 4 |
| <u>ລ້ຽງບ່ອນອື່ນໆ</u> | 5 |

<u>ລ້ຽງໃສ່ນາເຂົ້າ</u> ແມ່ນການນຳໃຊ້ດິນທີ່ປູກເຂົ້າກັບການລ້ຽງປາໄປຄຽງຄູ່ກັນ. ການລ້ຽງສັດນ້ຳໃນນາເຂົ້າທີ່ມີນ້ຳ ແລະ ໂດຍທົ່ວໄປ ແມ່ນມີການດັດປັບສຳລັບການລ້ຽງສັດນ້ຳເຊັ່ນກັນ. ວິທີການໜຶ່ງອີກແມ່ນການປູກເຂົ້າ ແລະ ລ້ຽງສັດໃນດິນຕອນດຽວແຕ່ຕ່າງລະດູການ.

ປາທີ່ມາຈາກທຳມະຊາດໃນເວລານ້ຳຖ້ວມມາແມ່ນບໍ່ໄດ້ລວມເຂົ້າໃນການລ້ຽງສັດໃສ່ນາເຂົ້າ.

ໜອງການລ້ຽງປາຢູ່ໃນໜອງແມ່ນການລ້ຽງປາທີ່ເກີດຈາກທຳມະຊາດຫຼືການລ້ຽງປາທີ່ເພາະພັນມາປ່ອຍ ການລ້ຽງຢູ່ໃນໜອງຕາມປົກກະຕິແມ່ນການລ້ຽງແບບນ້ຳຂັງ ຫຼື ມີການປ່ຽນຖ່າຍໃຫ້ນ້ຳເຂົ້າແລະອອກບາງຄັ້ງການລ້ຽງຢູ່ໃນໜອງໃຫຍ່ອາດຈະນຳໃຊ້ກະຊັງ. ປົກກະຕິຈະມີການລ້ຽງແບບປະສົມປະສານເຊັ່ນ: ລ້ຽງປາ ແລະ ປູກພືດຫຼືລ້ຽງປາ ແລະ ລ້ຽງສັດອື່ນໆ.

<u>ການລ້ຽງສັດນ້ຳໃນກະຊັງ</u> ແມ່ນການລ້ຽງໃນກະຊັງຫຼືຕາງໜ່າງເພື່ອສັດນ້ຳ ຫລື ພືດຢູ່ໃນຫນອງ, ແມ່ນ້ຳ, ຫນອງບຶງ, ອ່າງເກັບນ້ຳ ຫລືທະເລ.

<u>ການລ້ຽງໃນກະຖັງ/ອ່າງ</u> ແມ່ນການລ້ຽງສັດນ້ຳໃນໂຄງສ້າງທີ່ຄົງທີ່ປົກກະຕິ ຈະສ້າງຢູ່ເທິງບົກທີ່ເຮັດດ້ວຍດິນຈີ່, ຊີມັງ ແລະ ປາລາດສະຕິກ.

**ຄຳຖາມ 102:**

ໃຫ້ບັນທຶກເນື້ອທີ່ຂອງການລ້ຽງສັດນ້ຳ

<u>ເນື້ອທີ່ຂອງການລ້ຽງສັດນ້ຳ</u> ແມ່ນອີງຕາມເນື້ອທີ່ຢູ່ໃຕ້ນ້ຳທີ່ໃຊ້ເປັນບ່ອນລ້ຽງສັດນ້ຳ.ໝາຍຄວາມວ່າໃຫ້ວັດແທກເອົາເນື້ອທີ່ໜ້ານ້ຳຂອງໜອງ,ໄຮ່ນາ,ອ່າງ,ຄອງຊົນລະປະທານເພື່ອລ້ຽງສັດນ້ຳ.ເນື້ອທີ່ຂອງບ່ອນລ້ຽງສັດນ້ຳຕ້ອງມີອັນຊ່ວຍວັດແທກຂອບໜອງ ແລະ ຂອບຂອງກະຊັງ (ກະຊັງລອຍ). ເນື້ອທີ່ການລ້ຽງສັດນ້ຳເທິງບົກ ທີ່ກ່ຽວຂ້ອງກັບ ອະນຸບານປາ, ສາງເຄື່ອງ, ສະຖານທີ່ປຸງແຕ່ງປາ, ຫ້ອງທົດລອງ ແລະ ຫ້ອງການ ແມ່ນບໍ່ລວມເຂົ້າເປັນເນື້ອທີ່ ຂອງການລ້ຽງສັດນ້ຳ.

**Q102 ເນື້ອທີ່ລ້ຽງສັດນ້ຳທັງໝົດມີຫຼາຍປານໃດ?**

ຄິດເປັນ ______ , ______ ຮຕ

ເນື້ອທີ່ຈະຕ້ອງລວມເອົາສະເພາະເນື້ອທີ່ທີ່ເປັນຂອງຜູ້ຄອບຄອງ ແລະເນື້ອທີ່ທີ່ເຊົ່າຈາກຄົນອື່ນ ເພື່ອໃຊ້ເປັນສະຖານທີ່ລ້ຽງສັດນ້ຳເຊັ່ນ ສ່ວນຫນຶ່ງຂອງແມ່ນ້ຳ, ຫນອງ, ອ່າງເກັບນ້ຳ, ຄອງຊົນລະປະທານ ຫລື ຫ້ວຍຫນອງຕ່າງໆ. ເນື້ອທີ່ລ້ຽງສັດນ້ຳ ແມ່ນອີງຕາມອຸປະກອນທີ່ໃຊ້ລ້ຽງປາໃນນ້ຳ ເຊັ່ນຕົວຢ່າງ: ເນື້ອທີ່ລວມຂອງກະຊັງ.

**ຄຳຖາມ 103:**

ຄຳຖາມນີ້ໄດ້ຖາມກ່ຽວກັບ ຄົວເຮືອນໄດ້ຂາຍຜົນຜະລິດສັດນ້ຳທີ່ລ້ຽງໃນໄລຍະກຳນົດການສຳຫລວດຜ່ານມາ . ຖາມສຳລັບການຂາຍເພື່ອ ແລກເງິນສົດ.

**Q 103** ປີຜ່ານມາທ່ານໄດ້ຂາຍຜົນຜະລິດສັດນ້ຳທີ່ຕົນລ້ຽງເອງບໍ່?

ເລືອກໄດ້ພຽງຄຳຕອບ(ໝາຍ✓)

| | |
|---|---|
| ໄດ້ຂາຍ | 1 |
| ບໍ່ໄດ້ຂາຍ | 2 |

**ຄຳຖາມ 104:**

ໃຫ້ບັນທຶກ ວ່າຄົວເຮືອນມີກິດຈະກຳກ່ຽວກັບການຫາປາຫລືບໍ່? ຖ້າຄົວເຮືອນບໍ່ໄດ້ເຮັດກິດຈະກຳຫາປາ ແມ່ນໃຫ້ສິ້ນສຸດການສຳພາດ. ນິຍາມຂອງການຫາປາ ໃຫ້ເບິ່ງໃນພາກ 6.4.

**Q 104**

*<u>ຂໍ້ສັງເກດ:</u> ກວດເບິ່ງຄືນຄຳຖາມ*

*Q30 ຢູ່ໃນໃບສອບຖາມທຸກຄົວເຮືອນ (F4) ໄດ້ຫາປາບໍ່?*

ເລືອກໄດ້ພຽງຄຳຕອບ (ໝາຍ✓)

| | | |
|---|---|---|
| ໄດ້ຫາ | 1 | |
| ບໍ່ໄດ້ຫາ | 2 | ➡ *ສິ້ນສຸດການສຳພາດ* |

**ຄຳຖາມ 105:**

ໃນ ຄຳຖາມ Q105 ໄດ້ຖາມກ່ຽວກັບຄົວເຮືອນໄປຫາປາຢູ່ໃສ (ແຫລ່ງຫາປາ)

**Q 105** ທ່ານ ແລະ ສະມາຊິກຄົວເຮືອນໄດ້ໄປຫາປາ ແລະ ສັດນ້ຳຢູ່ໃສ?

ເລືອກໄດ້ຫຼາຍຄຳຕອບ (ໝາຍ✓)

| | |
|---|---|
| ແມ່ນ້ຳລຳເຊ, ຫ້ວຍນ້ຳ | 1 |
| ໜອງບຶງທຳມະຊາດ ແລະ ອ່າງເກັບນ້ຳ | 2 |
| ບຶງ/ນ້ຳແກ່ງ (ນ້ຳຖ້ວມຂັງ) ຕາມລະດູການ | 3 |
| ຢູ່ໃນນາເຂົ້າ | 4 |
| ຕາມຮ່ອງນ້ຳ ແລະ ຄອງຊົນລະປະທານ | 5 |
| ໜອງປາລວມ | 6 |
| ອື່ນໆ | 7 |

**ຄຳຖາມ 106:**

ໃນ ຄຳຖາມ Q106 ໄດ້ຖາມກ່ຽວກັບຄົວເຮືອນໄດ້ ຂາຍປາທີ່ຫາມາໄດ້ບໍ່ ໃນຊ່ວງເວລາກຳນົດເກັບກຳຂອງການສຳຫລວດ.

**Q 106** ຄົວເຮືອນຂອງທ່ານໄດ້ຂາຍປາ ແລະ ສັດນ້ຳທີ່ຫາມາໄດ້ບໍ່?

ເລືອກໄດ້ພຽງຄຳຕອບ(ໝາຍ✓)

| | |
|---|---|
| ໄດ້ຂາຍ | 1 |
| ບໍ່ໄດ້ຂາຍ | 2 |